# *ຂໍກະແຈສູ່ການຮູ້ແຈ້ງທັນທີ*

*ບັນຍາຍໂດຍ: ພຣະອາຈານ ຊີງໄຫ່*

**ແປແລະຮຽບຮຽງໂດຍ: ທ່ານ ສິມບູນ ເພັດພິມມະສຸກ**

**ສາລະບານ**

**ບົດນຳ**.........................................................................................4
**ຊີວະປະວັດຫຍໍ້ຂອງທ່ານ ອານຸດຕຣາຈານ ຊິງໄຫ່**........................ ...........................7
**ຄວາມມະຫັດສະຈັນຂອງໂລກທີ່ຢູ່ເໜືອໂລກ**.....................................................10
ບັນຍາຍໂດຍ ທ່ານອານຸດຕຣາຈານ ຊິງໄຫ່
ວັນທີ່ 26 ມິຖຸນາ 1992, ທີ່ອົງການສະຫະປະຊາຊາດ ລັດນິວຢອກ

**ທ່ານອາຈານ ຕອບຄຳຖາມ ຫລັງການບັນຍາຍ**........................................................ 23

**ການສິດວິຊາ ຫລື ການຖ່າຍທອດ (ທຳມະວິຖີແບບ ກວນຢີນ)**........................................ 40
**ສິນຫ້າ**........................................................................................ 42
**ເຫດໃດຈື່ງຕອ້ງກິນອາຫານມັງສະວິລັດ**...............................................................44
ສຸຂະພາບແລະໂພສະນາການ.....................................................45
ນິເວດວິດທະຍາແລະສິ່ງແວດລອ້ມ...............................................48
ຄວາມຫິວໂຫຍໃນໂລກ.............................................................49
ຄວາມທຸກທໍລະມານຂອງສັດ.................................................... 49
ກຸ່ມເພື່ອນນັກບູນ.................................................................. .50
ອາຈານຕອບຄຳຖາມ...............................................................51
**ສິ່ງທີ່ຖືກຈັດພິມ**.................................................................................61
**ຂ່າວດີສຳລັບຜູ້ທີ່ເປັນມັງສະວິລັດ**..........................................................67
**ວິທີຕິດຕໍ່ກັບພວກເຮົາ**..........................................................................70

ພິມຄັ້ງທີ່ ສາມສິບ ເດືອນເມສາ 2003
ຜູ້ປະພັນ : The Supreme Master Ching Hai
Postal Box 9,hsihu, Hsien, Formosa
Republic of China
ຈັດພິມເຜີຍແຜ່ໂດຍ : The Supreme Master Ching Hai International Association
Publishing Co., Ltd (Registered Under No.5390 in the Government Information Office, R.O.C
ທີ່ຢູ : 1F, No.236, SongSan Road, Xin Yi District,Taipe,Formosa, Republic of China

ສະຫງວນລິຂະສິດ : ໂດຍທ່ານອານຸດຕຣາຈານ ຊີງໄຫ່

ເນື້ອໃນແລະຄຳເວົ້າໃນຫນັງສືເຫລັ້ມນີ້ ແມ່ນເຕັມໄປດ້ວຍພະລັງແລະພຣະພອນຂອງ ທ່ານອາຈານ ຫນັງສືເຫລັ້ມນີ້ ໄດ້ສະຫງວນລິຂະສິດ ຫ້າມຕີພິມເຜີຍແຜ່ສ່ວນໃດສ່ວນນຶ່ງ ຂອງຫນັງສືເຫລັ້ມນີ້ ບໍ່ວ່າຈະດວ້ຍວິທີການໃດຊຶ່ງໂດຍບໍ່ໄດ້ຮັບການອະນຸຍາດຈາກທ່ານອາຈານກໍ່ເພາະເພື່ອການປົກປ້ອງຕົວຜູ້ລັກລອບພິມນັ້ນເອງ ຈາກຜົນກຳ(ກັມ) ອັນຮ້າຍແຮງທີ່ຈະຕາມມາ.

**ຂໍ້ແນະນຳເພີ້ມເຕີມ**

ດວ້ຍເຫດຜົນທີ່ວ່າທ່ານເປັນຜູ້ມັກການປະດິດຄິດສ້າງແລະອອກແບບວຽກງານສິນລະປະວຽກງານການສິດສອນດ້ານຈິດວິນຍານ,ທ່ານອານຸດຕຣາຈານຊີງໄຫ່ເອງກໍ່ມັກປະທັບໃຈຕໍ່ຄວາມສວຍຄວາມງາມພາຍໃນ.ດ້ວຍເຫດຜົນນີ້ເອງ ທ່ານຈື່ງມັກຮ້ອງຄຳວ່າ ອາວແລກ “au lac” ແທນຄຳວ່າວຽດນາມແລະໄຕຫວັນ“Taiwan”ເປັນ”ຟໍໂມຊາ”Formosa.ເພາະຄຳວ່າ”aulac”ເປັນຄຳນາມດັ່ງເດີມຂອງຄຳວ່າ ວຽດນາມ ແລະກໍ່ມີຄວາມໝາຍວ່າ “ຄວາມສຸກ” ແລະຄຳວ່າ “Formosa” ແມ່ນສະທອ້ນໃຫ້ເຫັນຄວາມສວຍງາມທີ່ພຽບພອ້ມທຸກຢ່າງຂອງເກາະດອນ ແລະຜູ້ຄົນທີ່ອາໄສຢູ່ດິນແດນແຫ່ງນັ້ນ. ທ່ານ ອາຈານເອງກໍ່ຮູ້ສືກວ່າ ການທີ່ໄດ້ໃຊ້ຊື່ດັ່ງກ່າວນັ້ນ ຈະນຳມາຊຶ່ງການຍົກລະດັບພຸດທະຈິດທຳມະຍານ ແລະໂຊກລາບມາໃຫ້ແກ່ຜູ້ຄົນທີ່ອາໄສຢູ່ດິນແດນແຫ່ງນັ້ນ.

## ຄະຕິພົດ

" ຂ້າພະເຈົ້າ ບໍ່ໄດ້ເປັນຂອງສາດສະໜາພຸດ ຫລື ສາດສະໜາ ກາໂຕລິກ ຂ້າພະເຈົ້າເປັນຂອງສັດຈະທຳ ແລະ ຂ້າພະເຈົ້າ ເທດສອນສັດຈະທຳ ຕົວທ່ານອາດຈະຮ້ອງວ່າ ສາດສະໜາພຸດ, ສາດສະໜາ ກາໂຕລິກ, ສາດສະໜາເຕົາ, ຫລືແນວໃດກໍ່ໄດ້ ສຸດແລ້ວແຕ່ທ່ານມັກ ຂ້າພະເຈົ້າຍິນດີຕອນຮັບທຸກຢ່າງ!"

ທ່ານ ອານຸດຕຣາຈານ ຊິງໄຫ່

"ເມື່ອເຮົາບັນລຸເຖິງ**<u>ຄວາມສະຫງົບສຸກພາຍໃນ</u>**ເຮົາກໍ່ຈະບັນລຸເຖິງທຸກສິ່ງອື່ນໆອີກທຸກຄວາມພໍໃຈແລະທຸກ ຄວາມປາດຖະໜາຈາກທາງໂລກແລະທາງສະຫວັນຊື່ງລວ້ນມາຈາກອານາຈັກຂອງພຣະເຈົ້າທັງນັ້ນ.ຈາກມະ ຫາພະລັງທີ່ສາມາດທຳໄດ້ທຸກຢ່າງຂອງເຮົາຈາກປັນຍາທີ່ເປັນອຳມະຕະຂອງເຮົາລວ້ນແລ້ວແຕ່ແມ່ນ ມາຈາກ**<u>ການບັນລຸເຖິງຄວາມເປັນຈິງພາຍໃນທີ່ປະລິມກົມກຽວແບບອຳມະຕະຊົ່ວນິລັນດອນຂອງເຮົາ</u>** ຖ້າຫາກເຮົາບໍ່ມີສິ່ງເຫລົ່ານີ້ເຮົາກໍ່ຈະບໍ່ມີວັນພົບຄວາມພໍໃຈບໍ່ວ່າຈະມີເງິນຫລືມີອຳນາດຫລືແມ້ແຕ່ຈະ ມີຍົດຖາບັນດາສັກ ອັນສູງສົ່ງພຽງໃດກໍ່ຕາມ"

ທ່ານ ອານຸດຕຣາຈານ ຊິງໄຫ່

" ຄຳສອນຂອງຂ້າພະເຈົ້າກໍ່ຄື ສິ່ງໃດກໍ່ຕາມທີ່ທ່ານຈຳເປັນຕອ້ງເຮັດຢູ່ໃນໂລກນີ້ ກໍ່ຈົ່ງທຳໄປ ທຳໄປຈົນ ສຸດຄວາມສາມາດ ຈົ່ງມີຄວາມຮັບຜິດຊອບ ແລະກໍ່ນັ່ງສະມາທິທຸກໆວັນດວ້ຍ. ແລ້ວທ່ານຈະໄດ້ຮັບຄວາມຮູ້ ຫລາຍຂື້ນ ປັນຍາຫລາຍຂື້ນ ແລະໄດ້ຮັບຄວາມສະຫງົບສຸກຫລາຍຂື້ນ ເພື່ອວ່າທ່ານຈະໄດ້ຮັບໃຊ້ຕົນເອງ ແລະ ຮັບໃຊ້ໂລກນີ້ຢ່າລືມວ່າທ່ານມີຄວາມດີຢູ່ພາຍໃນ**ຢ່າລືມວ່າທ່ານມີພຣະເຈົ້າຢູ່ພາຍໃນຕົວຂອງທ່ານເອງ** ຢ່າ ລືມວ່າທ່ານມີພຸດທະຢູ່ພາຍໃນໃຈຂອງທ່ານເອງ."

ທ່ານອານຸດຕຣາຈານ ຊິງໄຫ່

# ບົດນຳ

ຕະຫລອດຫລາຍເຊັ່ນຄົນທີ່ຜ່ານມາ,ມະນຸດຊາດທີ່ໄດ້ຮັບການມາຢ້ຽມເຢືອນຈາກບຸກຄົນຜູ້ປະເສີດຢູ່ສະເໝີ. ຈຸດປະສົງພຽງຢ່າງດຽວຂອງບຸກຄົນເຫຼົ່ານີ້ກໍ່ຄືການຍົກລະດັບຄວາມນຶກຄິດແລະຈິດວິນຍານໃຫ້ກ້າວໜ້າແລະສູງຂຶ້ນ ຜູ້ມາຢ້ຽມເຢືອນ ເຫຼົ່ານີ້ໄດ້ແກ່ ພຣະສາກະຍະມຸນີພຸດທະເຈົ້າ , ພຣະເຢຊູຄຣິສ ແລະ ພຣະໂມຮາເມັດ ບຸກຄົນທັງສາມນີ້ເປັນທີ່ຮູ້ຈັກກັນດີໃນໝູ່ພວກເຮົາແຕ່ກໍ່ຍັງມີບຸກຄົນອື່ນໆອີກຈຳນວນຫລາຍໆທ່ານທີ່ພວກເຮົາບໍ່ໄດ້ຮູ້ຈັກຊື່,ບາງທ່ານກໍ່ເທດສອນໃນທີ່ສາທາລະນະແລະກໍ່ມີຄົນສ່ວນໜ້ອຍເທົ່ານັ້ນທີ່ຮູ້ຈັກໃນຂະນະທີ່ບາງທ່ານເກືອບຈະບໍ່ມີໃຜຮູ້ຈັກເລີຍ.ທ່ານເຫຼົ່ານີ້ໄດ້ຮັບການຂະໜານນາມທີ່ແຕກຕ່າງກັນໄປຕາມຍຸກຕາມສະໄໝແລະຢູ່ໃນດິນແດນທີ່ແຕກຕ່າງກັນອາດຈະມີຜູ້ຄົນຮ້ອງທ່ານວ່າ : ອາຈານ ຜູ້ຮູ້ແຈ້ງ ,ຜູ້ຊ່ວຍໃຫ້ລອດຫຼືຫລຸດພົ້ນ, ພຣະແມ່ຜູ້ສັກສິດ, ຜູ້ນຳຂ່າວສານ , ນັກບຸນຜູ້ມີຊີວິດ , ຫລື ສິ່ງໃດ ສິ່ງນຶ່ງ ໃນລັກສະນະນີ້ ;ທ່ານເຫຼົ່ານີ້ມາກໍ່ເພື່ອນຳສິ່ງທີ່ເອີ້ນວ່າການຮູ້ແຈ້ງ,ການຊ່ວຍໃຫ້ຫລຸດພົ້ນຫຼືປຸກໃຫ້ຕື່ນ,ມາມອບໃຫ້ເຮົາຄຳເວົ້າທີ່ໃຊ້ອາດຈະແຕກຕ່າງກັນແຕ່ແກ່ນແທ້ລ້ວນໝາຍເຖິງສິ່ງດຽວກັນທັງສິ້ນ.ປັດຈຸບັນທ່ານຜູ້ມາຢ້ຽມເຢື່ອນຈາກເບື້ອງບົນ,ຊຶ່ງມີຄວາມ ລ້ຳເລີດທາງ ການບຳ ເພັນຈິດ,ມີຄວາມບໍລິສຸດທາງສິນລະທຳແລະມີພະລັງທີ່ຈະຍົກລະດັບຂອງມະນຸດຊາດໃຫ້ເໝືອນເຊັ່ນດຽວກັນກັບຜູ້ມາຢ້ຽມເຢືອນທີ່ສັກສິດແລະສູງສົ່ງໃນອະດີດກໍ່ໄດ້ມາຢູ່ກັບພວກເຮົາແລ້ວເຖິງເປັນເຊັ່ນນັ້ນກໍ່ດີການປະກົດຕົວຂອງທ່ານເຫລົ່ານີ້ກໍ່ມີຜູ້ຄົນຮູ້ໜອ້ຍທີ່ສຸດນຶ່ງໃນທ່ານເຫລົ່ານັ້ນກໍ່ຄືທ່ານອາຈານຊີງໄຫ່ນັ້ນເອງ.ທ່ານອາຈານຊີງໄຫ່ເບິ່ງແລ້ວບໍ່ໜ້າຈະເປັນຜູ້ທີ່ຄົນທັງຫລາຍຮູ້ຈັກກັນດີຢ່າງກວ້າງຂວາງໃນຖານະນັກບູນຜູ້ມີອາຍຸຢູ່ເລີຍ.ທ່ານເປັນພຽງສັດຕຣີຄົນນຶ່ງແລະຜູ້ທີ່ນັບຖືສາດສະໜາພຸດແລະສາດສະໜາອື່ນໆຈຳນວນຫລາຍກໍ່ຍັງມີແນວຄິດເຊື່ອຖືໃນຕຳນານຄວາມເຊື່ອທີ່ວ່າຜູ້ຍິງບໍ່ສາມາດເປັນພຸດທະໄດ້.

ທ່ານເປັນຄົນເອເຊັຍແລະຄົນຕາເວັນຕົກຈຳນວນຫລາຍກໍ່ຍັງມີຄວາມຄິດວ່າຜູ້ທີ່ຈະມາຊວ່ຍເຂົາໃຫ້ຫລຸດພົ້ນນັ້ນຄົງຈະເປັນບຸກຄົນໜ້າຕາຄືເຂົາເຖິງແນວໃດກໍ່ດີ,ພວກເຮົາທຸກຄົນທີ່ມາຈາກປະເທດຕ່າງໆທົ່ວທຸກມຸມໂລກແລະມີພື້ນຖານສາດສະໜາແຕກຕາ່ງກັນເມື່ອມາຮູ້ຈັກກັບທ່ານແລະປະຕິບັດຕາມຄຳສອນຂອງທ່ານແລ້ວພວກເຮົາຕ່າງກໍ່ເຂົ້າໃຈດີວ່າທ່ານແມ່ນໃຜ!ແລະທ່ານເປັນຫຍັງ!ຜູ້ທີ່ປະສົງຢາກຈະຮຽນຮູ້ເລື້ອງນີ້ ຈຳເປັນຕ້ອງອາໄສແນວຄິດທີ່ເປີດກວ້າງແລະຈິດໃຈທີ່ມີຄວາມຈິງໃຈ.ນອກຈາກນັ້ນກໍ່ຍັງຈຳເປັນຕອ້ງອາໄສເວລາແລະຄວາມຕັ້ງໃຈອີກດວ້ຍ ກໍ່ມີແຕ່ ພຽງເທົ່ານັ້ນບໍ່ມີຫຍັງອື່ນໆອີກ.

ຄົນຈຳນວນຫລາຍໃຊ້ເວລາສວ່ນໃຫ່ຍໃນການຫາລ້ຽງຊີບແລະເອົາໃຈໃສ່ຕາມຄວາມຕ້ອງການທາງດ້ານວັດຖຸ ເຊັ່ນດຽວກັບພວກເຮົາທີ່ເຮັດວຽກ ກໍ່ເພື່ອລ້ຽງຊີບ ແລະເພື່ອຄົນທີ່ເຮົາຮັກໃຫ້ ມີຄວາມສຸກ ສະດວກສະບາຍຫລາຍຂຶ້ນແລະເມື່ອມີເວລາເຮົາກໍ່ມາສົນໃຈດ້ານການເມືອງ,ກິລາ,ເບິ່ງລາຍການໂທລະທັດຫລືສົນໃຈເລື້ອງອື້ສາວທີ່ເປັນຂ່າວຫລ້າສຸດແຕ່ສຳລັບພວກເຮົາທີ່ເຄີຍມີປະສົບການກ່ຽວກັບພະລັງແຫ່ງຄວາມຮັກ ຊຶ່ງໄດ້ມາຈາກການຕິດຕໍ່ໂດຍກົງກັບສິ່ງທີ່ສູງສົ່ງພາຍໃນຍ່ອມຮູ້ດີວ່າຊີວິດຍັງມີສິ່ງອື່ນຫລາຍກວ່ານັ້ນອີກ.
ເລື້ອງທີ່ໜ້າເສັຍດາຍທີ່ພວກເຮົາຮູ້ສຶກກໍ່ຄືຂ່າວດີໆຍັງມີຄົນຈຳນວນບໍ່ຫລວງຫລາຍຮູ້ຈັກ ທີ່ແທ້ຈິງ ຄຳຕອບຕໍ່ບັນຫາເລື້ອງຄວາມທຸກຍາກທັງມວນໃນຊີວິດນັ້ນມີຄຳຕອບທີ່ລໍຄອຍພວກເຮົາຢ່າງງຽບໆຢູ່ພາຍໃນຂອງພວກເຮົາຢູ່ແລ້ວ.ແລະພວກເຮົາກໍ່ຮູ້ແລ້ວວ່າສະຫວັນກໍ່ຢູ່ຫ່າງຈາກພວກເຮົາແຕ່ພຽງລົມຫາຍໃຈເທົ່ານັ້ນຂໍໃຫ້ທ່ານຜູ້ອ່ານກະລຸນາໃຫ້ອາໄພແກ່ພວກເຮົາດວ້ຍຫາກພວກເຮົາກຳລັງອອກໄປທາງດ້ານຊຶ່ງມີຄວາມກະຕືລືລົ້ນຫລາຍ

ເກີນໄປ. ແລະອາດ ຈະເວົ້າໃນບາງສິ່ງທີ່ລະຄາຍເຄືອງຄວາມຮູ້ສຶກນຶກຄິດຫລືເຫດຜົນຄວາມຄິດອ່ານຂອງທ່ານ ແຕ່ສຳລັບພວກເຮົາແລ້ວມັນເປັນເລື້ອງຍາກທີ່ຈະງຽບເສີຍຢູ່.ໃນເມື່ອພວກເຮົາໄດ້ເຫັນໃນສິ່ງທີ່ພວກເຮົາໄດ້ເຫັນມາ ແລະ ໄດ້ຮູ້ໃນ ສິ່ງທີ່ພວກເຮົາຮູ້ມາ.

ພວກເຮົາຈຶ່ງຮອັງຕົວເອງວ່າເປັນສິດຂອງທ່ານອານຸຕຣາຈານຊີງໄຫ່ທັງເປັນຜູ້ບຳເພັນທຳມະວິຖີຂອງທ່ານ ( ທຳມະວິຖີ ກວນຢິນ ) ຂໍມອບໜັງສືຕົວຢ່າງນີ້ ໃຫ້ແກ່ທ່ານຜູ້ອ່ານດ້ວຍຄວາມຫວັງວ່າໜັງສື ສະບັບນີ້ ຈະສາມາດ ຊ່ວຍ ນຳທ່ານໃຫ້ເຂົ້າໄປໃກ້ການບັນລຸເຖີງຄວາມສຸກຄວາມພໍໃຈອັນສູງສິ່ງ ແລະ ພອນຈາກສະຫວັນໂດຍ ຜ່ານ ປະສົບການ ຂອງຕົວທ່ານເອງ ບໍ່ວ່າສິ່ງໃດທີ່ທ່ານໄດ້ຮັບຈະມາຈາກອາຈານຂອງພວກເຮົາ ຫຼືບຸກຄົນອື່ນກໍ່ຕາມ.

ທ່ານອາຈານ ຊີງໄຫ່ ໄດ້ສອນຄວາມສຳຄັນຂອງການປະຕິບັດສະມາທິ ກໍ່ຄືການເພ່ງເຂົ້າສູ່ພາຍໃນ ແລະ ການສວດ ອະທິຖານ . ທ່ານໄດ້ອະທິບາຍວ່າ ເຮົາຕ້ອງຄົ້ນພົບຕົວຕົນພາຍໃນ ອັນສູງສິ່ງ ຂອງຕົນເອງ . ເຮົາຈຶ່ງຈະ ສາມາດພົບຄວາມສຸກໃນຊີວິດນີ້ໄດ້ຢ່າງແທ້ຈິງ . ທ່ານໄດ້ບອກ ພວກເຮົາວ່າ ການຮູ້ແຈ້ງບໍ່ແມ່ນເລື້ອງລຶກລັບ ຫຼື ສິ່ງທີ່ຢູ່ໄກເກີນເອື້ອມ ຫຼືວ່າເກີດຂື້ນໄດ້ແຕ່ ສະເພາະກັບ ຜູ້ທີ່ຜີກຕົວອອກຈາກສັງຄົມ ໄປບຳເພັນຢ່າງໂດດດຽວ ແຕ່ຕົວເອງເທົ່ານັ້ນ  ພາວະຂອງທ່ານກໍ່ຄືການປຸກຕົວຕົນອັນສູງສິ່ງ ທີ່ຢູ່ພາຍໃນຕົວເຮົານັ້ນໃຫ້ລຸກ ເພື່ອໃຫ້ຮູ້ແຈ້ງ ໂດຍທີ່ພວກເຮົາ ຍັງດຳເນີນຊີວິດໄດ້ຕາມປົກກະຕິ ທ່ານໄດ້ກ່າວວ່າ : ມັນເໝືອນກັບວ່າ ເຮົາທຸກຄົນຮູ້ຈັກສັດຈະທຳຢູ່ແລ້ວ ພຽງແຕ່ເຮົາລືມໄປ. ດັ່ງນັ້ນ,ບາງຄັ້ງຈຶ່ງຕອ້ງມີໃຜຜູ້ນຶ່ງມາຊວ່ຍເຕືອນເຮົາເຖີງວິຖີທາງກຽ່ວກັບ ການດຳ ລົງຊີວິດຂອງເຮົາ ໃຫ້ຮູ້ວ່າເປັນຫຍັງ ເຮົາຈຶ່ງຕ້ອງບຳເພັນນັ່ງສະມາທິ ແລະເປັນຫຍັງເຮົາຈຶ່ງເຊື່ອ ໝັ້ນໃນພຣະເຈົ້າ ຫລືພຸດທະ ຫລືບຸກຄົນໃດກໍ່ຕາມ ຊຶ່ງເຮົາ ເຊື່ອວ່າມີພະລານຸພາບ ສູງສຸດໃນຈັກກະວານ ທ່ານອາຈານບໍ່ໄດ້ຂໍໃຫ້ບຸກ ຄົນໃດເຊື່ອຕາມທ່ານ ທ່ານພຽງແຕ່ມອບການຮູ້ແຈ້ງ ຂອງທ່ານໃຫ້ເຫັນເປັນຕົວຢ່າງ ເພື່ອວ່າຄົນອື່ນໆອາດຈະໄດ້ ຮັບ ການລຸດພົ້ນອັນສູງສຸດຂອງຕົນເອງ.

ໜັງສືເຫລັ້ມນີ້ເປັນການແນະນຳຄຳສອນຂອງທ່ານອານຸຕຣາຈານ ຊີງໄຫ່ ຜູ້ອ່ານກະລຸນາເຂົ້າໃຈໄວ້ວ່າການບັນຍາຍທຳ ຄວາມເຫັນ ແລະຖອ້ຍຄຳຕ່າງໆຂອງທ່ານອາຈານ ຊຶ່ງບັນຈຸຢູ່ໃນ ໜັງສືສະບັບນີ້ ເປັນຄຳເວົ້າຂອງທ່ານ ຊຶ່ງໄດ້ຮັບການບັນທຶກຖອດຄວາມແລະບາງຄັ້ງກໍ່ແປມາຈາກພາສາອື່ນແລ້ວຈຶ່ງມາຮຽບຮຽງເພື່ອການຈັດພິມ.ເຮົາຂໍແນະນຳໃຫ້ທ່ານຟັງເທບຫລືເບິ່ງວີດີໂອເທບຂອງຈິງແລ້ວທ່ານຈະໄດ້ຮັບປະສົບການທີ່ສົມບູນກວ່າ ເພາະການເຫັນຈະສຳພັດ ໃກ້ສິດກ່ວາ ທີ່ຈະອ່ານຄຳເວົ້າທີ່ຂຽນ ເປັນອັກສອນ ໄວ້ເທົ່ານັ້ນ ແຕ່ແນ່ນອນປະສົບການ ທີ່ສົມບູນທີ່ສຸດກໍ່ຄື ການໄດ້ພົບ ຕົວ ທ່ານອາຈານຕົວຈິງ.

ສຳລັບບາງຄົນແລ້ວ ທ່ານ ອານຸດຕຣາຈານ ຊີງໄຫ່ ກໍ່ຄ້າຍຄືກັບແມ່ຂອງເຂົາ ແຕ່ສຳລັບບາງຄົນ ທ່ານອາຈານ ອາດຈະເປັນພໍ່ຂອງເຂົາ ແລະສຳລັບຄົນອື່ນໆອີກຫລາຍຄົນ ທ່ານກໍ່ຄືຄົນທີ່ເຄົາລົບຮັກຂອງເຂົາ ແລະຢ່າງນ້ອຍທີ່ສຸດ ທ່ານກໍ່ຄືເພື່ອນທີ່ດີທີ່ສຸດທີ່ເຮົາສາມາດມີໄດ້ໃນໂລກນີ້ ທ່ານມາຢູ່ທີ່ນີ້ກໍ່ເພື່ອໃຫ້ບາງສິ່ງບາງຢ່າງແກ່ເຮົາ ບໍ່ແມ່ນມາຮັບບໍລິຈາກ ທ່ານບໍ່ໄດ້ຮັບເງີນບໍລິຈາກໃດໆເລີຍໃນການເທດ,ການສອນ ແລະການຊວ່ຍເຫລືອຕ່າງໆ ຫລື **<u>ແມ່ນແຕ່ການສິດວິຊາໃຫ້</u>**  ສິ່ງດຽວທີ່ທ່ານຈະຮັບຈາກພວກເຮົາໄປກໍ່ຄື: ຄວາມທຸກຄວາມເສົ້າໂສກ ແລະຄວາມເຈັບປວດ ຈາກຜົນກຳທີ່ພວກເຮົາໄດ້ກະທຳມາຈາກຫລາຍຊາດ ຫລາຍພົບລວມທັງຍາດຕິພີ່ນ້ອງຫ້າຊົ່ວໂຄດຈະຕ້ອງໄດ້ລຸດພົ້ນ ແຕ່ວ່າສະເພາະໃນກໍລະນີ ທີ່ເຮົາຕອ້ງການເຊັ່ນນັ້ນເທົ່ານັ້ນ.

"   ຜູ້ທີ່ເປັນອາຈານກໍ່ຄືຜູ້ທີ່ມີກະແຈສຳລັບໃຫ້ຕົວທ່ານເອງກາຍເປັນອາຈານໄດ້......... ຊ່ວຍໃຫ້ໂຕເອງຮູ້ວ່າໂຕເອງຂອງເຈົ້າກໍ່ເປັນອາຈານຄົນນຶ່ງ ແລະ ທ່ານເອງກັບພຣະເຈົ້າ ກໍ່ເປັນໜຶ່ງດຽວກັນ ກໍ່ເທົ່ານັ້ນເອງ..........ນີ້ແຫຼະຄືບົດບາດພຽງຢ່າງດຽວເທົ່ານັ້ນຂອງຜູ້ເປັນອາຈານ "

ທ່ານ ອານຸດຕຣາຈານ ຊີງໄຫ່

" ວິທີທາງຂອງເຮົາບໍ່ແມ່ນສາດສະໜາເຮົາບໍ່ຕ້ອງການປ່ຽນບຸກຄົນໃດບຸກຄົນໜຶ່ງໃຫ້ຫັນມານັບຖືສາດສະໜາກາໂຕລິກຫຼືສາດສະໜາພຸດຫຼືສາດສະໜາອື່ນໆ.ເຮົາພຽງແຕ່ມອບວິທີໜຶ່ງຊຶ່ງໃຫ້ເຈົ້າໄດ້ຮູ້ຈັກໂຕເຈົ້າເອງມາຈາກໃສແລະຈຳໄດ້ວ່າພາລະກິດຂອງໂຕເຈົ້າເອງຢູ່ໃນໂລກນີ້ຄືຫຍັງທັງໃຫ້ເຈົ້າໄດ້ພົບຄວາມລັບຂອງຈັກກະວານແລະໄດ້ເຂົ້າໃຈວ່າເປັນຫຍັງຈຶ່ງມີຄວາມທຸກ ທີ່ຫລາຍເຫຼືອລົ້ນແທ້ ໃນໂລກນີ້ ແລະໄດ້ເຫັນສິ່ງທີ່ລໍຖ້າເຈົ້າຢູ່ພາຍ ຫຼັງຄວາມ ຕາຍ."

ທ່ານ ອານຸດຕຣາຈານ ຊີງໄຫ່

" ພວກເຮົາຖືກແຍກອອກຈາກພຣະເຈົ້າ ກໍ່ເພາະວ່າເຮົາມີທຸລະວຸ້ນວາຍຫລາຍເກີນໄປ ຖ້າມີຄົນສົນທະນາກັບເຈົ້າຢູ່ແລ້ວສຽງ"ກຣິງ"ຂອງໂທລະສັບກໍ່ດັງຢູ່ຕະຫລອດເວລາແຕ່ເຈົ້າກັບຫຍູ້ງຢູ່ກັບການສົນທະນາ  ຫຼືເຂົ້າຄົວກຳລັງແຕ່ງກິນຢູ່ ກໍ່ບໍ່ມີໃຜຈະສາມາດຕິດຕໍ່ກັບເຈົ້າໄດ້.ເຫດການທຳນອງດຽວນີ້ກໍ່ເກີດຂຶ້ນ ກັບພຣະເຈົ້າ ເຊັ່ນດຽວກັນ ທ່ານກຳລັງຮ້ອງຫາເຮົາຢູ່ທຸກວັນ ແຕ່ເຮົາບໍ່ມີເວລາໃຫ້ທ່ານເລີຍ ແລະຄອຍແຕ່ຈະວາງຫູ ໂທລະສັບ ໃສ່ທ່ານ. "

ທ່ານ ອານດຸຕຣາຈານ ຊີງໄຫ່

# ຊີວະປະວັດຫຍໍ້ຂອງ ທ່ານອານຸດຕຣາຈານ ຊີງໄຫ່
# The Supreme Master Ching Hai

ທ່ານອາຈານຊີງໄຫ່ເກີດໃນຄອບຄົວທີ່ມັ່ງຄັ່ງສົມບູນຄອບຄົວນຶ່ງໃນປະເທດວຽດນາມ ບິດາຂອງທ່ານເປັນແພດ ແຜນບູຮານທີ່ມີຊື່ສຽງ ຄົນນຶ່ງ. ທ່ານໄດ້ຖືກລ້ຽງດູເໝືອນເດັກນ້ອຍທົ່ວໄປໃນຄອບຄົວທີ່ນັບຖືສາດສະໜາກາໂຕລິກອື່ນໆ,ແລະໄດ້ສຶກສາຮຽນຮູ້ກ່ຽວກັບພື້ນຖານຂອງສາດສະໜາພຸດຈາກຍ່າຂອງທ່ານ.ໃນເວລາທີ່ທ່ານຍັງເປັນເດັກຢູ່ນັ້ນທ່ານໄດ້ສະແດງໃຫ້ເຫັນວ່າທ່ານມີພອນສະຫວັນທີ່ສະຫລຽວສະຫລາດເກີນໄວເດັກຂອງຕົວເອງຊື່ງທ່ານມີຄວາມສົນໃຈທາງດ້ານປຣັດຊະຍາແລະໜັງສືບົດສອນທຳມະເປັນພິເສດ.ນອກນີ້ທ່ານຍັງມີບຸກຄະລິລັກສະນະທີ່ເປັນຄົນມີເມດຕາຈິດ ທີ່ຜິດທຳມະດາ ຕໍ່ສັບພະສິ່ງທີ່ມີຊີວິດທັງປວງ.

ເມື່ອອາຍຸຂອງທ່ານຍາງເຂົ້າສິບແປດປີເຕັມ ທ່ານອາຈານໄດ້ຖືກສົ່ງໄປສຶກສາຕໍ່ທີ່ປະເທດອັງກິດ,ແລະຫລັງຈາກນັ້ນກໍ່ໄດ້ໄປສຶກສາຕໍ່ທີ່ປະເທດຝຣັ່ງເສດແລ້ວກໍ່ເຢັຽລະມັນ.ຊື່ງໃນຂະນະທີ່ທ່ານອາໄສຢູ່ເຢັຽລະມັນນັ້ນທ່ານໄດ້ມີໂອກາດເຮັດວຽກໃຫ້ສະພາກາແດງແລະຕໍ່ມາທ່ານກໍ່ໄດ້ສ້າງຄອບຄົວກັບສາມີຂອງທ່ານຊື່ງເປັນນັກວິທະຍາສາດຄົນເຢັຽລະມັນ.ພາຍຫລັງທີ່ສ້າງຄອບຄົວໄດ້ສອງປີຢ່າງມີຄວາມສຸກນັ້ນທ່ານໄດ້ສະລະຊີວິດແຕ່ງງານຂອງທ່ານ ເພື່ອມຸ່ງສະແຫວງຫາການຮູ້ແຈ້ງ ຕາມທີ່ໄດ້ຕັ້ງໃຈໄວ້ເມື່ອໄວເດັກ.ໃນຊ່ວງເວລາດັ່ງກ່າວນັ້ນທ່ານໄດ້ສຶກສາຄົ້ນຄວ້າ ແລະຝຶກຝົນການບຳເພັນສະມາທິ ຢ່າງເຄັ່ງຄັດຫລາຍວິທີ ຕາມການຊີ້ນຳ ນຳພາ ຂອງອາຈານແຕ່ລະທ່ານທີ່ທ່ານເອື້ອມມືເຖິງແຕ່ການສະແຫວງຫາກໍ່ບໍ່ເຫັນຜົນ(ຢູ່ໃນສຸຣາງທຳມະສຸດພຣະສາກະຍະມຸນີ ພຸດທະເຈົ້າ ໄດ້ກ່າວໄວ້ວ່າ " ທຳມະວິຖີແບບກວນຢິນ(Quan yin method ) ເປັນທຳມະແບບສູງສຸດແຕ່ແລ້ວກໍ່ບໍ່ມີອາຈານ ຂອງທ່ານຄົນໃດຮູ້ຈັກ ທຳມະວິຖີດັ່ງກ່າວເລີຍ) ແລະທ່ານຍັງຢັ່ງຮູ້ອີກວ່າ ຖ້າທ່ານຫາກຍັງປະຕິບັດຢູ່ຕາມລຳພັງເພື່ອພະຍາຍາມຊ່ວຍເຫລືອມວນມະນຸດໃຫ້ລຸດພົ້ນຈາກຄວາມທຸກຍາກແສນເຂັນແລ້ວ ກໍ່ຈະບໍ່ມີຜົນປະໂຫຍດເລີຍແລະທັງຕະໜັກຮູ້ວ່າ ທາງທີ່ດີທີ່ສຸດເພື່ອຊ່ວຍເຫລືອມວນມະນຸດໄດ້ກໍ່ຄື ການບັນລຸ ການຮູ້ແຈ້ງໂດຍຕົວຂອງທ່ານ ເອງກ່ອນ.ນັ້ນກໍ່ຄືເປົ້າໝາຍຫລັກຂອງທ່ານ, ທ່ານອອກເດີນທາງໄປ ທຸກທີ່ນທຸກແຫ່ງ ເພື່ອສະແຫວງຫາທຳມະວິຖີ ທີ່ຮູ້ແຈ້ງແບບສົມບູນ ຊື່ງສາມາດທຳໃຫ້ຫລຸດພົ້ນໃນຊາດດຽວໄດ້ແລະໃນທີ່ສຸດ ຫລັງຈາກໃຊ້ເວລານານຫລາຍປີ ທ່ານກໍ່ໄດ້ ພົບອາຈານແຫ່ງພູເຂົາຫິມມະໄລທ່ານນຶ່ງ ຊື່ງໄດ້ທຳການສິດໃຫ້ທ່ານ ດວ້ຍທຳມະວິຖີ ແບບກວນຢິນ (Quan yin method) ແລະຖ່າຍທອດເທວະວິທະຍາ ອັນສູງສົ່ງທີ່ທ່ານເຝົ້າສະແຫວງຫາມາ ເປັນເວລາຍາວນານ ໃຫ້ແກ່ທ່ານ ພາຍຫລັງທີ່ທ່ານໄດ້ຮັບການຖ່າຍທອດແລະສິດເອົາວິຊາແລ້ວ ຫລັງຈາກນັ້ນທ່ານກໍ່ໄດ້ບຳເພັນຝຶກ ປະຕິບັດໄດ້ໄລຍະນຶ່ງ ທ່ານກໍ່ໄດ້ຮູ້ແຈ້ງ ຢ່າງສົມບູນ.

ເມື່ອທ່ານບັນລຸການຮູ້ແຈ້ງໄດ້ຫລາຍປີຜ່ານໄປ,ທ່ານອາຈານໄດ້ໃຊ້ຊີວິດຢ່າງງຽບໆສັນໂດດ,ໂດຍບໍ່ໄດ້ຖືວ່າທ່ານເປັນແມ່ຊີໃນພຸດທະສາດສະໜາເລີຍ.ຕາມບຸກຄະລິລັກສະນະແລ້ວທ່ານເປັນຄົນຂີ້ອາຍ ຕາມທຳ ມະຊາດ,ທ່ານເຊື່ອງຊອ້ນຂຸມຊັບອັນລ້ຳຄ່າຂອງການຮູ້ແຈ້ງໄວ້ຈົນກະທັ້ງມີຜູ້ຄົນໄດ້ພົບເຫັນການສິດສອນແລະການຖ່າຍທອດຈິດສູ່ຈິດຂອງທ່ານ.ໂດຍການຢືນຢັນຂໍຮ້ອງດວ້ຍຄວາມຈິງໃຈຈຶ່ງໄດ້ຮັບ.ຕາມການບອກເລົ່າຂອງສິດຫລຸ້ນແລກຂອງທ່ານໃນຟໍໂມຊາ ແລະໃນສະຫະລັດອາເມລິກາ.ດວ້ຍເຫດນັ້ນ ທ່ານອາຈານຈຶ່ງໄດ້ເທດສອນແລະໄດ້ຖືກເຊື້ອເຊີນໃຫ້ໄປບັນຍາຍທຳຢູ່ຫລາຍປະເທດໃນໂລກ,ແລະມີສິດສານຸສິດຂອງທ່ານ

ຫລາຍແສນຄົນໄດ້ຮັບການຖ່າຍທອດແລະສິດເອົາວິຊານຳທ່ານ.

ທຸກມື້ນີ້ຜູ້ທີ່ສະແຫວງຫາປັນຍາແລະສັດຈະທຳອັນສູງສົ່ງແມ່ນຫລັ່ງໄຫລມາຫາທ່ານແມ່ນມີນັບມື້ນັບເພີ້ມຂຶ້ນເລື້ອຍໆທີ່ມາຈາກທຸກມຸມໂລກຈາກຫລາຍເຊື້ອຊາດແລະສາດສະໜາຂອງຜູ້ທີ່ມີຄວາມຈິງໃຈຢາກບຳເພັນແລະຮ່ຳຮຽນເອົາວິທີທາງສູ່ການຮູ້ແຈ້ງທັນທີຊຶ່ງທ່ານອາຈານໄດ້ພິສູດໃຫ້ເຫັນແລ້ວວ່າແມ່ນທຳມະອັນສູງສົ່ງກໍ່ຄືທຳມະວິທີກວນຢິນນັ້ນ,ທ່ານເອງກໍ່ຢາກຊິດຊ່ວຍໃຫ້ທຸກຄົນໄດ້ຮັບການຖ່າຍທອດແລະໂດຍສະເພາະຢ່າງຍິ່ງກໍ່ຄືການ ນຳພາທາງດ້ານການບຳເພັນຈິດນັ້ນເອງ..

ໂລກຈັ່ງແມ່ນເຕັມໄປດ້ວຍຄວາມວຸ້ນວາຍສັບສົນ
ມີແຕ່ຂ້າພະເຈົ້າຄືນດຽວທີ່ເຕັມໄປດ້ວຍຕົວທ່ານ
ຖ້າທ່ານຫາກໄດ້ມາສະຖິດຢູ່ໃນໂລກນີ້
ຄວາມວຸ້ນວາຍສັບສົນຄົງຈະໝົດໄປຈາກໂລກນີ້
ແຕ່ວ່າຍ້ອນໂລກນີ້ເຕັມໄປດ້ວຍຄວາມວຸ້ນວາຍສັບສົນ
ຂ້າພະເຈົ້າຈຶ່ງບໍ່ສາມາດຫາສະຖານທີ່ໃຫ້ແກ່ທ່ານໄດ້.

ຂ້າພະເຈົ້າຍິນດີທີ່ຈະຂາຍສຸລິຍັນ,ຈັນທາແຫ່ງດວງດາວທັງຫຼາຍໃນຈັກກະວານ,
ພຽງເພື່ອມາຊື້ຄວາມງາມອັນສະຫວ່າງແວວວາວຂອງທ່ານ
ໂອທ່ານ ອາຈານແຫ່ງຄວາມສະຫວ່າງສະໄຫວ ອັນສວຍສົດ ສຸດທີ່ຈະພັນລະນາໄດ້
ກະລຸນາສອ່ງແສງມາສູ່ຫົວໃຈອັນເຝົ້າໄຝຫາຂອງຂ້າພະເຈົ້າດ້ວຍເຖີດ

ຜູ້ຄົນໃນໂລກນີ້ອອກໄປຫາຄວາມສຸກ ຮ້ອງເພງ ແລະເຕັ້ນລຳໃນຍາມຄ່ຳຄືນ,
ພາຍໃຕ້ແສງແລະສຽງດົນຕີຂອງໂລກ
ມີພຽງຂ້າພະເຈົ້າຄືນດຽວທີ່ນັ່ງສະງົບຢູ່ໃນພະວັງ
ໂຍກຍ້າຍໄປມາກັບແສງ ເຈີດຈ້າ ແລະສຽງດົນຕີພາຍໃນ

ນັບຕັ້ງແຕ່ຂ້າພະເຈົ້າໄດ້ຮູ້ຈັກຄວາມສະຫວ່າງສະໄຫວ ອັນສວຍສົດງົດງາມຂອງທ່ານ ໂອພຣະເຈົ້າ,
ຂ້າພະເຈົ້າກໍ່ບໍ່ອາດຈະຮັກສິ່ງໃດໃນໂລກນີ້ໄດ້
ໂປຼດກະລຸນາ ສວມກອດເອົາຂ້າພະເຈົ້າໃວ້ໃນພຣະພອນແຫ່ງຄວາມຮັກຂອງທ່ານ,
ຕະຫລອດນິລັນດອນດວ້ຍເຖີດ!

ຈາກ ຢົດນ້ຳຕາທີ່ໄຫຼແງບໆ
ໂດຍ: ທ່ານ ອະນຸດຕຣາຈານ ຊີງໄຫ່

## ຄວາມມະຫັດສະຈັນຂອງໂລກທີ່ຢູ່ເໜືອໂລກ

ບັນຍາຍໂດຍ: ທ່ານອະນຸດຕຣາຈານ ຊີງໄຫ່
26 ມິຖຸນາ 1992
ທີ່ ອົງການສະຫະປະຊາຊາດ,ລັດນີວຢອກ

ຍິນດີຕ້ອນຮັບທຸກທ່ານສູ່ອົງການສະຫະປະຊາຊາດໃນມື້ນີ້.ຂໍເຊີນຊວນທຸກໆທ່ານອະທິຖານຮ່ວມກັນຈັກໜ່ອຍໜຶ່ງຕາມຄວາມເຊື່ອຂອງແຕ່ລະທ່ານວ່າພວກເຮົາຮູ້ສຶກຂອບຄຸນໃນສິ່ງທີ່ພວກເຮົາມີຢູ່ສິ່ງທີ່ເຮົາໄດ້ຮັບແລະເຮົາປາຖະໜາແລະຫວັງວ່າຜູ້ທີ່ຍັງມີບໍ່ທັນພຽງພໍຈະໄດ້ຮັບເໝືອນທີ່ເຮົາໄດ້ບໍ່ວ່າຈະເປັນຜູ້ອົບພະຍົບ,ຜູ້ລີ້ໄພສົງຄາມ,ທະຫານ,ຜູ້ນຳລັດຖະບານແລະບັນດາຜູ້ນຳຂອງອົງການສະຫະປະຊາຊາດດ້ວຍເພື່ອໃຫ້ພວກເພິ່ນປະສົບ ຜົນສຳ ເລັດ ໃນສິ່ງ ທີ່ປາຖະໜາແລະມີຊີວິດຢູ່ຮ່ວມກັນຢ່າງສັນຕິ ເຮົາເຊື່ອສິ່ງທີ່ເຮົາອະທິຖານນັ້ນ ຈະໄດ້ຮັບການຕອບສະໜອງ ເພາະມີກ່າວໄວ້ເຊັ່ນນັ້ນ ໃນຄຳພີ ໄບໂບ. ຂອບໃຈ!

ດົນລືມຄວນທີ່ຂ້າພະເຈົ້າບໍ່ໄດ້ມາທີ່ນີ້ມີໃຜເຄີຍມາທີ່ນີ້ບໍ່ຂ້າພະເຈົ້າໝາຍໝາຍເຖິງວ່າມີໃຜແດ່ທີ່ເຄີຍຟັງການບັນຍາຍຂອງຂ້າພະເຈົ້າຄັ້ງກ່ອນຢູ່ທີ່ນີ້?ເມື່ອໃດ?ໂອ,ແມ່ນເບາະ?ມີຕັ້ງຫຼາຍຄົນຂໍຂອບໃຈທຸກທ່ານ.ທ່ານຄົງຮູ້ແລ້ວວ່າຫົວຂໍ້ການບັນຍາຍຂອງເຮົາໃນມື້ນີ້ແມ່ນ(ສິ່ງທີ່ຢູ່ເໜືອຈາກໂລກນີ້),ເພາະຂ້າພະເຈົ້າບໍ່ຄ່ອຍຢາກຈະເວົ້າໃຫ້ພວກທ່ານຟັງກ່ຽວກັບໂລກນີ້ອີກແລ້ວສິ່ງເຫຼົ່ານີ້ພວກທ່ານກໍ່ຮູ້ກັນໝົດທຸກຄົນແລ້ວແມ່ນບໍ່?ທ່ານຮູ້ແລ້ວວ່າໂລກນີ້ມີອົງການສະຫະປະຊາຊາດ,ເຮົາມີອາເມລິກາ,ມີນີວຢອກ(ບິກແອັບເປີ້ລ)ແຕ່ເໜືອໂລກນີ້ຂຶ້ນໄປເຮົາຍັງມີສິ່ງອື່ນໆອີກຂ້າພະເຈົ້າຄິດວ່າພວກທ່ານທີ່ມາຮ່ວມທີ່ນີ້ທຸກໆຄົນຄົງສົນໃຈຢາກຮູ້ເລື່ອງພວກນີ້.ມັນບໍ່ແມ່ນສິ່ງທີ່ເໝືອນກັບສະຕິບເຟັນທີ່ໄດ້ເວົ້າໄປຫວ່າງໜຶ່ງນີ້ກ່ຽວກັບສິ່ງມະຫັດສະຈັນຫຼືສິ່ງເພີ້ຝັນເຊິ່ງທ່ານກໍ່ບໍ່ອາດຈະເຊື່ອໄດ້.ແຕ່ມັນເປັນເລື້ອງທີ່ມີຄວາມເປັນວິທະຍາສາດທີ່ສຸດເລື້ອງຈິງທີ່ສຸດແລະສຳຄັນທີ່ສຸດ.

ເຮົາທຸກຄົນເຄີຍໄດ້ຍິນຈາກຄຳພີຫຼືໜັງສືໃນສາດສະໜາຕ່າງໆ ເຊິ່ງໄດ້ກ່າວໄວ້ວ່າ ມີສະຫວັນເຈັດຊັ້ນມີລະດັບຈິດຕ່າງກັນມີອານາຈັກຂອງພຣະເຈົ້າພາຍໃນມີຫາໍມະຊາດແຫ່ງພຸດທະແລະອື່ນໆ.ສິ່ງເຫຼົ່ານີ້ເປັນສິ່ງທີ່ໄດ້ຮັບຄວາມໝັ້ນສັນຍາວ່າຈະໄດ້ເໜືອຈາກໂລກນີ້.ແຕ່ວ່າມີຄົນບໍ່ມີຈຳນວນຫຼາຍເທົ່າໃດທີ່ສາມາດໄປເຖິງສິ່ງທີ່ໄດ້ສັນຍາໄວ້ໃນຄຳພີເຫຼົ່ານີ້ບໍ່ມີຫຼາຍ.ຂ້າພະເຈົ້າບໍ່ໄດ້ບອກວ່າບໍ່ມີແຕ່ບອກວ່າມີບໍ່ຫຼາຍເມື່ອປຽບທຽບໃສ່ປະຊາກອນທັງໂລກຄົນທີ່ສາມາດເຂົ້າເຖິງອານາຈັກຂອງພຣະເຈົ້າພາຍໃນຫຼືທີ່ເອີ້ນກັນວ່າ(ສິ່ງທີ່ຢູ່ເໜືອໂລກນີ້)ມີຈຳນວນໜ້ອຍທີ່ສຸດຖ້າທ່ານຢູ່ໃນອາເມລິກາບາງທີຄົງຈະມີໂອກາດໄດ້ອ່ານໜັງສືຫຼາຍຢ່າງທີ່ໄດ້ບັນຍາຍກ່ຽວກັບສິ່ງທີ່ຢູ່ເໜືອໂລກຂອງເຮົາແລະຮູບເງົາບາງເລື່ອງຊຶ່ງຄົນອາເມລິກາສ້າງກໍ່ບໍ່ໄດ້ວ່າຈະເປັນເລື່ອງນິຍາຍເພີ້ຝັນທັງໝົດນອກຈາກນີ້ຍັງມີຮູບເງົາຂອງຄົນຍີ່ປຸ່ນສ້າງບາງເລື່ອງກໍ່ບໍ່ໄດ້ເປັນເລື່ອງນິຍາຍທັງໝົດເໝືອນກັນເພາະຄົນເຫຼົ່ານີ້ອາດຈະໄດ້ອ່ານໜັງສືບາງເຫຼັ້ມຊຶ່ງຂຽນໂດຍຜູ້ທີ່ເຄີຍຢູ່ເໜືອໂລກນີ້ມາແລ້ວຫຼືອາດຈະເຄີຍໄດ້ເຫັນ ອານາຈັກຂອງພຣະເຈົ້າມາແລ້ວ.

ເພາະສະນັ້ນໃນອານາຈັກຂອງພຣະເຈົ້າ...........ມີຫຍັງຢູ່ໃນອານາຈັກຂອງພຣະເຈົ້ານັ້ນ?ເປັນຫຍັງເຮົາຈຶ່ງຕອ້ງມາສົນໃຈອານາຈັກຂອງພຣະເຈົ້າໃນເມື່ອເຮົາຫາກມີວຽກທີ່ພຽງພໍທີ່ຈະເຮັດຢູ່ແລ້ວໃນໂລກນີ້ມີການງານແລະອາຊີບມີບ້ານທີ່ໝັ້ນຄົງປອດໄພມີຄວາມຮັກຄວາມອົບອຸ່ນທີ່ພຽງພໍແລະສິ່ງອື່ນໆຄັນຈະເວົ້າຕາມຄວາມເປັນຈິງແລ້ວກໍ່ເພາະວ່າພວກເຮົາໄດ້ມີສິ່ງເຫລົ່ານີ້ແລ້ວນັ້ນແຫລະເຮົາຈຶ່ງຄວນຄິດເຖິງອານາຈັກພຣະເຈົ້າ.

ພໍເວົ້າເຖິງອານາຈັກຂອງພຣະເຈົ້າຟັງເບິ່ງຄືກັບວ່າເປັນເລື້ອງຂອງສາດສະໜາເກີນໄປທີ່ຈິງແລ້ວສິ່ງນີ້ກໍ່ເປັນ ພຽງລະດັບຊັ້ນຂອງຈິດ ສຳນຶກທີ່ສູງກວ່າ ທຳມະດາເທົ່ານັ້ນແຫລະ ຄົນໃນສະໄໝກອນຮອ້ງວ່າ " ສະຫວັນ " ແຕ່ຕາມສັບວິຊາການ ທາງວິທະຍາສາດ ເຂົາຮ້ອງວ່າ ມັນເປັນຄວາມຮູ້ທີ່ສູງກວ່າ, ລະດັບປັນຍາ ທີ່ສູງ ກວ່າ, ແລະ ສາມາດໄປເຖິງສິ່ງນີ້ໄດ້ຖ້າເຮົາຮູ້ວິທີ.

ໃນອາເມລິກາໃນໄລຍະຫລັງໆນີ້ເຮົາເຄີຍໄດ້ຍິນກ່ຽວກັບສິ່ງປະດິດຫລ້າສຸດ ຄົນສາມາດໃຊ້ເຄື່ອງຈັກທຳ ໃຫ້ທ່ານເຂົ້າເຖິງສະມາທິໄດ້ ມີໃຜເຄີຍໃຊ້ເຄື່ອງນີ້ບໍ່? ບໍ່ເຄີຍເບາະ? ມັນມີຂາຍຢູ່ ໃນອາເມລິການີ້ແຫລະລາຄາ ສີ່ຮອ້ຍເຖິງເຈັດຮອ້ຍ ຂື້ນຢູ່ກັບລະດັບການໃຊ້ງານທີ່ທ່ານຕ້ອງການເລື້ອງນີ້ແມ່ນເໝາະສົມກັບຄົນທີ່ຄ້ານບໍ່ຢາກ ນັ່ງ ສະມາທິ ແຕ່ຕອ້ງການຢາກຢູ່ ໃນສະມາທິ ຖ້າບໍ່ມີໃຜຮູ້ເລື້ອງນີ້ ຂ້າພະເຈົ້າຈະເລົ່າໃຫ້ຟັງສັ້ນໆ. ເຂົາບອກວ່າ:ເຄື່ອງມືສະນິດນີ້ສາມາດທຳສະມາທິໃຫ້ຈິດຢູ່ໃນສະພາບທີ່ພອນຄາຍແລ້ວເຮົາຈະມີຄວາມສະຫລາດໃນດັບສູງຊຶ່ງຈະທຳໃຫ້ທ່ານມີຄວາມຮູ້ແລະສະຕິປັນຍາສູງຂື້ນແລະຮູ້ສຶກສະບາຍ.ເຄື່ອງມືສະນິດນີ້ຈະໃຊ້ດົນຕີທີ່ໄດ້ຖືກຄັດເລື້ອກມາເປັນ ສຽງດົນຕີພາຍນອກ ເພາະສະນັ້ນຈຶ່ງຕ້ອງມີຫູຟັງ ແລ້ວກໍ່ຈະມີກະແສໄຟຟ້າບາງຢ່າງມາກະຕູ້ນຊຶ່ງອາດຈະທຳໃຫ້ເຮົາເບິ່ງມີແສງແວບວາບບາງຢ່າງຈຶ່ງຕ້ອງມີສິ່ງທີ່ປິດຕາມີພຽງສິ່ງທີ່ປິດຫູປິດຕາກໍ່ມີສະມາທິໄດ້ແລ້ວຈັດວ່າເປັນເຄື່ອງມືທີ່ດີໃຊ້ໄດ້ມີລາຄາພຽງແຕ່ສີ່ຮ້ອຍໂດລາເທົ່ານັ້ນເຫັນວ່າມີລາຄາຖືກແຕ່ສະມາທິຕາມແບບຂອງເຮົາແຮງຖືກກວ່ານັ້ນບໍ່ຕ້ອງເສັຍເງີນເລີຍແລະຄົງຢູ່ຕະຫລອດແລະກໍ່ບໍ່ຈຳເປັນຕ້ອງສາກໝໍ້ໄຟໃຫ້ມັນ ຫຼືສຽບປັ໊ກໄຟ ເຂົ້າໆ ອອກໆ ບໍ່ຕອ້ງຢ້ານວ່າເຄື່ອງມືຈະເສັຍຕອ້ງນຳໄປສອ້ມ.

ຂະໜາດແສງແລະສຽງແບບທຽມໆທີ່ສ້າງຂື້ນມານີ້ຍັງສາມາດທຳໃຫ້ເກີດຄວາມຜອ່ນຄາຍແລະເກີດປັນຍາໄດ້ຫລາຍຊໍ່ານີ້ແລະມັນກໍ່ໄດ້ຖືກຄາດຄະເນວ່າຈະໄດ້ຜົນເຊັ່ນນີ້ຂ້າພະເຈົ້າກໍ່ໄດ້ອ່ານຕາມໜັງສືພິມວ່າມັນໃຫ້ຜົນຫຍັງແດ່ແຕ່ຂ້າພະເຈົ້າບໍ່ໄດ້ທົດລອງເບິ່ງໂດຍສ່ວນຕົວເຫັນວ່າມັນເປັນທີ່ນິຍົມກັນຫລາຍ ທັງໄດ້ຂາຍດີ ຕາມຂ້າພະເຈົ້າໄດ້ຍິນມາ ເຖິງແມ່ນວ່າມັນເປັນຂອງທຽມກໍ່ຍັງສາມາດຜອ່ນຄາຍ ແລະໃຫ້ສະຕິປັນຍາໄດ້ແລ້ວທ່ານລອງຄິດເບິ່ງດູວ່າຂອງຈິງແທ້ໆມັນຈະໃຫ້ສະຕິປັນຍາແກ່ພວກເຮົາໄດ້ໜອ້ຍຫລາຍຊໍ່າໃດ? ຂອງຈິງນີ້ແມ່ນຢູ່ເໜືອໂລກ ແຕ່ທຸກຄົນກໍ່ສາມາດເຂົ້າເຖິງໄດ້ຖ້າພວກທ່ານຫາກຕອ້ງການຈະສຳຜັດກັບມັນ ມັນເປັນດົນຕີແລະສຽງຂອງສະຫວັນພາຍໃນ<u>**ແລະມັນຂື້ນຢູ່ກັບຄວາມເຂັ້ມຂອງດົນຕີນີ້ຂອງແສງແລະສຽງພາຍໃນນີ້ເຮົາກໍ່ສາມາດນຳຕົວຂອງເຮົາເອງໃຫ້ອອກໄປຢູ່ເໜືອໂລກນີ້**</u>ແລະເຂົ້າສູ່ລະດັບຂອງຄວາມເຂົ້າໃຈທີ່ຫລືກເຊິ່ງກວ່ານີ້.

ຂ້າພະເຈົ້າຄິດວ່າມັນກໍ່ເໝືອນກັບກົດທາງວັດຖຸການທີ່ເຮົາຈະສົ່ງຈະຫລວດຂື້ນໄປໃຫ້ພົ້ນຈາກແຮງໂນມຖວ່ງຂອງໂລກໄດ້ກໍ່ຕ້ອງໃຊ້ພະລັງແຮງຂອງຄວາມດັນທີ່ສູງແລະເມື່ອມັນພຸ່ງອອກໄປດວ້ຍຄວາມແຮງທີ່ສູງ

ນັ້ນມັນຈະເກີດປະກາຍໄຟກະຈາຍອອກມາເພາະສະນັ້ນຂ້າພະເຈົ້າຄິດວ່າເມື່ອເຮົາພຸງຕົວຂຶ້ນໄປເໜືອໂລກແບບນັ້ນເຮົາກໍ່....ເຮົາກໍ່ສາມາດເປັງປະກາຍ ແມ່ນແລ້<u>ວ ເປັ່ງແສງອອກ ມາດວ້ຍ ແລະສາມາດໄດ້ຍິນສຽງດວ້ຍ.</u>

<u>**ສຽງນີ້ເປັນພະລັງສະນິດນື່ງຊື່ງດັນເຮົາໃຫ້ຂື້ນໄປສູ່ລະດັບສູງຂື້ນ**</u>ແມ່ນມັນທຳງານໄດ້ໂດຍບໍ່ມີສຽງອຶກກະທຶກຄຶກໂຄມຫຍັງໝົດທັງບໍ່ຫຍຸ້ງຍາກອີກບໍ່ຕ້ອງເສັຍເງິນແລະບໍ່ມີຫຍັງທີ່ເຮັດໃຫ້ຈິດໃຈວຸ້ນວາຍຕໍ່ຜູ້ທີ່ໄດ້ຮັບປະສົບການ ນັ້ນ. ນັ້ນແຫລະຄືວິທີທາງທີ່ ຈະຂຶ້ນໄປຂ້າງເທິງທີ່ເໜືອຈາກໂລກນີ້.

ແລະຢູ່ຂ້າງເທິງທີ່ເໜືອຈາກໂລກເຮົານີ້ມີຫຍັງແດ່ທີ່ດີກວ່າໂລກຂອງເຮົາ?ມັນມີທຸກສິ່ງທີ່ເຮົາສາມາດຈິນຕະນາການໄດ້ລວມທັງສິ່ງທີ່ເຮົາບໍ່ສາມາດຈິນຕະນາການໄດ້ເມື່ອເຮົາມີປະສົບການແລ້ວເຮົາກໍ່ຈະຮູ້ເອງບໍ່ມີໃຜທີ່ຈະສາມາດອະທິບາຍໃຫ້ເຮົາຟັງຢ່າງຈິງໆ <u>**ແຕ່ເຮົາຕ້ອງມີຈິດໃຈທີ່ໝັ້ນຄົງຕໍ່ສິ່ງເຫຼົ່ານັ້ນແລະຕ້ອງມີຄວາມຈິງໃຈແທ້ໆ**</u>ບໍ່ດັ່ງນັ້ນກໍ່ຈະບໍ່ມີຜູ້ໃດຈະສາມາດມາເຮັດແທນຕົວເຮົາໄດ້ມັນກໍ່ເໝືອນກັບທີ່ບໍ່ມີໃຜສາມາດມາເຮັດວຽກແທນພວກທ່ານຢູ່ໃນສຳນັກງານຂອງອົງການສະຫະປະຊາຊາດແຫ່ງນີ້ແລະພວກທ່ານກໍ່ໄດ້ຮັບການເບີກຈ່າຍສຳລັບວຽກງານນີ້.ເຊັ່ນດຽວກັນກັບວ່າບໍ່ມີຜູ້ໃດດອກທີ່ຈະມາກິນຕາງເຮົາແລ້ວເຮົາຈະອີ່ມໄດ້ເພາະສະນັ້ນວິທີທາງທີ່ເຮົາຈະຮູ້ກໍ່ຄືຕອ້ງມີປະສົບການເອງ**ເຮົາອາດຈະຟັງຄົນອື່ນເລົ່າປະສົບການໃຫ້ເຮົາຟັງກໍ່ໄດ້ແຕ່ເຮົາບໍ່ສາມາດໄດ້ປະສົບການຈາກສິ່ງນັ້ນບາງທີອາດຈະໄດ້ເປັນບາງຄັ້ງຫຼືນີໄດ້ເປັນບາງມື້ຂຶ້ນກັບພະລັງຂອງບຸກຄົນໆນັ້ນທີ່ເຄີຍໄດ້ຮັບປະສົບການຈາກພຣະເຈົ້າໃນກໍລະນີແບບນີ້ເຮົາຈະໄດ້ເຫັນແສງແລະສຽງບາງຊະນິດຊຶ່ງເປັນໄປເອງຕາມທຳມະຊາດໂດຍບໍ່ຕ້ອງໃຊ້ຄວາມພະຍາຍາມແຕ່ສ່ວນໃຫ່ຍແລ້ວປະສົບການແບບນີ້ຈະບໍ່ຍືນຍົງຄົງກະພັນເພາະມັນເປັນໄປຕາມມີຕາມເກີດຫຼືບາງຄັ້ງຄາວເທົ່ານັ້ນເພາະສະນັ້ນເຮົາຄວນມີປະສົບການແລະກະທຳດວ້ຍຕົວເຮົາເອງ.**

ຢູ່ເໜືອໂລກຂອງເຮົາຍັງມີໂລກອື່ນໆອີກແຕກຕ່າງກັນໄປຫລາຍໂລກຕົວຢ່າງເຊັ່ນ:ທີ່ຢູ່ສູງກວ່າເຮົາໄປໜ້ອຍນຶ່ງຕາມຄຳເວົ້າຂອງພວກຕາເວັນຕົກຮອ້ງວ່າ"ໂລກທິບ"(Astralworld)ໃນໂລກທິບນີ້ຍັງມີລະດັບຊັ້ນຍ່ອຍໆແຕກຕ່າງກັນໄປເປັນຮອ້ຍລະດັບແຕ່ລະລະດັບຍອ່ຍນີ້ກໍ່ມີໂລກຂອງມັນເອງຊຶ່ງເປັນຕົວແທນຂອງລະດັບຄວາມເຂົ້າໃຈຂອງຕົວເຮົາເອງມັນກໍ່ເໝືອນກັບເຮົາເຂົ້າໄປຮຽນຢູ່ມະຫາວິທະຍາໄລແຕ່ລະຊັ້ນ/ປີທີ່ເຮົາຮຽນຜ່ານໄປກໍ່ເປັນຕົວແທນຂອງຄວາມເຂົ້າໃນຂອງເຮົາເອງທີ່ເພີ້ມຂຶ້ນນັ້ນເອງທີ່ກ່ຽວກັບຄວາມຮູ້ດ້ານວິຊາຕ່າງໆທີ່ສອນກັນຢູ່ໃນມະຫາວິທະຍາໄລນັ້ນແລ້ວເຮົາກໍ່ຄອ່ຍຮຽນສູງຂຶ້ນໄປຈົນຮຽນຈົບການສຶກສາ.ໃນໂລກທິບນີ້ເຮົາຈະພົບສິ່ງມະຫັດສະຈັນຫລາຍຮູບແບບແຕກຕ່າງກັນໄປແລະຕົວເຮົາເອງກໍ່ຈະຖືກຍົວະຍອນໂນ້ມນາວໃຫ້ຫລົງໄຫລໃນເລື້ອງອິດທິປະຕິຫານເຮົາອາດມີອິດທິປະຕິຫານເອງກໍ່ໄດ້ເຮົາອາດຈະຮັກສາຄົນເຈັບປວ່ຍໄດ້ບາງຄັ້ງຍັງອາດເບິ່ງເຫັນບາງສິ່ງບາງຢ່າງໄດ້ໂດຍທີ່ຄົນອື່ນເບິ່ງບໍ່ເຫັນເຮົາຈະມີພະລັງອິດທິປະຕິຫານຢູ່ຢ່າງໜອ້ຍທີ່ກຢ່າງສາມາດເຫັນມິຕິອີກມິຕິນຶ່ງທີ່ນອກເໜືອໄປຈາກທຳມະດາເຮົາສາມາດໄດ້ຍິນສຽງທີ່ຢູ່ເໜືອຂອບເຂດຂອງຮວ່ງອາວາກາດໄລຍະທ່າງໄກນັ້ນບໍ່ເປັນສິ່ງກີດຂວາງຕໍ່ເຮົາເລີຍນີ້ແຫລະທີ່ເຮົາເອີ້ນວ່າ"ຫູທິບຕາທິບ"ແລະເຮົາສາມາດຢັ່ງຮູ້ໄດ້ວ່າ ຄົນນັ້ນກຳລັງຄິດຫຍັງ ແລະມີບັນຫາ ຫຍັງຢູ່ໃນໃຈ ບາງຄັ້ງກໍ່ສາມາດເຫັນໄດ້ໆລໆ ອັນນີ້ເປັນພະລັງຊຶ່ງບາງຄັ້ງ ເຮົາຈະໄດ້ຮັບ ເມື່ອເຮົາໄປເຖິງລະດັບ ຊັ້ນທີ່ນຶ່ງແຫ່ງອານາຈັກຂອງພຣະເຈົ້າ.

ພາຍໃນລະດັບຊັ້ນທຳອິດນີ້ຂ້າພະເຈົ້າໄດ້ກ່າວໄວ້ແລ້ວວ່າມັນມີລະດັບຊັ້ນຍອ່ຍໆແຕກຕ່າງກັນໄປຢ່າງ

ຫລວງຫລາຍ ທີ່ເຮົາສາມາດໄດ້ຮູ້ໄດ້ເຫັນ ຊຶ່ງບໍ່ອາດສາມາດບັນຍາຍອອກມາເປັນ ຄຳເວົ້າໄດ້ແລະເມື່ອເຮົາໄປ ເຖິງບອ່ນນັ້ນເຊັ່ນ:ຫລັງຈາກສິດເອົາວິຊາແລ້ວເຮົານັ່ງສະມາທິທາກລະດັບຂອງເຮົາຢູ່ໃນຊັ້ນທີ່ນຶ່ງນີ້ເຮົາກໍ່ມີຄວາ ມ ສາມາດເພີ້ມຫລາຍຂຶ້ນອີກຫລາຍຢ່າງ ສາມາດພັດທະນາຄວາມ ເກັ່ງກາດ ດ້ານໜັງສືກາບກອນວັນນະຄະດີ ຊຶ່ງບໍ່ເຄີຍມີມາກອ່ນຈະຮູ້ຫລາຍສິ່ງຫລາຍຢ່າງທີ່ຄົນອື່ນບໍ່ຮູ້ຈະໄດ້ຮັບຫລາຍສິ່ງຫລາຍຢ່າງທີ່ຄ້າຍກັບວ່າສະ ຫວັນບັນດານບາງທີອາດຈະເປັນເລື້ອງເງິນເລື້ອງທອງຫລືອາດຈະເປັນອາຊີບການງານແລະສິ່ງອື່ນໆອີກຢ່າງ ຫລວງຫລາຍບາງທີ
ອາດຈະເລີ້ມຂຽນໂຄງກາບກອນ, ແຕ້ມຮູບ, ແລະບາງສິ່ງທີ່ບໍ່ເຄີຍມີຄວາມສາມາດມາກອ່ນ ແລະບໍ່ໄດ້ຄາດ ຄິດວ່າໂຕເອງຈະທຳໄດ້ນີ້ຄືລະດັບທີ່ນຶ່ງຊຶ່ງເຮົາສາມາດກະທຳໄດ້ເຊັ່ນ:ຂຽນກອນ,ຂຽນປື້ມທີ່ມີເລື້ອງທີ່ໜ້າຈັບ ໃຈຊຶ່ງບໍ່ໄດ້ເປັນນັກຂຽນມືອາຊີບມາກອ່ນແຕ່ຕອນນີ້,ເຮົາສາມາດເຮັດໄດ້ເລື້ອງຕ່າງໆເຫລົ່ານີ້ເປັນພຽງປະ ໂຫຍດທາງດ້ານວັດຖຸ ຊຶ່ງເຮົາຈະໄດ້ຮັບເມື່ອເຮົາຢູ່ໃນລະດັບຊັ້ນທີ່ນຶ່ງນີ້.

ແທ້ທີ່ຈິງແລ້ວສິ່ງເຫຼົ່ານີ້ບໍ່ແມ່ນຂອງຂວັນຈາກພຣະເຈົ້າສິ່ງເຫຼົ່ານີ້ແມ່ນພອນສະຫວັນທີ່ຢູ່ໃນຕົວເຮົາ ເພາະເຮົາໄດ້ປຸກມັນໃຫ້ມີຊີວິດຂຶ້ນມາແລະໃຊ້ມັນໃຫ້ເປັນປະໂຫຍດນີ້ຄືຂໍ້ມູນກ່ຽວກັບລະດັບຊັ້ນທີ່ນຶ່ງ.

ບາດນີ້ເຮົາຈະໄປລະດັບຊັ້ນທີ່ສູງຂຶ້ນຊຶ່ງເຮົາຈະໄດ້ຮັບຢ່າງອື່ນອີກຫລາຍຢ່າງຂ້າພະເຈົ້າຄົງບໍ່ສາມາດ ບອກໄດ້ໝົດດອ່ກ!ເພາະເວລາຈຳກັດແລະກໍ່ບໍ່ຈຳເປັນຕ້ອງໄປຟັງເລື້ອງສວຍໆງາມໆເຫຼົ່ານັ້ນທັງໝົດດອ່ກ!ຄົນ ເວົ້າເຖິງເຂົ້າໜົມເຄັກຫຼືລູກກວາດແລ້ວກໍ່ບໍ່ເຄີຍໄດ້ກິນຈັກເທື່ອນັ້ນມັນກໍ່ບໍ່ມີຄວາມໝາຍຫຍັງເພາະສະນັ້ນຂ້າ ພະເຈົ້າພຽງແຕ່ທຳໃຫ້ມີຄວາມຢາກຂຶ້ນ ໜອ້ຍນຶ່ງ ຖ້າຫາກ ທ່ານຕອ້ງການຢາກກິນແທ້ໆກໍ່ເປັນອີກເລື້ອງນຶ່ງ ເຮົາຈະໃຫ້ອາຫານ ແທ້ຈິງຕາມທີຫລັງ ຖ້າໃຜຢາກຈະກິນ.

ບາດນີ້,ຖ້າເຮົາຂຶ້ນໄປສູງກວ່ານີ້ໜ້ອຍນຶ່ງໄປເຖິງລະດັບຊັ້ນທີ່ທັດຂຶ້ນໄປຊຶ່ງເຮົາເອີ້ນວ່າ“ຊັ້ນທີ່ສອງ“ກໍ່ ເພື່ອໃຫ້ເຂົ້າໃຈງ່າຍເທົ່ານັ້ນ. ໃນຊັ້ນທີ່ສອງ-ເຮົາຈະມີຄວາມສາມາດຫລາຍຢ່າງຫລາຍກວ່າຊັ້ນທີ່ນຶ່ງ ລວມທັງ ເລື້ອງອິດທິປະຕິຫານອີກດວ້ຍ ແຕ່ຄວາມສາມາດທີ່ເດັ່ນທີ່ສຸດ ຊຶ່ງເຮົາຈະໄດ້ຮັບໃນລະດັບຊັ້ນທີ່ສອງນີ້ກໍ່ຄື: ການສົນທະນາ ຫລືເວົ້າ ໄດ້ຄອ່ງແຄ້ວ, ມີສະເໜ່ ມີຄາລົມຄົມຄາຍ ສາມາດອະທິບາຍການໂຕ້ແຍ້ງໄດ້ເກັ່ງ ບໍ່ມີໃຜຈະສາມາດ ເອົາຊະນະບຸກ ຄົນ ຊຶ່ງຢູ່ໃນລະ ດັບຊັ້ນທີ່ສອງນີ້ໄດ້ ເພາະເຂົາມີພະລັງທາງດ້ານວາທະສິນ ແລະສະຕິປັນຍາອັນແຫລມຄົມຂອງເຂົາແມ່ນຢູ່ຈຸດສຸດຍອດຂອງຈອມພະລັງແລ້ວ.

ຄົນສວ່ນຫລາຍທີ່ມີລະດັບສະໝອງທຳມະດາ ມີຄວາມສະຫຼາດໜ້ອຍຈະໄປທຽບກັບບຸກຄົນເຫຼົ່ານີ້ບໍ່ໄດ້ ເພາະຄວາມສະຫຼາດຂອງເຂົາເຈົ້າແມ່ນໄດ້ເປີດອອກສູ່ລະດັບອິງສາທີ່ສູງແລ້ວມັນບໍ່ແມ່ນແຕ່ສະໝອງຂອງ ກາຍເນື້ອຂອງເຮົາເທົ່ານັ້ນທີ່ໄດ້ຮັບການພັດທະນາສູງຂຶ້ນມັນແມ່ນພະລັງມະຫັດສະຈັນມັນແມ່ນພະລັງແຫ່ງສະ ຫວັນເປັນປັນຍາ ທີ່ຢູ່ພາຍໃນຕົວເຮົາຊຶ່ງເລີ້ມເປີດອອກມາໃນຕອນນີ້ ໃນອິນເດັຍເຂົາຈະເອີ້ນວ່າ:”ໂພທິ” ຊຶ່ງໝາຍເຖິງລະດັບຂອງສະຕິປັນຍາເມື່ອຜູ້ໃດທາກໄດ້ຮັບຊັ້ນໂພທິແລ້ວກໍ່ຈະກາຍເປັນ”ພຸດທະ”ຄຳວ່າພຸດທະກໍ່ ມາຈາກ”ໂພທິ”ເພາະສະນັ້ນພຸດທະກໍ່ເປັນຢ່າງທີ່ເວົ້ານີ້ແຫຼະ.ຍັງໆບໍ່ທັນຈົບ.ຂ້າພະເຈົ້າຈະແນະນຳບໍ່ແມ່ນພຽງ ແຕ່ພຸດທະເທົ່ານັ້ນ ຍັງມີຫຼາຍກວ່ານີ້.

ດັ່ງນັ້ນ,ຄົນສ່ວນໃຫຍ່ຈຶ່ງຮ້ອງບຸກຄົນທີ່ຮູ້ແຈ້ງວ່າພຸດທະ.ແຕ່ຖ້າຄົນໆນັ້ນຍັງບໍ່ທັນໄດ້ຮູ້ເຖິງລະດັບຊັ້ນທີ່

ເໜືອກວ່າຊັ້ນທີ່ສອງນີ້ຂຶ້ນໄປແລ້ວບາງທີເຂົາອາດຈະພູມໃຈໃນຕົວເອງ.ແມ່ນແຫລະ,ອາດຈະຄິດວ່າໂຕເອງຄື ພຸດທະແລ້ວແລະລູກສິດລູກຫາຂອງເຂົາຕ່າງກໍ່ຈະພາກັນພາກພູມໃຈທີ່ໄດ້ຮ້ອງເຂົາວ່າພຸດທະ.ແຕ່ຄວາມຈິງ ແລ້ວ ຖ້າເຂົາຫາກບັນລຸເຖິງພຽງແຕ່ລະດັບຊັ້ນທີ່ສອງ ຊຶ່ງໃນລະດັບຊັ້ນທີ່ສອງນັ້ນເຂົາກໍ່ຈະສາມາດເຫັນຜ່ານ ອາດີດ,ປັດຈຸບັນ,ແລະອະນາຄົດຂອງບຸກຄົນໃດຄົນນຶ່ງໄດ້ແລ້ວຖ້າເຂົາຕອ້ງການຢາກເຫັນແລະໃນນີ້ແມ່ນລວມ ທັງການເວົ້າຈາປາໄສທີ່ມີຄາລົມຄົມຄາຍແລະຄອ່ງແຄ້ວອີກດ້ວຍ.ແຕ່ມັນກໍ່ບໍ່ທັນແມ່ນລະດັບຊັ້ນສຸດທ້າຍຂອງ ອານາຈັກຂອງພະເຈົ້າເທື່ອ.

. ໃຜກໍ່ຕາມບໍ່ຄວນທີ່ຈະພາກພູມໃຈໃນຄວາມສາມາດລ່ວງຮູ້ອະດີດ,ປັດຈຸບັນແລະອານາຄົດ ເພາະສິ່ງ ເຫຼົ່ານີ້ເປັນພຽງການບັນທຶກທີ່ເອີນວ່າ:"ອາກາຊິກ"(Akashic)ຕາມຄາໍສັບຂອງທາງຕາເວັນຕົກໃຜທີ່ຝຶກໂຍຄະຫຼື ຝຶກສະມາທິບາງຢ່າງກໍ່ຈະເຂົ້າໃຈການບັນທຶກແບບອາກາຊິກຊຶ່ງກໍ່ເປັນເໝືອນຫໍສະມຸດທີ່ຢູ່ຖັດໄປນີ້ເອງຊຶ່ງຢູ່ໃນ ການບ່ອນເຮັດການຂອງອີງການສະຫະປະຊາຊາດນີ້ທີ່ມີພາສາຕ່າງໆມີທັງອາຫຼັບ,ລັດເຊັຍ,ຈີນ,ອັງກິດ,ຝຣັ່ງ ເສດ,ເຢັງລະມັນ...ທຸກຢ່າງແມ່ນຢູ່ໃນຫ້ອງສະມຸດຖັດໄປນີ້ເອງ.ມີທຸກພາສາຖ້າໃຜສາມາດອ່ານພາສາເຫຼົ່ານີ້ໄດ້ ໝົດກໍ່ຈະຮູ້ວ່າມັນເກີດຫຍັງຂຶ້ນໃນປະເທດນັ້ນໆ.ໃນທາໍນອງດຽວກັນຜູ້ທີ່ໄປເຖິງລະດັບຊັ້ນທີ່ສອງກໍ່ສາມາດເຂົ້າ ໃຈແລະຮູ້ເຖິງຈິດໃຈຂອງຜູ້ອື່ນຢ່າງແຈ່ມແຈ້ງເໝືອນກັນກັບເຮົາເອງຮູ້ປະວັດຂອງຕົວເຮົາເອງ.

ຍັງມີຫລາຍສິ່ງຫລາຍຢ່າງທີ່ເຮົາສາມາດມີໄດ້ໃນລະດັບຊັ້ນທີ່ສອງນີ້ແຕ່ເມື່ອໃດຫາກເຮົາຂຶ້ນມາເຖິງລະ ດັບນີ້ໄດ້ກໍ່ແມ່ນດີເລີດແລ້ວ ເປັນພຸດທະທີ່ມີຊີວິດແລ້ວ ເພາະໄດ້ເປີດ"ໂພທິ"ເປີດປັນຍາອອກມາແລ້ວ ແລະຈະ ຮູ້ຫລາຍສິ່ງຫລາຍຢ່າງອີກມາກມາຍກາຍກອງຈົນບໍ່ສາມາດຈະເວົ້າໄດ້ໝົດຄວາມມະຫັດສະຈັນຈະເກີດຂຶ້ນກັບ ເຮົາບໍ່ວ່າເຮົາຈະຕ້ອງການສິ່ງເຫຼົ່ານັ້ນຫລືບໍ່,ເພາະສະຕິປັນຍາຂອງເຮົາໄດ້ເປີດອອກແລ້ວຈຶ່ງຮູ້ວິທີທີ່ຈະຕິດຕໍ່ກັບ ແຫລ່ງທີ່ສູງຂຶ້ນໃນການຮັກສາໂລກໃນການຈັດການກັບຊີວິດຂອງເຮົາໃຫ້ລຽບງ່າຍແລະສະດວກສະບາຍຂຶ້ນ ກວ່າເກົ່າແລະສະຕິປັນຍາຂອງເຮົາຫລື"ໂພທິ"ໄດ້ເປີດອອກມາຈົນສາມາດໄດ້ຮັບຮູ້ຂໍ້ມູນທັງໝົດທີ່ຈາໍເປັນຈາກ ອາດີດແລະປັດຈຸບັນເພື່ອທີ່ຈະນາໍມາໃຊ້ຈັດການຫລືແກ້ໄຂຊົດເຊີຍບາງສິ່ງບາງຢ່າງທີ່ເຮົາເຄີຍທາໍຜິດພາດໄວ້ ໃນອາດີດ ເມື່ອແກ້ໄຂຂໍ້ຜິດພາດແລ້ວ ຫລັງຈາກນັ້ນ ກໍ່ຈະທາໍໃຫ້ຊີວິດຂອງເຮົາດີຂຶ້ນ.

ຕົວຢ່າງເຊັ່ນວ່າ:ຖ້າເຮົາບໍ່ເຄີຍຮູ້ເລີຍວ່າເຮົາໄດ້ທາໍໃຫ້ເພື່ອນບ້ານເສັຍໃຈດ້ວຍການກະທາໍບາງສິ່ງບາງ ຢ່າງໂດຍບໍ່ໄດ້ຕັ້ງໃຈພໍມາຮອດຕອນນີ້ເຮົາຮູ້ແລ້ວມັນກໍ່ເປັນເລື້ອງງ່າຍແຕ່ຖ້າເຮົາບໍ່ຮູ້ມາກອ່ນແລະເພື່ອນບ້ານກໍ່ ຮູ້ສຶກບໍ່ດີຕໍ່ເຮົາມາຢ່າງງຽບໆແລະພະຍາຍາມຫາທາງກະທາໍບາງສິ່ງບາງຢ່າງທີ່ລັບຫລັງເຮົາບາງຄັ້ງເພື່ອທາໍ ຮ້າຍເຮົາສິ່ງນີ້ກໍ່ຍ້ອນການເຂົ້າໃຈຜິດຫລືເຮົາໄປເຮັດບາງຢ່າງທີ່ບໍ່ດີຕໍ່ເພື່ອນບ້ານ ແຕ່ຕອນນີ້ເຮົາຮູ້ແລ້ວແລະທັງ ຮູ້ວ່າເປັນຫຍັງຈຶ່ງເກີດເຫດການແບບນີ້ຂຶ້ນມັນກໍ່ກາຍເປັນເລື້ອງງ່າຍໂດຍເຮົາອາດຈະໄປຫາເພື່ອນບ້ານຜູ້ນັ້ນ ຫລືໂທລະສັບໄປຫາຫລືຈັດງານລຽ້ງສັງສັນແລ້ວເຊີນເພື່ອນບ້ານຄົນນັ້ນມາຮ່ວມເພື່ອຈະໄດ້ແກ້ໄຂຄວາມເຂົ້າ ໃຈຜິດນັ້ນ.

ເຊັ່ນດຽວກັນເມື່ອເຮົາຂຶ້ນໄປເຖິງລະດັບຂອງສະຕິປັນຍາສູງກໍ່ເປັນໃນທາໍນອງດຽວກັນນີ້ ເຮົາຈະເຂົ້າ ໃຈສິ່ງຕ່າງໆເຫລົ່ານີ້ໄດ້ໂດຍອັດຕະໂນມັດຂ້າພະເຈົ້າໝາຍເຖິງເຮົາຈະເຂົ້າໃຈຢ່າງງຽບໆແລະເຮົາກໍ່ສາມາດຈັດ ການກັບເລື້ອງເຫຼົ່ານີ້ໄດ້ ເພື່ອໃຫ້ຊີວິດຂອງເຮົາດີຂຶ້ນ ການດາໍເນີນຊີວິດສະດວກຂຶ້ນ.ດັ່ງນັ້ນເຮົາຈຶ່ງສາມາດລຶດ

ການເກີດອຸບັດຕິເຫດຕ່າງໆລົດເຫດການທີ່ບໍ່ປາດຖະໜາສະພາບຕ່າງໆທີ່ບໍ່ເໝາະກັບຊີວິດເຮົາໃຫ້ເຫຼືອໜ້ອຍທີ່ສຸດ.ແມ່ນແລ້ວ!ແມ່ນແລ້ວ! ດັ່ງນັ້ນ, ເມື່ອເຮົາຂຶ້ນໄປຊັ້ນທີ່ສອງກໍ່ແມ່ນວິເສດທີ່ສຸດແລ້ວ.

ເພາະສະນັ້ນສິ່ງທີ່ຂ້າພະເຈົ້າອະທິບາຍໃຫ້ຟັງນີ້ມີຄວາມເປັນວິທະຍາສາດຫລາຍທີ່ສຸດແລະສົມເຫດສົມຜົນຫລາຍທີ່ສຸດບໍ່ຈຳເປັນຕ້ອງວ່າໂຍຄີຫລືຄົນນັ່ງສະມາທິເປັນມະນຸດທີ່ແປກປະຫລາດຫລືພວກຕ່າງດາວພວກເຂົາເປັນມະນຸດຕ່າງດາວພວກເຂົາກໍ່ເໝືອນກັນກັບພວກເຮົາທຸກຄົນນີ້ແຫລະແຕ່ພວກເຂົາໄດ້ພັດທະນາໄປໄກແລ້ວ ເພາະວ່າພວກເຂົາຮູ້ວິທີການ.

ໃນອາເມຣິກາພວກເຮົາກໍ່ມັກເວົ້າກັນວ່າທຸກສິ່ງຂຶ້ນຢູ່ກັບວ່າເຮົາຮູ້ວິທີການ(knowHow)ຖ້າເຮົາຮູ້ວິທີການເຮົາກໍ່ສາມາດຮຽນຮູ້ໄດ້ທຸກໆສິ່ງແມ່ນບໍ່?ຮຽນໄດ້ທຸກຢ່າງ.ເຖິງເລື້ອງນີ້ຈະເປັນສິ່ງທີ່ຢູ່ເໜືອວິທະຍາສາດຂອງໂລກນີ້ກໍ່ຕາມແຕ່ເຮົາກໍ່ສາມາດຮຽນຮູ້ໄດ້ດວ້ຍ.ຟັງແລ້ວຮູ້ສຶກວ່າມັນແປກປະຫລາດແຕ່ວ່າສິ່ງໃດທີ່ເປັນເລື້ອງສູງກໍ່ຍິ່ງງ່າຍກ່ວາການຮຽນໃນຊັ້ນມັດທະຍົມຫລືວິທະຍາໄລ.ຊຶ່ງເຕັມໄປດວ້ຍໂຈດແລະຄຳຖາມທາງຄະນິດສາດທີ່ຫຍຸ້ງຍາກສະລັບຊັບຊອ້ນຫລາຍຢ່າງ.

ໃນຊັ້ນທີສອງນີ້ກໍ່ມີລະດັບຊັ້ນຍອ່ຍຊຶ່ງແຕກຕ່າງກັນເປັນຈຳນວນຫຼວງຫຼາຍຂ້າພະເຈົ້າໝາຍເຖິງວ່າໃນລະດັບຊັ້ນທີສອງນີ້ຍັງມີລະດັບຊັ້ນຍ່ອຍອື່ນໆຢູ່ຫຼາຍລະດັບແຕ່ຂໍເວົ້າຢ່າງສັ້ນເພາະຂ້າພະເຈົ້າຈະເລົ່າລາຍລະອຽດທຸກສິ່ງທຸກຢ່າງທີ່ເປັນຄວາມລັບຂອງແດນສະຫວັນນັ້ນບໍ່ໄຫວດອ໋ກ.ແຕ່ເຮົາຈະຮູ້ສິ່ງຕ່າງໆເຫຼົ່ານີ້ໄດ້ເມື່ອເຮົາເດີນທາງໄປພ້ອມກັບອາຈານທ່ານໜຶ່ງຊຶ່ງເຄີຍເດີນທາງໄປມາແລ້ວ.ເພາະສະນັ້ນມັນກໍ່ບໍ່ແມ່ນເລື່ອງທີ່ລຶກລັບຫຍັງເລີຍແຕ່ຈະຕອ້ງໃຊ້ເວລານານທີ່ສຸດໂດຍສະເພາະຖ້າເຮົາຕ້ອງຢຸດໃນແຕ່ລະໆດັບຊຶ່ງຍັງມີອີກຫຼວງຫຼາຍທີ່ມີຊັ້ນຍ່ອຍໆລົງໄປອີກຖ້າເຮົາຈະເບິ່ງທຸກສິ່ງທຸກຢ່າງກໍ່ຕ້ອງໃຊ້ເວລາດົນນານທີ່ສຸດ.ດັ່ງນັ້ນ,ບາງຄັ້ງທ່ານອາຈານອາດຈະພາທ່ານນັ້ນໄປເບິ່ງແບບຜ່ານໆໄປຈາກລະດັບຊັ້ນໜຶ່ງແລ້ວກໍ່ໄປຫາອີກຊັ້ນຕໍ່ໆໄປແບບໄວໆ-ແປບ!ແປບ!ແປບ! ເພາະວ່າຖ້າທ່ານ ຫາກບໍ່ຢາກເປັນອາຈານ, ທ່ານກໍ່ບໍ່ຈຳເປັນຕ້ອງໄປຮຽນຮູ້ຫຼາຍດອ໋ກ ມັນຈະທຳໃຫ້ທ່ານໜັກຫົວໄປຊື່ໆ.ສະນັ້ນ,ກໍ່ພຽງ ແຕ່ພາທ່ານໄປເບິ່ງແລ້ວກໍ່ກັບບ້ານ,ເພາະວ່າພຽງແຕ່ເທົ່ານັ້ນມັນກໍ່ຍັງໃຊ້ເວລາດົນແລ້ວບາງຄັ້ງມັນອາດໃຊ້ເວລາຕະຫຼອດໃນຊ່ວງຊີວິດນັ້ນເລີຍກໍ່ໄດ້.ແຕ່ວ່າການຮູ້ແຈ້ງເຮົາຈະໄດ້ຮັບໃນທັນທີ.

ແຕ່ກໍ່ເປັນພຽງການເລີ່ມຕົ້ນເທົ່ານັ້ນ,ກໍ່ເໝືອນກັນກັບເຮົາລົງທະບຽນເຂົ້າຮຽນຢູ່ມະຫາວິທະຍາໄລນັ້ນແຫລະ.ໃນວັນແລກທີ່ທ່ານຈົດຊື່ລົງທະບຽນເຂົ້າຮຽນໃນມະຫາວິທະຍາໄລທ່ານກໍ່ເປັນນັກສຶກສາມະຫາວິທະຍາໄລໃນທັນທີ.ແຕ່ບໍ່ແມ່ນວ່າທ່ານຈະໄດ້ປະລິນຍາທັນທີດອກ,ມັນຕ້ອງໃຊ້ເວລາ4ປີ,6ປີຫຼືອາດ12ປີກໍ່ເປັນໄດ້.ແຕ່ທ່ານກໍ່ໄດ້ເປັນນັກສຶກສາມະຫາວິທະຍາໄລໃນທັນທີແລ້ວ.ຖ້າວ່າມະຫາວິທະຍາໄລນັ້ນເປັນມະຫາວິທະຍາໄລແທ້ໆແລະຖ້າວ່າທ່ານຈິງໃຈທີ່ຈະເປັນນັກສຶກແທ້.ດ້ວຍເຫດນັ້ນທັງສອງຝ່າຍຕ້ອງຮ່ວມມືກັນ.

ໃນທຳນອງດຽວກັນ,ຖ້າວ່າເຮົາຕ້ອງການຢາກຈະໄປສູ່ໂລກເໜືອໂລກເຊັ່ນ:ພຽງແຕ່ເວົ້າເພື່ອຄວາມສະໜຸກ ສະໜານເພາະວ່າເຮົາບໍ່ມີບ່ອນທີ່ຈະໄປແລ້ວຢູ່ໃນເຂດນິວຢອກ(NewYork)ນີ້.ທຸກສິ່ງທຸກຢ່າງກ່ຽວ ກັບມັນຮາຕັນ(Manhatan),ຫາດຊາຍໃຫຍ່(Longbeach),ຫາດຊາຍນ້ອຍ(Shortbeach)ເຮົາກໍ່ຮູ້.ບັດນີ້ສົມມຸດ

ວ່າພວກເຮົາຢາກເດີນທາງໄປທ່ຽວເມືອງຂອງມະນຸດຕ່າງດາວ(E.T)ເພື່ອເບິ່ງວ່າແມ່ນຫຍັງເກີດຂຶ້ນຢູ່ທັ້ນດີບໍ່?ເປັນຫຍັງບໍ່ລະ?

ໃນເມື່ອເຮົາຕ້ອງຈ່າຍເງິນຢ່າງຫຼວງຫຼາຍໄປໄມອາມີ(Miami),ໄປຟໍລິດາ(Florida)ພຽງເພື່ອໄປລອຍນໍ້າໃນທະເລ,ແລ້ວເປັນຫຍັງເຮົາຈຶ່ງບໍ່ຢາກໄປລອງເບິ່ງວ່າໂລກທີ່ຢູ່ເໜືອໂລກເຮົານັ້ນເພື່ອເບິ່ງວ່າໂລກຂອງເພື່ອນບ້ານເຮົານັ້ນມັນມີລັກສະນະເປັນແນວໃດ,ເຂົາດໍາລົງຊີວິດກັນແບບໃດຢູ່ພຸ້ນ?ຂ້າພະເຈົ້າບໍ່ເຫັນວ່າມັນເປັນເລື່ອງແປກເລີຍ.ມັນກໍ່ເປັນພຽງແຕ່ການເດີນທາງທີ່ຍາວໄກອອກໄປໜ້ອຍໜຶ່ງເທົ່ານັ້ນແລະກໍ່ເປັນການເດີນທາງແຕ່ພຽງຈິດວິນຍານ,ການເດີນທາງແບບຈິດວິນຍານບໍ່ແມ່ນການເດີນທາງແບບກາຍເນື້ອ.ນັ້ນກໍ່ແມ່ນການເດີນທາງທີ່ມີຢູ່ສອງລັກສະນະຊຶ່ງມັນກໍ່ສົມເຫດສົມຜົນທີ່ສຸດແລະກໍ່ເຂົ້າໃຈງ່າຍ.

ເຮົາກໍາລັງຢູ່ໃນລະດັບຊັ້ນທີສອງ,ມີຫຍັງອີກທີ່ຂ້າພະເຈົ້າຄວນບອກພວກທ່ານ? ອັນນັ້ນແຫລະຄືສິ່ງທີ່ພວກເຮົາສືບຕໍ່ດໍາເນີນຊີວິດຕໍ່ໄປຢູ່ໃນໂລກນີ້,ແຕ່ເຮົາກໍ່ມີຄວາມຮູ້ກ່ຽວກັບໂລກອື່ນໄປດ້ວຍໃນເວລາດຽວກັນ.ເພາະພວກເຮົາໄດ້ເດີນທາງ.ກໍ່ເໝືອນທ່ານເປັນຄົນອາເມລິກັນຄົນໜຶ່ງຫຼືອາດເປັນຄົນຊາດອື່ນຂອງໂລກນີ້,ແຕ່ພວກທ່ານມີການເດີນທາງຈາກປະເທດໜຶ່ງໄປຫາປະເທດໜຶ່ງພຽງຢາກຮູ້ປະເທດເພື່ອນບ້ານນັ້ນມີລັກສະນະເປັນແນວໃດ,ແລະຂ້າພະເຈົ້າຄິດວ່າພວກທ່ານຫຼາຍຄົນໃນອົງການສະຫະປະຊາຊາດນີ້ບໍ່ແມ່ນຄົນອາເມລິກັນແມ່ນບໍ່?ແມ່ນແລ້ວ,ດັ່ງນັ້ນ,ຕອນນີ້ທ່ານເຂົ້າໃຈແລ້ວວ່າມັນເໝືອນກັນ.ເຮົາສາມາດເດີນທາງໄປຍັງໂລກຖັດໄປໄດ້ຫຼືໄປສູ່ລະດັບຊັ້ນຂອງຊີວິດແບບອື່ນຖັດໄປເພື່ອຮຽນຮູ້ແລະເຂົ້າໃຈ.ແຕ່ເນື່ອງຈາກໄລຍະທາງມັນຍາວໄກພວກເຮົາບໍ່ສາມາດເດີນທາງໄປໄດ້ ຈະໃຊ້ຈະຫຼວດກໍ່ໄປບໍ່ເຖິງ ແມ່ນແຕ່ຈະໃຊ້ຈານບິນ(UFO)ກໍ່ຍັງບໍ່ໄດ້.

ໂລກບາງແຫ່ງຢູ່ໄກ ເກີນກວ່າທີ່ຈານບິນ(UFO)ຈະບິນໄປເຖິງໄດ້. UFO ແມ່ນ ຈານບິນທີ່ບໍ່ຮູ້ທີ່ມາ unidentifiedflyingobject.ແຕ່ຢູ່ໃນຕົວເຮົາກໍ່ມີເຄື່ອງມືຊະນິດໜຶ່ງຊຶ່ງໄວກ່ວາຈານບິນທຸກຊະນິດນັ້ນອີກ.ນັ້ນກໍ່ຄືວິນຍານ(Soul)ຂອງເຮົາເອງນັ້ນແຫຼະ.ຊຶ່ງບາງຄັ້ງເຮົາຮ້ອງວ່າ"ດວງຈິດ"ເຮົາສາມາດບິນໄປກັບສິ່ງນີ້ໄດ້ໂດຍບໍ່ຕ້ອງໃຊ້ນໍ້າມັນເຊື້ອເພີງ.ບໍ່ຈໍາເປັນເອົາຕໍາຫຼວດມາດູແລ,ໂດຍບໍ່ຕ້ອງກັງວົນກັບບັນຫາເລື້ອງລົດຕິດຕໍ່ການຈາລະຈອນ,ຫລືຕໍ່ບັນຫາສິ່ງອື່ນໆເລີຍ.ແລະກໍ່ບໍ່ຕ້ອງກັງວົນວ່າວັນໜຶ່ງພວກອາຫລັບຈະບໍ່ຂາຍນໍ້າມັນໃຫ້ເຮົາ.ເພາະມັນສາມາດເພິ່ງພາໂຕເອງໄດ້ແລະບໍ່ເຄີຍເສຍຍົກເວັ້ນເຮົາຈະທໍາລາຍມັນເອງໂດຍການຝ່າຝືນກົດແຫ່ງຈັກກະວານຝ່າຝືນຄວາມສອດຄອງແລະກົມກືນຂອງໂລກແລະສະຫວັນເລື້ອງນີ້ກໍ່ເປັນເລື້ອງງ່າຍຊຶ່ງມັນເປັນເລື້ອງງ່າຍທີ່ເຮົາເອງກໍ່ສາ ມາດ ຫຼືກລ້ຽງໄດ້ ເຮົາຈະບອກທ່ານວ່າຈະເຮັດວິທີໃດ ຖ້າຫາກທ່ານຢາກຮູ້.

ຕົວຢ່າງ:ຂ້າພະເຈົ້າຈະເວົ້າສັ້ນໆຕົກລົງບໍ່?ຂ້າພະເຈົ້າບໍ່ແມ່ນນັກເທດ.ແຕ່ບໍ່ຕອ້ງເປັນຮ່ວງດອ໋ກ!ຂ້າພະເຈົ້າຈະບໍ່ພາພວກທ່ານໄປໂບດດ໋ອກ. ພຽງແຕ່ຈະຍົກຕົວຢ່າງໃຫ້ຟັງເທົ່ານັ້ນ.

ມີບາງກົດຢູ່ໃນຈັກກະວານທີ່ເຮົາຄວນຮູ້ເໝືອນກັນກັບເວລາເຮົາຂັບລົດເຮົາກໍ່ຈະຕ້ອງຮູ້ກົດຂອງຈາລະຈອນ,ໄຟແດງກໍ່ຕ້ອງຢຸດ,ໄຟຂຽວກໍ່ຕ້ອງໄປ.ຂັບຂ້າງຊ້າຍຍ້າຍຂ້າງຂວາແລະອື່ນໆເທິງທາງດ່ວນຈະຕ້ອງຂັບຄວາມໄວຊໍ່າໃດ.ດັ່ງນັ້ນ,ຢູ່ໃນຈັກກະວານກໍ່ມີກົດງ່າຍໆເຊັ່ນນີ້ແຫຼະ,ຢູ່ໃນຈັກກະວານທີ່ເປັນວັດຖຸນີ້ແຫຼະ.ແຕ່ຢູ່

ເໜືອໂລກຂອງເຮົາ ຢູ່ເໜືອຈັກກະວານທີ່ເປັນວັດຖຸນີ້ ບໍ່ມີກົດຫຍັງ ບໍ່ມີກົດຫຍັງເລີຍ. ພວກເຮົາເປັນອິດສະລະ ເປັນພົນລະເມືອງທີ່ເປັນອິດສະລະແຕ່ວ່າພວກເຮົາຕ້ອງຂຶ້ນໄປເໜືອນັ້ນເພື່ອວ່າພວກເຮົາຈະໄດ້ເປັນອິດສະລະ ຕາບໃດພວກເຮົາຍັງໃຊ້ຊີວິດຢູ່ໃນໂລກນີ້ຢູ່ໃນຮ່າງກາຍເນື້ອນີ້ພວກເຮົາຄວນຮັກສາໂຕເອງຢູ່ໃນກອບຂອງກົດ ຫຼາຍທີ່ສຸດເທົ່າທີ່ຈະເປັນໄປໄດ້ ຊຶ່ງພວກເຮົາຈະບໍ່ພົບຄວາມຫຍຸ້ງຍາກແລະຍານພາຫະນະຂອງເຮົາ ກໍ່ຈະບໍ່ໄດ້ ເສຍຫາຍເປ່ເພ. ດັ່ງນັ້ນເຮົາ ກໍ່ສາມາດບິນໄດ້ໄວຂຶ້ນ ບິນສູງຂຶ້ນໄດ້ໂດຍບໍ່ມີບັນຫາ.

ອັນ,ກົດຕ່າງໆເຫຼົ່ານີ້ແມ່ນໄດ້ມີຂຽນໄວ້ໃນຄຳພີໄບໂບຂອງສາດສະໜາຄຣິສແລະໃນຄຳພີສາດສະໜາ ພຸດຫຼືໃນຄຳພີຂອງສາດສະໜາຮິນດູ.ເປັນກົດທີ່ງ່າຍໆອັນໜຶ່ງເຊັ່ນເຮົາຈະບໍ່ທຳຮ້າຍເພື່ອນບ້ານ,ຈະບໍ່ຂ້າສັບພະ ສັດອື່ນໆ,ເຮັດຜິດທາງເພດຫຼືສຳພັນທະພາບແຫ່ງຄວາມຮັກແລະບໍ່ລັກເອົາຂອງຄົນອື່ນແລະອື່ນໆ.ແລະບໍ່ເສບ ຂອງມຶນເມົາອັນນີ້ແມ່ນລວມທັງຢາເສບຕິດທີ່ເກີດມີໃນທຸກມື້ນີ້.ບາງທີພຣະພຸດທະເຈົ້າເພິ່ນໄດ້ຮູ້ລ່ວງໜ້າແລ້ວ ວ່າໃນສັດຕະວັດທີ20ນີ້ເຮົາຈະຄົ້ນຄິດເຮັດໂຄເຄັນ(Cocain)ຂຶ້ນມາແລະຢາເສບຕິດປະເພດອື່ນອີກ.ດັ່ງນັ້ນ ພຣະສຳມາສຳພຸດທະເຈົ້າຈຶ່ງໄດ້ບັນຍັດໄວ້ວ່າຫ້າມເສບຢາເສບຕິດການເສບຕິດແມ່ນລວມທັງການພະນັນອື່ນ ໆທີ່ມັນທຳໃຫ້ຈິດໃຈເຮົາມີການຜູກພັນກັບຄວາມເພິ່ງພໍໃຈກັບວັດຖຸແລະເຮັດໃຫ້ຫຼົງລືມກັບກິດຈະວັດຂອງການ ເດີນທາງຂອງຈິດວິນຍານ.

ຖ້າວ່າເຮົາຕ້ອງການບິນໄດ້ໄວບິນໄດ້ສູງທີ່ປາສະຈາກອັນຕະລາຍອັນນີ້ກໍ່ແມ່ນກົດທາງດ້ານເນື້ອໜັງ ມັນກໍ່ບໍ່ແຕກຕ່າງຫຍັງກັບກົດຂອງຟີຊິກ(ວັດຖຸ)ໃນເວລາເຮົາຈະສົ່ງຈະຫຼວດຂຶ້ນໄປນັ້ນນັກວິທະຍາສາດຈະຕ້ອງ ໄດ້ສຶກສາແລະສັງເກດເບິ່ງກົດບາງຢ່າງໃຫ້ແນ່ນອນເສັຍກ່ອນກໍ່ແບບນັ້ນແຫຼະ,ໂອເຄ?ດັ່ງນັ້ນເຮົາຈະລະມັດລະ ວັງຫຼາຍຊ່ຳໃດ.ເພາະວ່າເຮົາຢາກບິນໄດ້ສູງກ່ວາລູກຈະຫຼວດທີ່ບິນໄດ້ໄວກ່ວາຈານບິນUFOແຕ່ວ່າຍັງມີລາຍ ລະອຽດຫຼາຍຢ່າງທີ່ຈະຕ້ອງໄດ້ອະທິບາຍຖ້າທ່ານສົນໃຈທີ່ຈະຮູ້ຂ້າພະເຈົ້າຈະເວົ້າໃຫ້ຟັງຊຶ່ງຈະແມ່ນຕອນເວລາ ສິດເອົາວິຊາໃນເວລານີ້ຂ້າພະເຈົ້າບໍ່ຕ້ອງການເຮັດໃຫ້ທ່ານເກີດຄວາມເບື່ອໜ່າຍທີ່ຈະຟັງເລື່ອງສິນຫຼືຂໍ້ບັນຍັດ ເຫຼົ່ານີ້ຊຶ່ງພວກທ່ານອາດຈະເວົ້າວ່າ: ຂ້ອຍຮູ້ແລ້ວ," ຂ້ອຍຮູ້ແລ້ວ ຂ້ອຍໄດ້ອ່ານແລ້ວຢູ່ໃນຄຳພີໄບໂບ ເລື່ອງບັນ ຍັດສິບປະການເຫຼົ່ານີ້ ".

ແທ້ທີ່ຈິງແລ້ວ,ພວກເຮົາຫຼາຍຄົນເຄີຍໄດ້ອ່ານສິນຂໍ້ຕ່າງໆມາແລ້ວແຕ່ວ່າບໍ່ໄດ້ສົນໃຈຢ່າງເລິກເຊິ່ງເຖິງ ຖອງແທ້ຫຼືເຂົ້າໃຈຢ່າງເລິກເຊິ່ງຫຼືບາງທີເຮົາຢາກເຂົ້າໃຈວິຖີທາງທີ່ເຮົາເຮັດແຕ່ບໍ່ແມ່ນວິຖີທາງອັນຄວາມໝາຍ ຂອງມັນແທ້ໆນັ້ນ.ດັ່ງນັ້ນມັນກໍ່ບໍ່ເສຍຫາຍຫຍັງກໍ່ພຽງແຕ່ເຕືອນຕົວເຮົາເອງເທົ່ານັ້ນ,ຫຼືຟັງຄວາມໝາຍອັນລຶກ ເຊິ່ງນັ້ນຂຶ້ນກ່ວາເກົ່າອີກຕື່ມເທື່ອໜຶ່ງ.ເຊັ່ນຕົວຢ່າງ:ໃນຄຳພີໄບໂບໃນພຣະທຳ(ພຣະທັມ)ເກົ່າ,ໜ້າທຳອິດພຣະ ເຈົ້າໄດ້ຕັດ(ເວົ້າ)ໄວ້ວ່າ:ເຮົາໄດ້ສ້າງສັດທັງຫຼາຍໃຫ້ເປັນເພື່ອນແລະຊ່ວຍເຫຼືອທ່ານແລະໃຫ້ທ່ານໄດ້ຄຸ້ມຄອງດູ ແລເຂົາ.ແລະຈາກນັ້ນທ່ານຍັງໄດ້ຕັດວ່າ:ທ່ານໄດ້ສ້າງອາຫານແຕ່ລະຢ່າງໄວ້ໃຫ້ສັດແຕ່ລະປະເພດທີ່ແຕກຕ່າງ ກັນ,ແຕ່ພຣະເຈົ້າບໍ່ໄດ້ບອກໃຫ້ເຮົາໄປກິນມັນບໍ່ໆໄດ້ບອກເລີຍ!ແລະທ່ານຍັງໄດ້ເວົ້າອີກວ່າ:ເຮົາໄດ້ເຮັດອາ ຫານໄວ້ໝົດແລ້ວເປັນທັນຍະພືດຢູ່ໃນທ້ອງທົ່ງຫຍ້າແລະໝາກໄມ້ຢູ່ເທິງຕົ້ນໄມ້ຕ່າງໆຊຶ່ງມີລົດແຊບຫວານເປັນ ຕາກິນແລະມີຮູບຮ່າງທີ່ສວຍງາມເປັນຕາເບິ່ງສິ່ງເຫຼົ່ານີ້ແຫຼະຄືອາຫານຂອງທ່ານ.ແຕ່ວ່າຄົນສ່ວນຫຼາຍບໍ່ມີໃຜສົ ນໃຈຕໍ່ຄຳເວົ້ານີ້.ດັ່ງນັ້ນຄົນສ່ວນຫຼາຍທີ່ເຊື່ອໃນຄຳພີໄບໂບກໍ່ຍັງພາກັນກິນເນື້ອສັດຢູ່ນັ້ນແຫຼະ,ໂດຍບໍ່ໄດ້ເຂົ້າໃຈ ຄວາມໝາຍອັນແທ້ຈິງທີ່ພຣະເຈົ້າໝາຍເຖິງວ່າແມ່ນຫຍັງ.ແລະຖ້າເຮົາມາສຶກສາຢ່າງເລິກເຊິ່ງກວ່າເກົ່າທາງ

ດ້ານວິທະຍາສາດແລ້ວເຮົາກໍ່ເຂົ້າໃຈວ່າເຮົາບໍ່ແມ່ນສິ່ງທີ່ມີຊີວິດກິນຊີ້ນລະບົບຂອງເຮົາ,ລຳໄສ້ຂອງເຮົາ,ກະເພາະຂອງເຮົາ,ແຂ້ວຂອງເຮົາແລະທຸກສິ່ງທຸກຢ່າງແມ່ນຖືກສ້າງຂຶ້ນຕາມຫຼັກການທາງວິທະຍາສາດຊຶ່ງໃຫ້ເໝາະກັບອາຫານມັງສາວິລັດ(ຜັກ)ເທົ່ານັ້ນ.ຈຶ່ງບໍ່ມີຫຍັງທີ່ເປັນຕາແປກໃຈທີ່ຄົນສ່ວນໃຫຍ່ເຈັບໄຂ້ໄດ້ປ່ວຍ,ແກ່ໄວ,ອ່ອນເພຍ,ເຊື່ອງຊ້າທັງໆທີ່ຕອນເກີດມາມີຄວາມສົດໃສສະຫຼຽວສະຫຼາດແຕ່ແລ້ວພວກເຂົາກໍ່ເຊື່ອມເສົ້າລົງເທື່ອລະເລັກລະນ້ອຍແຕ່ລະມື້ແຕ່ລະວັນອາຍຸຫຼາຍຂຶ້ນເທົ່າໃດພວກເຂົາກໍ່ແຮງຮູ້ສຶກໜັກຂຶ້ນເລື້ອຍໆ. ອັນນີ້, ກໍ່ເພາະວ່າເຮົາທຳລາຍຍານພາຫະນະຂອງເຮົາຈານບິນຂອງເຮົາUFOຂອງເຮົາ.ດັ່ງນັ້ນ,ຖ້າເຮົາຕ້ອງການຢາກໃຊ້ຍານພາຫະນະນີ້ໃຫ້ຍາວນານແລະປອດໄພຫຼາຍກວ່າເກົ່າ. ເຮົາກໍ່ຕ້ອງດູແລຮັກສາຢ່າງຖືກວິທີທາງຂອງມັນ.

ມັນກໍ່ແມ່ນໃນທຳນອງດຽວກັນ:ຮ່າງກາຍຂອງເຮົາກໍ່ເໝືອນຍານພາຫະນະສະນິດໜຶ່ງຊຶ່ງພວກເຮົາສາມາດໃຊ້ບິນຈາກສະຖານທີ່ນີ້ໄປຈົນສຸດຂອບຟ້າໄດ້ໄປໃນລະດັບສູງສຸດຂອງປັນຍາວິທະຍາສາດຂອງຮ່າງກາຍເຮົາເອງ.ແຕ່ບາງຄັ້ງ ພວກເຮົາໄດ້ທຳລາຍມັນ ແລະມັນກໍ່ບໍ່ໄດ້ຖືກນຳໃຊ້ໃຫ້ໄປຕາມຈຸດປະສົງທີ່ຖືກຕ້ອງ. ເຊັ່ນຕົວຢ່າງ:ລົດຂອງເຮົາມີໄວ້ເພື່ອນຳໃຊ້ແລ່ນໃນເສັ້ນທາງທີ່ຍາວໄກຫລາຍພັນໄມ ເພື່ອນຳເຮົາໄປເຖິງບອ່ນເຮັດການໄປຫາໝູ່ຄູ່ໄປເບິ່ງທິວທັດທີ່ສວຍງາມອື່ນໆ ແຕ່ເຮົາກັບບໍ່ໄດ້ເບິ່ງແຍງຮັກສາຊໍ້າຍັງເອົານ້ຳມັນທີ່ຜິດໄປໃສ່ຫຼືວ່າບໍ່ໄດ້ເບິ່ງນ້ຳມັນເຄື່ອງບໍ່ເບິ່ງນ້ຳໃນໝໍ້ນ້ຳແລະອື່ນໆອີກ.ຊຶ່ງທຳໃຫ້ມັນແລ່ນບໍ່ໄວແລະແລ່ນໄປໄກບໍ່ໄດ້. ເຮົາພຽງແຕ່ໃຊ້ ແລ່ນຢູ່ເດີ່ນຫຍ້າກ້ຽວໄປວຽນມາຢູ່ຫລັງບ້ານ ອັນນັ້ນກໍ່ບໍ່ເປັນຫຍັງ
ແຕ່ມັນກໍ່ເປັນການສິ້ນເປືອງໄປລ້າໆທີ່ຊື້ລົດມານຳໃຊ້ບໍ່ຖືກຈຸດປະສົງມັນກໍ່ເປັນພຽງການໃຊ້ຈ່າຍສິ້ນເປືອງດ້ານເງິນຄຳ ເວລາ ແລະພະລັງງານໄປລ້າໆ ເທົ່ານັ້ນ ແຫລະ.ບໍ່ມີໃຜຖືກຕຳໜິຕິຕຽນດອກ! ບໍ່ມີຕຳຫຼວດປັບໃໝຍ້ອນສິ່ງນີ້ດອກ! ມັນພຽງແຕ່ທ່ານເຮັດໃຫ້ລົດຂອງທ່ານເສັຍຫາຍໄປໂດຍເປົ່າປະໂຫຍດທັງສິ້ນເປືອງເງິນຄຳໃນເມື່ອທ່ານຫາກສາມາດນຳໃຊ້ມັນໃຫ້ໄປໄດ້ໄກໆ ແລະສາມາດເຫັນ ທຸກສິ່ງທຸກຢ່າງໄດ້ຢ່າງຫລວງຫລາຍໄດ້ຊື່ນຊົມທິວທັດຕ່າງໆ ນາໆ.

ທຳນອງດຽວກັນຮ່າງກາຍຂອງເຮົາກໍ່ຊ່ວຍໃຫ້ເຮົາອາໄສຢູ່ໃນໂລກນີ້ໄດ້ແຕ່ເຮົາກໍ່ສາມາດດູແລຮັກສາສິ່ງທີ່ຢູ່ໃນກາຍເນື້ອເຮົານີ້ດ້ວຍ.ນອກນັ້ນ,ເຮົາຍັງມີເຄື່ອງມືອື່ນໆອີກຊຶ່ງເຮົາສາມາດໃຊ້ມັນບິນຂຶ້ນໄປເບື້ອງບົນເໜືອຂຶ້ນໄປພູ້ນໄດ້ກໍ່ເຫມືອນກັບມະນຸດອາວະກາດທີ່ນັ່ງຢູ່ໃນຍານອາວາກາດຍານອາວະກາດກໍ່ຄືເຄື່ອງມືຂອງເຂົາ.ເຂົາກໍ່ຄວນຈະຕອ້ງດູແລຮັກສາໃຫ້ດີບໍ່ຝ່າຝືນກົດວັດຖຸ(ຟີຊິກ)ແລ້ວຍານອາວະກາດກໍ່ຈະບິນໄດ້ໄວແລະປອດໄພແຕ່ມະນຸດອາວະກາດທີ່ຢູ່ພາຍໃນນັ້ນແຫລະ,ສຳຄັນຍານອາວະກາດກໍ່ພຽງແຕ່ພາເຂົາໄປເຖິງຈຸດໝາຍເທົ່ານັ້ນແຕ່ຍານບໍ່ແມ່ນສິ່ງສຳຄັນມະນຸດອາວະກາດ,ຈຸດໝາຍປາຍທາງນັ້ນແຫຼະສຳຄັນ.ຫາກເຂົາເອົາຍານອາວະກາດໄປແລ່ນຢູ່ໃນບໍລິເວນລອງໄອແລນ(LongIsland). ມັນກໍ່ເປັນການເສັຍເວລາແລະເງິນຄຳຂອງຊາດລ້າໆ.

ດັ່ງນັ້ນ,ຮ່າງກາຍຂອງເຮົາຈຶ່ງມີຄ່າທີ່ສຸດເພາະມີອາຈານສະຖິດຢູ່ພາຍໃນ.ດວ້ຍເຫດນີ້ໃນຄຳພີໄບໂບຈຶ່ງໄດ້ກ່າວໄວ້ວ່າ"ທ່ານຮູ້ຫລືບໍ່!ວ່າ,**ທ່ານຄືມະຫາວິຫານຂອງພຣະເຈົ້າແລະພຣະເຈົ້າຜູ້ຊົງອານຸພາບສະຖິດຢູ່ໃນຕົວທ່ານ"ພຣະຈິດອັນສັກສິດ",ກໍ່ເໝືອນກັນຖ້າຮ່າງກາຍຂອງເຮົາເປັນທີ່ປະທັບ(ອາໄສ)ຂອງພຣະຈິດອັນສັກສິດຫຼືພຣະເຈົ້າຜູ້ຊົງອານຸພາບ ອັນມະຫາສານນັ້ນທ່ານສາມາດຄິດອອກບໍ່ວ່າມັນຈະໜ້າເກງຂາມຊໍ່າໃດແລະຈະມີຄວາມອັນຍິ່ງໃຫຍ່ນັ້ນຊໍ່າໃດ!ແຕ່ຫຼາຍຄົນອ່ານຜ່ານບ່ອນນີ້ໄວໂພດເລີຍບໍ່ເຂົ້າໃຈແລະບໍ່ຕະໜັກເຖິງຄວາມ**

**ໝາຍອັນຍິ່ງໃຫຍ່ຂອງປະໂຫຍກນີ້ແລະກໍ່ບໍ່ພະຍາຍາມຄົ້ນຫາ.**ດັ່ງນັ້ນ,ຍ້ອນສິ່ງນີ້ແຫຼະບັນດາລູກສິດຂອງຂ້າພູະເຈົ້າມັກຕິດຕາມແລະສຶກສາຕາມຄຳສັ່ງສອນຂອງຂ້າພູະເຈົ້າກໍ່ເພາະວ່າພວກເຂົາເຈົ້າສາມາດຄົ້ນພົບວ່າໃຜສະຖິດຢູ່ຂ້າງໃນແລະມີຫຍັງຢູ່ເໜືອໂລກນີ້.ອີກສວ່ນນື່ງຂອງການດີ້ນລົນຕໍ່ສູ້ຢູ່ເພື່ອຊີວິດປະຈຳວັນ,ຫາເງິນລ້ຽງຊີບແລະບັນຫາວຸ້ນວາຍອື່ນໆ ແລ້ວ.

ພວກເຮົາກໍ່ຈະມີຄວາມງາມຫຼາຍຂຶ້ນ,ຈະມີອິດສະລະພາບຍິ່ງຂຶ້ນ,ມີຄວາມຮູ້ແລະສະຕິປັນຍາຢູ່ພາຍໃນເພີ່ມຂຶ້ນ.ແລະອັນນັ້ນແຫຼະເຮົາຄວນຮູ້ວິທີທາງຕິດຕໍ່ກັບສິ່ງເຫຼົ່ານີ້.ທັງໝົດເຫຼົ່ານີ້ກໍ່ຈະເປັນຂອງເຮົາເພາະພວກເຮົາມີສິ່ງເຫຼົ່ານີ້ຢູ່ພາຍໃນ.ແຕ່ເປັນເພາະພວກເຮົາບໍ່ຮູ້ວ່າຂໍກະແຈທີ່ໃຊ້ໄຂເຂົ້າໄປຢູ່ໃສ.ເພາະພວກເຮົາໄດ້ປິດປະຕູບ້ານຫຼັງນີ້ໄວ້ເປັນເວລາຍາວນານຈົນຕອນນີ້ເຮົາໄດ້ລືມໄປວ່າເຮົາມີຊັບສົມບັດເຫຼົ່ານີ້ຢູ່ພາຍໃນ.ກໍ່ພຽງແຕ່ເທົ່ານັ້ນ.

ເພາະສະນັ້ນຜູ້ທີ່ໄດ້ຊື່ວ່າເປັນອາຈານກໍ່ຄືຜູ້ຊຶ່ງສາມາດຊ່ວຍເຮົາເປີດປະຕູແລະສະແດງໃຫ້ເຮົາເຫັນວ່າສິ່ງທີ່ ເປັນຊັບສົມບັດດັ້ງເດີມທີ່ເປັນຂອງເຮົານັ້ນມີຫຍັງ. ແຕ່ເຮົາກໍ່ຕ້ອງໃຊ້ເວລາເພື່ອເດີນເຂົ້າໄປພາຍໃນແລະກວດສອບ ເບິ່ງທຸກໆລາຍການທີ່ເຮົາມີຢູ່.

ເອີ!ແນວໃດກໍ່ຕາມດຽວນີ້ເຮົາຍັງຢູ່ໂລກທີສອງເດີ!ພວກທ່ານຍັງສົນໃຈຢາກໄປໄກກວ່ານີ້ອີກບໍ່?(ຜູ້ຟັງບອກວ່າຢາກໄປ,ຢາກໄປ)ພວກທ່ານຢາກຮູ້ໝົດໂດຍບໍ່ໄປເອງຊັ້ນເບາະ?(ທ່ານອາຈານຫົວ)ຊັ້ນກໍ່ໄດ້ແຕ່ຢ່າງນ້ອຍກໍ່ຍັງມີຜູ້ໃດຜູ້ໜຶ່ງສາມາດ(ເລົ່າ)ໃຫ້ພວກທ່ານຟັງວ່າສະພາບກ່ຽວກັບປະເທດອື່ນໆເປັນແນວໃດໃນເມື່ອເຂົາເຄີຍໄດ້ອາໄສຢູ່ທີ່ນັ້ນມາແລ້ວເຖິງແມ່ນວ່າພວກທ່ານບໍ່ໄດ້ໄປກໍ່ຕາມແມ່ນບໍ່?ຢ່າງນ້ອຍພວກທ່ານກໍ່ມີຄວາມສົນໃຈບາງທີພວກທ່ານກໍ່ອາດຈະຢາກໄປກໍ່ໄດ້.ໂອເຄ(O.K)ເອີ!ຕອນນີ້ແມ່ນຜ່ານໂລກຊັ້ນທີສອງແລ້ວເດີ!ແຕ່ວ່າຂ້າພູະເຈົ້າບໍ່ໄດ້ເລົ່າທຸກເລື່ອງເຊິ່ງຢູ່ໃນລະດັບຊັ້ນທີສອງນີ້.ແຕ່ວ່າພວກເຮົາກໍ່ມີເວລາຈຳກັດ.ເອົາລະ,ສູງກວ່າລະດັບຊັ້ນທີສອງຂຶ້ນໄປທ່ານກໍ່ອາດມີພະລັງຫຼາຍຂຶ້ນຖ້າທ່ານມີຄວາມຕັ້ງໃຈແທ້ແລະພະຍາຍາມອອກແຮງເພື່ອສິ່ງນີ້.ທ່ານກໍ່ໄປເຖິງລະດັບຊັ້ນທີສາມ.ອັນເອີ້ນວ່າໂລກທີສາມນີ້ກໍ່ເພາະມັນເປັນລະດັບຊັ້ນທີ່ສູງຂຶ້ນໄປອີກຕື່ມຂັ້ນໜຶ່ງ.

ຜູ້ທີ່ຈະຂຶ້ນໄປເຖິງລະດັບຊັ້ນທີສາມນີ້ຕ້ອງເປັນຄົນທີ່ສະອາດທາງກາຍແລະຈິດໃຈບໍ່ມີໜີ້ສິນຕິດຕົວທັງສອງຢ່າງຢູ່ໃນໂລກນີ້.ຖ້າເຮົາຍັງເປັນໜີ້ເຈົ້າປົກຄອງໂລກແຫ່ງວັດຖຸນີ້ຢູ່ ເຮົາກໍ່ຍັງຂຶ້ນໄປບໍ່ໄດ້ ມັນກໍ່ເໝືອນກັນຖ້າຫາກວ່າທ່ານຫາກເປັນອາດຊະຍາກອນ ຂອງປະເທດໃດປະເທດໜຶ່ງ ຫາກໂທດຂອງທ່ານຫາກບໍ່ໝົດ ທ່ານກໍ່ບໍ່ສາມາດຂ້າມຊາຍແດນໄປຫາປະເທດອື່ນອີກໄດ້.ເພາະສະນັ້ນໜີ້ສິນຂອງໂລກນີ້ແມ່ນລວມທັງສິ່ງຕ່າງໆຕັ້ງແຕ່ອາດີດຈົນເຖິງປັດຈຸບັນແລະອາດລວມທັງໃນວັນຂ້າງໜ້າຫຼືອານາຄົດຂອງຊີວິດຂອງກາຍເນື້ອເຮົານີ້ດ້ວຍ.ສິ່ງຕ່າງໆເຫຼົ່ານີ້ຕ້ອງໄດ້ຮັບການຊຳລະຊະສາງຫຼືຊົດໃຊ້ໃຫ້ໝົດ.ເໝືອນກັນກັບເຮົາຜ່ານດ່ານພາສີອາກອນນັ້ນແຫຼະ.ກ່ອນທີ່ເຮົາສາມາດຂຶ້ນໄປຍັງໂລກທີ່ເໜືອຂຶ້ນໄປແຕ່ໃນເວລາທີ່ເຮົາຢູ່ໃນໂລກທີສອງນີ້,ເຮົາກໍ່ຕ້ອງເລີ່ມທຳງານແລ້ວ,ຕ້ອງຈັດການກັບກຳ(ກັມ)ໃນຊາດທີ່ຜ່ານມາແລະທັງໃນຊາດປະຈຸບັນທີ່ຍັງຄ້າງຢູ່.ເພາະຖ້າບໍ່ມີກຳ(ກັມ)ໃນອະດີດເຮົາກໍ່ບໍ່ສາມາດມີຊີວິດຢູ່ໃນປັດຈຸບັນນີ້ໄດ້.

ອາຈານມີຢູ່ສອງປະເພດທີ່ແຕກຕ່າງກັນ.ປະເພດທີ່ນື່ງແມ່ນບໍ່ມີກຳແຕ່ຢືມເອົາກຳຂອງຜູ້ອື່ນເພື່ອທີ່ຈະ

ລົງມາ.ອາຈານປະເພດທີ່ສອງກໍ່ເໝືອນກັນກັບພວກເຮົາເປັນມະນຸດທຳມະດາແຕ່ມີກຳທີ່ສະອາດທີ່ສຸດເພາະສະນັ້ນໃຜໆກໍ່ສາມາດເປັນອາຈານໃນອະນາຄົດໄດ້.ບາງຄັ້ງຜູ້ເປັນອາຈານຈະລົງມາຈາກໂລກໃນລະດັບສູງໂດຍຢືມກຳຂອງຜູ້ອື່ນມາ.ຟັງແລ້ວທ່ານຮູ້ສຶກແນວໃດເລື້ອງການຢືມກຳລົງມານັ້ນແຫລະ?(ອາຈານຫົວຂື້ນ)ມັນເປັນໄປໄດ້.ມັນເປັນໄປໄດ້.

ເຊັ່ນຕົວຢ່າງ:ກ່ອນທ່ານຈະລົງມາບອ່ນນີ້ທ່ານກໍ່ເຄີຍໄດ້ຢູ່ບອ່ນນີ້ມາກ່ອນແລ້ວແມ່ນບໍ່?ແລະທ່ານກໍ່ເຄີຍໃຫ້ແລະໄດ້ຮັບສິ່ງໃດສິ່ງນື່ງຈາກໃຜຕໍ່ໃຜມາແລ້ວຢ່າງນັບບໍ່ຖວ້ນຕໍ່ມາຫລາຍຊາດຫລາຍຮ້ອຍປີແລ້ວແລະຫລັງຈາກນັ້ນທ່ານກໍ່ກັບໄປສະຫວັນຄືນຫລືບອ່ນທີ່ພັກພາສາໄສເກົ່າ.ຊື່ງຢູ່ຫ່າງໄກທີ່ສຸດຢູ່ໃນລະດັບຊັ້ນທີ່ຕ່າງອອກໄປຢ່າງໜອ້ຍກໍ່ຢູ່ໃນລະດັບຊັ້ນທີ່ຫ້າ.ຊື່ງບອ່ນນັ້ນຈະເປັນບ້ານຂອງຜູ້ທີ່ຢູ່ໃນລະດັບຊັ້ນທີ່ເອີ້ນວ່າອາຈານ.ແຕ່ເໜືອລະດັບຊັ້ນທີ່ຫ້າກໍ່ຍັງມີລະດັບຊັ້ນອື່ນໆອີກຫລາຍ.

ບາດນີ້,ຖ້າເຮົາຢາກກັບມາໃໝ່ອີກເນື່ອງຈາກວ່າເຮົາມີຄວາມເມດຕາຕໍ່ສັບພະສັດທັງຫລາຍຫຼືວ່າໄດ້ຮັບໜ້າທີ່ບາງຢ່າງຈາກພຣະບິດາ,ເຊັ່ນຕົວຢ່າງແບບນັ້ນແຫລະ:ແລ້ວເຮົາກໍ່ຈະລົງມາແລະເນື່ອງຈາກວ່າເຮົາມີບຸນສຳພັນກັບບຸກຄົນໃນອາດີດຊາດເຮົາກໍ່ສາມາດຢືມເອົາກຳຂອງເຂົາ ກໍ່ພຽງແຕ່ຕິດໜີ້ເຂົາລ້າໆ ບໍ່ມີຫຍັງອື່ນອີກ. ບໍ່ມີແນວດີເລີຍ ໃນໝູ່ມວນມະນຸດນອກຈາກຄວາມເປັນໜີ້ ເຮົາສາມາດ ຢືມໜີ້ມາແລ້ວ ເຮົາກໍ່ຈ່າຍຄືນໄປ ການໃຊ້ໜີ້ກໍ່ແມ່ນການຊົດໃຊ້ດວ້ຍພະລັງທາງຈິດຄອ່ຍຈ່າຍໄປແບບຊ້າໆຈົນກວ່າເຮົາຈະເຮັດສຳເລັດໜ້າທີ່ວຽກງານເທິງໂລກໜວ່ຍນີ້ອາຈານແບບນີ້ກໍ່ເປັນແບບນື່ງຍັງມີອີກແບບນື່ງຊື່ງມາຈາກໂລກນີ້ຫລັງຈາກເຂົາເຈົ້າໄດ້ບຳເພັນປະຕິບັດທຳເຂົາເຈົ້າກໍ່ກາຍເປັນອາຈານໄດ້ທັນທີໂດຍຍັງມີຊີວິດຢູ່ໃນໂລກໜວ່ຍນີ້ເໝືອນກັບນັກສຶກສາຮຽນຈົບການສຶກສານັ້ນເອງ.

ເພາະສະນັ້ນ,ໃນມະຫາວິທະຍາໄລເຮົາກໍ່ມີສາດສະດາຈານ ແລະນັກສຶກສາ ຕໍ່ມານັກສຶກສາກໍ່ຮຽນຈົບແລະກາຍ ມາເປັນສາດສະດາຈານໄດ້ໃນພາຍຫລັງ ຈື່ງມີທັງຜູ້ເປັນສາດສະດາຈານມາດົນນານແລ້ວ ແລະກໍ່ມີຜູ້ຫາກໍ່ເປັນ ສາດສະດາຈານ ໃນທຳນອງດຽວກັນຜູ້ທີ່ເປັນອາຈານ ມັນກໍ່ມີລັກສະນະແບບນີ້ແຫຼະ.

ບາດນີ້,ຖ້າເຮົາຈະໄປຕໍ່ໂລກທີ່ສາມເຮົາກໍ່ຕ້ອງສະອາດໝົດຈົດບໍ່ມີກຳຕົກຄ້າງຫລົງເຫຼືອຢູ່ແມ່ນແຕ່ໜອ້ຍດຽວ.ກຳກໍ່ຄືກົດທີ່ໄດ້ກ່າວໄວ້ວ່າ"ຫວ່ານພືດສະໜິດໃດກໍ່ຈະໄດ້ຮັບຜົນສະນິດນັ້ນ"ມັນກໍ່ເໝືອນກັນກັບເຮົາປຸກແກ່ນໝາກກ້ຽງຜົນທີ່ເຮົາຈະໄດ້ຮັບກໍ່ແມ່ນໝາກກ້ຽງ,ຫຼືຖ້າເຮົາປຸກກົກໝາກແອບໂປຜົນທີ່ໄດ້ຮັບກໍ່ແມ່ນໝາກແອບໂປ.ນີ້ແຫຼະຄື,ສິ່ງທີ່ເອີ້ນວ່າ"ກຳ"ມັນເປັນພາສາສັນສະກຣິດ.ຊື່ງໝາຍເຖິງສາເຫດແລະການຊົດໃຊ້ການກະທຳຄືນທີ່ຜ່ານມາ.ຢູ່ໃນຄຳພີໄບໂບບໍ່ໄດ້ເວົ້າເຖິງກຳແຕ່ເວົ້າວ່າ:"ຫວ່ານພືດແນວໃດກໍ່ຈະໄດ້ຜົນແນວນັ້ນ" ຊຶ່ງກໍ່ຄືເລື່ອງດຽວກັນ.

ຄຳພີໄບໂບເປັນຄຳສອນແບບຫຍໍ້ໆຂອງອາຈານທ່ານໜຶ່ງ ແລະຊີວິດຂອງອາຈານທ່ານນັ້ນກໍ່ສັ້ນດ້ວຍ.ດັ່ງນັ້ນ,ເຮົາຈຶ່ງບໍ່ມີຄຳອະທິບາຍຫຼາຍໃນຄຳພີໄບໂບແລະໃນຄຳພີໄບໂບຫຼາຍຕອນກໍ່ຖືກຕັດທອນປ່ຽນແປງເພື່ອໃຫ້ກົງກັບຄວາມຕ້ອງການຂອງຜູ້ນຳໃນສະໄໝນັ້ນ.ຊື່ງບຸກຄົນເຫຼົ່ານັ້ນບໍ່ແມ່ນບຸກຄົນທີ່ສົນໃຈເລື່ອງທາງຈິດວິນຍານພວກທ່ານກໍ່ຮູ້ແລ້ວວ່າຈະເປັນເລື່ອງຫຍັງກໍ່ຕາມກໍ່ມີຄົນຊີ້ຄົນຂາຍມີນາຍໜ້າທຸກເລື່ອງເລີຍມີນາຍໜ້າຢູ່ໃນທຸກທີ່ທຸກມູມຂອງຊີວິດເຕັມໄປໝົດ.ແຕ່ສຳລັບຄຳພີໄບໂບທີ່ແທ້ຈິງນັ້ນເຮົາຮູ້ດີວ່າມັນແຕກຕ່າງຈາກທີ່ເຮົາເຫັນຢູ່ໜ້ອຍໜຶ່ງຍາວກ່ວາໜອ້ຍໜຶ່ງມີຄວາມຖືກຕ້ອງກ່ວາແນວໃດກໍ່ດີເນື່ອງຈາກເຮົາບໍ່ສາມາດພິສູດໄດ້ຫຼາຍກ່ຽວກັບເລື່ອງນີ້ເຮົາຈະບໍ່ເວົ້າເຖິງເລື່ອງນີ້ເຮົາຈະບໍ່ເວົ້າເຖິງເລື່ອງນີ້ບືດໜຶ່ງຄົນຈະເຂົ້າໃຈວ່າເຮົາດູໝິ່ນສາດສະໜາກໍ່

ເປັນໄດ້ ເພາະສະນັ້ນ, ເຮົາສາມາດຈະເວົ້າໄດ້ກໍ່ສະເພາະແຕ່ສິ່ງທີ່ເຮົາສາມາດພິສູດໄດ້ເທົ່ານັ້ນ.

ຖ້າແນວນັ້ນ ພວກທ່ານກໍ່ອາດຈະຖາມຂ້າພະເຈົ້າວ່າ:"ທ່ານເວົ້າເຖິງເລື້ອງຂອງໂລກທີ່ສອງ, ສາມ, ສີ່ແລ້ວທ່ານສາມາດພິສູດໄດ້ແນວໃດ?"ໄດ້,ຂ້າພະເຈົ້າສາມາດພິສູດໄດ້.ຖ້າທ່ານເດີນທາງຮ່ວມໄປກັບຂ້າພະເຈົ້າເດີນໄປຕາມທາງດຽວກັນທ່ານກໍ່ຈະເຫັນສິ່ງດຽວກັນແຕ່ຖ້າທ່ານບໍ່ເດີນຮ່ວມໄປທາງດຽວກັນຂ້າພະເຈົ້າກໍ່ບໍ່ສາມາດພິສູດໃຫ້ທ່ານເຫັນໄດ້ນັ້ນມັນເປັນສິ່ງທີ່ແນ່ນອນ,ແທ້ໆ.ເພາະສະນັ້ນ,ຂ້າພະເຈົ້າຈິ່ງກ້າເວົ້າເຖິງເລື້ອງຕ່າງໆເຫຼົ່ານີ້ ເພາະ ມັນມີສິ່ງທີ່ພິສູດໄດ້ ພວກເຮົາມີຂໍ້ພິສູດຈາກລູກສິດ ຫລາຍແສນຄົນທີ່ຢູ່ທົ່ວທຸກມຸມໂລກ ດັ່ງນັ້ນ, ພວກເຮົາຈິ່ງກ້າເວົ້າ ໃນສິ່ງທີ່ພວກເຮົາຮູ້.ແຕ່ທ່ານຕ້ອງເດີນທາງຮ່ວມໄປກັບຂ້າພະເຈົ້າ, ທ່ານຕ້ອງເດີນ, ຖ້າທ່ານບໍ່ເຮັດແບບນັ້ນທ່ານກໍ່ຈະມາເວົ້າບໍ່ໄດ້ວ່າ" ຂໍໃຫ້ທ່ານຊ່ວຍ " ເດີນໄປແທນຂ້າພະເຈົ້າດ້ວຍແລ້ວມາເລົ່າໃຫ້ຟັງ ທັງເຮັດໃຫ້ເຫັນ ທຸກສິ່ງ ທຸກຢ່າງອີກ ຂ້າພະເຈົ້າບໍ່ສາມາດເຮັດແບບນັ້ນໄດ້.

ຍົກຕົວຢ່າງ:ຖ້າຂ້າພະເຈົ້າບໍ່ໄດ້ມາທີ່ອີງການສະຫະປະຊາຊາດບໍ່ໄດ້ມາຢູ່ໃນຫອ້ງນີ້,ບໍ່ວ່າທ່ານຈະເລົ່າໃຫ້ຂ້າພະເຈົ້າຟັງກ່ຽວກັບຫອ້ງນີ້ຫລາຍເທົ່າໃດກໍ່ຕາມຂ້າພະເຈົ້າກໍ່ຈະບໍ່ຄຸ້ນເຄີຍກັບປະສົບການໃນຫອ້ງນີ້ໄດ້ແມ່ນບໍ່?ເພາະສະນັ້ນ,ເຮົາຈຳເປັນຕ້ອງເດີນທາງໄປພອ້ມໆກັນກັບຄົນນຳທາງທີ່ມີປະສົບການ.ຂ້າພະເຈົ້າມີລູກສິດບາງຄົນໃນຫອ້ງນີ້ ຊຶ່ງມີເຊື້ອຊາດຕ່າງໆກັນ ພວກເຂົາເຈົ້າໄດ້ມີປະສົບການແລ້ວ ດັ່ງເຊັ່ນປະສົບການ ທີ່ຂ້າພະເຈົ້າໄດ້ເລົ່າໄປໃຫ້ທ່ານຟັງຫວ່າງນີ້ງນີ້ ບາງຄົນກໍ່ມີພຽງບາງສວ່ນ ບາງຄົນກໍ່ໄດ້ຮັບສົມບູນຄົບຖ້ວນແລ້ວ.

ບາດນີ້,ຫລັງຈາກໂລກທີ່ສາມແລ້ວ ສິ່ງທີ່ໄດ້ເລົ່າມານີ້ບໍ່ແມ່ນໄດ້ເວົ້າໄປໝົດທຸກສິ່ງທຸກຢ່າງເທື່ອ ມັນເປັນພຽງແຕ່ບາງສ່ວນເທົ່ານັ້ນ ມັນກໍ່ເປັນພຽງແຕ່ເລື້ອງນິທານການເດີນທາງເທົ່ານັ້ນແຫລະ ເອົາສິ່ງລະເລັກລະນ້ອຍມາເວົ້າໃຫ້ຟັງບໍ່ມີລາຍລະອຽດມາກມາຍກ່າຍກອງແມ່ນແຕ່ເວລາທີ່ເຮົາອ່ານໜັງສືກ່ຽວກັບປະເທດໃດປະເທດນື່ງມັນກໍ່ບໍ່ແມ່ນປະເທດນັ້ນແທ້ໆ ແມ່ນບໍ່?ເພາະສະນັ້ນ,ເຮົາຍັງມີໜັງສືກ່ຽວກັບການເດີນທາງຢ່າງຫລວງຫລາຍກ່ຽວກັບປະເທດຕ່າງໆ ໃນໂລກ,ແຕ່ວ່າພວກເຮົາກໍ່ຍັງຢາກໄປບ່ອນນັ້ນ ດ້ວຍຕົວເຮົາເອງ ແມ່ນບໍ່? ພວກເຮົາຮູ້ກ່ຽວກັບປະເທດສະເປນ,ເທເນຣິບ,ແລະກຣີສ ແຕ່ກໍ່ເປັນພຽງການເບິ່ງຈາກຮູບເງົາຫລືອ່ານ ຈາກໜັງສືເທົ່ານັ້ນ.ພວກເຮົາຕ້ອງໄປບ່ອນນັ້ນ.ເພື່ອໃຫ້ໄດ້ພົບກັບປະສົບການຕົວຈິງແລະໄດ້ຮັບຄວາມສຸກກັບການຢູ່ບ່ອນນັ້ນແທ້ໆກັບທັງອາຫານທີ່ເຂົາເຈົ້າມອບໃຫ້ທີ່ມີລົດແຊບນົວໄດ້ສຳຜັດກັບນ້ຳທະເລແລະອາກາດທີ່ສົດໃສ ຜູ້ຄົນທີ່ເປັນມິດແລະບັນຍາກາດຕ່າງໆທີ່ເຮົາບໍ່ສາມາດໄດ້ຮັບປະສົບການນີ້ໄດ້ຈາກການອ່ານໜັງສື.

ດັ່ງນັ້ນ,ແນວໃດກໍ່ຕາມ ສົມມຸດວ່າພວກທ່ານໄດ້ຜ່ານໂລກທີ່ສາມໄປແລ້ວ ຈະໄປໃສຕໍ່ລະ?ແນ່ນອນທ່ານກໍ່ຕ້ອງໄປລະດັບຊັ້ນທີ່ສູງຂຶ້ນຄືລະດັບທີ່ສີ່ໂລກລະດັບທີ່ສີ່ນີ້ມີຄວາມມະຫັດສະຈັນພັນຢ່າງແລະພວກເຮົາຈະບໍ່ສາມາດໃຊ້ພາສາທຳມະດາໆມາບັນຍາຍໃຫ້ຄົນທົ່ວໄປຟັງໄດ້ເພາະຢ້ານວ່າມັນຈະລ່ວງເກີນຜູ້ເປັນໃຫຍ່ຂອງໂລກແຫ່ງນັ້ນໄດ້ເພາະໂລກລະດັບທີ່ສີ່ມີຄວາມສວຍງາມແທ້ໆເຖິງແມ່ນວ່າມີບາງສ່ວນຈະມີຄວາມມືດມິດຫລາຍກໍ່ຕາມມັນມືດຮ້າຍກວ່າເວລາໄຟດັບຢູ່ໃນກາງເມືອງນິວຢອກເສັຍອີກ.ພວກທ່ານເຄີຍພົບຫຼືບໍ່?ຊື່ງເມືອງທັງເມືອງຕົກຢູ່ໃນຄວາມມືດແມ່ນແລ້ວມັນມືດກ່ວານັ້ນອີກ!ກ່ອນຈະໄປເຖິງແສງສະຫວ່າງມັນຈະເປັນຄວາມມືດມິດມັນປຽບເໝືອນເມືອງຕ້ອງຫ້າມ.ກ່ອນເຮົາຈະໄດ້ຮູ້ເຖິງສະຕິປັນຍາຂອງພຣະຜູ້ເປັນເຈົ້າອັນແທ້ຈິງ,ເຮົາ

ຈະຢຸດຢູ່ບ່ອນນັ້ນແຫລະ.ແຕ່ຖ້າເຮົາມີອາຈານຊຶ່ງເປັນອາຈານທີ່ເຄີຍມີປະສົບການມາແລ້ວ ທ່ານກໍ່ສາມາດຜ່ານໄປໄດ້, ບໍ່ດັ່ງນັ້ນແລ້ວ ເຮົາກໍ່ ບໍ່ສາມາດຫາຫົນທາງພົບໄດ້ເລີຍ ຢູ່ໃນໂລກແບບນັ້ນ.

ເມື່ອເວລາທີ່ເຮົາຜ່ານລະດັບຊັ້ນຕ່າງໆຂຶ້ນໄປເຮົາບໍ່ພຽງແຕ່ຈະມີຄວາມປ່ຽນແປງທາງດ້ານຈິດໃຈເທົ່ານັ້ນທາງດ້ານຮ່າງກາຍແລະເນື້ອໜັງກໍ່ຈະມີການປ່ຽນແປງໄປດ້ວຍລວມທັງສະຕິປັນຍາແລະສິ່ງອື່ນໆອີກຫລາຍຢ່າງໃນຊີວິດເຮົາ,ເຮົາຈະເບິ່ງຊີວິດດວ້ຍທັດສະນະຄະຕິທີ່ແຕກຕ່າງອອກໄປ,ເຮົາຈະດໍາເນີນຊີວິດຕ່າງໄປ,ວິທີເຮັດວຽກກໍ່ຈະຕ່າງໄປ,ແມ່ນແຕ່ວຽກງານຂອງເຮົາທີ່ເຮັດຢູ່ທຸກໆວັນກໍ່ຈະມີຄວາມໝາຍຕ່າງໄປຈາກເດີມເຮົາຈະເຂົ້າໃຈວ່າເປັນຫຍັງ ເຮົາຈຶ່ງເຮັດວຽກງານ ແບບນີ້ ແລະເປັນຫຍັງ ເຮົາຈຶ່ງເຮັດວຽກງານອາຊີບນີ້ ເປັນຫຍັງເຮົາຈຶ່ງຄວນປ່ຽນວຽກເຮັດເຮົາຈະເຂົ້າໃຈຈຸດປະສົງຂອງຊີວິດ.ເພາະສະນັ້ນ,ເຮົາຈະບໍ່ກະວົນກະວາຍຫລືຮ້ອນໃຈແມ່ນລະ!ແຕ່ເຮົາຈະລໍຄອຍໄປຢ່າງລຽບງ່າຍທັງມີຄວາມອົດທົນ,ເພື່ອໃຫ້ພາລະກິດຂອງເຮົາຢູ່ເທິງໂລກໜ່ວຍນີ້ສໍາເລັດເສັດສິ້ນລົງ.ເພາະເຮົາຮູ້ວ່າເຮົາຈະໄປບ່ອນໃດຕໍ່. ເຮົາຮູ້ສຶກຕໍ່ສິ່ງເລົ່ານີ້ໃນຂະນະທີ່ເຮົາຍັງມີຊີວິດຢູ່. ສະພາບແບບນີ້ແຫລະທີ່ເອີ້ນວ່າ:"ຕາຍໃນຂະນະທີ່ຍັງມີຊີວິດຢູ່" ແມ່ນ!ແມ່ນ! ແລະຂ້າພະເຈົ້າຄິດວ່າ, ພວກທ່ານບາງຄົນເຄີຍໄດ້ຍິນສິ່ງຕ່າງໆທໍານອງນີ້ມາກ່ອນ,ແຕ່ຂ້າພະເຈົ້າບໍ່ຮູ້ວ່າມີອາຈານທ່ານອື່ນໆເວົ້າຕ່າງໄປຈາກນີ້ຫຼືບໍ່?(ອາຈານຫົວຂຶ້ນ)ເວັ້ນເສັຍແຕ່ວ່າເຮົາໄດ້ຮັບປະສົບການຂອງຄວາມສຸກຢ່າງທີ່ແທ້ຈິງຈາກພາຍໃນ.

ແມ່ນໃຜຈະສາມາດອະທິບາຍກ່ຽວກັບລຶດເບັ່ນຕ່າງກັນໄດ້ສໍາລັບຄົນທີ່ມີລຶດເບັ່ນເຂົາເຈົ້າກໍ່ຈະອະທິບາຍແນວດຽວກັນນັ້ນແຫລະ.ແຕ່ວ່າອັນນັ້ນມັນກໍ່ຍັງບໍ່ແມ່ນລຶດເບັ່ນ.ດັ່ງນັ້ນ,ເຖິງແມ່ນວ່າຂ້າພະເຈົ້າຈະເວົ້າໃຫ້ພວກທ່ານຟັງເປັນພາສາທໍາມະດາໆ ແຕ່ວ່າເລື້ອງນີ້ມັນບໍ່ແມ່ນທໍາມະດາແລະມັນເປັນເລື້ອງທີ່ເຮົາຄວນມີປະສົບການໂດຍເຮົາເອງດວ້ຍຄວາມຈິງໃຈແລະມີຜູ້ນໍາທາງ.ເຮັດແບບນັ້ນຈຶ່ງຈະປອດໄພກວ່າເຖິງແມ່ນວ່າຈະມີໂອກາດໜຶ່ງໃນລ້ານທີ່ເຮົາສາມາດບໍາເພັນຈົນສໍາເລັດບັນລຸໄດ້ດ້ວຍຕົນເອງແຕ່ມັນກໍ່ມີອັນຕະລາຍມີການສ່ຽງແລະຜົນທີ່ໄດ້ຮັບກໍ່ບໍ່ມີຫຼັກປະກັນທີ່ແນ່ນອນລວມທັງບໍ່ປອດໄພອີກດ້ວຍ.

ມີບາງຄົນໃນອະດີດເຊັ່ນ:ສະວີເດັນບອກ(Swedenborg)ຊຶ່ງສາມາດທໍາສໍາເລັດດ້ວຍຕົນເອງແລະອີກທ່ານໜຶ່ງແມ່ນເກີດຈິຟ(Gurdjieff)ຊຶ່ງຄາດວ່າເຂົາທໍາສໍາເລັດດ້ວຍຕົນເອງຕະຫຼອດພຽງເສັ້ນທາງຄົນດຽວແຕ່ວ່າພຽງໄດ້ອ່ານກ່ຽວກັບຄົນພວກນີ້ຜົນງານຂອງເຂົາເຈົ້າແມ່ນບໍ່ມີເລີຍທີ່ຈະປາສະຈາກອຸປະສັກແລະອັນຕະລາຍຕ່າງໆ ແລະກໍ່ບໍ່ແມ່ນວ່າເຂົາເຈົ້າຈະໄປເຖິງລະດັບຊັ້ນສູງສຸດໄດ້ທຸກຄົນ.

ເອີ!ບາດນີ້,ຫຼັງຈາກນັ້ນທ່ານກໍ່ຈະຂຶ້ນໄປໃນລະດັບຊັ້ນທີ່ສູງຂຶ້ນໄປອີກ.ຫຼັງຈາກຊັ້ນທີ່ສີ່ທ່ານກໍ່ຈະຂຶ້ນໄປລະດັບສູງກວ່າຊຶ່ງເປັນບ້ານບັນດາມະຫາອາຈານຊຶ່ງກໍ່ຄືລະດັບຊັ້ນທີຫ້າອາຈານທຸກທ່ານລົງມາຈາກລະດັບຊັ້ນນີ້,ເຖິງແມ່ນວ່າລະດັບຊັ້ນຂອງບາງທ່ານຈະຢູ່ສູງກວ່າລະດັບຊັ້ນທີຫ້າ,ພວກທ່ານເລົ່ານັ້ນກໍ່ຍັງອາໄສຢູ່ລະດັບຊັ້ນນີ້.ມັນເປັນທີ່ຢູ່ຂອງບັນດາອາຈານ.ແລະເໜືອຂຶ້ນໄປອີກນັ້ນແມ່ນລະດັບຊັ້ນຂອງເທບພະເຈົ້າທີ່ມີຢູ່ຫຼາຍຮູບຮ່າງໜ້າຕາຊຶ່ງເປັນການຍາກທີ່ຈະເຂົ້າໃຈຂ້າພະເຈົ້າຢ້ານວ່າຈະທໍາໃຫ້ທ່ານສັບສົນເພາະສະນັ້ນເອົາໄວ້ໂອກາດໜ້າຂ້າພະເຈົ້າຈະເລົ່າໃຫ້ທ່ານຟັງອີກຫຼືວ່າບາງທີຫຼັງຈາກສິດເອົາວິຊາແລ້ວກໍ່ໄດ້.ເມື່ອທ່ານຕຽມຕົວພ້ອມຂຶ້ນຫຼາຍກວ່າເກົ່າ,ແລະຂ້າພະເຈົ້າຈະເລົ່າໃຫ້ທ່ານຟັງມີບາງສິ່ງທີ່ມະຫັດສະຈັນກ່ຽວກັບການນຶກຄິດຂອງທ່ານ,ບາງຄັ້ງຄວາມນຶກຄິດນັ້ນໄດ້ສ້າງຄວາມນຶກຄິດທີ່ຜິດກ່ຽວກັບພຣະເຈົ້າ.

# ທ່ານອາຈານຕອບຄໍາຖາມ
# ຫລັງການບັນຍາຍ

**ຖ**: ທ່ານໄດ້ເວົ້າຜ່ານມາຫວ່າງໜຶ່ງນີ້ວ່າຜູ້ທີ່ເປັນອາຈານສາມາດຢືມກໍາຂອງຄົນອື່ນໄດ້ໃນກໍລະນີແບບນີ້ ກໍາຈະຖືກລົບອອກໄປຈາກບຸກຄົນເຫຼົ່ານັ້ນແມ່ນບໍ່? ແລ້ວຜົນຕາມມາສໍາລັບຄົນເຫຼົ່ານັ້ນຈະເປັນແນວໃດ?

**ອ**: ອາຈານສາມາດລົບກໍາຂອງໃຜກໍ່ໄດ້ຖ້າເປັນສິ່ງທີ່ອາຈານນັ້ນເລືອກຈະເຮັດແຕ່ຄວາມຈິງແລ້ວ ລູກສິດແຕ່ລະຄົນ ໃນເວລາທີ່ໄດ້ຮັບການສິດເອົາວິຊາ ກໍາທັງໝົດໃນອະດີດກໍ່ຈະຕ້ອງຖືກລົບອອກໄປໝົດ ຂ້າພະເຈົ້າປະໃຫ້ມັນເຫຼືອໄວ້ພຽງແຕ່ກໍາໃນປະຈຸບັນເທົ່ານັ້ນ,ແລ້ວເຮົາກໍ່ສາມາດດໍາລົງຊີວິດຕໍ່ໄປໄດ້ບໍ່ດັ່ງນັ້ນ ແລ້ວເຮົາກໍ່ຈະຕາຍທັນທີຖ້າບໍ່ມີກໍາເຮົາກໍ່ບໍ່ສາມາດມີຊີວິດຢູ່ໃນໂລກນີ້ໄດ້.ດັ່ງນັ້ນອາຈານແມ່ນລົບລ້າງກໍາທີ່ ເຮົາໄດ້ສະສົມໄວ້ເທົ່ານັ້ນ(ກໍາໃນອະດີດຊາດທີ່ຜ່ານມາ)ແລ້ວບຸກຄົນນັ້ນກໍ່ຈະເປັນຄົນສະອາດແລະເຫຼືອກໍາປະ ໄວ້ໃຫ້ຜູ້ກ່ຽວພຽງເລັກນ້ອຍເພື່ອໃຫ້ຜູ້ກ່ຽວດໍາເນີນຊີວິດຕໍ່ໄປໄດ້.ເພື່ອໃຫ້ເຂົາໄດ້ເຮັດໃນສິ່ງທີ່ເຂົາຈະຕ້ອງໄດ້ ເຮັດໃນຊາດນີ້ແລະຫຼັງຈາກຊາດນີ້ແລ້ວກໍ່ຈົບສິ້ນກັນບໍ່ເຫຼືອຫຍັງ ນັ້ນແຫລະເຂົາຈື່ງສາມາດໄປໄດ້. ບໍ່ດັ່ງນັ້ນ ແລ້ວເຂົາຈະໄປໄດ້ແນວໃດ? ເຖິງແມ່ນວ່າຊາດນີ້ ເຂົາຈະເປັນຄົນສະອາດ ສະອາດຊໍ່າໃດ? ແລ້ວຊາດກ່ອນໆ ຫຼືຊາດ ທີ່ຜ່ານໆມາເດ໋! ທ່ານເຂົ້າ ໃຈບໍ່?

**ຖ**: ເປົ້າໝາຍຂອງການບໍາເພັນຂອງທ່ານແມ່ນຫຍັງ?

**ອ**: ເປົ້າໝາຍແມ່ນຫຍັງເບາະ? ຂ້າພະເຈົ້າຍັງບໍ່ທັນໄດ້ບອກທ່ານເທື່ອເບາະ? ກໍ່ເພື່ອເດີນທາງໄປເໜືອໂລກນີ້ ເພື່ອກັບໄປ ສູ່ອານາຈັກຂອງພຣະເຈົ້າ ຮູ້ເຖິງປັນຍາຂອງທ່ານເອງ ແລະກໍ່ເປັນຄົນດີຂຶ້ນໃນຊາດນີ້ອີກດວ້ຍ.

**ຖ**: ກໍານີ້ມີຢູ່ທຸກອານາຈັກເລີຍແມ່ນບໍ່?

**ອ**: ເອີ! ບໍ່ແມ່ນທຸກໆອານາຈັກດອກ! ມີຮອດແຕ່ຊັ້ນທີ່ສອງ ເພາະວ່າຄວາມຄິດຂອງເຮົາ,ສະໝອງ ຂອງ ເຮົາ ຊື່ງປຽບເໝືອນ ຄອມພິວເຕີນີ້ແມ່ນຖືກສ້າງຂຶ້ນມາຢູ່ໃນລະດັບຊັ້ນທີ່ສອງນີ້ ເມື່ອເຮົາລົງມາ ຈາກລະດັບຊັ້ນ ທີ່ສູງໆ ເພື່ອລົງມາຫາລະດັບຊັ້ນ ທາງກາຍນີ້ນັ້ນກໍ່ເພື່ອມາເຮັດວຽກບາງຢ່າງແມ່ນບໍ່!ເຊັ່ນຕົວຢ່າງ: ແມ່ນແຕ່ຜູ້ ເປັນອາຈານທີ່ມາຈາກຊັ້ນທີ່ຫ້າເພື່ອລົງມາໂລກໜ່ວຍນີ້ທ່ານກໍ່ຍັງຜ່ານໂລກຊັ້ນທີ່ສອງນີ້ແລ້ວຢິບເອົາຄອມພິວ ເຕີຕິດຕົວລົງມາພອ້ມ ເພື່ອຈະໄດ້ເຮັດວຽກຢູ່ໃນໂລກນີ້ ມັນກໍ່ເໝືອນກັບນັກດໍານໍ້າ ທ່ານຮູ້ແມ່ນບໍ່! ຜູ້ທີ່ດໍາລົງ ໄປໃນນໍ້າທະເລ ລາວຈະຕອ້ງໄດ້ກະຕຽມໃສ່ໜ້າກາກ ຕຽມຖັງອອ໋ກຊີເຈນແລະສິ່ງອື່ນໆອີກ ເຖິງແມ່ນວ່າ ຕົນ ຕົວລາວຈະເບີງບໍ່ເປັນຕາຕະລົກ ແຕ່ວ່າເວລາລາວນຸ່ງເຄື່ອງດໍານໍ້າ ໃສ່ໜ້າກາກ ເປ້ຖັງ ອອ໋ກຊີເຈນ ລາວກໍ່ ເບິ່ງຄ້າຍຄືກັນກັບກົບ ແມ່ນບໍ່?ເຮົາກໍ່ເປັນ ເໝືອນແບບນັ້ນລາງເທື່ອ ຍອ້ນຄອມພິວເຕີ ແລະບາງອຸປະກອນ ທາງກາຍນີ້ແຫລະ ບໍ່ດັ່ງນັ້ນ,ແລ້ວ ເຮົາກໍ່ຈະສວຍ ງາມຢ່າງສົມບູນແບບ ເຖິງແມ່ນວ່າຕອນນີ້ ທ່ານຄິດວ່າ

ທ່ານສວຍງາມຢູ່ ແຕ່ຄວາມເປັນຈິງແລ້ວ ທ່ານຂີ້ລ້າຍ ກ່ວາ...ຖ້າຫຸ້ມໃສ່ຕົວຈິງຂອງທ່ານແລ້ວ. ເພື່ອຈະໄດ້ດຳລົງໄປເລິກໆຈົນເຖິງໂລກໜ່ວຍນີ້ ເພື່ອເຮັດວຽກ.

ດັ່ງນັ້ນ,ເມື່ອເຮົາກັບຂຶ້ນມາຜ່ານໂລກຊັ້ນທີ່ສອງເພື່ອຂຶ້ນໄປຊັ້ນໃນລະດັບສູງອື່ນໆເຮົາກໍ່ຕ້ອງໄດ້ປະອຸປະກອນຄອມພິວເຕີຂອງເຮົາໄວ້ຊັ້ນທີ່ສອງນັ້ນ,ເພາະພວກເຮົາບໍ່ຈຳເປັນນຳເອົາມັນຂຶ້ນໄປອີກແລ້ວ.ມັນກໍ່ຄືເມື່ອເວລານັກດຳນ້ຳຂຶ້ນມາຮອດຝັ່ງແລ້ວລາວກໍ່ປະເຄື່ອງອຸປະກອນທີ່ລາວໃຊ້ດຳນ້ຳນັ້ນອອກຈາກໂຕຂອງລາວຊຶ່ງມີທັງບັ້ງອົກຊີເຈນ ໜ້າກາກ ແລະອຸປະກອນອື່ນໆ ແລ້ວລາວກໍ່ຈະເບິ່ງເໝືອນເດີມຄືເກົ່າ ແມ່ນບໍ່?ໂອເຄ!

**ຖ**: ທ່ານອາຈານ, ທ່ານອາຈານໄດ້ເວົ້າວ່າ ຮອດຂອບສຸດຂອງໂລກທີ່ສອງ ກ່ອນທີ່ ທ່ານຈະຂຶ້ນໄປ ທ່ານຖິ້ມກຳ(ກັມ)ທັງໝົດໄວ້ເບື້ອງຫລັງຫລືວ່າທ່ານຕອ້ງໄດ້ແກ້ໄຂຫລືຊຳລະລ້າງກຳ(ກັມ)ທັງໝົດຂອງທ່ານທີ່ເວົ້ານີ້. ແມ່ນໝາຍເຖິງ ກຳທັງໝົດໃນອາດີດຊາດຕ່າງໆຊຶ່ງຕິດຕົວທ່ານມາໃນຊາດນີ້ດວ້ຍແມ່ນບໍ່?

**ອ**: ແມ່ນແລ້ວ,ເພາະວ່າບໍ່ມີຄອມພິວເຕີທີ່ຈະບັນທຶກສິ່ງຕ່າງໆແລ້ວ.ພວກເຮົາມີກຳເພາະພວກເຮົາມີຄອມພິວເຕີນີ້.ຈິດໃຈ,ມັນສະໝອງ ຊຶ່ງມີຄວາມຫມາຍສຳລັບໃຊ້ບັນທຶກປະສົບການທຸກຢ່າງໃນໂລກແຫ່ງວັດຖຸນີ້ ນັ້ນແຫລະ. ດວ້ຍເຫດນັ້ນ,ເຮົາຈຶ່ງມີກຳບໍ່ວ່າດີຫລືຮ້າຍ ເຮົາກໍ່ບັນທຶກມັນໄວ້ໝົດ.ອັນນັ້ນແຫລະ ທີ່ເຮົາເອີ້ນວ່າກຳ. ກຳແມ່ນຫຍັງ? ມັນກໍ່ເປັນພຽງປະສົບການ ຂອງການປະພຶດດີ ຫລືຮ້າຍນັ້ນເອງ ແລະການເຄື່ອນໄຫວຂອງເຮົາ. ການຮຽນຮູ້ຈາກປະສົບການອັນຫລາຍໆຊາດຂອງເຮົາແລະເນື່ອງຈາກເຮົາມີສິ່ງທີ່ເພິ່ນເອີ້ນວ່າ“ສະຕິ” ພວກເຮົາຮູ້ວ່າ ພວກເຮົາຄວນ ເປັນຄົນດີແຕ່ບາງຄັ້ງພວກເຮົາກໍ່ກະທຳສິ່ງທີ່ບໍ່ດີດັ່ງນັ້ນ,ພວກເຮົາຈຶ່ງເອີ້ນສິ່ງນີ້ວ່າ “ກຳ”ແລະສິ່ງທີ່ບໍ່ດີນີ້ມັນຈະເຕັງທັບເຮົາລົງເໝືອນຂີ້ເຫຍື້ອທີ່ເນົ່າເໝັນທີ່ມີປະລິມານຫລາຍຂຶ້ນຕາມກົດຂອງແຮງໂນ້ມທ່ວງຂອງໂລກມັນຈະດຶງເຮົາລົງ ແລະຈະທຳໃຫ້ຍາກລຳບາກຍິ່ງຂຶ້ນ ເພື່ອທີ່ຈະໄຕ່ພູເຂົາປີນຂຶ້ນ ໄປໃໝ່.ເນື່ອງຈາກວ່າລະບຽບທາງດ້ານສິນລະທຳ ຈຳນວນຫລວງຫລາຍທີ່ມີຢູ່ໃນໂລກນີ້ກົດເກນ, ວັດທະນະທຳ, ຮີດຄອງປະເພນີ,ຄວາມຊິນເຄີຍຕ່າງໆນາໆໃນຊາດຕ່າງໆໄດ້ຜູກມັດເຮົາໃຫ້ຕິດຢູ່ກັບແນວຄິດ ເລື້ອງດີ ເລື້ອງຊົ່ວ, ທັງການກະທຳຜິດແລະຄວາມບໍ່ລິສຸດຕ່າງໆເຫຼົ່ານີ້.ດັ່ງນັ້ນ,ເມື່ອເຮົາເຂົ້າໄປກ່ຽວຂອ້ງກັບຄົນໃນໂລກນີ້ເຮົາກໍ່ມີປະສົບການທັງເລື້ອງດີແລະ ເລື້ອງຊົ່ວທັງຄວາມຜິດ, ແລະຄວາມບໍລິສຸດ,ຕາມວັດທະນະທຳ, ຄວາມຊິນເຄີຍ ແລະກົດຫມາຍ ຂອງຊາດນັ້ນໆ ແລະມັນກໍ່ກັບກາຍ ມາເປັນ ຄວາມຊິນເຄີຍທີ່ເຮັດໃຫ້ເຮົາຕ້ອງຄິດໄປຕາມວິຖີທາງແນວນັ້ນ ຖ້າເຮົາເຮັດແບບນີ້ເຮົາກໍ່ຕ້ອງຜິດ ຖ້າເຮົາເຮັດແບບ ນັ້ນເຮົາກໍ່ເປັນຄົນບໍ່ດີ ແລະນີ້ແຫລະທີ່ມັນໄດ້ຖືກບັນທຶກໄວ້ບອ່ນນີ້. ອັນນີ້ແຫລະທີ່ມັນເຮັດໃຫ້ເຮົາຕອ້ງກັບມາວຽນວາຍຕາຍເກີດ ແລະຍຶດໂຕເຮົາໄວ້ກັບໂລກແຫ່ງເນື້ອໜັງນີ້ ຫລືອາດເປັນໂລກທີ່ສູງກວ່າໜອ້ຍນຶ່ງແຕ່ວ່າຍັງບໍ່ທັນສູງພຽງພໍ ພວກເຮົາຍັງບໍ່,ບໍ່ທັນມີອິດສະລະ ພວກເຮົາຍັງບໍ່ເບົາພໍທີ່ຈະລອຍຢູ່ເໜືອຂຶ້ນໄປກໍ່ຍ້ອນຄວາມຄິດທັງຫລາຍເຫລົ່ານີ້ແລະ ຄວາມຄິດທີ່ມີຢູ່ແຕ່ເດີມ.

**ຖ**: ມັນໄດ້ຖືກກຳນົດລ່ວງໜ້າບໍ່!..ວ່າເຮົາຈະໄດ້ຂຶ້ນໄປເຖິງລະດັບໃດລະດັບນຶ່ງໃນແຕ່ລະຊາດທີ່ເຮົາເກີດມາ?

**ອ**: ບໍ່! ພວກເຮົາມີອິດສະລະເສລີ ທີ່ຈະກ້າວເດີນຊ້າລົງ ຫລືວ່າໄວຂຶ້ນ. ຕົວຢ່າງເຊັ່ນ: ລົດຂອງທ່ານ, ທ່ານໃສ່ນ້ຳມັນລົງໄປນຶ່ງຮອ້ຍລິດ.ແຕ່ວ່າທ່ານ ເອງສາມາດຂັບໄວຂຶ້ນໃນຈຳນວນນ້ຳມັນດັ່ງກ່າວ, ແລະໄປເຖິງທີ່ໝາຍໄວຂຶ້ນ ຫລືທ່ານຈະຂັບຊ້າລົງ, ມັນຂຶ້ນກັບທ່ານ.

**ຖ**: ຄືຂ້າພະເຈົ້າພຽງແຕ່ ຢາກຖາມທ່ານວ່າ..ເທວະດາ ນາງຟ້ານັ້ນຢູ່ໃນລະດັບຊັ້ນໃດ?

**ອ**: ພວກເຂົາຢູ່ໃນລະດັບຊັ້ນໃດເບາະ? ໂອ! ມັນກໍ່ຂຶ້ນກັບພວກເຂົາແມ່ນເທວະດາແບບໃດ?

**ຖ**: ເທວະດາອາລັກຮັກສານີ້ແຫລະ.

**ອ**: ໂອ! ພວກເທວະດາອາລັກ ພວກເຂົ້າເຈົ້າແມ່ນສາມາດຂຶ້ນໄປຮອດແຕ່ລະດັບຊັ້ນສອງ ພວກເທວະດາແມ່ນເປັນລອງ ມະນຸດເຮົາ ມີປາລະມີໜ້ອຍກວ່າ ພວກເຂົາເຈົ້າແມ່ນມີໜ້າທີ່ຮັບໃຊ້ເຮົາ.

**ຖ**: ແລະເຂົາເຈົ້າບໍ່ເຄີຍຂຶ້ນໄປເໜືອນັ້ນແດ່ເບາະ?

**ອ**: ບໍ່! ນອກຈາກແຕ່ເສັຍວ່າ ພວກເຂົາເຈົ້າໄດ້ກັບລົງມາເກີດເປັນມະນຸດເທົ່ານັ້ນ ພວກເຂົາແມ່ນອິດສາມະນຸດຫລາຍ ເພາະວ່າພຣະເຈົ້າອາໄສຢູ່ໃນມະນຸດ ພວກເຮົາມີຂໍ້ສະດວກທຸກຢ່າງ ເພື່ອຈະເປັນ ນຶ່ງດຽວກັບພຣະເຈົ້າ ແຕ່ເທວະດາບໍ່ມີ. ມັນສະລັບຊັບຊ້ອນ ຂ້າພະເຈົ້າຈະເລົ່າໃຫ້ຟັງ ໃນໂອກາດໜ້າ ໂອເຄ!

ມີຫລາຍສິ່ງທີ່ຖືກສ້າງຂຶ້ນ ເພື່ອມາຮັບໃຊ້ພວກເຮົາ ເຊັ່ນດຽວກັນມີເທວະດາປະເພດ ຕ່າງໆຢ່າງຫລວງຫລາຍເຊັ່ນຕົວຢ່າງວ່າ..ສິ່ງໃດທີ່ຖືກສ້າງຂຶ້ນໂດຍພຣະເຈົ້າສິ່ງນັ້ນກໍ່ຈະເປັນສິ່ງທີ່ຖືກສ້າງຂຶ້ນເພື່ອມາຮັບໃຊ້ພວກເຮົາ ແລະເຂົາເຈົ້າກໍ່ບໍ່ຄວນ...ແລະກໍ່ບໍ່ຈຳເປັນຂຶ້ນໄປເໜືອນັ້ນ.ແຕ່ວ່າ ເຂົາເຈົ້າສາມາດຂຶ້ນໄປໄດ້ ແມ່ນແລ້ວ, ບາງຄັ້ງບາງສິ່ງບາງຢ່າງກໍ່ໄດ້ສ້າງຂຶ້ນມາ ແຕ່ບໍ່ແມ່ນ ເພື່ອວ່າຈະໄດ້ພັດທະນາໂຕເອງຂຶ້ນໄປ.ເຊັ່ນຢູ່ພາຍໃນເຮືອນຂອງທ່ານ ບາງສິ່ງທີ່ທ່ານໄດ້ສ້າງຂຶ້ນມາກໍ່ເພື່ອ ຄວາມສະດວກສະບາຍຂອງທ່ານໂດຍສະເພາະ. ເຖິງແມ່ນວ່າ ມັນຈະວິເສດເລີດລ້ຳຫລາຍເທົ່າໃດກໍ່ຕາມ ເຊັ່ນ: ທ່ານນັ່ງຢູ່ບອ່ນນີ້ ແຕ່ທ່ານກໍ່ສາມາດເປີດປິດ ດອກໄຟໄດ້ທົ່ວເຮືອນ ແລະສວນກາງບ້ານ ລວມທັງປິດເປີດໂທລະທັດກໍ່ໄດ້ ເພາະທ່ານປະດິດມັນຂຶ້ນມາ ຮັບໃຊ້ທ່ານເອງ,ແຕ່ວ່າມັນກໍ່ແມ່ນ ເພື່ອບໍລິການຮັບໃຊ້ສະເພາະແຕ່ທ່ານເທົ່ານັ້ນ ເຖິງແມ່ນວ່າມັນອາດຈະເກັ່ງ ກວ່າທ່ານໃນບາງດ້ານ.ເຊັ່ນວ່າ: ມັນຢູ່ບ່ອນນີ້ ແຕ່ມັນກໍ່ສາມາດຄວບຄຸມໄດ້ທຸກສິ່ງ ແຕ່ທ່ານບໍ່ສາມາດ ຈະກະທຳໄດ້ໂດຍ ລຳພັງ ແລະນັ້ນບໍ່ໄດ້ ໝາຍ ຄວາມວ່າມັນດີກວ່າທ່ານ. ມັນໄດ້ຖືກສ້າງຂຶ້ນເພື່ອຈຸດປະສົງຢ່າງດຽວຄືຮັບໃຊ້ພວກທ່ານ ເຖິງແມ່ນວ່າ ມັນຈະເຮັດວຽກດີກວ່າທ່ານ ແຕ່ມັນກໍ່ບໍ່ໄດ້ດີກວ່າ,ໂອເຄ! ຖືກຕ້ອງບໍ່? ມັນບໍ່ມີວັນທີ່ຈະກາຍເປັນມະນຸດໄດ້,ເຈົ້າຄອມ ພີວເຕີນັ້ນ.

**ຖ**: ທ່ານອາຈານຊິງໄຫ່ ຂ້າພະເຈົ້າຢາກຮູ້ວ່າ...ເນື່ອງຈາກວ່າຕອນນີ້ ເຮົາຢູ່ໃນຮ່າງກາຍ. ມັນສາມາດເປັນໄປໄດ້ບໍ່ທີ່ເຮົາອາດຕົກລົງມາ...ປົດປ່ອຍອອກຈາກຮ່າງກາຍເນື້ອນີ້ມາກ່ອນ?ພວກເຮົາເຄີຍຢູ່ໃນສະພາບນີ້ມາຕະຫລອດບໍ່? ຫລືວ່າພວກເຮົາເຄີຍຢູ່ສະພາບດີກວ່ານີ້ມາກອ່ນ ຫລືພຽງແຕ່ຢູ່ໃນສະພາບນີ້ເທົ່ານັ້ນ? ທັດສະນະຄະຕິທີ່ດີ ຫລືການຕຽມຕົວທີ່ດີ ເພື່ອທີ່ຈະໄດ້ພັດທະນາຢ່າງກ້າວໜ້າໄປນັ້ນແມ່ນແນວໃດ?

**ອ**: ການທີ່ຈະອອກຈາກຮ່າງກາຍນີ້ແລ້ວກ້າວໜ້າໄປ?ເອີ!ໄດ້,ພວກເຮົາສາມາດກະທຳໄດ້ຖ້າວ່າພວກເຮົາຮູ້ວິທີ.ມີວິທີທາງຕ່າງໆຫລາຍວິທີທີ່ຈະອອກຈາກຮ່າງກາຍນີ້ແລ້ວຖິ້ມປະໄວ້ແລ້ວຂຶ້ນໄປເບື້ອງບົນເໜືອໂລກນີ້ບາງຄົນກໍ່ໄປໄດ້ບໍ່ໄກບາງຄົນກໍ່ໄປໄດ້ໄກຫລາຍບາງຄົນໄປຈົນສຸດ.ອີງຕາມການຄົ້ນຄວ້າທີ່ແຕກຕ່າງກັນແລະການສຶກສາຮຽນຂອງຂ້າພະເຈົ້າຕັ້ງແຕ່ຂ້າພະເຈົ້າຍັງເປັນໜຸ່ມຢູ່ເຖິງແມ່ນວ່າປັດຈຸບັນຂ້າພະເຈົ້າຍັງເບິ່ງຄືໜຸ່ມແຕ່

ຕອນນັ້ນ,ຂ້າພະເຈົ້າກໍ່ຍັງໜຸ່ມຢູ່ຮູ້ບໍ່,ທຳມະວິຖີຂອງພວກເຮົາແມ່ນດີທີ່ສຸດແມ່ນແລ້ວ!ໄປໄດ້ໄກທີ່ສຸດໄປໄດ້ເຖິງປາຍສຸດເລີຍ.

ຍັງມີທຳມະວິຖີອື່ນໆອີກຫລາຍຢ່າງຖ້າທ່ານຢາກຈະລອງເບິ່ງວ່າ..ເປັນແນວໃດ,ກໍ່ລອງເລືອກໄດ້ຕາມໃຈມີຢູ່ຢ່າງຫລວງຫລາຍໃນທ້ອງຕະຫລາດບາງວິທີກໍ່ໄປໄດ້ເຖິງໂລກທີບບາງວິທີກໍ່ໄປໄດ້ໄກກວ່ານັ້ນອາດຈະໄປໄດ້ເຖິງລະດັບຊັ້ນທີ່ສາມຫລືທີ່ສີ່ແຕ່ວ່າບໍ່ມີຫລາຍທີ່ສາມາດໄປຮອດຊັ້ນທີ່ຫ້າ.ເພາະສະນັ້ນ,ການປະຕິບັດ ຂອງພວກເຮົາ ກໍ່ແມ່ນເພື່ອພາພວກທ່ານໄປເຖິງລະດັບຊັ້ນທີ່ຫ້າ ກ່ອນທີ່ຈະປະພວກທ່ານ ໃຫ້ເປັນອິດສະລະ.ປ່ອຍໃຫ້ພວກທ່ານໄປຕາມລຳພັງແລະເໜືອລະດັບນັ້ນຂື້ນໄປອີກເຮົາກໍ່ສາມາດເຂົ້າໄປໃກ້ກັບພຣະເຈົ້າທີ່ມີຫລາຍຮູບຮ່າງແຕກຕ່າງໄປຊຶ່ງຢູ່ເໜືອລະດັບຊັ້ນທີ່ຫ້ານັ້ນແຕ່ມັນກໍ່ບໍ່ແມ່ນເລື້ອງທີ່ສະນຸກສະໜານແລະພໍໃຈຕະຫລອດໄປດອ໋ກ.

ເຮົາມັກຄຶດວ່າ..ຍິ່ງສູງຍິ່ງດີ ໝາຍຄວາມວ່າຂື້ນໄປສູງເທົ່າໃດກໍ່ແມ່ນຍິ່ງດີກວ່າ ເທົ່ານັ້ນ,ແຕ່ມັນກໍ່ບໍ່ຈິງສະເໝີ ໄປດອ໋ກ, ເຊັ່ນຕົວຢ່າງ: ບາງຄັ້ງເຮົາຖືກຮັບເຊີນໃຫ້ເຂົ້າໄປໃນທໍໂຮງ ທີ່ສວຍງາມແຫ່ງນື່ງ ແລະເຮົາໄດ້ຖືກເຊີນ ໃຫ້ເຂົ້າ ໄປໃນຫ້ອງນັ່ງຫລີ້ນຂອງທ່ານ ເຮົາກໍ່ນັ່ງຢູ່ບອ່ນນັ້ນ ພອ້ມທັງໄດ້ຮັບການບໍລິການດວ້ຍ ເຄື່ອງດື່ມອັນຫວານເຢັນ ແລະ ອາຫານທີ່ແຊບໆທຸກສິ່ງທຸກຢ່າງ ແລ້ວເຮົາກໍ່ ຢາກເຂົ້າໄປໃນເລິກອີກຕື່ມ ເພື່ອຈະໄດ້ເຫັນວ່າມີຫຍັງເບິ່ງ ແລະເຮົາອາດຈະ ເດີນເຂົ້າໄປເຖິງບໍລິເວັນທີ່ຖິ້ມຂີ້ເຫຍື້ອ ໄດ້ຮູ້ຈັກສິ່ງຕ່າງໆອີກຫລາຍຢ່າງພາຍໃນບ້ານ. ຊຶ່ງກໍ່ບໍ່ແມ່ນວ່າ ເປັນສິ່ງສຳຄັນສະເໝີໄປແລະກໍ່ໄດ້ພົບເຄື່ອງຈັກສຳລັບໃຊ້ປັ່ນໄຟ ຊຶ່ງຢູ່ໃນບໍລິເວັນຫລັງບ້ານຖ້າເດີນເຂົ້າໄປເລິກອີກກໍ່ອາດຖືກໄຟຊອດຕາຍຢູ່ບອ່ນນັ້ນ.ເພາະສະນັ້ນ,ຈຶ່ງບໍ່ແມ່ນເລື້ອງທີ່ຈຳເປັນສະເໝີໄປແລະບໍ່ແມ່ນສິ່ງທີ່ດີສະເໝີໄປ ທີ່ຈະເຂົ້າໄປເລິກຫລາຍຂື້ນແຕ່ເຮົາ ຈະທຳເພື່ອ ເປັນການພະຈົນໄພກໍ່ໄດ້.

**ຖ**: ທ່ານອາຈານຊິງໄຫ່ ຂ້າພະເຈົ້າມີຄຳຖາມຢູ່ສອງຂໍ້.

**ຂໍ້ທີ່ນື່ງ**:ຄວາມຊົງຈຳຂອງອະດີດຊາດນັ້ນມາຈາກໂລກໃດ?ຖ້າຫາກເຮົາສາມາດຈະມີຄວາມຊົງຈຳຂອງຊາດກ່ອນໄດ້.

**ຂໍ້ທີ່ສອງ**:ຊີວິດໃນອະດີດຊາດນັ້ນກ່ຽວຂອ້ງກັບກຳໃນປັດຈຸບັນແນວໃດ?ກັບກຳທີ່ເຮົາເຂົ້າໃຈໃນປັດຈຸບັນ ນີ້ແຫລະ.ມັນເປັນວັດຖຸເຄື່ອງໃຊ້ສ່ວນເກີນ ຫຼືບໍ່?

**ອ**: ແມ່ນແລ້ວ,ແມ່ນແລ້ວ, ມັນກ່ຽວຂ້ອງກັນທີ່ສຸດ. ຄຳຖາມທຳອິດກໍ່ຄື ກຳໃນອະດີດມາຈາກໃສ? ທ່ານສາມາດອ່ານບັນທຶກຊີວິດໃນອະດີດຊາດນັ້ນໄດ້ ເລື້ອງນີ້ແມ່ນແນ່ນອນ ແລະບັນທຶກຊີວິດໃນອະດີດຊາດນີ້ຕາມທີ່ຂ້າພະເຈົ້າໄດ້ບອກທ່ານແລ້ວ ແມ່ນມາຈາກບົດບັນທຶກ ແບບອາກາຊິກນັ້ນແຫລະ ແລະສິ່ງນີ້ມັນກໍ່ເປັນຫອ້ງສະມຸດສະນິດນື່ງຊຶ່ງຢູ່ໃນໂລກຊັ້ນທີ່ສອງຊຶ່ງທຸກຄົນສາມາດເຂົ້າໄປເບິ່ງໄດ້ຖ້າຜູ້ໃດຫາກສາມາດຂື້ນໄປເຖິງບ່ອນນັ້ນ.ບໍ່ແມ່ນວ່າທຸກໆຄົນຈະສາມາດເຂົ້າໄປຫໍສະມຸດຂອງອົງການສະຫະປະຊາຊາດແລະເຂົ້າໄປຂ້າງໃນນັ້ນໄດ້.ແຕ່ຂ້າພະເຈົ້າສາມາດເຂົ້າໄປໄດ້ເຊັ່ນຕົວຢ່າງມື້ນີ້,ເພາະວ່າຂ້າພະເຈົ້າໄດ້ຖືກເຊີນໃຫ້ມາເວົ້າທີ່ອົງການສະຫະປະຊາຊາດນີ້ ແມ່ນບໍ່? ບໍ່ແມ່ນວ່າໃຜໆກໍ່ສາມາດ ເຂົ້າມາຂ້າງໃນນີ້ໄດ້. ແຕ່ວ່າ, ທ່ານທຸກຄົນສາມາດເຂົ້າໄປຂ້າງໃນນັ້ນໄດ້. ເພາະວ່າທ່ານທຳງານຢູ່ບອ່ນນີ້.ທຳນອງດຽວກັນ, ເມື່ອເຮົາຂື້ນໄປເຖິງ ໂລກທີ່ສອງ ເຮົາກໍ່ສາມາດອ່ານ ເບິ່ງຊີວິດ ໃນອະດີດຊາດນັ້ນໄດ້ແມ່ນແຫລະ! ເວລາເຮົາຂື້ນໄປເຖິງໂລກທີ່ນື່ງເຮົາ

ກໍ່ສາມາດຮູ້ໄດ້ບາງສ່ວນຂອງອະດີດຊາດຂອງຄົນໄດ້.ແຕ່ການຮູ້ໃນລະດັບນັ້ນຍັງບໍ່ທັນສູງເທື່ອແລະກໍ່ຍັງບໍ່ທັນຄົບຖ້ວນສົມບູນໄດ້.

ບາດນີ້,ປະສົບການໃນອະດີດຊາດນັ້ນມັນກ່ຽວຂ້ອງກັບຜົນກຳໃນປັດຈຸບັນແນວໃດ? ເຮົາສາມາດເວົ້າໄດ້ວ່າ ມັນເປັນປະສົບການທີ່ເຮົາໄດ້ຮຽນຮູ້ເພື່ອຈະຈັດການກັບຊີວິດໃນຊາດນີ້ໄດ້ ສິ່ງໃດທີ່ທ່ານໄດ້ກະທຳມາແຕ່ຊາດແລ້ວ.ຊາດນີ້ທ່ານກໍ່ຈະໄດ້ຖືກນຳສະໜອງໃຫ້ເຫັນຕົວຈິງ.ທຳນອງດຽວກັນ,ມີປະສົບການອີກຫລາຍຢ່າງທີ່ບໍ່ດີແລະກໍ່ບໍ່ເປັນທີ່ໜ້າດີໃຈຂອງອະດີດຊາດທີ່ຜ່ານມາຊຶ່ງອາດທຳໃຫ້ທ່ານຢ້ານກົວເມື່ອທ່ານພົບເຫັນສັນຍາລັກທີ່ຄ້າຍຄືກັບທີ່ໄດ້ເຫັນມາແລ້ວໃນປາງກ່ອນ…ເຊັ່ນຕົວຢ່າງ,ໃນອະດີດຊາດທີ່ຜ່ານມາ…ຫລືວ່າຕອນນີ້ກໍ່ໄດ້,ທ່ານຖືກຕົກລົງມາຈາກຂັ້ນໄດໂດຍອຸປະຕິເຫດແລະທ່ານກໍ່ໄດ້ຮັບບາດເຈັບສາຫັດແຖມຍັງຢູ່ໃນທີ່ມືດແລະກໍ່ບໍ່ມີໃຜຊ່ວຍທ່ານເລີຍຕໍ່ມາທ່ານຈຳຕ້ອງຍ່າງລົງຂັ້ນໄດລົງໄປອີກຕື່ມທ່ານກໍ່ຕອ້ງຮູ້ສຶກຢ້ານກົວເລັກນອ້ຍໂດຍສະເພາະຫາກຂັ້ນໄດນັ້ນຊັນແລະຂ້າງລ່າງກໍ່ມືດທ່ານອາດຈະບໍ່ແນ່ໃຈວ່າຈະລົງໄປຫລືບໍ່.ຫລືໃນຊາດທີ່ຜ່ານມາທ່ານເຄີຍໄດ້ສຶກສາວິໄຈລົງເລິກໄປໃນທາງວິທະຍາສາດບາງຂະແໜງ.ມາຊາດນີ້ທ່ານກໍ່ອາດຈະຍັງຮູ້ສຶກສົນໃຈຢູ່ທ່ານຈະຖືກດຶງໃຫ້ສົນໃຈໃນວຽກງານຄົ້ນຄວ້າວິໄຈທາງວິທະຍາສາດເຖິງແມ່ນວ່າຕອນນີ້ທ່ານອາດຈະຍັງບໍ່ໄດ້ເປັນນັກວິທະຍາສາດກໍ່ຕາມ.ທຳນອງນີ້ແຫລະ.

ເປັນຫຍັງໂມຊາຕ(Mozart)ຈຶ່ງເປັນເດັກອັດສະລິຍະໄດ້ຕອນເຂົາມີອາຍຸພຽງແຕ່ສີ່ຂວບລາວຍ່າງເຂົ້າໄປຫາປີອາໂນແລ້ວກໍ່ລົງມືຫລິ້ນໂລດແລ້ວກໍ່ກາຍເປັນຜູ້ມີຊື່ສຽງມາເຖິງທຸກມື້ນີ້.ສູ່ມື້ນີ້ກໍ່ຍັງມີຊື່ສຽງຄືເກົ່າລາວເປັນຜູ້ອັດສະລິຍະກໍ່ເພາະລາວໄດ້ຝຶກຝົນມາຫລາຍຊາດແລ້ວຈົນກະທັ້ງມີສີມືລະດັບອາຈານ.ແຕ່ຫລັງຈາກນັ້ນລາວກໍ່ເສັຍຊີວິດໄປ.ກອ່ນທີ່ລາວຈະໄປເຖິງຈຸດສູງສຸດໃນອາຊີບຂອງລາວ.ລາວເກີດຕາຍກ່ອນ.ລາວຍັງຮູ້ສຶກບໍ່ພໍໃຈທີ່ຕ້ອງຈາກອາຊີບຂອງລາວໄປ.ເພາະວ່າລາວມັກດົນຕີຫລາຍ.ລາວຈຶ່ງກັບຄືນມາອີກແລະປະສົບການທັງໝົດທີ່ລາວເຄີຍໄດ້ຮຽນຮູ້ມາແລ້ວຈາກພອນສະຫວັນທາງດ້ານດົນຕີໃນອະດີດກໍ່ກັບຄືນມາຫາລາວອີກຄັ້ງນຶ່ງ. ອັນນີ້,ກໍ່ຍ້ອນວ່າລາວມີຄວາມປາຖະໜາຢ່າງແຮງກ້າ ທີ່ຈະ ທຳສິ່ງນີ້ຕໍ່ໄປ ໃນຕອນທີ່ລາວເສັຍຊີວິດ.

ແລະບາງຄົນເລົ່ານີ້ແມ່ນໄດ້ຮຽນຫລາຍສິ່ງຫລາຍຢ່າງມາຈາກໂລກທິບຫລືອາດຈາກໂລກທີ່ສອງກ່ອນທີ່ພວກເຂົາຈະລົງມາເກີດໃນໂລກນີ້ອີກຄັ້ງນຶ່ງເພາະສະນັ້ນເຂົາຈຶ່ງມີພອນສະຫວັນທີ່ໜ້າຈັບໃຈທາງດ້ານວິທະຍາສາດ,ດົນຕີ,ໜັງສືວັນນະຄະດີ,ຫລືການປະດິດຄິດຄົ້ນຕ່າງໆຊຶ່ງຄົນອື່ນບໍ່ຮູ້ຈັກທ່ານຄົງເຄີຍເຫັນການປະດິດສິ່ງທີ່ແປກໆທີ່ຄົນອື່ນບໍ່ສາມາດເຂົ້າໃຈໄດ້ແລະບໍ່ອາດຈະຝັນທີ່ຈະປະດິດມັນໄດ້ກໍ່ເພາະພວກເຂົາໄດ້ເຫັນ,ໄດ້ຮຽນຮູ້,ສິ່ງນີ້ມາກ່ອນ.

ເພາະສະນັ້ນ,ການຮຽນຮູ້ຈຶ່ງມີສອງແບບຢູ່ໃນໂລກນີ້ຫລືຢູ່ໃນໂລກເບື້ອງບົນພວກທີ່ມີພອນສະຫວັນແລະເກັ່ງທີ່ສຸດ,ເຊັ່ນພວກອັດສະລິຍະ,ພວກເຂົາເປັນຜູ້ຊ່ຽວຊານມາຈາກໂລກເບື້ອງບົນເຊັ່ນ:ໂລກທິບ,ໂລກທີ່ສອງ…ບາງຄັ້ງກໍ່ມາຈາກໂລກທີ່ສາມຖ້າຫາກເຂົາເລືອກທີ່ຈະກັບມາໃໝ່ພວກນີ້ເກັ່ງຫລາຍເປັນພວກອັດສະລິຍະບຸກຄົນ.

**ຖ**: ໂດຍສະເພາະ,ການສິດເອົາວິຊາຂອງທ່ານຈະສືບຕໍ່ແນວໃດພາຍຫລັງທີ່ສິດແລ້ວ?ໃນແຕ່ລະວັນຈະຕ້ອງເຮັດ ຫຍັງແດ່?

**ອ**: ໂອເຄ.ກອ່ນອື່ນໝົດ ແມ່ນບໍ່ຕ້ອງເສັຍເງິນ ແລະບໍ່ມີຂໍ້ຜູກມັດຫຍັງທັງສິ້ນ ແຕ່ວ່າທ່ານຕ້ອງຜູກມັດທ່ານເອງຖ້າຫາກທ່ານຕ້ອງການຈະເດີນໜ້າກ້າວໄປ,ເງື່ອນໄຂກໍ່ຄືບໍ່ຈຳເປັນຕອ້ງມີປະສົບການດອກ?ບໍ່ຈຳເປັນ

ຕ້ອງມີຄວາມຮູ້ຜ່ານມາກ່ຽວກັບໂຍຄະຫລືປະສົບການດ້ານການນັ່ງສະມາທິມາກ່ອນແຕ່ທ່ານຕ້ອງເປັນມັງສະວິລັດ(ຄືບໍ່ກິນເນື້ອສັດ)ຕະຫລອດ ຊີວິດ.ບໍ່ກິນໄຂ່,ກິນນົມໄດ້,ກິນເນີຍໄດ້,ແລະຢ່າງອື່ນທີ່ບໍ່ມີການຂ້າກໍ່ກິນໄດ້.

ສໍາລັບເລື້ອງໄຂ່ນັ້ນເນື່ອງຈາກວ່າມັນມີການຂ້າເຄິ່ງນຶ່ງເຖິງແມ່ນວ່າມັນຈະເປັນເວົ້າແບບໃດດີ…ເປັນໄຂ່ທີ່ບໍ່ໄດ້ຮັບການປະສົມພັນກໍ່ຕາມ ແຕ່ຄຸນນະພາບຂອງມັນກໍ່ຄືມັນສາມາດດຶງດູດເອົາພະລັງທາງດ້ານລົບເຂົ້າມາສູ່ໂຕຂອງເຮົາໄດ້ ນີ້ແຫລະຄືເຫດຜົນທີ່ນັກເວດມົນດໍາ,ເວດມົນຂາວທັງຫລາຍ ຫລືພວກ ວູດູ(voodoo) ນັ້ນມັກໃຊ້ໄຂ່ ເພື່ອດູດ ຫລືລໍ້ເອົາວິນຍານໃຫ້ອອກຈາກພວກທີ່ຖືກຜີເຂົ້າ ຫລືຖືກຄົນໃສ່ ພວກທ່ານເຄີຍໄດ້ຮູ້ເລື້ອງນີ້ບໍ່?ຮູ້ເບາະ?ໂອ!ຄັກຫລາຍຢ່າງໜ້ອຍຂ້າພະເຈົ້າກໍ່ມີຂໍ້ພິສູດທັນທີເຖິງແມ່ນວ່າມັນບໍ່ແມ່ນການຮູ້ແຈ້ງທັນທີສໍາລັບເຂົາ(ສຽງຫົວ).

ຫລັງຈາກການສິດເອົາວິຊາແລ້ວ…**ໃນຕອນສິດເອົາວິຊານັ້ນທ່ານກໍ່ຈະໄດ້ຮັບປະສົບການທັງແສງແລະສຽງຂອງພຣະເຈົ້າເປັນດົນຕີແຫ່ງຈິດຊຶ່ງຈະດຶງທ່ານໃຫ້ຂຶ້ນໄປສູ່ລະດັບຈິດທີ່ສູງທ່ານຈະເຂົ້າໃຈໃນລົດຊາດຂອງສະມາທິຊຶ່ງເປັນຄວາມສຸກເປັນຄວາມສຸກອັນລືກຊຶ້ງແມ່ນແລ້ວ,ຫລັງຈາກນັ້ນກໍ່ກັບໄປປະຕິບັດຢູ່ບ້ານ.**ຖ້າທ່ານເອົາຈິງເອົາຈັງໃນເລື້ອງນີ້ແຕ່ຖ້າທ່ານບໍ່ສົນໃຈຢ່າງຈິງຈັງຂ້າພະເຈົ້າກໍ່ບໍ່ສາມາດຊຸກຍູ້ທ່ານໄດ້,ຂ້າພະເຈົ້າຈະບໍ່ສາມາດໄປລົບກວນທ່ານອີກ.ຖ້າທ່ານປະຕິບັດຕໍ່ໄປແລະຕ້ອງການໃຫ້ຂ້າພະເຈົ້າຊ່ວຍຈົນຕະຫຼອດຮອດຝັ່ງຂ້າພະເຈົ້າກໍ່ຈະຊ່ວຍຕໍ່ໄປ.ແຕ່ຖ້າທ່ານບໍ່ຕ້ອງການ…ກໍ່ແບບນີ້ແຫລະຄືວິທີທາງ.ແລະຈະຕອ້ງນັ່ງສະມາທິສອງຊົ່ວໂມງເຄິ່ງແຕ່ລະມື້.ຕອນເຊົ້າກໍ່ຈະໄດ້ຕື່ນເດິກແດ່,ນັ່ງຈັກນຶ່ງຊົ່ວໂມງຫລືຊົ່ວໂມງເຄິ່ງເຫລືອນັ້ນກໍ່ເອົາໄວ້ນັ່ງຕອນທ່ຽງແລະຕອນແລງ.ເຊັ່ນ:ກ່ອນຈະນອນກໍ່ນັ່ງເພື່ອໃຫ້ຄົບສອງຊົ່ວໂມງເຄິ່ງ,ຫລືບາງທີນັ່ງຫລັງອາຫານທ່ຽງຈັກເຄິ່ງຊົ່ວໂມງຕອນທີ່ຂ້າພະເຈົ້າບໍ່ໄດ້ມາເວົ້າຢູ່ທີ່ນີ້ທ່ານກໍ່ມີເວລາຊ່ວງອາຫານກາງວັນນຶ່ງຊົ່ວໂມງທ່ານອາດຫລົບໄປລີ້ຢູ່ບອ່ນໃດບອ່ນນຶ່ງແລ້ວກໍ່ນັ່ງສະມາທິໄປແບບນີ້ກໍ່ໄດ້ນຶ່ງຊົ່ວໂມງແລ້ວແມ່ນບໍ່?ແລະຕອນແລງກໍ່ນັ່ງອີກນຶ່ງຊົ່ວໂມງຫລືເຄິ່ງຊົ່ວໂມງ.ໃນຕອນເຊົ້າກໍ່ລຸກຂຶ້ນມາເຊົ້າກວ່າປົກກະຕິແດ່ໃຫ້ມັນໄດ້ຈັກນຶ່ງຊົ່ວໂມງ.

ຈັດລະບຽບຊີວິດຂອງທ່ານໃຫ້ຫລາຍຂຶ້ນໜ້ອຍນຶ່ງເບິ່ງTVໃຫ້ໜ້ອຍລົງເວົ້າຄຸຍຊຸບຊິບນິນທາໃຫ້ນ້ອຍລົງໂອລົມໂທລະສັບໃຫ້ນ້ອຍລົງອ່ານໜັງສືພິມໃຫ້ນ້ອຍລົງທ່ານກໍ່ຈະມີເວລາຫລາຍຂຶ້ນແຕ່ທີ່ຈິງແລ້ວເຮົາມີເວລາຢ່າງຫລວງຫລາຍແຕ່ບາງຄັ້ງເຮົາໃຊ້ເວລາໃຫ້ໝົດໄປຢ່າງເປົ່າປະໂຫຽດ.ກໍ່ເໝືອນກັນກັບລົດຂອງເຮົາທີ່ເອົາມາໃຊ້ແລ່ນຢູ່ຫລັງບ້ານ ແທນທີ່ຈະ ເອົາໄປແລ່ນຢູ່ Long Island.ແມ່ນບໍ່! ທ່ານພໍໃຈບໍ່? ຫລື(ຜູ້ຖາມ: ພໍໃຈແລ້ວ)ພໍໃຈແລ້ວເບາະ!ມັນກໍ່ບໍ່ມີຫຍັງອີກ.ທັງບໍ່ມີເງື່ອນໄຂຫຍັງອີກສໍາລັບທ່ານແລະກໍ່ບໍ່ມີຫຍັງພິເສດໄປກວ່ານີ້ອີກນອກຈາກວ່າທ່ານຕ້ອງຕັ້ງໃຈບໍາເພັນພຽນປະຕິບັດເຊັ່ນນີ້ໄປຕະຫຼອດຊີວິດແລະທຸກໆວັນທ່ານກໍ່ຈະພົບການປ່ຽນແປງຫລາຍຢ່າງທີ່ດີຂຶ້ນແລະຈະມີສິ່ງມະຫັດສະຈັນຫລາຍຢ່າງເກີດຂຶ້ນໃນຊີວິດຂອງທ່ານບໍ່ແມ່ນເພາະວ່າທ່ານປາຖະໜາຢາກໄດ້ມັນດອກ໋,ແຕ່ມັນຈະເກີດຂຶ້ນເອງ.ແລະທ່ານກໍ່ຈະມີປະສົບການອັນແທ້ຈິງວ່າສະຫວັນນັ້ນເປັນແນວໃດໃນຂະນະທີ່ຍັງຢູ່ໃນໂລກນີ້.ຖ້າທ່ານຫາກມີຄວາມຈິງຈັງໃນເລື້ອງນີ້.ນີ້ແຫລະທີ່ລູກສິດຂອງເຮົາຫລາຍແສນຄົນຈຶ່ງຍັງຄົງຍຶດໝັ້ນຢູ່ຍັງຄົງບໍາເພັນປະຕິບັດຢູ່ກັບຂ້າພະເຈົ້າມາໄດ້ຫລາຍປີແລ້ວເພາະວ່າພວກເຂົາເຈົ້າໄດ້ຮັບປະສົບການທີ່ດີຂຶ້ນໆ ເພາະວ່າພວກເຂົາເຈົ້າເອົາຈິງເອົາຈັງກັບການບໍາເພັນ ແລະພວກເຂົາເຈົ້າກໍ່ປະຕິບັດກັນແທ້ໆ.

**ຖ**: ກະລຸນາ ອະທິບາຍທໍາມະຊາດຂອງຈິດສໍານຶກ?

**ອ**: ທໍາມະຊາດຂອງຈິດສໍານຶກ,ໂອເຄ.ມັນອະທິບາຍຢາກຍາກແດ່ແຕ່ທ່ານສາມາດໃຊ້ສະຕິປັນຍາຂອງ

ທ່ານນຶກພາບເອົາ.ມັນເປັນປັນຍາສະນິດນຶ່ງ,ນີ້ແຫລະ.ມັນເໝືອນກັນກັບທ່ານຮູ້ບາງສິ່ງບາງຢ່າງດີຂື້ນກວ່າເກົ່າ ຊື່ງທ່ານບໍ່ເຄີຍຮູ້ມາກ່ອນແລະທ່ານກໍ່ຈະເຂົ້າໃຈຫລາຍສິ່ງທີ່ທ່ານບໍ່ເຂົ້າໃຈແລະກໍ່ບໍ່ເຄີຍເຂົ້າໃຈມາກ່ອນ, ນີ້ແຫລະຄືຈິດສຳນຶກ.ແລະກໍ່ເຊັ່ນດຽວກັນເມື່ອທ່ານຫາກເປີດຈິດສຳນຶກນີ້ຫລືທີ່ເອີ້ນກັນວ່າ"ປັນຍາ"ນີ້,ທ່ານກໍ່ຈະເຂົ້າໃຈຄວາມຈິງວ່າທ່ານແມ່ນໃຜ?ແລະເປັນຫຍັງທ່ານຈື່ງມາຢູ່ບ່ອນນີ້.ແລະມີຫຍັງອີກທີ່ຢູ່ເໜືອໂລກນີ້.ມີໃຜແດ່ທີ່ມາແຕ່ເໜືອໂລກແລະກໍ່ເປັນສ່ວນນຶ່ງຂອງປະຊາກອນຂອງໂລກເຮົານີ້,ພໍເຂົ້າໃຈບໍ່?ຍັງມີສິ່ງຕ່າງໆອີກຫລາຍຢ່າງ.ເພາະສະນັ້ນລະດັບຂອງຈິດສຳນຶກກໍ່ແມ່ນສະນິດຂອງລະດັບຂອງຄວາມເຂົ້າໃຈທີ່ແຕກຕ່າງກັນໄປ .ມັນກໍ່ເໝືອນລະດັບການສຶກສາຢູ່ຂັ້ນວິທະຍາໄລນັ້ນແຫລະ. ຍິ່ງຮຽນຫລາຍຂື້ນໄປເທົ່າໃດ ຍິ່ງຮູ້ຫລາຍເທົ່ານັ້ນ ຈົນກະທັ້ງຮຽນຈົບ.

ມັນເປັນການຍາກທີ່ຈະອະທິບາຍບາງສິ່ງທີ່ເຮົາເບິ່ງບໍ່ເຫັນ, ແຕ່ວ່າ,ຂ້າພະເຈົ້າກໍ່ໄດ້ພະຍາຍາມແລ້ວ ມັນເປັນເໝືອນການຮັບຮູ້ສະນິດນຶ່ງ ນັ້ນແຫລະ,ມັນຍາກແດ່ທີ່ຈະອະທິບາຍການຮັບຮູ້ນີ້.ເມື່ອທ່ານຫາກໄປເຖີງລະດັບທີ່ສູງແຕກຕ່າງກັນໄປ ຄວາມຮັບຮູ້ຂອງທ່ານກໍ່ຈະແຕກຕ່າງໄປເໝືອນກັນ.ເມື່ອສິ່ງໃດທີ່ເຮົາເຫັນວ່າມັນຕ່າງໆ ຄວາມຮູ້ສຶກຂອງເຮົາກໍ່ຕ່າງໄປນຳ. ທ່ານຈະຮູ້ສຶກວ່າມີຄວາມສຸກ,ສະງົບ,ມີຄວາມງຽບສະງັດ ແລະບໍ່ມີຄວາມກັງວົນຫຍັງໝົດ.ແລະທຸກສິ່ງທຸກຢ່າງໃນຊີວິດປະຈຳວັນຂອງທ່ານກໍ່ຈະແຈ້ງສະຫວ່າງອອກ.ທ່ານຈະຮູ້ຈັກຄວບຄຸມຈັດການກັບສິ່ງຕ່າງໆແລະຮູ້ຈັກແກ້ໄຂບັນຫາໄດ້ດີຂື້ນ.ແມ່ນແຕ່ຮ່າງກາຍແລະເນື້ອໜັງຂອງທ່ານກໍ່ໄດ້ຮັບຜົນດີຂື້ນ.ແລະພາຍໃນຕົວ ຂອງທ່ານກໍ່ມີແຕ່ທ່ານເທົ່ານັ້ນທີ່ຮູ້ຈັກ,ວ່າທ່ານຮູ້ສຶກແນວໃດ.ມັນເປັນເລື້ອງຍາກທີ່ຈະອະທິບາຍສິ່ງເຫລົ່ານີ້.ເໝືອນກັນກັບທ່ານແຕ່ງງານກັບຍິງຄົນນຶ່ງທີ່ທ່ານຮັກ ທ່ານຮູ້ສຶກແນວໃດ ກໍ່ມີແຕ່ທ່ານເທົ່ານັ້ນທີ່ຮູ້ຈັກ ບໍ່ມີຜູ້ໃດດອກ ທີ່ຈະມາຮູ້ສຶກແທນທ່ານໄດ້.

**ຖ**: ທ່ານອາຈານຜູ້ຊົງກຽດຂໍຂອບໃຈທີ່ທ່ານໄດ້ໃຫ້ການກະຈ່າງແຈ້ງແກ່ພວກເຮົາ.ບໍ່ຮູ້ວ່າທ່ານຈະຢາກຕອບຂໍ້ຂ້ອງໃຈຊື່ງຢູ່ໃນຈິດສຳນຶກຂອງຂ້າພະເຈົ້າຫລືບໍ່ຄືວ່າເປັນຫຍັງທຸກມື້ນີ້ຈື່ງມີອາຈານຢ່າງຫລວງຫລາຍຢູ່ໃນໂລກນີ້ຊື່ງໄດ້ຊ່ວຍໃຫ້ພວກເຮົາໄດ້ມີໂອກາດຮຽນຮູ້ຢ່າງວ່ອງໄວໃນຂະນະທີ່ໃນອະດີດນັ້ນມັນເປັນການຍາກທີ່ສຸດທ່ານສາ ມາດບອກເຖີງເລື້ອງນີ້ໄດ້ບໍ່?

**ອ**: ໄດ້ແນ່ນອນ,ເປັນເພາະວ່າໃນຍຸກຂອງເຮົາທຸກມື້ນີ້ການຕິດຕໍ່ສື່ສານແມ່ນດີຂື້ນກວ່າແຕ່ກ່ອນ.ດັ່ງນັ້ນ, ເຮົາຈື່ງຮູ້ເລື້ອງລາວກ່ຽວກັບອາຈານຕ່າງໆດີກວ່າແຕ່ກ່ອນບໍ່ແມ່ນວ່າໃນອະດີດນັ້ນບໍ່ມີອາຈານຢູ່ເລີຍຫລືວ່າບໍ່ສາມາດເຂົ້າເຖີງອາຈານໄດ້.ແນ່ນອນ,ມີອາຈານບາງທ່ານກໍ່ສາມາດເຂົ້າຫາໄດ້ງ່າຍກວ່າອາຈານອື່ນໆມັນຂື້ນຢູ່ກັບການເລື້ອກເຟັ້ນຂອງທ່ານຫລືຄວາມເຕັມໃຈຂອງທ່ານທີ່ຈະໃຫ້ຫລືບຸນສຳພັນຂອງທ່ານຕໍ່ບຸກຄົນທົ່ວໄປນັ້ນ. ແຕ່ແນວໃດກໍ່ຕາມ,ທຸກຍຸກທຸກສະໄໝກໍ່ມີອາຈານນຶ່ງ,ສອງ,ສາມ,ສີ່,ຫລືຫ້າຄົນຢູ່ສະເໝີມັນຂື້ນກັບວ່າໃນເວລານັ້ນຄວາມຈຳເປັນມີໜ້ອຍຫລາຍຊ່ຳໃດ. ຕາມທີ່ພວກເຮົາ ຮູ້ວ່າ ມີອາຈານມາກມາຍຫລາຍທ່ານ ຊື່ງບາງທີອາດຈະມີລະດັບແຕກຕ່າງກັນ.ນີ້ກໍ່ເພາະວ່າໃນຍຸກນີ້,ພວກເຮົາໂຊກດີທີ່ມີສື່ມວນຊົນ,ໂທລະທັດ,ມີການກະຈາຍສຽງທາງວິທະຍຸລວມທັງປື້ມແລະສິ່ງພິມຕ່າງໆຊື່ງພວກເຮົາໄດ້ພິມອອກມາເປັນລ້ານໆສຳເນົາໃນເວລາວ່ອງໄວ.

ໃນສະໄໝກ່ອນ,ຖ້າເຮົາຢາກເຮັດປື້ມຂື້ນມາເຫຼັ້ມນຶ່ງນັ້ນຕອ້ງໄດ້ຕັດໄມ້ເປັນຕົ້ນລົງມາກ່ອນແລ້ວກໍ່ໃຊ້ຂວານຫລືເຄື່ອງມືທີ່ຫລ້າຫລັງຊື່ງບຶດນຶ່ງກໍ່ເພໃຊ້ບໍ່ໄດ້ມາສັບມາຕັດມັນອອກມາແລະຍັງຕ້ອງເອົາມາຂັດແຕ່ງ

ດ້ວຍຫີນແລະອື່ນໆອີກຫລາຍຢ່າງແລ້ວຄ່ອຍໆມາແກະສະລັກຄຳເວົ້າເພື່ອລະຄຳຖ້າທ່ານຕອ້ງການສິ່ງຄຳພີໄບໂບຊຸດນີ່ງກໍ່ຕ້ອງໃຊ້ລົດເປັນຂະບວນ ຕອ້ງໃຊ້ລົດບັນທຸກຂະໜາດໃຫ່ຍຫລາຍຄັນ. ຖ້າຫາກມີລົດບັນທຸກໃນສະໄໝນັ້ນ ເພາະສະນັ້ນ ພວກເຮົາຈື່ງຮູ້ອາຈານຫລາຍທ່ານສະໄໝນີ້.

ເອີ!ໂຊກດີແລ້ວ,ແລະກໍ່ດີທີ່ສຸດສຳລັບທ່ານ…ທ່ານສາມາດຊອກຊື້ໄດ້ແມ່ນບໍ່!ຕາມຄວາມຕ້ອງການຂອງພວກທ່ານເພາະສະນັ້ນ,ຈະບໍ່ມີໃຜມາຫລອກທ່ານວ່າ"ຂ້າພະເຈົ້າດີທີ່ສຸດ"ທ່ານສາມາດປຽບທຽບແລະໃຊ້ສະຕິປັນຍາຂອງທ່ານຕັດສິນວ່າ"ໂອ!ຄົນນີ້ດີກວ່າ"ຫລືເຮົາມັກຄົນນີ້ຫລາຍກວ່າ"ຄົນນີ້ໜ້າຕາບໍ່ໄດ້ເລື້ອງ"ໂອ! ຄົນນັ້ນໜ້າຕາຂີ້ດຽດ"(ສຽງຫົວຄົນດັງຂື້ນ).

**ຖ**: ດັ່ງນັ້ນ,ຄຳຖາມຂອງຂ້າພະເຈົ້າຕໍ່ອາຈານກໍ່ຄື ເນື່ອງຈາກວ່າທ່ານອາຈານໄດ້ເວົ້າເຖີງການຊອກຫາອາຈານ,ຄັນຊັ້ນທ່ານຈະພິຈາລະນາທີ່ຈະສິດໃຫ້ແກ່ຜູ້ທີ່ເຄີຍໄດ້ຮັບການຖ່າຍທອດຫຼືສິດເອົາວິຊາມາແລ້ວຈາກອາຈານອື່ນບໍ່?

**ອ**: ຂ້າພະເຈົ້າຈະກະທຳໃຫ້ກໍ່ຕໍ່ເມື່ອບຸກຄົນຜູ້ນັ້ນເຊື່ອໝັ້ນຢ່າງແທ້ຈີງວ່າຂ້າພະເຈົ້າສາມາດຈະພາເຂົາຂື້ນສູ່ລະດັບສູງກວ່າແລະໄວກວ່າບໍ່ດັ່ງນັ້ນແລ້ວກໍ່ຢູ່ນຳອາຈານຄົນເກົ່າຈະດີກວ່າຖ້າເຂົາຫາກຍັງຍຶດຕິດແລະມີຄວາມເຊື່ອໃນອາຈານທ່ານນັ້ນຫລາຍຢູ່ຖ້າທ່ານເຊື່ອວ່າອາຈານຂອງທ່ານດີທີ່ສຸດແລ້ວກໍ່ຢ່າປ່ຽນແຕ່ຖ້າທ່ານຍັງສົງໄສຢູ່ແລະຖ້າທ່ານຍັງບໍ່ທັນໄດ້ຮັບແສງແລະສຽງທີ່ຂ້າພະເຈົ້າໄດ້ເວົ້າໄປແລ້ວທ່ານກໍ່ຄວນມາລອງເບີ່ງ <u>**ເພາະວ່າແສງແລະສຽງນັ້ນເປັນການວັດທີ່ເປັນມາດຕະຖານ ສຳລັບຜູ້ທີ່ເປັນອາຈານ ທີ່ແທ້ຈີງ ຖ້າຜູ້ໃດບໍ່ສາມາດຖ່າຍທອດແສງແລະສຽງໃຫ້ ທ່ານໄດ້ໃນທັນທີ ຜູ້ນັ້ນກໍ່ຍັງບໍ່ແມ່ນອາຈານທີ່ແທ້ຈີງໄດ້ ຂ້າພະເຈົ້າເສັຍໃຈດວ້ຍທີ່ໄດ້ເວົ້າໄປແບບນີ້ ເສັ້ນທາງສູ່ສະຫວັນແມ່ນປະກອບດວ້ຍແສງແລະສຽງເປັນອຸປະກອນ.**</u>

ກໍ່ເໝືອນກັນກັບທ່ານໄປດຳນ້ຳໃນທະເລທ່ານກໍ່ຕ້ອງມີອຸປະກອນເຊັ່ນ:ໜ້າກາກອອກຊີເຈນແລະອຸປະກອນແລະສີ່ງຕ່າງໆເພື່ອເອົາໄວ້ໃຊ້ສຳລັບຈຸດປະສົງອື່ນໆ.ດວ້ຍເຫດນັ້ນແລະເປັນຫຍັງທ່ານຈື່ງເຫັນນັກບຸນທັງຫລາຍມີລັດສະໝີເປັນວົງກົມຢູ່ເທີງຫົວຊື່ງກໍ່ແມ່ນແສງນັ້ນແຫລະເມື່ອທ່ານຫາກບຳເພັນທຳມະວິຖີນີ້ທ່ານກໍ່ຈະເປັ່ງແສງຊະນິດດຽວກັນກັບທີ່ເພີ່ນໄດ້ແຕ້ມໄວ້ໃນຮູບຂອງພະເຍຊູນັ້ນແຫລະ,ແລະຜູ້ຄົນກໍ່ສາມາດເຫັນແສງຂອງທ່ານໄດ້ຖ້າຄົນນັ້ນຫາກມີພະລັງຈິດ.ເພາະສະນັ້ນ,ພວກເຂົາຈື່ງແຕ້ມຮູບພຣະເຍຊູແລະພຣະພຸດທະເຈົ້າມີລັດສະໝີແລະແສງຢູ່ຮອບຕົວ.ທ່ານສາມາດເຫັນບຸກຄົນທີ່ບຳເພັນທຳໃນລະດັບສູງມີແສງດັ່ງກ່າວນີ້.ຖ້າທ່ານໄດ້ຮັບການເປີດອອກ(ອາຈານຊີ້ທີ່ໜ້າຜາກຂອງຕົວທ່ານ)ມີຫລາຍຄົນທີ່ສາມາດເຫັນໄດ້ ມີໃຜເຄີຍເຫັນແດ່ບໍ່ຢູ່ບອ່ນນີ້ນ່າ? ເຈົ້າເບາະ! ເຈົ້າເຫັນຫຍັງ?

**ຖ**: ເອີ! ຂ້າພະເຈົ້າສາມາດເຫັນແສງ ອໍຣາ,ອໍຣາ (Auras)…

**ອ**: ແບບນັ້ນເບາະ!ແຕ່ແສງອໍຣາແມ່ນແຕກຕ່າງຈາກແສງທີ່ຂ້າພະເຈົ້າເວົ້າເຖີງນີ້ເພາະອໍຣາມີສີຕ່າງໆບາງຄັ້ງກໍ່ມີສີດຳ,ບາງຄັ້ງກໍ່ມີສີກາເຟ,ບາງຄັ້ງກໍ່ສີເຫຼືອງຫຼືສີແດງຂື້ນຢູ່ກັບພາວະອາລົມຂອງເຂົາໃນຂະນະນັ້ນແຕ່ເມື່ອເວລາເຈົ້າເຫັນຄົນທີ່ມີແສງອໍຣາທາງພະລັງຈິດທີ່ແຮງກ້າເຈົ້າກໍ່ຈະຮູ້ວ່າມັນແຕກຕ່າງກັນແມ່ນບໍ່?ເອີ!ແນວນັ້ນແຫລະ.

**ຖ**: ຂ້າພະເຈົ້າບໍ່ມີຄໍາຖາມຫຍັງດອກ! ພຽງແຕ່ວ່າ...ຂ້າພະເຈົ້າເຄີຍຝຶກຣາຊາໂຍຄະມາໃນໄລຍະນຶ່ງ ຂ້າພະເຈົ້າຄິດວ່າໂຕເອງໄດ້ເຫັນແສງອໍຣາຄືກັນ ຂ້າພະເຈົ້າໝາຍເຖິງໃນຊວ່ງນັ້ນແລະຕອນນັ້ນ ຂ້າພະເຈົ້າກໍ່ບໍ່ໄດ້ມີຄວາມຮູ້ຫຼາຍ. ມັນເປັນພຽງຄວາມຮູ້ຊື່ໆ

**ອ**: ແລ້ວຕອນນີ້ເຈົ້າບໍ່ເຫັນມັນເບາະ? ເຈົ້າເຫັນມັນເປັນບາງຄັ້ງຊັ້ນເບາະ?

**ຖ**: ບໍ່! ຕອນນີ້ຂ້າພະເຈົ້າບໍ່ໄດ້ນັ່ງສະມາທິແລ້ວ.

**ອ**: ໂອ,ດວ້ຍເຫດນັ້ນແຫລະເຈົ້າຈື່ງສູນເສັຍພະລັງຂອງເຈົ້າໄປ ຄວນນັ່ງອີກຕື່ມໄດ! ເດີ!ຖ້າເຈົ້າຍັງເຊື່ອໝັ້ນໃນວິທີທາງນັ້ນເຈົ້າກໍ່ຄວນນັ່ງສະມາທິ.ມັນຈະຊວ່ຍເຈົ້າໄດ້ເຖີງລະດັບໃດລະດັບນຶ່ງ ບໍ່ມີອັນຕະລາຍຫຍັງດອກ.

**ຖ**: ຂ້າພະເຈົ້າເຫັນຢູ່ແຜ່ນພັບຂອງທ່ານມີສີນຢູ່ຫ້າຂໍ້ເມື່ອໄດ້ຮັບການຖ່າຍທອດຫຼືສິດແລ້ວເຮົາຈະຕ້ອງດໍາລົງຊີວິດຕາມຫລັກ ຂອງສີນ ຫ້າຂໍ້ນີ້ແມ່ນຫລືບໍ່?

**ອ**: ແມ່ນ,ແມ່ນ,ແມ່ນແລ້ວ ທັງໝົດນີ້ ແມ່ນກົດຂອງຈັກກະວານ.

**ຖ**: ຂ້າພະເຈົ້າບໍ່ເຂົ້າໃຈ ເລື້ອງການປະພຶດຜິດໃນກາມ.

**ອ**: ມັນໝາຍຄວາມວ່າຖ້າເຈົ້າມີຜົວຢູ່ແລ້ວກໍ່ບໍ່ຄວນຄິດມີຜູ້ທີ່ສອງອີກ(ສຽງຫົວຈາກຜູ້ຟັງ)ງ່າຍທີ່ສຸດ.ເຮັດໃຫ້ຊີວິດຂອງທ່ານໃຫ້ລຽບງ່າຍຫຼາຍຍິ່ງຂຶ້ນຢ່າເຮັດໃຫ້ມີເລື້ອງຫຍຸ້ງຍາກແລະມີປາກມີສຽງກະທົບອາລົມຂອງທ່ານ.ແມ່ນແຫລະມັນຈະເປັນສາເຫດໃຫ້ມີການທໍາຮ້າຍຄວາມຮູ້ສຶກຂອງຜູ້ອື່ນ**ເຮົາຈະບໍ່ທໍາຮ້າຍໃຜທັງໝົດ ແມ່ນແຕ່ຈະເປັນແຕ່ພຽງຄວາມຮູ້ສຶກກໍ່ຕາມ,ນັ້ນແຫລະມັນເປັນແນວນັ້ນ.ເຮົາພະຍາຍາມຫຼີກລ້ຽງຄວາມຂັດແຍ້ງຫຼືກລ້ຽງຄວາມທຸກ,ທາງອາລົມ,ທາງຮ່າງກາຍແລະຈິດໃຈທີ່ຈະເກີດແກ່ທຸກຄົນ**.ໂດຍສະເພາະຢ່າງຍິ່ງກັບຄົນທີ່ເຮົາຮັກ ເທົ່ານັ້ນ ແຫລະ.

ຖ້າຫາກເຈົ້າເກີດມີຜູ້ຊາຍອື່ນອີກຄົນນຶ່ງໄປແລ້ວຖ້າເຈົ້າບອກລາວກໍ່ຈະເຈັບປວດຫຼາຍຍິ່ງຂຶ້ນ.ພະຍາຍາມຄອ່ຍໆແກ້ບັນຫາໄປຢ່າງງຽບໆຢ່າໄປສາລະພາບຜິດກັບເຂົາ ເພາະບາງຄັ້ງເວລາທີ່ຄົນທີ່ນອກໃຈຄູ່ຮັກຂອງຕົນເຂົາກັບມາບ້ານແລະມາສາລະພາບຜິດກັບພັນລະຍາຫຼືສາມີຂອງເຂົາ.ການເຮັດແບບນີ້ເປັນສິ່ງທີ່ສະຫຼາດທີ່ສຸດ ແລະ ຊື່ສັດຫຼາຍ ແຕ່ມັນບໍ່ມີຄວາມໝາຍຫຍັງ ບໍ່ດີອີກ ໂຕທໍາຄວາມຜິດ ແລ້ວຍັງນໍາຂີ້ເຫຍື້ອ ມາບ້ານໃຫ້ໝູ່ຊື່ນຊົມນໍາ?

ຖ້າເຂົາບໍ່ຮູ້ເລື້ອງເຂົາກໍ່ຈະບໍ່ຮູ້ສຶກເສັຍໃຈຫຍັງ,ການຮູ້ຄວາມຈິງທໍາໃຫ້ເກີດຄວາມເຈັບປວດຫົວໃຈ.ເພາະສະນັ້ນເຮົາຈື່ງພະຍາຍາມແກ້ບັນຫານັ້ນແລະຢ່າທໍາມັນອີກມັນກໍ່ເທົ່ານັ້ນ.ຢ່າໄປເວົ້າເລື້ອງນີ້ກັບຄູ່ຮັກຂອງເຮົາຈະດີກວ່າ ເພາະມັນ ຈະເປັນການທໍາລາຍຈິດໃຈຂອງເຂົາ ທໍາລາຍຈິດໃຈຄົນຮັກ ນັ້ນແຫລະ!

**ຖ**: ຂ້າພະເຈົ້າສັງເກດເຫັນວ່າມີມະຫາອາຈານຫລາຍທ່ານມີອາລົມຕະລົກເຮຮາມວ່ນຊື່ນກັບການບໍາເພັນມີຫຍັງກ່ຽວຂອ້ງກັບ ການຕະລົກມ່ວນຊື່ນນີ້ບໍ່?

ອ: ໂອ! ເຂົ້າໃຈແລ້ວ.ຕາມຂ້າພະເຈົ້າເດົາວ່າ ພວກເພິ່ນຄົງມີຄວາມສຸກ ແລະຜ່ອນຄາຍອາລົມ ຮູ້ສຶກສະບາຍໃຈໃນທຸກໆເລື້ອງສາມາດຫົວຂວັນຢູ່ກັບຕົວເອງ,ຫົວກັບຄົນອື່ນ,ຫົວຂວັນກັບເລື້ອງບ້າໆບໍ່ໆທີ່ເກີດຂື້ນໃນຊີວິດນີ້ຊື່ງຄົນຈຳນວນຫຼວງຫຼາຍຍັງຍຶດຕິດກັບມັນຢູ່ແລະຍັງເອົາຈິງເອົາຈັງຢ່າງພິລຶກ.ຫລັງຈາກເຮົາບຳເພັນໄປໃນໄລຍະນຶ່ງ ເຮົາກໍ່ຈະປ່ອຍວາງ ເຮົາຈະບໍ່ຮູ້ສຶກຈິງຈັງກັບ ຊີວິດອີກຕໍ່ໄປ ຖ້າເຮົາຈະຕາຍມື້ອື່ນ ເຮົາກໍ່ຕາຍໄດ້ ຖ້າເຮົາຍັງມີຊີວິດ ເຮົາກໍ່ຢູ່ຕໍ່ໄປໄດ້ ຖ້າເຮົາສູນເສັຍທຸກສິ່ງທຸກຢ່າງ ເຮົາກໍ່ສູນເສັຍໄປ ຖ້າເຮົາມີທຸກສິ່ງທຸກຢ່າງ ເຮົາກໍ່ມີໄປ, ແມ່ນແຫລະ! ເຮົາມີປັນຍາ ແລະຄວາມສາມາດພຽງພໍ ຫຼັງຈາກ ການຮູ້ແຈ້ງ ແລະເຮົາກໍ່ສາມາດດູແລ,ແລະຈັດການກັບໂຕເອງໄດ້ທຸກສະຖານນະການ.ດັ່ງນັ້ນ,ເຮົາຈື່ງບໍ່ຢ້ານຫຍັງເລີຍຄວາມຢ້ານແລະຄວາມວິຕົກກັງວົນຈະໝົດໄປ ເຮົາຈະຮູ້ສຶກຜ່ອນຄາຍ ເຮົາຈະບໍ່ຍຶດຕິດກັບໂລກນີ້ອີກ ບໍ່ວ່າເຮົາຈະໄດ້ ຫຼື ສູນເສັຍສິ່ງໃດໄປກໍ່ຕາມ ມັນຈະບໍ່ມີຄວາມໝາຍອີກ ຕໍ່ໄປ.ຖ້າເຮົາໄດ້ຮັບສິ່ງຂອງຕ່າງໆມາຢ່າງຫຼວງຫຼາຍ ມັນກໍ່ພຽງແຕ່ຈະເປັນຜົນປະໂຫຍດໃຫ້ແກ່ຄົນອື່ນໆຕໍ່ໄປເທົ່ານັ້ນ.ແລ້ວເຮົາກໍ່ຈະໃຫ້ໄປແລະມັນກໍ່ຈະເກີດຜົນປະໂຫຍດແກ່ຄົນທີ່ເຮົາຮັກ.ບໍ່ດັ່ງນັ້ນ, ເຮົາຈະບໍ່ຮູ້ພິຈາລະນາໂຕເອງ ຫຼືຄວາມສຳຄັນຂອງຊີວິດ ທີ່ຈະຕອ້ງດີ້ນຮົນຕໍ່ສູ້ທົນ ທຸກທໍລະມານເພື່ອຮັກສາມັນໄວ້.ຖ້າເຮົາຮັກສາມັນໄວ້ໄດ້ກໍ່ດີແຕ່ມັນບໍ່ໄດ້ໝາຍຄວາມວ່າເຮົາຈະຕ້ອງນັ່ງຢູ່ເທິງຕຽງຢູ່ເທິງຕຽງຕະປູແລ້ວນັ່ງສະມາທິໝົດມື້.ແຕ່ເຮົາຈະຕອ້ງເຮັດວຽກ ຍົກຕົວຢ່າງ: ຂ້າພະເຈົ້າກໍ່ຍັງເຮັດວຽກ,ຮື!ຂ້າພະເຈົ້າແຕ້ມຮູບເປັນນັກແຕ້ມເພື່ອຫາລຽ້ງຊີບ.ເພາະສະນັ້ນ,ຂ້າພະເຈົ້າຈື່ງບໍ່ຕ້ອງການເງິນບໍລິຈາກ,ຈາກໃຜ.ເງິນທີ່ຂ້າພະເຈົ້າຫາມາໄດ້ນັ້ນຍັງສາມາດຊ່ວຍຄົນອື່ນໄດ້ອີກ,ຂ້າພະເຈົ້າສາມາດຊວ່ຍຜູ້ລີ້ໄພ,ຜູ້ປະສົບໄພຕ່າງໆໄດ້ອີກເປັນຫຍັງເຮົາຈື່ງຈະບໍ່ຄວນເຮັດວຽກ?ເຮົານັ້ນມີພອນສະຫວັນແລະຄວາມສາມາດຫຼາຍຢ່າງຢູ່ແລ້ວແລະຊີວິດກໍ່ລຽບງ່າຍສຳລັບພວກເຮົາພາຍຫຼັງການຮູ້ແຈ້ງແລະບໍ່ມີຫຍັງທີ່ຈະເຮັດໃຫ້ເຮົາຮູ້ສຶກເປັນຫວ່ງອີກເຮົາຈະຜ່ອນຄາຍໄປຕາມທຳມະຊາດ.ນີ້ແຫລະ,ຈື່ງເຮັດໃຫ້ເຮົາມີອາລົມຕະລົກມ່ວນຊື່ນຊື່ງມັນເກີດຂື້ນມາເອງ.ຂ້າພະເຈົ້າຄິດວ່າມັນຄືຊິເປັນແບບນັ້ນແຫຼະ

ພວກທ່ານເຫັນຂ້າພະເຈົ້າມີອາລົມຕະລົກມ່ວນຊື່ນເບາະ?(ຜູ້ຟັງ:ແມ່ນແລ້ວ)(ສຽງຫົວແລະສຽງຕົບມືຂອງຜູ້ຟັງ)(ອາຈານຫົວຂື້ນ)ຄັນຊັ້ນບາງທີ່ຂ້າພະເຈົ້າຄວນຈະເປັນອາຈານແນວໃດແນວນຶ່ງນໍ້?ຫວັງວ່າຄົງຈະເປັນແນວນັ້ນຕາມຄວາມຕ້ອງການຂອງພວກທ່ານ,ເພື່ອຈະບໍ່ໄດ້ມານັ່ງຟັງຄົນທີ່ບໍ່ທັນຮູ້ແຈ້ງດົນເຖິງສອງຊົ່ວໂມງ,ເສັຍເວລາລ້າໆ.

ຖ: ມັນເປັນຄຳຖາມຊື່ງພວກເຮົາຜູ້ສະແຫວງຫາທຳມັກຈະຖາມກັນຢູ່ສະເໝີແລະເຮົາກໍ່ມີທິດສະດີແລະປະຫວັດເລື້ອງລາວຕ່າງໆແລະຂ້າພະເຈົ້າພຽງແຕ່ຢາກໄດ້ຍິນວ່າທ່ານຈະເວົ້າເຖິງເລື້ອງເຫຼົ່ານີ້ແນວໃດຄຳຖາມທຳອິດຄື"ພວກເຮົາແມ່ນໃຜ?ຂ້າພະເຈົ້າແມ່ນໃຜ?ຂ້າພະເຈົ້າເຂົ້າມາຢູ່ໃນສະພາບທຸກຍາກລຳບາກນີ້ໄດ້ແນວໃດ?ແລ້ວຂ້າພະເຈົ້າຈະຕ້ອງກັບບ້ານ?ທ່ານຮູ້ບໍ່ວ່າຂ້າພະເຈົ້າຈາກບ້ານມາໄດ້ແນວໃດ?ແລະເປັນຫຍັງເລື້ອງກັບບ້ານຈື່ງສຳຄັນ?ແລະທ່ານໄດ້ກ່າວເຖິງການກັບໄປສູ່ໂລກທີ່ຫ້າແລະຍັງບອກວ່າບໍ່ຈຳເປັນແລະບໍ່ສຳຄັນທີ່ຈະໄປໄກກວ່ານັ້ນ.ແຕ່ຖ້າມີອານາຈັກທີ່ສູງກວ່ານັ້ນແລ້ວຈຸດປະສົງມັນແມ່ນຫຍັງ?ມັນມີການພົວພັນກັບຕົວຂ້າພະເຈົ້າແນວໃດແລ້ວຖ້າວ່າຂ້າພະເຈົ້າບໍ່ຈຳເປັນຈະຕ້ອງກັບຄືນໄປບ້ອນນັ້ນ?

ອ: ມັນກຳລັງຈະເປັນເລື້ອງຕະລົກອີກບາດນີ້! (ຄົນຫົວແລະຕົບມື)ໂອເຄ! ກ່ຽວກັບຄຳຖາມທີ່ວ່າ: "ຂ້າພະເຈົ້າແມ່ນໃຜ?" ເຈົ້າສາມາດໄປຖາມອາຈານທາງເຊັ້ນ(Zen)ໄດ້ ຊື່ງມີຢູ່ທົ່ວໄປໃນລັດນີວຍ໋ອກ ເຈົ້າສາມາດເປີດຫາໃນປື້ມໂທລະສັບໜ້າເຫຼືອງແລ້ວເຈົ້າກໍ່ຈະພົບເອງ(ຄົນຫົວຂື້ນ)ຂ້າພະເຈົ້າບໍ່ແມ່ນຜູ້ຊ່ຽວ

ຊານໃນເລື້ອງນີ້.ເປັນຫຍັງເຈົ້າຈຶ່ງມາຢູ່ບອ່ນນີ້?ບາງທີອາດເປັນເພາະເຈົ້າຢາກມາຢູ່ບອ່ນນີ້ກໍ່ໄດ້ຮີ!ບໍ່ດັ່ງນັ້ນ ແລ້ວໃຜຈະກ້າມາບັງຄັບໃຫ້ພວກເຮົາມາຢູ່ນີ້ໄດ້ທັ້ງທີ່ເຮົາກໍ່ເປັນບຸດຂອງພຣະເຈົ້າອັນທີ່ເອີ້ນວ່າບຸດຂອງພຣະເຈົ້າ ມັນກໍ່ເໝືອນພຣະເຈົ້ານັ້ນແຫລະແມ່ນບໍ່?ເຈົ້າຊາຍມັນກໍ່ເໝືອນກັນກັບ ເຈົ້າຊີວິດນັ້ນແຫຼະແມ່ນບໍ່? ໃນບາງລັກສະນະເຈົ້າຊາຍກໍ່ຄ້າຍຄືກັບເຈົ້າຊີວິດບໍ່ຫລາຍກໍ່ນ້ອຍຫຼືກໍ່ຄືເຈົ້າຊີວິດໃນອານາຄົດນັ້ນເອງ.ເພາະສະນັ້ນ,ເວລາເຂົາຢາກໄປຢູ່ບອ່ນໃດ ເຂົາກໍ່ຈະໄປຢູ່ບ່ອນນັ້ນ ຮີ! ແນວໃດກໍ່ດີ,ພວກເຮົາແມ່ນມີອິດສະລະເສລີທີ່ຈະເລືອກຢູ່ສະຫວັນຫຼືບອ່ນໃດກໍ່ໄດ້ ເພື່ອປະສົບການຂອງເຮົາເອງ.ນັ້ນບາງທີ,ເຈົ້າອາດຈະເລື້ອກມາຢູ່ບ່ອນນີ້ຕັ້ງແຕ່ເລີ້ມຕົ້ນພຸ້ນແລ້ວໄດ້ຫຼາຍຍຸກຫຼາຍສະໄໝມາແລ້ວເພື່ອຮຽນຮູ້ສິ່ງຕ່າງໆ ແລະການປະຈົນໄພທີ່ໜ້າຢ້ານຫລາຍຂຶ້ນ.ມີບາງຄົນກໍ່ມັກຢາກມີ ປະສົບການທີ່ ຕື່ນເຕັ້ນແລະໜ້າຢ້ານ.

ຍົກຕົວຢ່າງ: ເຈົ້າຊາຍ ທ່ານກໍ່ຢູ່ໃນພະຣາຊວັງ ແຕ່ທ່ານອາດຕ້ອງການທ່ອງທ່ຽວໄປໃນປ່າກໍ່ໄດ້ເພາະວ່າພະອົງຢາກສຳຫຼວດຕາມທຳມະຊາດ ອາດຈະເປັນໃນທຳນອງນີ້ ມັນອາດຈະທຳໃຫ້ເຮົາເບື່ອກໍ່ໄດ້ເບື່ອຢູ່ສະຫວັນເພາະຢູ່ສະຫວັນນັ້ນທຸກສິ່ງທຸກຢ່າງແມ່ນມີພຽບພອ້ມແລະມີບໍລິການເຖິງໜ້າປະຕູຂອງພະຣາຊວັງເຮົາເລີຍ. ເພາະສະນັ້ນ,ເຮົາກໍ່ເລີຍຢາກເຮັດສິ່ງໃດສິ່ງນຶ່ງເພື່ອຕົວຂອງເຮົາເອງ.ກໍ່ເໝືອນກັນກັບຄອບຄົວຂອງເຈົ້າຊີວິດ. ບາງຄັ້ງ,ເພິ່ນກໍ່ຢາກຄົວກິນເອົາເອງແລະບໍ່ຢາກໃຫ້ມີຄົນຮັບໃຊ້ມາໃກ້ສິດຄອຍບໍລິການພວກທ່ານ.ແລ້ວກໍ່ເຮັດຊອສໝາກເລັ່ນຮວ່ດຕາມເສື້ອຜ້າແລະເຮັດນ້ຳມັນໂຮຍພື້ນເປີເປື້ອນໄປໝົດແຕ່ພວກເພິ່ນກໍ່ຊ້ຳມັກແບບນັ້ນ. ອາດຈະເບິ່ງບໍ່ຄືເຈົ້າຊາຍປານໃດ. ແຕ່ກໍ່ມັກແບບນັ້ນ.

ຍົກຕົວຢ່າງ,ຂ້າພະເຈົ້າມີຄົນຂັບລົດໃຫ້ບໍ່ວ່າຈະໄປໃສກໍ່ມີຄົນມັກເປັນຄົນຂັບລົດໃຫ້.ແຕ່ບາງຄັ້ງ,ຂ້າພະເຈົ້າກໍ່ຢາກຂັບເອງຂ້າພະເຈົ້າຂັບລົດສາມລໍ້ນ້ອຍໆຊຶ່ງບໍ່ມີຄວັນເປັນລົດໄຟຟ້າ,ແລ່ນໄດ້ສິບກິໂລແມດຕໍ່ຊົ່ວໂມງ.ຂ້າພະເຈົ້າມັກໄປອອ້ມແອ້ມນີ້ແບບນັ້ນແຫຼະ!ເພາະວ່າທຸກບ່ອນທີ່ຂ້າພະເຈົ້າໄປມັກມີຄົນສັງເກດເບິ່ງໄປໝົດ, ເພາະແບບນັ້ນແຫຼະ.ຂ້າພະເຈົ້າຈຶ່ງຢາກໄປບອ່ນທີ່ບໍ່ມີຄົນຮູ້ເພາະຂ້າພະເຈົ້າເປັນຄົນມັກອາຍຍົກເວັ້ນຕອນທີ່ເຮັດປາຖະກາຖາ.ເພາະວ່າມັນກາຍເປັນໜ້າທີ່ໄປແລ້ວຕັ້ງແຕ່ມີຄົນໄປຂຸດຂ້າພະເຈົ້າອອກມາຈົນມີຊື່ສຽງຮອດມື້ນີ້.ຂ້າພະເຈົ້າຫຼີກເລື້ອຍໆກະບໍ່ໄດ້ແຕ່ບາງຄັ້ງກໍ່ໄດ້ຫຼີກຄືກັນເອີ!ສອງ,ສາມເດືອນພຸ້ນແຫຼະ!ກໍ່ເໝືອນຜູ້ຍິງທີ່ຊັດເຊພະເນຈອນປົບໜີຜົວ ໄປຊັ້ນແຫຼະ,ເອີ!ມັນກໍ່ເປັນທາງເລືອກສ່ວນຕົວຂອງຂ້າພະເຈົ້າ.

ບາງທີ,ເຈົ້າອາດຈະເລືອກເອົາບອ່ນນີ້ຢູ່ໃນຊົ່ວໄລຍະນຶ່ງແລະບາງທີຕອນນີ້ອາດຈະເຖິງເວລາແລ້ວສຳລັບເຈົ້າທີ່ຢາກຈະກັບບ້ານເພາະວ່າເຈົ້າໄດ້ຮຽນຮູ້ກ່ຽວກັບໂລກນີ້ຫຼາຍພໍແລ້ວແລະເຈົ້າກໍ່ຮູ້ສຶກວ່າບໍ່ມີຫຍັງທີ່ຕອ້ງການຮຽນຮູ້ເພີ້ມອີກແລ້ວ,ແລະເຈົ້າກໍ່ຮູ້ສຶກເມື່ອຍລ້ານຳການເດີນທາງເຫຼົ່ານັ້ນ.ແລະຢາກພັກຜອ່ນ,ກັບໄປພັກຜອ່ນຢູ່ບ້ານກອ່ນແລ້ວພິຈາລະນາເບິ່ງວ່າເຈົ້າຢາກມາປະຈົນໄພໃໝ່ອີກຕື່ມຫຼືບໍ່?ສຳລັບການເດີນທາງປະຈົນໄພຂອງເຈົ້າຮອດນີ້ ກໍ່ມີເທົ່ານັ້ນແຫຼະທີ່ຂ້າພະເຈົ້າສາມາດເວົ້າໄດ້.

ເປັນຫຍັງເຈົ້າຈຶ່ງຕອ້ງກັບບ້ານ?ເປັນຫຍັງຈຶ່ງແມ່ນໂລກທີ່ຫ້າບໍ່ແມ່ນໂລກທີ່ຫົກ? ມັນຂຶ້ນຢູ່ກັບເຈົ້າເອງ. ຫຼັງຈາກໂລກທີ່ຫ້າແລ້ວເຈົ້າສາມາດໄປໄດ້ທຸກແຫ່ງທີ່ເຈົ້າຕ້ອງການ.ຢູ່ເບື້ອງບົນນັ້ນຍັງມີຫຼາຍລະດັບ. ແຕ່ມັນກໍ່ເປັນພຽງບ່ອນທີ່ສະບາຍແລະອິດສະລະຫຼາຍກ່ອາເທົ່ານັ້ນ.ຖ້າຂຶ້ນໄປສູງກວ່ານັ້ນມັນຈະເປັນພະລັງແຮງເກີນໄປອາດຈະເປັນແນວນັ້ນ.ເຈົ້າອາດຢູ່ໄດ້ຊົ່ວໄລຍະນຶ່ງ,ແຕ່ບາງທີເຈົ້າອາດບໍ່ຢາກພັກຢູ່ບ່ອນນັ້ນກໍ່ໄດ້.

ເຊັ່ນຕົວຢ່າງ:ເຮືອນຂອງເຈົ້າງາມທີ່ສຸດ,ແຕ່ມີບາງສ່ວນຂອງບ້ານເປັນຫອ້ງພັກຜອ່ນແຕ່ເຈົ້າກໍ່ບໍ່ຢາກຢູ່ຫອ້ງນັ້ນຕະຫຼອດໄປດອ໋ກ,ເຖິງແມ່ນວ່າມັນຈະຢູ່ຊັ້ນເທິງພຸ້ນກໍ່ຕາມ.ເໝືອນກັນກັບເຮົາຂຶ້ນໄປເທິງພູເຂົາຍິ່ງຂຶ້ນໄປສູງເທົ່າໃດກໍ່ຍິ່ງສວຍງາມຂຶ້ນເທົ່ານັ້ນແຕ່ມັນກໍ່ບໍ່ແມ່ນບ່ອນພັກຜ່ອນຫຼືໃນບໍລິເວນເຮືອນຂອງເຈົ້າມີເຄື່ອງປັ່ນໄຟຢູ່ບອ່ນໃດບອ່ນນຶ່ງຊຶ່ງມີສຽງດັງໜວກຫູທັງຮ້ອນແລະທັງອັນຕະລາຍ.ເພາະສະນັ້ນເຈົ້າຄົງບໍ່ຢາກຢູ່ບອ່ນນັ້ນ

ເຖິງແມ່ນວ່າມັນຈະມີປະໂຫຍດຕໍ່ເຮືອນຂອງເຈົ້າກໍ່ຕາມເຂົ້າໃຈບໍ່?ມັນກໍ່ມີພຽງເທົ່ານັ້ນແຫຼະ.ມີພຣະເຈົ້າຢູ່ຫລາຍລັກສະນະ.ຊຶ່ງເຮົາບໍ່ສາມາດຈິນຕະນາການໄດ້ເຮົາຄິດກັນສະເໝີວ່າຍິ່ງເຮົາຂຶ້ນໄປສູງເທົ່າໃດເຮົາກໍ່ຍິ່ງມີຄວາມຮັກຫຼາຍເທົ່ານັ້ນ.ແຕ່ວ່າມັນກໍ່ມີຄວາມຮັກທີ່ແຕກຕ່າງກັນ,ມີຄວາມຮັກທີ່ຮຸນແຮງ,ເຈົ້າຮູ້ບໍ່!ມີຄວາມຮັກທີ່ດູດດື່ມ,ຄວາມຮັກທີ່ເບົາໆ,ຄວາມຮັກທີ່ກາງໆ ເພາະສະນັ້ນ,ມັນກໍ່ຂຶ້ນຢູ່ກັບວ່າເຮົາຈະທົນໄດ້ຊໍ່າໃດ?ພຣະເຈົ້າຈະໃຫ້ຄວາມຮັກແກ່ເຮົາໃນລະດັບຕ່າງກັນ.ໃນລະດັບທີ່ຕ່າງກັນກໍ່ໄດ້ຮັບຄວາມຮັກຕ່າງກັນຈາກພຣະເຈົ້າ.ແຕ່ບາງທີມັນກໍ່ຮູນແຮງເກີນໄປ,ເຮົາຈະຮູ້ສຶກວ່າເຮົາຖືກຈີກເປັນເສັ້ນໆໄປ.

**ຖ**: ຂ້າພະເຈົ້າໄດ້ເຫັນການທຳລາຍຫລາຍສິ່ງຫລາຍຢ່າງຢູ່ຮອບຕົວຂອງຂ້າພະເຈົ້າໂດຍສະເພາະການທຳລາຍສິ່ງແວດລ້ອມ,ການໂຫດຮ້າຍທາລຸນຕໍ່ສັດຂ້າພະເຈົ້າຍັງສົງໄສຢູ່ວ່າທ່ານຮູ້ສຶກແນວໃດກ່ຽວກັບເລື້ອງເຫຼົ່ານີ້ແລະທ່ານຈະແນະນຳແນວໃດແກ່ຜູ້ທີ່ກຳລັງຈະປົດປ່ອຍຕົນເອງຈາກໂລກນີ້ດ້ວຍການບຳເພັນເພື່ອຊ່ວຍເຂົາຈັດການກັບສິ່ງຕ່າງໆຮອບຕົວເຂົາເຈົ້າແລະຈັດການກັບສິ່ງຕ່າງໆທີ່ເກີດຂຶ້ນຢູ່ຮອບຕົວເຂົາແລະທ່ານຄິດວ່າການຂຶ້ນໄປເໜືອໂລກເປັນການຮັບຮູ້ດີແລ້ວເບາະວ່າມີຫຍັງແດ່ທີ່ເຮົາຖິ້ມປະໄວ້ເບື້ອງຫລັງຫຼືວ່າທ່ານຮູ້ສຶກວ່າພວກເຮົາທີ່ຢູ່ໃນລະດັບຊັ້ນນີ້ມີໜ້າທີ່ຕ້ອງພະຍາຍາມຊ່ວຍບັນເທົາທຸກຕ່າງໆໃຫ້ເບົາບາງລົງແລະການເຮັດແບບນັ້ນຈະເກີດປະໂຫຍດຫຍັງ ຫຼືບໍ່?

**ອ**: ເກີດປະໂຫຍດແນ່ນອນ,ເກີດແນ່ນອນ,ຢ່າງນ້ອຍກໍ່ສຳລັບຕົວເຮົາສຳລັບຈິດສຳນຶກຂອງເຮົາທີ່ຈະໄດ້ຮູ້ວ່າເຮົາກຳລັງທຳບາງສິ່ງບາງຢ່າງລົງໄປແລ້ວແລະເຮົາກໍ່ໄດ້ພະຍາຍາມຢ່າງດີທີ່ສຸດແລ້ວເພື່ອຊ່ວຍບັນເທົາທຸກຄວາມເດືອດຮ້ອນຂອງເພື່ອນມະນຸດເຮົາ.ຂ້າພະເຈົ້າ,ກໍ່ໄດ້ທຳເໝືອນກັນບໍ່ວ່າພວກເຈົ້າຈະຂໍຮ້ອງແນວໃດ,ຂ້າພະເຈົ້າກໍ່ກຳລັງກະທຳ,ເຄີຍໄດ້ທຳມາແລ້ວ,ທຳຢູ່,ແລະຈະທຳຕໍ່ໄປ.

ເຮົາເຄີຍບອກທ່ານແລ້ວວ່າເຮົາເຄີຍບໍລິຈາກເງິນຊ່ວຍເຫລືອອົງການຕ່າງໆຫລາຍແຫ່ງບາງຄັ້ງກໍ່ສົ່ງໄປຊ່ວຍປະເທດຕ່າງໆ ເມື່ອເກີດໄພພິບັດຂ້າພະເຈົ້າບໍ່ຢາກເວົ້າໂອ້ອວດກ່ຽວກັບເລື້ອງພວກນີ້ກໍ່ຍ້ອນວ່າເຈົ້າຖາມເຊັ່ນ:ຕົວຢ່າງ,ພວກເຮົາໄດ້ສົ່ງໄປຊ່ວຍເຫຼືອປະເທດຟີລິບປິນເມື່ອປີກາຍນີ້ເພື່ອບັນເທົາທຸກຍ້ອນພູເຂົາໄຟປີນາຕູໂບລະເບີດ.ແລະຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມໃນອ່າວແລກແລະປະເທດຈີນ..ໆລໆ ແລະຕອນນີ້ເຮົາກໍ່ກຳລັງພະຍາຍາມຊ່ວຍເຫລືອຜູ້ລີ້ໄພຊາວອ່າວແລັກ.ເພື່ອແບ່ງເບົາພາລະຂອງອົງການສະຫະປະຊາຊາດຕອບສະໜອງ ໂລດຖ້າອົງການສະຫະປະຊາຊາດຫາກຕ້ອງການໃຫ້ຊ່ວຍແຕ່ພວກເຮົາກໍ່ພະຍາຍາມຢູ່. ພວກເຮົາຊ່ວຍເຫຼືອເຂົາເຈົ້າທາງດ້ານ ການເງິນແລະຍັງສາມາດອົບພະຍົບເຂົາເຈົ້າໄປຢູ່ບ່ອນໃໝ່ໄດ້. ຖ້າອົງການ ສະຫະປະຊາຊາດຍອມອະນຸມັດ ແຕ່ກໍ່ຕອ້ງດວ້ຍ ຄວາມກະລຸນາຂອງອົງການສະຫະປະຊາຊາດເທົ່ານັ້ນ.

ແມ່ນແລ້ວ,ພວກເຮົາເຮັດທຸກຢ່າງທີ່ພວກເຈົ້າຂໍມານອກຈາກນີ້,ເນື່ອງຈາກວ່າພວກເຮົາອາໄສຢູ່ບອ່ນນີ້ເຮົາກໍ່ຄວນທຳຄວາມສະອາດສະພາບແວດລ້ອມໃຫ້ຫລາຍເທົ່າທີ່ຈະທຳໄດ້.ເພາະສະນັ້ນ,ເຮົາຈຶ່ງຊ່ວຍເຫລືອເພື່ອບັນເທົາທຸກຄວາມເດືອດຮ້ອນພອ້ມກັບໃຫ້ການຊ່ວຍເຫລືອທາງມາດຕະຖານຄວາມປະພຶດດ້ານສິນລະທຳຂອງໂລກດວ້ຍ.ລວມທັງກາຍແລະຈິດໃຈແມ່ນແຫລະ!ເພາະວ່າບາງຄົນຕອ້ງການຄວາມຊ່ວຍເຫຼືອແຕ່ພຽງຮ່າງກາຍເທົ່ານັ້ນແລະບໍ່ຕ້ອງການທາງດ້ານຈິດໃຈຈາກຂ້າພະເຈົ້າ,ນັ້ນແຫລະທີ່ພວກເຮົາເຮັດຢູ່ທຸກມື້ນີ້.ດວ້ຍເຫດນັ້ນ,ຂ້າພະເຈົ້າຈຶ່ງ ຕອ້ງສ້າງລາຍຮັບ ເພາະຂ້າພະເຈົ້າບໍ່ຕ້ອງການໃຊ້ເງິນບໍລິຈາກຂອງຄົນອື່ນ.

ພວກນັກບວດແລະລູກສິດຂອງຂ້າພະເຈົ້າທຸກຄົນຕອ້ງເຮັດການເໝືອນກັນກັບທີ່ເຈົ້າເຮັດນັ້ນແຫຼະ.ແລະນອກຈາກນັ້ນ,ພວກເຮົາຍັງໃຫ້ການຊ່ວຍເຫຼືອທາງຈິດອີກ,ຊ່ວຍການບັນເທົາທຸກຂອງໂລກ,ຊ່ວຍການບັນ

ເທົ່າຄວາມເດືອດຮ້ອນຂອງໂລກ.ພວກເຮົາຈໍາຕ້ອງເຮັດສິ່ງນີ້.ບໍ່ໝາຍວ່າພວກເຮົາເອົາແຕ່ນັ່ງສະມາທິທັງວັນຫາຄວາມສຸກໃສ່ແຕ່ໂຕເອງແບບນັ້ນກໍ່ຄືພຸດທະທີ່ເຫັນແກ່ໂຕທີ່ສຸດ.ພວກເຮົາບໍ່ຕ້ອງການມີພຸດທະແບບນັ້ນບ່ອນນີ້.(ສຽງຫົວ)

**ຖ**: ທ່ານໄດ້ເວົ້າກ່ຽວກັບລະດັບຂອງພະລັງໄວ້ວ່າເມື່ອເຂົາຫາກຮູ້ວ່າພວກເຂົາມີພະລັງຊື່ງມາຈາກການຮັບຮູ້ຂອງເຂົານັ້ນ.ຕອນນີ້ຖ້າທ່ານຮູ້ເຖິງພະລັງນັ້ນແລ້ວເປັນຫຍັງ!ທ່ານບໍ່ຮູ້ວ່າທ່ານມີມັນແຕ່ທ່ານຮູ້ສຶກເຖິງມັນ.ທ່ານອາດຈະຮູ້ສຶກເໝືອນກັນວ່າທ່ານຈະໃຊ້ມັນຫລືບໍ່ໃຊ້ມັນແນວໃດ?ຖ້າທ່ານບໍ່ໃຊ້ມັນ,ແລ້ວທ່ານອົດທົນໄດ້ແນວໃດກ່ຽວກັບເຫດການທີ່ເກີດຂື້ນຢູ່ອ້ອມຂ້າງນີ້?ເຊັ່ນທ່ານເອງກໍ່ຮູ້ວ່າຂັ້ນຕອນຂອງສິ່ງຕ່າງໆໃນໂລກນີ້ດໍາເນີນໄປຢ່າງເຊື່ອງຊ້າທີ່ສຸດໃນເມື່ອທ່ານກໍ່ຮູ້ດີວ່າພຽງແຕ່ທ່ານສວດອະທິຖານຫລືເຮັດແນວໃດແນວນຶ່ງກໍ່ຈະທໍາໃຫ້ມັນດີຂື້ນຫລືແກ້ໄຂບັນຫາໄວຂື້ນກວ່າເກົ່າ.ສະພາບແບບນັ້ນຈະເກີດຫຍັງຂື້ນແລະບຸກຄົນຜູ້ນັ້ນຈະໃຊ້ພະລັງພອນແນວໃດເພື່ອທີ່ຈະເຮັດໃຫ້ສິ່ງຕ່າງໆນັ້ນອອກມາດີ?ທ່ານເຂົ້າໃຈຄວາມໝາຍຂອງຂ້າພະເຈົ້າ ເວົ້າບໍ່?

**ອ**: ຂ້າພະເຈົ້າເຂົ້າໃຈ,ຂ້າພະເຈົ້າເຂົ້າໃຈ,ເຈົ້າໝາຍຄວາມວ່າເມື່ອເຮົາມີພະລັງທີ່ຈະປ່ຽນແປງສິ່ງຕ່າງໆແລະໃນເມື່ອສິ່ງຕ່າງໆນັ້ນປ່ຽນແປງໄປແບບໃຊ້ລະແບບພິທີລີຕອງແລະເຊື່ອງຊ້າເຮົາສາມາດທົນມັນໄດ້ແນວໃດແມ່ນບໍ່?ຫລືທ່ານຊ່ວຍກະລຸນາອະທິຖານ ຫລືໃຊ້ພະລັງອະພິນິຫານ ຫລືເອົານິ້ມມືຈີ້ແລ້ວສັ່ງການເລີຍແມ່ນບໍ່?ບໍ່ໄດ້,ຂ້າພະເຈົ້າມີຄວາມອົດທົນພໍເພາະວ່າ,ເຮົາຕ້ອງເຮັດໄປຕາມລະດັບຂອງໂລກໜ່ອຍນີ້ເພື່ອບໍ່ໃຫ້ເກີດຄວາມໂກລາຫົນວຸ້ນວາຍເກີດຂື້ນແບບນັ້ນແຫລະ.

ເຊັ່ນຕົວຢ່າງ:ເດັກນ້ອຍເກີດໃໝ່ບໍ່ຮອ່ນຈະແລ່ນໄດ້ໂລດບໍ່ແມ່ນວ່າເຈົ້າຟ້າວຫຼືວ່າເຈົ້າຕ້ອງການຢາກແລ່ນແລ້ວຈະພາເດັກນ້ອຍແລ່ນແບບນັ້ນມັນຈະເປັນການທໍາຮ້າຍເດັກນ້ອຍແລະຈະເຮັດໃຫ້ເຂົາຕົກລົ້ມໄດ້.ເພາະສະນັ້ນ,ເຮົາຕ້ອງອົດທົນ.ເຖິງແມ່ນວ່າເຮົາຈະມີພະລັງພຽງພໍທີ່ສາມາດຈະແລ່ນໄດ້,ເຮົາຄ່ອຍໆຍ່າງໄປກັບເດັກນັ້ນແຫຼະ!ນີ້ແຫຼະເປັນເຫດຜົນທີ່ບາງຄັ້ງຂ້າພະເຈົ້າກໍ່ຮູ້ສຶກງຸດງິດແລະບໍ່ອົດທົນແຕ່ຂ້າພະເຈົ້າກໍ່ຕ້ອງສອນຕົວເອງໃຫ້ມີຄວາມອົດທົນ.ເພາະສະນັ້ນ,ຂ້າພະເຈົ້າຈຶ່ງຕ້ອງກົ້ມຫົວໄປຫາປະທານາທິບໍດີຄົນແລ້ວຄົນເລົ່າເພື່ອຊ່ວຍເຫຼືອຜູ້ລີ້ໄພທັ້ງໆທີ່ເຮົາຕ້ອງການຈະອອກເງິນຊ່ວຍເຫຼືອທັງໝົດເຮົາຍິນດີຈະໃຫ້ທຸກສິ່ງທຸກຢ່າງທີ່ເຮົາມີທຸກສິ່ງເລີຍແມ່ນແຕ່ເງິນຫຼາຍລ້ານໂດລາຫຼືພັນລ້ານດວ້ຍຊໍ້.ແຕ່ເຮົາກໍ່ຕ້ອງເຮັດທຸກຢ່າງຕາມຮີດຄອງຂອງມັນຈິ່ງໃຫ້ສິ່ງທີ່ເປັນຂອງພະລາຊາແກ່ພະລາຊາ.

ຂ້າພະເຈົ້າຈະບໍ່ໃຊ້ອໍານາດຫຼືຊີ້ນີ້ວມາທີ່ອົງການສະຫະປະຊາຊາດແລ້ວໃຊ້ພະລັງຂອງຂ້າພະເຈົ້າທໍາໃຫ້ສິ່ງຕ່າງໆເກີດໄວຍິ່ງຂື້ນ,ບໍ່,ບໍ່ແມ່ນ,ຖ້າເຮົາໃຊ້ພະລັງອິດທິປະຕິຫານເຮົາຈະທໍາໃຫ້ມັນເກີດຄວາມຫາຍະນະຂື້ນໃນໂລກໜ່ອຍນີ້ຕອ້ງໃຫ້ມັນເປັນໄປຕາມວິຖີທາງຂອງມັນ.ແຕ່ເຮົາກໍ່ສາມາດຍົກລະດັບຈິດສໍານຶກຂອງປວງຊົນໂດຍການບໍາບັດຮັກສາທາງຈິດ,ດວ້ຍອໍານາດແຫ່ງປັນຍາຂອງຈິດໃຫ້ເຂົາເຂົ້າໃຈ.ທັງຖ່າຍທອດຄວາມຮູ້ໃຫ້ເຂົາເຕັມໃຈທີ່ຈະທໍາມັນເຂົ້າໃຈບໍ່?ແລ້ວກໍ່ໃຫ້ການຮ່ວມໄມ້ຮ່ວມມືກັບເຂົາວິທີນີ້ແຫຼະດີທີ່ສຸດບໍ່ແມ່ນຈະໃຊ້ພະລັງອິດທິປະຕິຫານ.

ຂ້າພະເຈົ້າ,ບໍ່ມີເຈດຕະນາຈະນໍາໃຊ້ພະລັງອິດທິປະຕິຫານບໍ່ວ່າໃນກໍລະນີໃດໆໃນຊີວິດ.ແຕ່ສິ່ງມະຫັດສະຈັນຕ່າງໆກໍ່ເກີດຂື້ນກັບນັກບໍາເພັນສະເໝີ.ນັ້ນແມ່ນທໍາມະຊາດຂອງມັນທີ່ສຸດແຕ່ບໍ່ແມ່ນເຈດຕະນາເຮັດ,ເຈົ້າເຂົ້າໃຈບໍ່?ບໍ່ແມ່ນຈະໄປຊຸກຍູ້ເຮັດສິ່ງນັ້ນເດີ!ມັນບໍ່ດີ.ເດັກເກີດໃໝ່ຍັງບໍ່ທັນແລ່ນເປັນເທື່ອແມ່ນບໍ່?ເຈົ້າພໍໃຈໃນຄໍາຕອບຂອງຂ້ອຍບໍ່?

ຖ້າຄໍາຕອບໃດຫາກບໍ່ກົງກັບທີ່ເຈົ້າຕອ້ງການກະລຸນາ,ບອກໃຫ້ຮູ້ແດ່.ຂ້າພະເຈົ້າຈະໄດ້ອະທິບາຍເພີ້ມ

ເຕີມ.ແຕ່ຂ້າພະເຈົ້າເຊື່ອໝັ້ນວ່າທ່ານທຸກຄົນເປັນຄົນສະຫຼາດຫຼັກແຫຼມທີ່ສຸດເປັນບຸກຄົນທີ່ໄດ້ຮັບການຄັດເລືອກມາແລ້ວທຸກຄົນແລະເປັນຄົນລະດັບຫົວກະທິຂອງທຸກໆຊາດ.ເພາະສະນັ້ນ,ຂ້າພະເຈົ້າບໍ່ຈຳເປັນຈະອະທິບາຍຫລາຍ.

ຄວາມຈິງແລ້ວຂ້າພະເຈົ້າຄວນຈະບອກວ່າເປັນສິ່ງທີ່ດີທີ່ສຸດທີ່ພວກເຮົາມີອົງການສະຫະປະຊາຊາດ. ພວກເຮົາຊ່ວຍກັນກຳຈັດຂໍ້ຂັດແຍ້ງຕ່າງໆຂອງໂລກແລະສົງຄາມ.ເຖິງແມ່ນວ່າ,ພວກເຮົາບໍ່ສາມາດຈະໃຫ້ມັນລົດ ລົງໄປ ໄດ້ຢ່າງສົມບູນກໍ່ຕາມ.ແຕ່ຂ້າພະເຈົ້າໄດ້ອ່ານໜັງສືຂອງທ່ານ ກ່ຽວກັບອົງການສະຫະປະຊາຊາດທຸກໆຄົນກໍ່ເປັນອົງການສະຫະປະຊາຊາດແລະຂ້າພະເຈົ້າກໍ່ໄດ້ຕິດຕາມຜົນງານບາງຢ່າງຂອງອົງການນີ້.ຂ້າພະເຈົ້າຂໍຊົມເຊີຍຄວາມພະຍາຍາມແລະປະສິດທິພາບໃນການຊ່ວຍເຫຼືອຊະເລີຍສົງຄາມໃນຂະນະທີ່ຄົນອື່ນບໍ່ສາມາດຈະຊວ່ຍເຫຼືອໄດ້ພະລັງທັງໂລກບໍ່ສາມາດຊ່ວຍໄດ້ແຕ່ກຳມາທິທ່ານນິ່ງຂອງອົງການນີ້ສາມາດເຮັດໄດ້ສຳເລັດ.ແລະຍັງມີເລື່ອງ ອື່ນໆອີກກ່ຽວກັບການຊວ່ຍບັນເທົາໄພພິບັດບັນຫາເລື້ອງຜູ້ລີ້ໄພ.

ພວກທ່ານມີຜູ້ລີ້ໄພທີ່ຕ້ອງຮັບຜິດຊອບປະມານສິບສອງລ້ານຄົນຕາມທີ່ຂ້າພະເຈົ້າໄດ້ຍິນມາແມ່ນບໍ່? ວຽກແມ່ນຫຼາຍແທ້ໆແລະຍັງມີເລື້ອງສົງຄາມແລະເລື້ອງອື່ນໆອີກ.ເພາະສະນັ້ນ,ຈຶ່ງເປັນການດີທີ່ເຮົາມີອົງການສະຫະປະຊາຊາດ ແມ່ນບໍ່?ດີທີ່ສຸດ.

**ຖ**: ຂໍຂອບໃຈທ່ານອາຈານຊີງໄຫ່ທີ່ຊວ່ຍແບ່ງປັນແລະເພື່ອແຜ່ປັນຍາຂອງທ່ານໃຫ້ແກ່ພວກເຮົາຂ້າພະເຈົ້າມີຄຳຖາມຢູ່ຂໍ້ນຶ່ງເປັນເລື້ອງກ່ຽວກັບການເພີ້ມຈຳນວນປະຊາກອນຂອງໂລກແລະບັນຫາທີ່ຕາມມາແມ່ນການທຳລາຍສິ່ງແວດລອ້ມແລະການຮຽກຮອ້ງຕອ້ງການຂອງອາຫານຈຳນວນຫຼາຍຂື້ນ.ທ່ານພໍຈະໃຫ້ຄຳເຫັນກ່ຽວກັບບັນຫາເລື້ອງຈຳນວນປະຊາກອນຂອງໂລກເພີ້ມຂື້ນນີ້ໄດ້ບໍ່?ເລື້ອງນີ້ເປັນກຳຂອງໂລກນີ້ບໍ່?ຫຼືວ່າສິ່ງນີ້ມັນຈະເປັນການສ້າງກຳບາງຢ່າງໃນອະນາຄົດ?

**ອ**: ການມີຜູ້ຄົນເພີ້ມຂື້ນສຳລັບໂລກນີ້ກໍ່ດີເຊັ່ນດຽວກັນ.ເປັນຫຍັງຊິບໍ່ດີລະ?ຜູ້ຄົນແໜ້ນໜ້າສຽງນວງມັນຫຼາຍຂື້ນສະນຸກດີ.ບໍ່ແມ່ນເບາະ?ທີ່ຈິງແລ້ວ,ມັນບໍ່ແມ່ນເຮົາມີປະຊາກອນຫຼາຍເກີນໄປດອກ!ພຽງແຕ່ເຮົາບໍ່ທັນກະຈາຍອອກໄປໃຫ້ທົ່ວຕ່າງຫາກ.ຜູ້ຄົນພາກັນແອອັດຢູ່ແຕ່ບາງພື້ນທີ່ຂອງໂລກຕ່າງຫາກແລະບໍ່ຍອມຍ້າຍໄປບໍລິເວນອື່ນ.ເທົ່ານັ້ນແຫລະ!ເຮົາຍັງມີພື້ນທີ່ປ່າດົງທີ່ມີບໍລິເວນກວ້າງໃຫ່ຍຂອງໂລກອີກຫຼາຍແຫ່ງທີ່ຍັງບໍ່ທັນໄດ້ໃຊ້. ມີທັງເກາະດອນທີ່ຍັງບໍ່ຖືກແຕະຕ້ອງ,ຈຳນວນຫຼາຍ,ແລະທົ່ງຮາບສູງທີ່ມີປ່າໄມ້ທີ່ສວຍງາມ.ແຕ່ບໍ່ມີໃຜຢູ່.ຜູ້ຄົນມັກພາກັນມາແອອັດຢູ່ແຕ່ນີວຢອກນີ້.ຍົກຕົວຢ່າງ.(ຄົນພາກັນຫົວ)ເພາະວ່າຢູ່ນີ້ມັນມ່ວນກວ່າບ້ອນອື່ນແມ່ນແລ້ວ,ເພາະວ່າຖ້າຫາກມີລັດຖະບານໃດສາມາດສ້າງງານ,ມີອຸດສາຫະກຳມີວຽກເຮັດຫຼາຍຕຳແໜ່ງຢູ່ຫຼາຍບ້ອນຄົນກໍ່ຈະເດີນທາງໄປບ່ອນນັ້ນ.ສາເຫດ,ທີ່ພວກເຂົາມາແອອັດກັນຢູ່ບາງແຫ່ງກໍ່ເພາະບອ່ນນັ້ນມັນຫາງານໄດ້ງ່າຍກວ່າຫຼືມີຄວາມປອດໄພຫຼາຍກວ່າຖ້າບ່ອນອື່ນໆຫາກມີຄວາມປອດໄພ,ໝັ້ນຄົງ,ແລະມີວຽກເຮັດຄົນກໍ່ຈະພາກັນໄປບອ່ນນັ້ນດວ້ຍເໝືອນກັນ.ພວກເຂົາເຈົ້າຈະສະແຫວງຫາຄວາມໝັ້ນຄົງ,ຄວາມມີຊີວິດຊີວາຊຶ່ງມັນກໍ່ເປັນເລື້ອງທຳມະດາທີ່ສຸດ.

ເພາະສະນັ້ນ,ເຮົາບໍ່ຕອ້ງຢ້ານເລື້ອງບັນຫາປະຊາກອນລົ້ນໂລກແຕ່ເຮົາຄວນຈັດການກັບສິ່ງຕ່າງໆເຫຼົ່ານີ້ໃຫ້ດີກວ່ານີ້ຈັດການໃຫ້ຄົນໃນໂລກໄດ້ຮັບປະໂຫຍດຫຼາຍຂື້ນຈາກການມີໂອກາດໄດ້ເຮັດການ,ມີເຮືອນຢູ່, ແລະມີຄວາມໝັ້ນຄົງປອດໄພຖ້າເຮັດໄດ້ແບບນີ້ຢູ່ບອ່ນໃດມັນກໍ່ເໝືອນກັນ.ເຮົາຈະບໍ່ມີວັນເກີດພາວະປະຊາກອນລົ້ນໂລກເລີຍ.

ແລະສຳລັບຄຳຖາມຂອງເຈົ້າເລື້ອງອາຫານນັ້ນເຈົ້າຄວນຈະຮູ້ດີກວ່າ. ເພາະຢູ່ໃນອາເມຣິກາເຮົາມີຂໍ້ມູນຫຼວງຫຼາຍກ່ຽວກັບການອະນຸລັກໂລກຂອງເຮົາ. ການກິນອາຫານມັງສະວິລັດເປັນວິທີທີ່ດີທີ່ສຸດວິທີນຶ່ງທີ່ຈະອະນຸລັກຊັບພະຍາກອນຂອງໂລກເພື່ອຈະສາມາດລ້ຽງດູປະຊາກອນຂອງໂລກທັງໝົດນີ້ໄດ້. ເພາະວ່າເຮົາເຮັດໃຫ້ສິ້ນເປືອງແບບເປົ່າປະໂຫຍດດ້ານອາຫານຈຳພວກພືດຜັກ, ພະລັງງານ, ໄຟຟ້າ, ຢາຮັກສາໂລກເພື່ອນຳໄປໃຊ້ໃນການລ້ຽງສັດ. ໃນຂະນະທີ່ອາຫານຈຳນວນນີ້ສາມາດລ້ຽງຄົນອື່ນໆໄດ້ໂດຍກົງ. ແລະຫຼາຍປະເທດໃນໂລກທີ່ສາມກໍ່ໄດ້ນຳເອົາປະເພດພືດຜັກທີ່ອຸດົມໄປດ້ວຍໂປຣຕີນມາຂາຍກັນໃນລາຄາທີ່ຖືກໆ ແຕ່ການເຮັດແບບນັ້ນມັນກໍ່ບໍ່ໄດ້ຊ່ວຍປະຊາກອນຂອງຊາດອື່ນໆໄດ້. ຖ້າເຮົາຫາກກະຈາຍອາຫານອອກໄປໄດ້ທົ່ວເຖິງແລະກິນມັງສະວິລັດກັນກໍ່ຈະສາມາດຊ່ວຍໃນເລື້ອງນີ້ໄດ້ບໍ່ສະເພາະແຕ່ຕົວຂອງພວກເຮົາຫຼືສະເພາະສັດຕ່າງໆ ເທົ່ານັ້ນແຕ່ສາມາດຊ່ວຍໄດ້ທັງໂລກເລີຍ. ມີການວິໄຈຢູ່ຢ່າງນຶ່ງ... ເປັນໜັງສືນິດຕະຍະສານທີ່ໄດ້ຂຽນໄວ້ວ່າຖ້າເຮົາພາກັນກິນມັງສະວິລັດໂລກຂອງເຮົາກໍ່ບໍ່ຫິວໂຫຍຕໍ່ໄປອີກ. ແລະເຮົາກໍ່ຕອ້ງໄດ້ຈັດຕັ້ງ. ຂ້າພະເຈົ້າຮູ້ຄົນບາງຄົນຊື່ງລາວສາມາດເອົາກົກເຂົ້າມາເຮັດເປັນອາຫານທີ່ມີຄຸນຄ່າທາງໂພຊະນາການແລະເອົາມາເຮັດນົມກໍ່ໄດ້ອີກ. ເທື່ອແລ້ວພວກເຮົາໄດ້ສົນທະນາກັນກ່ຽວກັບເລື້ອງນີ້.

ລາວໄດ້ເວົ້າວ່າ, ລາວໄດ້ໃຊ້ເງີນພຽງແຕ່ສາມແສນໂດລາກໍ່ສາມາດລ້ຽງຄົນໄດ້ເຖີງຫົກແສນຄົນໃນປະເທດສີລັງກາໄດ້ແຈກຢາຍໃຫ້ແກ່ພວກຄົນຍາກຄົນຈົນ, ຄົນຂາດອາຫານ, ແລະແມ່ລູກອ່ອນໃນທຳນອງນັ້ນແຫຼະ! ມັນເປັນເລື້ອງທີ່ໜ້າຊື່ນຊົມທີ່ສຸດ. ເພາະສິ່ງທີ່ພວກເຮົາພາກັນເຮັດຢູ່ຕາມສວ່ນຕ່າງໆ ຂອງໂລກໃນປັດຈຸບັນນີ້ນັ້ນແມ່ນເຮົາກຳລັງໃຊ້ຊັບພະຍາກອນທຳມະຊາດໄປໂດຍບໍ່ມີປະໂຫຍດ. ມັນບໍ່ແມ່ນວ່າເຮົາມີບໍ່ພໍ. ພຣະເຈົ້າຄົງບໍ່ພາເຮົາມາບອ່ນນີ້ໃຫ້ອຶດຫິວດອ່ກ! ຕາມຄວາມເປັນຈິງແລ້ວ, ຕັ້ງແມ່ນກະໂຕເຮົາເອງຕ່າງຫາກທີ່ເຮັດໃຫ້ມີການອຶດຢາກເກີດຂຶ້ນ. ເຮົາຄວນຄິດຄືນອີກ.. ຄິດແລ້ວຄິດອີກ, ຈັດຕັ້ງຄືນໃໝ່, ແລະສິ່ງນີ້ກໍ່ຈຳເປັນຕອ້ງມີການອະນຸມັດແລະເຫັນດີຈາກລັດຖະບານຂອງປະເທດຕ່າງໆຮ່ວມກັນ. ພວກເພີ່ນຕອ້ງອະນຸມັດໃຫ້ແກ່ພວກເຮົາດວ້ຍຄວາມຊື່ສັດແທ້ແລະດວ້ຍນ້ຳໃສໃຈຈິງ, ດວ້ຍກຽດສັກສີແທ້, ແລະມີຄວາມຕັ້ງໃຈທີ່ຈະຮັບໃຊ້ປະຊາຊົນແທ້ ແທນທີ່ຈະເຮັດເພື່ອຕົນເອງ. ຖ້າພວກເຮົາຫາກໄດ້ຮັບການອະນຸມັດຈາກລັດຖະບານທຸກປະເທດເຮົາກໍ່ຈະບໍ່ມີບັນຫາແທ້, ບໍ່ມີບັນຫາ.

ເຮົາຈຳຕອ້ງມີຜູ້ນຳທີ່ດີ, ມີລະບົບການຈັດຕັ້ງເສດຖະກິດທີ່ດີ, ມີຄວາມສາມາດໃນການປົກຄອງ, ມີລັດຖະບານທີ່ຊື່ສັດ. ແຕ່ມັນຈະເກີດສິ່ງນີ້ໄດ້ຢ່າງໄວວານັ້ນ, ກໍ່ຕອ້ງມີຄົນຫລາຍຄົນຫລືຄົນສວ່ນໃຫຍ່ມີຄຸນນະທຳ, ມີສິນທຳປະຈຳໃຈ, ມີລະບຽບວິໄນ, ຮູ້ຈັກການຮັກສາສິນ, ຫຼັງຈາກນັ້ນ, ເຂົາກໍ່ຈະຮູ້ຈັກເປັນຄົນຊື່ສັດຈິດໃຈປອດໃສຂາວສະອາດ. ແລ້ວເຂົາກໍ່ຈະຮູ້ນຳໃຊ້ສະຕິປັນຍາຂອງເຂົາ. ແລະກໍ່ສາມາດຮູ້ຈັກຄິດທຳສິ່ງຕ່າງໆ ແລະຈັດຕັ້ງຊີວິດຂອງພວກເຮົາຄືນໃໝ່ໄດ້ອີກ.

**ຖ**: ເລື້ອງນີ້ເບິ່ງແລ້ວຄົງຈະເປັນເລື້ອງຍາກທີ່ສຸດເພາະຕາມທີ່ເຫັນມາແລ້ວສ່ວນຫຼາຍ. ເທົ່າທີ່ຂ້າພະເຈົ້າເຂົ້າໃຈ, ສະພາບສິ່ງແວດລ້ອມຖືກທຳລາຍນັ້ນແມ່ນຍ້ອນ, ຄວາມຮຽກຮ້ອງຕອ້ງການທີ່ຢູ່ອາໄສຂອງປະຊາກອນເພີ້ມຂຶ້ນເພື່ອເປັນບ່ອນພັກພາອາໄສ, ປຸກສ້າງບ້ານເຮືອນ, ຕອ້ງການມີວິຖີຊີວິດເໝືອນກັນກັບພວກເຮົາໃນສັດຕະວັດທີ່ຊາວຕອ້ງການຢາກມີ.

ຕົວຢ່າງ: ປ່າດົງດິບໃນປະເທດເບຣຊີນການທຳລາຍສະພາບສິ່ງແວດລ້ອມຢູ່ເຂດນັ້ນແມ່ນມີການທຳລາຍປ່າທຶບ, ປ່າເຂດຝົນ, ມີການຕັດຕົ້ນໄມ້ຈຳນວນຫລວງຫລາຍຊື່ງມີຜົນທຳໃຫ້ເກີດນ້ຳຖວ້ມຕາມມາ. ສິ່ງເຫຼົ່ານີ້ບໍ່ໄດ້ກ່ຽວຂອ້ງກັບບັນຫາປະຊາກອນລົ້ນໂລກແດ່ເບາະ?

**ອ**: ແມ່ນແລ້ວ,ທຸກສິ່ງທຸກຢ່າງມັນມີການພົວພັນຊຶ່ງກັນແລະກັນໃນໂລກນີ້.ແຕ່ແນ່ນອນ,ການແກ້ໄຂບັນຫາກໍ່ຄືຕອ້ງແກ້ທີ່ຮາກເຫງົ້າຂອງບັນຫາເທົ່ານັ້ນບໍ່ແມ່ນຢູ່ບ່ອນປາຍເຫດຂອງມັນ.ແລະບ່ອນຮາກເຫງົ້າຂອງມັນກໍ່ຄືຄວາມໝັ້ນຄົງທາງດ້ານຈິດໃຈເຂົ້າໃຈບໍ່?(ຄົນຕົບມື).

ດັ່ງນັ້ນ,ສິ່ງສຳຄັນທີ່ພວກເຮົາຕອ້ງເຮັດກໍ່ຄືພະຍາຍາມເຜີຍແຜ່ຂ່າວສານທາງດ້ານການບຳເພັນຈິດຕາມທີ່ເຮົາຮູ້ແລະການຮັກສາວິໄນຂອງສີນນີ້ແຫລະຄືສິ່ງທີ່ຄົນທົ່ວໄປບໍ່ມີ.ເຖິງແມ່ນວ່າເຈົ້າຈະນັ່ງສະມາທິໂດຍນຳໃຊ້ເຄື່ອງມືຄືສຽບປັ໊ກໄຟຟ້າແລ້ວເຈົ້າກໍ່ເຫັນແສງແລະໄດ້ຍິນສຽງຊຶ່ງທຳໃຫ້ເຈົ້າເຂົ້າສະມາທິໄດ້ແຕ່ຖ້າເຈົ້າບໍ່ມີວິໄນຂອງ ສີນລະທຳແລ້ວ ບາງຄັ້ງເຈົ້າກໍ່ຈະໃຊ້ພະລັງໄປທາງທີ່ຜິດ ເຈົ້າຈະບໍ່ສາມາດຄວບຄຸມມັນໄດ້.

ເພາະສະນັ້ນ,ຢູ່ໃນກຸ່ມຂອງພວກເຮົາພວກເຮົາຈິ່ງສອນໃຫ້ຮັກສາສີນກ່ອນ.ສີນເປັນເຄື່ອງສຳຄັນເຮົາຕ້ອງຮູ້ວ່າ ເຮົາຈະໄປທາງໃດເສັຍກ່ອນແລະຄຸ້ມຄອງພະລັງຂອງເຮົາພະລັງທີ່ຂາດຄວາມຮັກ,ຄວາມເມດຕາ,ຂາດຄວາມເຂົ້າໃຈຄຸນຄ່າຂອງສີນລະທຳທີ່ຖືກຕອ້ງນັ້ນມັນກໍ່ຈະໃຊ້ບໍ່ໄດ້ແລະບໍ່ມີປະໂຫຽດຫຍັງເລີຍມັນຈະກາຍເປັນໄສຍະສາດດຳແລ້ວເອົາໄປໃຊ້ກັນຢ່າງຜິດໆນີ້ແຫລະຄືບ່ອນເກີດຂອງໄສຍະສາດເວດມົນຄາຖາທີ່ທຳຮ້າຍຄົນ.

ເພາະສະນັ້ນ,ການໄດ້ຮັບການຮູ້ແຈ້ງນັ້ນມັນເປັນເລື້ອງງ່າຍ.ແຕ່ການຮັກສາມັນໄວ້ໃຫ້ໝັ້ນຄົງນັ້ນເປັນເລື້ອງຍາກ.ໃນກຸ່ມຂອງພວກເຮົາຖ້າເຈົ້າບໍ່ຮັກສາລະບຽບວິໄນບໍ່ມີສີນທຳປະຈຳໃຈຢ່າງແທ້ຈິງອາຈານກໍ່ຈະເອົາພະລັງບາງສ່ວນ ອອກໄປຈາກຕົວເຈົ້າເພື່ອບໍ່ໃຫ້ນຳໄປໃຊ້ຢ່າງຜິດໆຊຶ່ງຈະທຳໃຫ້ເກີດສິ່ງທີ່ບໍ່ດີຂື້ນໃນສັງຄົມ.ນັ້ນແຫຼະຄືຄວາມແຕກຕ່າງຊຶ່ງອາຈານສາມາດຄວບຄຸມໄດ້ໂດຍພະລັງຂອງອາຈານ,ພະລັງຂອງອາຈານນັ້ນແຫຼະ! ໂອເຄ?

ເອີ!ຂ້າພະເຈົ້າມີຄວາມຮູ້ສຶກດີໃຈທີ່ສຸດທີ່ມີຄຳຖາມດີໆຈາກພວກທ່ານຢ່າງຫລວງຫລາຍເປັນຄຳຖາມທີ່ສະຫລາດ. ສະຫລາດຫລາຍ.

ການທີ່ຜູ້ຄົນເຫຼົ່ານັ້ນເຮັດສິ່ງຕ່າງໆນັ້ນກໍ່ຍອ້ນເຂົາເຈົ້າຍັງບໍ່ທັນສະຫຼາດພໍເອີ!ຄືເຊັ່ນທຳລາຍສິ່ງແວດລ້ອມດັ່ງທີ່ເຈົ້າໄດ້ເວົ້າມາຫວ່າງນີ່ງນີ້ນັ້ນແຫຼະ!ຫຼືມີການກະທຳບາງຢ່າງນັ້ນກໍ່ຍ້ອນເຂົາເຈົ້າຂາດປັນຍາ.ດັ່ງນັ້ນ,ຮາກເຫງົ້າແທ້ໆມັນກໍ່ຢູ່ທີ່ປັນຍາ,ຢູ່ທີ່ການບຳເພັນທາງຈິດ.ຈິ່ງຮູ້ແຈ້ງເຖີດ.

**ຂໍຂອບໃຈນຳທຸກໆທ່ານທີ່ເສັຍສະລະມາຮ່ວມ. ຂອບໃຈ**

" ການສິດຫຼືຖ່າຍທອດທຳມະຈະເອີ້ນແທ້ກໍ່ຄືບໍ່ແມ່ນການສິດຫຼືຖ່າຍທອດ....ພຽງແຕ່ທ່ານມາບ່ອນນີ້ແລ້ວໃຫ້ຂ້າພະເຈົ້າຊ່ວຍທ່ານໃຫ້ຮູ້ຈັກຊ່ວຍໂຕເອງ.ຂ້າພະເຈົ້າບໍ່ໄດ້ມາບ່ອນນີ້ເພື່ອທຳໃຫ້ທ່ານເປັນລູກສິດ...ຂ້າພະເຈົ້າມາເພື່ອຊ່ວຍທ່ານໃຫ້ກາຍເປັນອາຈານ "

" ທ່ານ ອານຸດຕຣາຈານ ຊີງໄຫ່ "

ທຸກໆທ່ານຮູ້ວິທີການນັ່ງສະມາທິກັນແລ້ວ,ແຕ່ວ່າ ພວກທ່ານນັ່ງສະມາທິກັນ ຫາແຕ່ສິ່ງທີ່ຜິດ.ບາງຄົນນັ່ງສະມາທິຫາແຕ່ຜູ້ຍິງສວຍໆງາມໆ,ບາງຄົນນັ່ງສະມາທິ ຫາແຕ່ເງິນໆທອງໆ,ບາງຄົນກໍ່ນັ່ງເຖິງເລື້ອງທຸລະກິດ ການນັ່ງສະມາທິ ທີ່ແທ້ຈິງກໍ່ຄື ການນັ່ງທີ່ຢຸດນິ້ງ ບໍ່ຄິດຫາສິ່ງອື່ນ ຄິດຫາພຽງແຕ່ສິ່ງດຽວ. ອັນນັ້ນຈື່ງຄ່ອຍແມ່ນສະມາທິແທ້.ເວລານັ່ງສະມາທິ,ຂ້າພະເຈົ້າເປັ່ງກະແສຈິດໃສ່ແຕ່ພະລັງພາຍໃນ, ເພື່ອໃຫ້ຄວາມຮັກ,ຄວາມເມດຕາ, ແລະຄວາມເມດຕາປານີອັນສູງສົ່ງ ຂອງພຣະຜູ້ເປັນເຈົ້າ.

" ທ່ານ ອານຸດຕຣາຈານ ຊີງໄຫ່ "

" ການສິດເອົາວິຊາທຳມະ ໝາຍຄວາມວ່າ ການເລີ້ມຕົ້ນຊີວິດໃໝ່ ເທິງເສັ້ນທາງຂອງກິດລະບຽບໃໝ່. ມັນ ໝາຍຄວາມວ່າ ທ່ານອາຈານໄດ້ຕົກລົງຮັບເອົາທ່ານ ໃຫ້ເຂົ້າມາເປັນນື່ງຊີວິດ ໃນວົງຈອນຂອງເຫຼົ່ານັກບຸນທັງຫຼາຍ.ນັ້ນ,ກໍ່ໝາຍຄວາມວ່າທ່ານບໍ່ແມ່ນປຸຖຸຊົນທຳມະດາອີກຕໍ່ໄປ,ທ່ານໄດ້ຖືກຍົກລະດັບເໝືອນກັນກັບນັກບວດແລ້ວ.ໃນສະໄໝກອ່ນເຂົາຮ້ອງກັນວ່າ " ການລ້າງບາບ " ຫຼື ການຖືອາຈານເປັນທີ່ເພິ່ງ.

" ທ່ານ ອານຸດຕຣາຈານ ຊີງໄຫ່ "

# ການສິດວິຊາ
# ທຳມະວິຖີແບບ ກວນຢິນ

ທ່ານອາຈານຊີງໄຫ່ຈະສິດວິຊາໃຫ້ແກ່ບຸກຄົນຜູ້ຊື່ງມີຄວາມຈິງໃຈທີ່ປາຖະໜາຢາກຮູ້ຈັກສັດຈະທຳ (ຄວາມຈິງ)ເຂົ້າສູ່ທຳມະແບບກວນຢິນ.ຕາມພາສາຈີນ"ກວນຢິນ"ໝາຍຄວາມວ່າການເປັ່ງແຮງຊັ່ນສະເທືອນຂອງສຽງ.ແບບດັ່ງກ່າວແມ່ນລວມທັງການນັ່ງສະມາທິເປັ່ງທັງແສງແລະສຽງພາຍໃນ.ປະສົບການພາຍໃນເຫຼົ່ານີ້ໄດ້ຮັບການບັນຍາຍໄວ້ຫລາຍຄັ້ງຫຼາຍຫົນຕິດຕໍ່ກັນມາໃນໜັງສືທຳມະຂອງສາດສະໜາຕ່າງໆຂອງໂລກຕັ້ງແຕ່ສະໄໝບູຮານມາແລ້ວ.

ຕົວຢ່າງເຊັ່ນ: **ໃນຄຳພີໄບໂບຂອງສາດສະໜາຄຣິສກໍ່ມີກ່າວໄວ້ວ່າ"ໃນຄັ້ງປະຖົມມະເລີກກໍ່ແມ່ນສຽງຂອງຄຳເວົ້າ,ແລະສຽງຂອງຄຳເວົ້າກໍ່ແມ່ນຢູ່ກັບພຣະເຈົ້າ,ແລະສຽງຂອງຄຳເວົ້າກໍ່ແມ່ນພຣະເຈົ້າ"**(ຈອນ1:1)ສຽງຂອງຄຳເວົ້ານີ້ກໍ່ແມ່ນສຽງພາຍໃນແລະມັນຍັງຖືກເອີ້ນວ່າLogos,Shabd,ເຕົ່າ,ກະແສສຽງ,ນາມ,ຫລືດົນຕີແຫ່ງແດນສະຫວັນ.

ທ່ານອາຈານຊີງໄຫ່ໄດ້ກ່າວໄວ້ວ່າ,"**ມັນສັ່ນສະເທືອນຢູ່ພາຍໃນຊີວິດທັງມວນແລະຮັກສາຄ້ຳຈຸນທັງໝົດຈັກກະວານ.ສຽງດົນຕີພາຍໃນນີ້ສາມາດຮັກສາບາດແຜທັງໝົດທຸກຢ່າງ,ສະໜອງຄວາມປາດຖະໜາທຸກຢ່າງ,ແລະດັບຄວາມກະຫາຍທັງປວງທາງໂລກ.ມັນແມ່ນພະລັງທັງປວງແລະຄວາມຮັກທັງປວງ.ເພາະວ່າເຮົາເອງກໍ່ແມ່ນຖືກສ້າງຂື້ນມາຈາກສຽງອັນນີ້,ການຕິດຕໍ່ກັບມັນຈື່ງນຳຄວາມສະງົບແລະຄວາມປິຕິຍິນດີມາສູ່ຫົວໃຈຂອງເຮົາ.ຫຼັງຈາກທີ່ເຮົາຟັງສຽງນີ້,ຊີວິດຂອງເຮົາຈະປ່ຽນໄປໝົດ,ການເບິ່ງໂລກພາຍນອກຂອງເຮົາຈະມີການປ່ຽນແປງໄປໃນທາງທີ່ດີຂື້ນ.**

ແສງພາຍໃນ ຫຼືແສງຂອງພຣະເຈົ້າ ກໍ່ຄືແສງ(light) ແບບດຽວກັນກັບທີ່ໄດ້ເວົ້າ ເຖິງໃນ ຄຳວ່າ " ການຮູ້ແຈ້ງ "(Enlightenment) ຄວາມເຂັ້ມຂອງແສງນີ້ສາມາດຈັດເປັນລຳດັບຈາກແສງ ທີ່ເປັ່ງປະກາຍບໍ່ເຂັ້ມຈົນຂື້ນ ໄປເຖິງແສງທີ່ ເຈີດຈ້າສະຫວ່າງສະໄຫວ ຂອງດວງອາທິດຕັ້ງຫຼາຍລ້ານດວງ ແລະຍ້ອນ ຜ່ານແສງ ແລະສຽງນີ້ແຫລະ ຈື່ງທຳໃຫ້ເຮົາຮູ້ຈັກກັບພຣະເຈົ້າ.

ການຖ່າຍທອດເຂົ້າສູ່ທຳມະວິຖີແບບກວນຢິນບໍ່ໄດ້ແມ່ນພິທີອັນລຶກລັບຫຼືພິທີການເຂົ້າສູ່ສາດສະໜາໃໝ່ ແຕ່ຢ່າງໃດເລີຍ.ໃນເວລາທີ່ສິດນັ້ນ,ຈະມີການສອນເປັນການສະເພາະສຳລັບການນັ່ງສະມາທິກ່ຽວກັບແສງພາຍໃນ ແລະສຽງພາຍໃນ,ແລະທ່ານອາຈານຊີງໄຫ່ຈະເປັນຜູ້ "ຖ່າຍທອດທາງຈິດ ສູ່ຈິດ" ລົດຊາດຄັ້ງແລກຂອງການຢູ່ເບື້ອງໜ້າຂອງພຣະເຈົ້າຈະໄດ້ຖືກມອບໃຫ້ໃນຄວາມງຽບ.ທ່ານອາຈານຊີງໄຫ່ບໍ່ຈຳເປັນຢູ່ບ່ອນນັ້ນດວ້ຍຕົນເອງກໍ່ໄດ້ໃນການເປີດປະຕູນີ້ໃຫ້ແກ່ທ່ານ.ການຖ່າຍທອດນີ້ເປັນສວ່ນທີ່ສຳຄັນຂອງວິທີການ.ແຕ່ສຳລັບເລື້ອງເຕັກນິກວິທີການຈະມີຜົນປະໂຫຍດໜ້ອຍ ຖ້າບໍ່ໄດ້ຮັບພອນຈາກອາຈານ.

ເນື່ອງຈາກວ່າ,ທ່ານອາດຈະໄດ້ຍິນສຽງພາຍໃນແລະໄດ້ເຫັນແສງພາຍໃນທັນທີ,ໃນຂະນະທີ່ກຳລັງຖ່າຍທອດນັ້ນ,ເຫດການນີ້ບາງຄັ້ງຈະເອີ້ນວ່າ " ວ່ອງໄວ " ຫລື " ການຮູ້ແຈ້ງໃນທັນທີ".ທ່ານອາຈານຊີງໄຫ່ຈະຮັບເອົາທຸກຄົນຈາກທຸກເງື່ອນໄຂ.ໂດຍບໍ່ເລືອກເຊື້ອຊາດສາດສະໜາໃນເວລາຖ່າຍທອດຫຼືສິດເອົາວິຊາດັ່ງກ່າວ.ທ່ານບໍ່ຈຳເປັນຕອ້ງປ່ຽນສາດສະໜາຫລືຄວາມເຊື່ອ ແລະຂະນົບທຳນຽມປະເພນີ ທ່ານຈະບໍ່ຖືກຂໍຮ້ອງໃຫ້ເຂົ້າຮ່ວມອົງການ ຈັດຕັ້ງໃດໆທັງສິ້ນ,ຫຼືໃຫ້ທຳການໃດໆທີ່ບໍ່ເໝາະສົມກັບການດຳລົງຊີວິດຂອງຕົນໃນປັດຈຸບັນ.

ເຖິງຢ່າງໃດກໍ່ຕາມ,ທຸກຄົນຈະໄດ້ຮັບການຂໍຮອ້ງໃຫ້ເປັນມັງສະວິລັດ.ການໃຫ້ຄຳໝັ້ນສັນຍາວ່າຈະເປັນມັງສະວິລັດຕະຫຼອດຊີວິດ.ແມ່ນຈຳເປັນ,ກ່ອນທີ່ຈະໄດ້ຮັບການສິດເອົາວິຊາ.

**ການສິດເອົາວິຊາຈະຖືກຖ່າຍທອດໃຫ້ ໂດຍບໍ່ມີການຄິດຄ່າຫຍັງໝົດ.**

ຫລັງຈາກສິດເອົາວິຊາແລ້ວ ທຸກຄົນຈຳເປັນຕອ້ງປະຕິບັດ ການນັ່ງສະມາທິ ທຳມະວິຖີແບບກວນຢິນເປັນປະຈຳທຸກໆວັນແລະຮັກສາສີນຫ້າ,ໂດຍຕະຫຼອດອີກດວ້ຍ.ສີນຫ້າຈະເປັນເຄື່ອງຊີ້ແນວທາງທີ່ຊວ່ຍໃຫ້ທຸກຄົນບໍ່ເຮັດຮ້າຍຫຼືເຮັດອັນຕະລາຍຕໍ່ຕົນເອງແລະສິ່ງມີຊີວິດອື່ນໆການບຳເພັນປະຕິບັດດັ່ງນີ້ນັ້ນຈະເຮັດໃຫ້ປະສົບການຂອງການຮູ້ແຈ້ງທີ່ໄດ້ຮັບໃນເບື້ອງຕົ້ນມີຄວາມເລິກຊຶ້ງແລະເພີ້ມທະວີຍິ່ງຂຶ້ນຢ່າງໝັ້ນຄົງແລະຈະທຳໃຫ້ຜູ້ປະຕິບັດໄດ້ບັນລຸເຖິງລະດັບທີ່ສູງສຸດຂອງການຕື່ນຂຶ້ນຫຼືໄດ້ຮັບຄວາມເປັນພຸດທະຂອງຕົນເອງໃນທີ່ສຸດ.ຫາກບໍ່ບຳເພັນປະຕິບັດທຸກໆວັນການຮູ້ແຈ້ງກໍ່ຈະຖືກລືມຫລູ້ຍໄປແລ້ວຜູ້ນັ້ນກໍ່ຈະຖືກກັບຄືນສູ່ລະດັບຂອງຈິດສຳນຶກຂອງຄົນທຳມະດາທົ່ວໄປ.

ເປົ້າໝາຍຂອງ ທ່ານອາຈານຊີງໄຫ່ ກໍ່ຄືການສອນໃຫ້ເຮົາເພິ່ງພາຕົນເອງຢ່າງພຽງພໍ.ດັ່ງນັ້ນ,ທ່ານຈຶ່ງສອນທຳມະວິທີທີ່ທຸກໆຄົນສາມາດປະຕິບັດໄດ້ໂດຍຕົນເອງ.ໂດຍປາສະຈາກຜູ້ສະນັບສະໜູນຫຼືຊັບສິນອື່ນໆ.ທ່ານບໍ່ໄດ້ຊອກຫາຜູ້ຕິດຕາມ,ຜູ້ມາເຄົາລົບບູຊາ,ຫຼືລູກສິດລູກຫາ.ທ່ານບໍ່ໄດ້ຕັ້ງອົງການຈັດຕັ້ງທີ່ຈະຕ້ອງໄດ້ຈ່າຍຄ່າສະມາຊິກ.ທ່ານຈະບໍ່ຮັບເງີນຄຳ,ການກາບໄຫວ້ບູຊາຫຼືຂອງຂວັນຕ່າງໆຈາກຜູ້ໃດທັງສິ້ນ.ດັ່ງນັ້ນ,ຈຶ່ງບໍ່ຈຳເປັນທີ່ຈະຕ້ອງມອບສິ່ງເຫຼົ່ານັ້ນໃຫ້ທ່ານ.

ທ່ານຈະຕົກລົງຮັບເອົາແຕ່ພຽງຄວາມຈິງໃຈຂອງທຸກຄົນໃນການບຳເພັນສະມາທິໃນຊີວິດປະຈຳວັນເພື່ອຄວາມກ້າວໜ້າໄປສູ່ຄວາມເປັນນັກບູນຂອງທ່ານເອງ.

# ສິນຫ້າ

**1. ລະເວັ້ນຈາກການຂ້າສັດຕັດຊີວິດ *;**

**2. ລະເວັ້ນການຂີ້ຕົວະ ຫຼືເວົ້າສິ່ງທີ່ບໍ່ມີມູນຄວາມຈິງ;**

**3. ລະເວັ້ນຈາກການລັກຊັບຂອງຄົນອື່ນ;**

**4. ລະເວັ້ນຈາກການປະພຶດຜິດໃນກາມ;**

**5. ລະເວັ້ນຈາກການດື່ມສຸລາເມໄລ ຫຼືສິ່ງເສບຕິດຕ່າງໆ**;**

* ໂດຍສະເພາະສິນຂໍ້ແລກ ແມ່ນຮຽກຮ້ອງໃຫ້ປະຕິບັດຢ່າງເຂັ້ມງວດ ສຳລັບຜູ້ເປັນນັງສະວິລັດ ຄືຍົກເວັ້ນການກິນ ຊີ້ນ,ປາ,ໄຂ່(ໄຂ່ທຸກປະເພດ ຈາກຟາມ ຫຼືບໍ່ກໍ່ຕາມ). ( ດື່ມນົມສົດ ແລະເນີຍໄດ້).

** ຂໍ້ນີ້ແມ່ນລວມທັງການຫລີກເວັ້ນເຄື່ອງດື່ມປະເພດຕ່າງໆເຊັ່ນ: ເຫຼົ້າ,ຢາເສບຕິດ,ຢາສູບ,ການພະນັນ,ຮູບໂປ້ ,ວາລະສານ ແລະຟີມທີ່ມີລັກສະນະທີ່ຮູນແຮງອື່ນໆ.

*" ຜູ້ປະເສີດບໍລິບູນ ກໍ່ຄືຜູ້ທີ່ເປັນມະນຸດທີ່ສົມບູນເຕັມຕົວ. ຜູ້ທີ່ເປັນມະນຸດເຕັມຕົວຈະເປັນຜູ້ປະເສີດບໍລິບູນ.ຂະນະນີ້, ເຮົາເປັນມະນຸດພຽງແຕ່ເຄິ່ງດຽວເທົ່ານັ້ນ.*
*ເຮົາເຮັດສິ່ງຕ່າງໆດ້ວຍຄວາມລັ່ງເລໃຈ.*
*ເຮົາເຮັດສິ່ງຕ່າງໆ ໂດຍການເຫັນແກ່ຕົວ.*
*ເຮົາບໍ່ເຊື່ອວ່າພຣະເຈົ້າເປັນຜູ້ຈັດການທຸກສິ່ງທຸກຢ່າງທັງໝົດນີ້*
*ເພື່ອຄວາມເພີດເພີນແລະເພື່ອເປັນປະສົບການໃຫ້ແກ່ເຮົາ.*
*ເຮົາແບ່ງແຍກບາບແລະບຸນເຮົາຖືເອົາທຸກຢ່າງເປັນເລື້ອງສຳຄັນໃຫ່ຍໂຕແລ້ວກໍ່ຕັດສິນຕົນເອງແລະຄົນອື່ນໄປຕາມນັ້ນ.*
*ເຮົາທຸກຄົນທໍລະມານຈາກການຕັ້ງຂໍ້ຈຳກັດຂອງຕົວເອງ ແທ່ນທີ່ ພຣະເຈົ້າຄວນເປັນຜູ້ເຮັດ.ເຂົ້າໃຈບໍ່? ແຕ່ ແທ້ທີ່ຈິງແລ້ວ,ພຣະເຈົ້າຢູ່ພາຍໃນຕົວເຮົາແລະເຮົາກໍ່ຈຳກັດພຣະອົງໄວ້.*
*ເຮົາຢາກຫຼຸດພົ້ນຢາກສະນຸກສະໜານ,ແຕ່ເຮົາບໍ່ຮູ້ວ່າຈະເຮັດແນວໃດ.*
*ເຮົາກໍ່ພຽງແຕ່ໄປເວົ້າກັບຄົນອື່ນວ່າອ່າ!ເຈົ້າບໍ່ຄວນເຮັດແນວນັ້ນ.ຂອ້ຍບໍ່ຄວນເຮັດແນວນີ້.ແລ້ວເຮົາຈະເປັນມັງສະວິລະໄປເຮັດຫຍັງ? ນັ້ນແຫຼະ!ຂ້າພະເຈົ້າ ກໍ່ຮູ້ແບບນັ້ນ*
*ແຕ່ຂ້າພະເຈົ້າກໍ່ເປັນມັງສະວິລັດເພາະພຣະເຈົ້າທີ່ຢູ່ພາຍໃນຕົວຂອງຂ້າພະເຈົ້າຕ້ອງການແບບນັ້ນ.*

*~ ທ່ານ ອານຸດຕຣາຈານ ຊິງໄຫ່ ~*

*"ໃນເວລາທີ່ເຮົາຫາກເຮັດສິ່ງໃດກໍ່ຕາມດ້ວຍຄວາມບໍລິສຸດໃຈ,ເວົ້າກໍ່ເວົ້າດີແລະຄິດກໍ່ຄິດດີ,ແມ່ນແຕ່ພຽງວິນາທີດຽວ.*
*ພຣະອົງທ່ານແລະບັນດາ ເທບພຣະເຈົ້າ,ພຣະເຈົ້າ,ແລະເທວະດາອາລັກຜູ້ຮັກສາທັງມວນກໍ່ຈະ ສະນັບສະໜຸນເຮົາ.*
*ໃນເວລານັ້ນ,ທັງຈັກກະວານກໍ່ຈະເປັນຂອງເຮົາແລະບັນລັງກໍ່ຈະຢູ່ບອ່ນນັ້ນໃຫ້ເຮົາຂຶ້ນຄອງ"*

*~ ທ່ານ ອານຸດຕຣາຈານ ຊິງໄຫ່~*

# ເຫດໃດທຸກຄົນຈຶ່ງຄວນຕອ້ງເປັນມັງສະວິລັດ

ກອ່ນຈະຮັບການສິດເຂົ້າສູ່ທຳມະວິຖີກວນຢີນທຸກຄົນຈະຕອ້ງໄດ້ໃຫ້ຄຳໝັ້ນສັນຍາວ່າຈະຮັບປະທານອາຫານມັງສະວິລັດໄປຈົນຕະຫລອດຊີວິດໂດຍສາມາດກິນພຶດຜັກແລະລວມທັງນົມແລະເນີຍໄດ້.ແຕ່ອາຫານອື່ນໆທີ່ເຮັດດວ້ຍເນື້ອສັດລວມທັງໄຂ່ເປັນສິ່ງທີ່ບໍ່ຄວນກິນ.ສຳລັບເລື້ອງນີ້ມີເຫດຜົນຢູ່ຫຼາຍຢ່າງແຕ່ເຫດຜົນທີ່ສຳຄັນທີ່ສຸດຄືມາຈາກສິນຂໍ້ທີ່ນື່ງ,ຊຶ່ງບອກເຮົາ **ລະເວັ້ນຈາກການຂ້າສັດຕັດຊີວິດ** ຫລື **“ ເຈົ້າຕ້ອງບໍ່ຂ້າ “** (ໃນຄຳພີໄບໂບ )

ການບໍ່ຂ້າຫລືບໍ່ທຳອັນຕະລາຍຕໍ່ສິ່ງມີຊີວິດອື່ນໆນັ້ນມັນເປັນປະໂຫຍດຕໍ່ສິ່ງທີ່ມີຊີວິດເຫລົ່ານັ້ນໂດຍກົງຢ່າງເຫັນໄດ້ແຈ້ງ.ສິ່ງທີ່ເຂົ້າໃຈໄດ້ກໍ່ຄືຄວາມຈີງທີ່ວ່າການລະເວັ້ນຈາກການທຳອັນຕະລາຍໃຫ້ແກ່ຜູ້ອື່ນກໍ່ເປັນປະໂຫຽດຕໍ່ຕົວເຮົາເອງທໍ່ໆກັນ.ເປັນເພາະຫຍັງ?ກໍ່ເພາະກົດແຫ່ງກຳນັ້ນເອງ.**”ຫວ່ານພືດແນວໃດກໍ່ໄດ້ຜົນແນວນັ້ນ“**ຖ້າເຮົາຂ້າຫລືເປັນຕົ້ນເຫດໃຫ້ຄົນອື່ນຂ້າເພື່ອຕົວເຮົາເພື່ອສະໜອງຄວາມຢາກກິນເນື້ອຂອງເຮົາ.ເຮົາກໍ່ຈະສ້າງກຳຂຶ້ນມາແລະເຮົາກໍ່ຈະຕ້ອງໄດ້ຊົດໃຊ້ໜີ້ກຳທີ່ເຮົາໄດ້ມີສວ່ນຮວ່ມນີ້ໃນທີ່ສຸດ.

ດັ່ງນັ້ນ,ການກິນມັງສະວິລັດຈຶ່ງເປັນຂອງຂວັນທີ່ເຮົາມອບໃຫ້ແກ່ຕົວເຮົາເອງຢ່າງແທ້ຈິງເຮົາຈະຮູ້ສຶກດີຂຶ້ນແລະຄຸນນະພາບຊີວິດຂອງເຮົາກໍ່ຈະດີຂຶ້ນ.ເນື່ອງຈາກວ່າໜີ້ກຳທີ່ໜັກໜວ່ງຂອງເຮົາທີ່ເຄີຍກໍ່ໄວ້ກໍ່ຈະເບົາບາງລົງແລະເມື່ອໝົດໄປເຮົາກໍ່ຈະໄດ້ຮັບອານຸຍາດໃຫ້ເຂົ້າສູ່ແດນສະຫວັນອັນລີ້ລັບແຫ່ງໃໝ່ຂອງປະສົບການພາຍໃນ ຂອງເຮົາ ຊຶ່ງມັນກໍ່ຄຸ້ມຄ່າຫລາຍ ກັບເວລາພຽງເຫລັກນອ້ຍທີ່ເຮົາຕອ້ງຈ່າຍໄປ!

ສຳລັບບາງຄົນກໍ່ເຊື່ອໃນເຫດຜົນທາງສາດສະໜາທີ່ຄັດຄ້ານການກິນເນື້ອ,ແຕ່ກໍ່ມີເຫດຜົນຈູງໃຈອື່ນໆອີກຫລາຍຢ່າງທີ່ເຮົາຄວນພິຈາລະນາວ່າເປັນຫຍັງເຮົາຈຶ່ງຕອ້ງຄວນກິນມັງສະວິລັດ.ຊຶ່ງທຸກເລື້ອງລ້ວນມາຈາກສາມັນສຳນຶກທັງສິ້ນເຊັ່ນ:ເຫດຜົນເພື່ອສຸຂະພາບແລະທາງໂພສະນາການ(ການກິນ)ສ່ວນບຸກຄົນ,ກ່ຽວກັບທາງນິເວດວິດທະຍາແລະສິ່ງແວດລ້ອມ,ກ່ຽວກັບສິນລະທຳ,ກ່ຽວກັບຄວາມທຸກທໍລະມານຂອງສັດແລະຄວາມອຶດຢາກຂອງຄົນໃນໂລກ.

# ສຸຂະພາບແລະໂພສະນາການ

ການສຶກສາທາງດ້ານວິວັດທະນາການຂອງມະນຸດໄດ້ສະແດງໃຫ້ເຫັນວ່າບັນພະບຸລຸດຂອງເຮົາເປັນມັງສະວິລັດກັນໂດຍທຳມະຊາດແລະໂຄງສ້າງຂອງຮ່າງກາຍຂອງມະນຸດບໍ່ເໝາະກັບການກິນຊີ້ນ.ເລື້ອງນີ້,ໄດ້ຮັບການອະທິບາຍກ່ຽວກັບການວິໄຈແລະປຽບທຽບທີ່ຂຽນໂດຍທ່ານດຣ.ຈີເອສ.ຮັນຕິງເຈັນທີ່ມະຫາວິທະຍາໄລໂຄລົມເບັຍຂອງອາເມລິກາ.ລາວອະທິບາຍວ່າ ສັດທີ່ກິນຊີ້ນຈະມີລຳໄສ້ທີ່ສັ້ນແລະລຳໄສ້ຂອງມັນຈະກວ້າງ, ຍອ້ນລຳໄສ້ທີ່ກວ້າງນັ້ນ,ມັນຈະເຮັດໃຫ້ລຳໄສ້ຊື່ແລະລຽບມື່ນ.ເມື່ອສົມທຽບແລ້ວສັດທີ່ກິນພືດແລະຫຍ້າຈະມີລຳໄສ້ນອ້ຍແລະລຳໄສ້ໃຫຍ່ຍາວ.ເພາະວ່າ,ອາຫານປະເພດຊີ້ນມີເສັ້ນໄຍໄຟເບີໜ້ອຍແລະມີໂປຣຕີນຫລາຍ. ດັ່ງນັ້ນ,ໄສ້ອ່ອນຈຶ່ງບໍ່ຕ້ອງການໃຊ້ເວລາຍາວນານໃນການຊຶມຊັບເອົາອາຫານດັ່ງກ່າວໄປລຽງ້ຮ່າງກາຍ.ດວ້ຍເຫດນັ້ນ,ໄສ້ອ່ອນຂອງສັດທີ່ກິນຊີ້ນຈຶ່ງສັ້ນກ່ວາ ສັດທີ່ກິນພືດຜັກ.

ຄົນເຮົາ,ຕາມທຳມະຊາດແລ້ວກໍ່ເໝືອນກັນກັບສັດທີ່ກິນຫຍ້າທົ່ວໄປ,ຊື່ງມີລຳໄສ້ອອ່ນນ້ອຍແລະຍາວ. ຕາມທີ່ໄດ້ສະເລັຍແລ້ວມີປະມານຊາວແປດຟິດຫລື(ແປດແມດເຄິ່ງ).ສວ່ນລຳໄສ້ອອ່ນຄົດພັບໄປມາຫລາຍຊ້ອນແລະຜະໜັງຂອງມັນກໍ່ເປັນຮອຍບໍ່ລຽບມື່ນ.ເນື່ອງຈາກວ່າ,ລຳໄສ້ຂອງມະນຸດຍາວກ່ວາລຳໄສ້ຂອງສັດກິນຊີ້ນ.ດັ່ງນັ້ນ,ຊີ້ນທີ່ເຮົາກິນເຂົ້າໄປຈື່ງຕົກຄ້າງຢູ່ໃນລຳໄສ້ຂອງເຮົາເປັນໄລຍະຍາວນານ,ທຳໃຫ້ເກີດການບູດເນົ່າເໜັນແລະສ້າງສານພິດອອກມາ.ສານພິດເຫລົ່ານີ້ກ່ຽວຂ້ອງກັບສາເຫດຂອງໂຣກມະເລງທີ່ສ່ວນປາຍລຳໄສ້ໃຫຍ່ແລະຍັງເພີ້ມພາລະໃຫ້ກັບຕັບ.ຊື່ງມີໜ້າທີ່ກຳຈັດສານພິດທຳໃຫ້ເກີດໂຣກຕັບແຂງແລະໂຣກມະເລງໃນຕັບອີກດ້ວຍ.

ຊີ້ນສັດມີໂປຣຕີນຂອງຢູໂຣໄຄເນສ(Urokinase)ແລະຢູເຣັຍ(urea)ຫລາຍ.ຊື່ງເພີ້ມພາລະໃຫ້ແກ່ໝາກໄຂ່ຫລັງ ແລະສາມາດທຳລາຍການທຳງານຂອງໝາກໄຂ່ຫລັງອີກດວ້ຍ.ໃນຊີ້ນບີຟເຕັກນື່ງປອນ ຈະມີໂປຣຕີນ ຢູໂຣໄຄເນສ ເຖີງສິບສີ່ກຣາມ.ຖ້າເອົາແຊວ(cell)ທີ່ຍັງມີຊີວິດໄປແຊ່ໃນນ້ຳໂປຣຕີນ ຢູໂຣໄຄເນສນີ້ຄວາມສາມາດໃນການເສີມສ້າງ ແລະເຜົາຜານອາຫານຂອງມັນຈະເສື່ອມລົງທັນທີ ນອກຈາກນີ້ຊີ້ນສັດຍັງຂາດເສັ້ນໄຍ(cellulose) ຫລື ໄຟເບີ(fiber) ແລະການຂາດສິ່ງເຫລົ່ານີ້ກໍ່ຈະທຳໃຫ້ເປັນການຖອກທອ້ງ ຫລື ຄັດທອ້ງແລະຍື່ງທ້ອງໄດ້ງ່າຍ.ເປັນທີ່ຮູ້ກັນດີວ່າ ການທີ່ມີອາການຄັດທ້ອງຍື່ງທອ້ງກໍ່ເປັນສາເຫດພາໃຫ້ເກີດໂຣກມະເລງ ໃກ້ກັບຮູ້ທະວານໜັກ ຫລືໂຣກລິດສີດວງທະວານນັ້ນໄດ້.

ຄໍແລສເຕີໂຣລ(cholesterol)ແລະໄຂມັນອີ່ມຕົວໃນເນື້ອສັດຍັງທຳໃຫ້ເກີດໂຣກຫລອດເລືອດຫົວໃຈຊື່ງຂະນະນີ້,ເປັນສາເຫດຂອງການເສັຍຊີວິດເປັນອັນດັບນື່ງ ໃນສະຫະລັດ ອາເມລິກາ ແລະຟໍໂມຊາໄຕຫວັນ.

ໂຣກມະເລງເປັນສາເຫດຂອງການເສັຍຊີວິດເປັນອັນສອງ.ການທົດລອງຕ່າງໆໄດ້ຊີ້ໃຫ້ເຫັນວ່າການປີ້ງຊີ້ນຫລືຢ້າງຊີ້ນຈະທຳໃຫ້ເກີດສານເຄມີຊະນິດນຶ່ງຄືເມທິນໂຄແລນທຣີນ(Methylcholanthrene)ຊຶ່ງເປັນສານກໍ່ໃຫ້ເກີດໂຣກມະເລງທີ່ຮ້າຍແຮງທີ່ສຸດ.ໜູທົດລອງທີ່ໄດ້ຮັບສານເຄມີສະນິດນີ້ເຂົ້າໄປຈະເກີດມີອາການຂອງໂຣກມະເລງຊະນິດຕ່າງໆເຊັ່ນ: ມະເລງກະດູກ,ມະເລງເມັດເລືອດ,ມະເລງກະເພາະອາຫານເປັນຕົ້ນ.

ການວິໄຈໄດ້ສະແດງໃຫ້ເຫັນວ່າລູກໜູທີ່ກິນນົມແມ່ໜູທີ່ເປັນມະເລງເຕົ້ານົມກໍ່ຈະເປັນມະເລງເຊັ່ນດຽວກັນແລະເມື່ອເວລາຫາກສັກແຊວມະເລງຂອງມະນຸດເຂົ້າໄປໃນສັດທົດລອງສັດເຫລົ່ານັ້ນກໍ່ຈະເກີດເປັນມະເລງໄປນຳ. ຖ້າຊີ້ນສັດທີ່ເຮົາກິນຢູ່ທຸກມື້ນີ້ ຫາກມາຈາກສັດທີ່ເກີດເປັນໂຣກຕ່າງໆເຫລົ່ານີ້ຢູ່ຖ້າຫາກເຮົາກິນມັນເຂົ້າໄປ ມັນກໍ່ເປັນໂອກາດດີ ທີ່ເຮົາຈະຕິດໂຣກເຫລົ່ານັ້ນ.

ຄົນສ່ວນຫລາຍຄິດກັນເອົາເອງວ່າຊີ້ນສັດເຫລົ່ານັ້ນສະອາດແລະປອດໄພ.ແລະມີການກວດກາແລ້ວທີ່ໂຮງຂ້າສັດແຕ່ວ່າຕາມຄວາມເປັນຈິງແລ້ວມີ:ງົວ,ຄວາຍ,ໝູ,ເປັດ,ໄກ່ແລະອື່ນໆຖືກຂ້າແລ້ວນຳມາຂາຍໃນແຕ່ລະມື້ເປັນຈຳນວນຢ່າງຫລວງຫລາຍເກີນກວ່າທີ່ຈະກວດກາໄດ້ຄົບໝົດທຸກໂຕ,ແລະກໍ່ເປັນການຍາກທີ່ຈະກວດກາວ່າສັດໂຕໃດ,ຊີ້ນໂຕໃດເປັນມະເລງຫລືມີແຊວເປັນມະເລງຫລືບໍ່?ບໍ່ຕອ້ງເວົ້າເຖິງວ່າເລື້ອງການກວດກາສັດແຕ່ລະຕົວກໍ່ໄດ້.ປັດຈຸບັນນີ້ແມ່ນແຕ່ໃນຢູໂຣບແລະອາເມລິກາຢູ່ກະໂຕບ່ອນຜະລິດຊີ້ນສັດກໍ່ພຽງແຕ່ຕັດຫົວສັດຖີ້ມໄປຊື່ໆຖ້າຫາກມີບັນຫາຢູ່ບ່ອນຫົວ ຫລື ຕັດຂາບ່ອນທີ່ເປັນໂຣກຖີ້ມເອົາສວ່ນທີ່ເສັຍໆອອກໄປເທົ່ານັ້ນແລ້ວກໍ່ຈຳໜ່າຍສວ່ນທີ່ເຫລືອຕໍ່ໄປໃນທອ້ງຕະຫລາດ.

ຄົນເປັນມັງສະວິລັດທີ່ມີຊື່ສຽງທ່ານນຶ່ງຄື:ດຣ.ເຈ.ເອັຊ.ເຄລລອກ(Dr.J.H.Kellogg)ກ່າວໄວ້ວ່າ“ເວລາເຮົາກິນອາຫານມັງສະວິລັດເຮົາບໍ່ຕອ້ງຫວ່ງວ່າອາຫານທີ່ເຮົາກິນນັ້ນຕາຍຍ້ອນໂຣກຫຍັງ.ອັນນີ້,ມັນເຮັດໃຫ້ອາຫານຄາບນັ້ນແຊບຊ້ອຍທີ່ສຸດ”.

ນອກຈາກນີ້,ຍັງມີສິ່ງທີ່ໜ້າເປັນຫວ່ງອີກຢ່າງໜຶ່ງກໍ່ຄືອາຫານທີ່ໃຊ້ລ້ຽງສັດມີຢາປະຕິຊີວະນະລວມທັງຢາອື່ນໆເຊັ່ນ:ຢາສະເຕີຣອຍ,ແລະຮອກໂມ່ນທີ່ເລັ່ງການຈະເລີນເຕີບໂຕປະສົມຢູ່ໃນນັ້ນດ້ວຍຫລືບໍ່ກໍ່ມີການສັກຢາເຫລົ່ານີ້ເຂົ້າໄປໃນສັດ.ມີລາຍງານມາແລ້ວວ່າຄົນທີ່ກິນຊີ້ນສັດເຫລົ່ານີ້ກໍ່ຈະໄດ້ຮັບຢາເຫລົ່ານັ້ນເຂົ້າໄປຮ່າງກາຍດວ້ຍ.ແລະມີໂອກາດທີ່ຢາປະຕິຊີວະນະໃນຊີ້ນສັດນັ້ນຈະໄປລົດປະສິດທິພາບຂອງຢາປະຕິຊີວະນະທີ່ມະນຸດເຮົາໃຊ້ໃນເວລາທີ່ເຈັບເປັນອີກດ້ວຍ.

ບາງຄົນຄິດວ່າອາຫານມັງສະວິລັດ ຂາດທາດບຳລຸງ. ແຕ່ດຣ. ມິລເລີ(Dr. Miller)ຜູ້ຊ່ຽວຊານດ້ານການແພດ ຊາວອາເມລິກາ ຊຶ່ງຮັກສາຄົນໄຂ້ຢູ່ໃນຟໍໂມຊາ ມາສີ່ສິບກວ່າປີແລ້ວ ລາວຕັ້ງໂຮງພະຍາບານຊຶ່ງມີແຕ່ອາຫານມັງສະວິລັດສຳລັບໃຫ້ເຈົ້າໜ້າທີ່ແພດ,ພະຍາບານ,ແລະຄົນປວ່ຍທຸກໆຄົນ.ລາວເວົ້າວ່າ:“ໝູເປັນສັດທີ່ກິນໄດ້ທັງຊີ້ນແລະພືດຜັກແຕ່ຖ້າເຮົາແຍກໝູສອງໂຕມາລ້ຽງຄົນລະແບບຕົວນຶ່ງໃຫ້ກິນຊີ້ນແລະອີກຕົວນຶ່ງໃຫ້ກິນພືດຜັກ.ເຮົາກໍ່ຈະພົບວ່າການຈະເລີນເຕີບໂຕຂອງໝູສອງໂຕຈະເໝືອນກັນແຕ່ວ່າ,ໝູຕົວທີ່ກິນພືດຜັກຈະມີອາຍຸທີ່ຍືນກວ່າແລະມີຄວາມຕ້ານທານຕໍ່ໂຣກຫລາຍກ່ວາ.ນອກຈາກນີ້,ເມື່ອໝູທັງສອງໂຕເຈັບປວ່ຍໝູທີ່ກິນພືດຜັກ

ກໍ່ສາມາດຟື້ນຕົວໄດ້ໄວກ່ວາ".ລາວຍັງເວົ້າເພີ້ມເຕີມອີກວ່າ"ຢາຮັກສາໂຣກທີ່ເຮົາໄດ້ຈາກວິດທະຍາສາດສະໄໝໃໝ່ມີຄວາມກ້າວໜ້າໄປໄກຫລາຍແຕ່ມັນກໍ່ຮັກສາໄດ້ແຕ່ໂຣກເທົ່ານັ້ນ.ແຕ່ອາຫານສາມາດຮັກສາສຸຂະພາບຂອງເຮົາໄດ້" ລາວອະທິບາຍວ່າ"ອາຫານຈາກພຶດເປັນແຫລ່ງຂອງສານອາຫານໂດຍກົງຫລາຍກວ່າຊີ້ນສັດ. ຄົນກິນຊີ້ນສັດ,ແຕ່ວ່າແຫລ່ງອາຫານສຳລັບສັດທີ່ເຮົາກິນນັ້ນກໍ່ຄືພຶດຜັກ.ສັດສ່ວນໃຫຍ່ຈະອາຍຸບໍ່ຍືນແລະກໍ່ມີໂຣກເກືອບທຸກສະນິດທີ່ມະນຸດເຮົາມີ.ມັນເປັນໄປໄດ້ທີ່ສຸດວ່າໂຣກຂອງມະນຸດເຮົາແມ່ນມາຈາກການກິນຊີ້ນສັດທີ່ເປັນໂຣກ.ເພາະສະນັ້ນ,ເປັນຫຍັງຄົນເຮົາຈຶ່ງ ບໍ່ຮັບເອົາສານອາຫານໂດຍກົງຈາກພຶດເບາະ?" ດຣ.ມິລເລີແນະນຳວ່າພຽງແຕ່ເຮົາກິນເຂົ້າ,ຖົ່ວ,ຜັກ,ໝາກໄມ້ເຮົາກໍ່ຈະໄດ້ຮັບທາດບຳລຸງທີ່ຈຳເປັນໃນການບຳລຸງຮັກສາສຸຂະພາບຂອງເຮົາໃຫ້ດີແລ້ວ.

ຫລາຍຄົນມີຄວາມຄິດວ່າໂປຣຕີນຈາກຊີ້ນສັດດີກວ່າເໜືອກ່ວາໂປຣຕີນທີ່ໄດ້ຈາກພຶດເພາະຢ່າງທຳອິດກໍ່ຖືວ່າເປັນໂປຣຕີນທີ່ສົມບູນຄົບຖ້ວນແລະຢ່າງຕໍ່ໄປກໍ່ຖືວ່າບໍ່ຄົບຖ້ວນ,ແຕ່ຄວາມຈິງກໍ່ຄືໂປຣຕີນຂອງພຶດບາງຊະນິດ ກໍ່ຄົບຖ້ວນສົມບູນເໝືອນກັນ ແລະການກິນອາຫານຫລາຍຢ່າງທີ່ບໍ່ມີໂປຣຕີນຄົບຖ້ວນລວມເຂົ້າກັນກໍ່ສາມາດໄດ້ຮັບ ໂປຣຕີນທີ່ຄົບຖວ້ນໄດ້ເໝືອນກັນ.

ໃນເດືອນມີນາປີ 1988 ສະມາຄົມໂພສະນາການຂອງອາເມລິກາໄດ້ປະກາດວ່າ "ທາງສະມາຄົມຂໍຢືນຢັນວ່າອາຫານມັງສະວິລັດແມ່ນດີຕໍ່ສຸຂະພາບແລະໃຫ້ຄຸນຄ່າທາງໂພສະນາການພຽງພໍຫາກໄດ້ຮັບການຈັດການ, ການວາງແຜນຢ່າງຖືກຕອ້ງແລະເໝາະສົມ".

ມັກຈະມີການເຊື່ອກັນແບບຜິດໆວ່າ ຄົນທີ່ກິນຊີ້ນຈະແຂງແຮງກວ່າຄົນກິນມັງສະວິລັດ ແຕ່ໃນການທົດລອງທີ່ປະຕິບັດໂດຍສາດສະດາຈານ ເອີວິງ ຟິຊເຊີ(Irving Fisher)ທີ່ມະຫາວິທະຍາໄລເຢວ(Yale University)ກັບຄົນທີ່ກິນມັງສະວິລັດ32ຄົນແລະຄົນທີ່ກິນຊີ້ນ15ຄົນສະແດງໃຫ້ເຫັນວ່າຄົນທີ່ກິນມັງສະວິລັດແຂງແຮງແລະທົນທານກ່ວາຄົນກິນຊີ້ນໂດຍລາວໃຫ້ຄົນເຫລົ່ານີ້ຍົກແຂນຂື້ນທັງສອງແຂນໃຫ້ດົນນານເທົ່າທີ່ຈະທຳໄດ້ຜົນຂອງການທົດລອງ ປາກົດອອກມາຢ່າງແຈ່ມແຈ້ງວ່າ ໃນລະຫວ່າງຄົນທີ່ກິນຊີ້ນທັງ 15 ຄົນມີພຽງ 2 ຄົນເທົ່ານັ້ນທີ່ສາມາດຍົກແຂນໄດ້ດົນສິບຫ້າເຖິງສາມສິບນາທີແຕ່ໃນຄົນທີ່ກິນມັງສະວິລັດ32ຄົນນັ້ນມີເຖິງ22ຄົນທີ່ສາມາດຍົກແຂນໄດ້ດົນ.ສິບຫ້າເຖິງສາມສິບນາທີ,ແລະມີເຖິງ15ຄົນທີ່ສາມາດຍົກແຂນໄດ້ດົນກວ່າສາມສິບນາທີ,ແລະອີກ9ຄົນຍົກໄດ້ນານກວ່ານື່ງຊົ່ວໂມງ,ອີກ4ຄົນຍົກໄດ້ດົນກວ່າສອງຊົ່ວໂມງ,ແລະມີຄົນທີ່ກິນມັງສະວິລັດຄົນນື່ງຍົກແຂນຢູ່ໄດ້ດົນກວ່າສາມຊົ່ວໂມງ.

ນັກແລ່ນມາລາທອນຫລາຍຄົນກອ່ນຈະລົງແຂ່ງຂັນຈະກິນອາຫານມັງສະວິລັດເປັນໄລຍະຍາວນານໄລຍະນື່ງກ່ອນການແຂ່ງຂັນ. ດຣ. ບາກບາຣາ ມໍຣ ຜູ້ຊ່ຽວຊານການຮັກສາໂລກດວ້ຍອາຫານມັງສະວິລັດສາມາດແລ່ນມາ ລາທອນໄລຍະທາງ110ໄມລ໌ໂດຍໃຊ້ເວລາ27ຊົ່ວໂມງກັບ30ນາທີລາວເປັນຜູ້ຍິງອາຍຸເຖິງ 56 ປີແລ້ວ. ທີ່ສາມາດທຳລາຍສະຖິຕິທີ່ຜູ້ຊາຍໜຸ່ມໆທັງຫລາຍເຄີຍທຳໄວ້ ລາວເວົ້າວ່າ " ຂອ້ຍຢາກຈະເປັນຕົວຢ່າງໃຫ້ຄົນເຫັນວ່າ ຜູ້ທີ່ກິນອາຫານມັງສະວິລັດທຸກມື້ຈະມີສຸຂະພາບຮ່າງກາຍທີ່ແຂງແຮງ ຈິດໃຈແຈ່ມໃສແລະມີຊີວິດສະອາດບໍລິສຸດ.

ຄົນທີ່ກິນມັງສະວິລັດຈະໄດ້ຮັບໂປຣຕີນພຽງພໍບໍ່ຈາກອາຫານທີ່ກິນເຂົ້າໄປ?ສຳລັບເລື້ອງນີ້ອົງການອະນາໄມໂລກໄດ້ແນະນຳໄວ້ແລ້ວວ່າ 4.5% ຂອງຈຳນວນ ແຄລໍຣີ ໃນແຕ່ລະວັນອາດຈະໄດ້ມາຈາກໂປຣຕີນ ແຕ່ເຂົ້າສາລີມີຈຳນວນແຄລໍຣີຈາກໂປຣຕີນເຖິງ17%,ໂບຣໂຄລີ45%,ເຂົ້າ8%ຈຶ່ງເປັນການງ່າຍທີ່ສຸດທີ່ຈະໄດ້ອາຫານ ທີ່ອຸດົມໄປດ້ວຍໂປຣຕີນໂດຍບໍ່ຕອ້ງກິນຊີ້ນສັດ. ແລະຍັງໄດ້ຮັບປະໂຫຍດເພີ້ມຂື້ນ ຈາກການຫລີກລ້ຽງໂຣກໄພໄຂເຈັບຕ່າງໆທີ່ມີສາເຫດມາຈາກອາຫານທີ່ມີໄຂມັນສູງ ເຊັ່ນ: ໂຣກຫົວໃຈ ແລະໂຣກມະເລງສະນິດຕ່າງໆ. ດັ່ງນັ້ນ, ການກິນມັງສະວິລັດຈຶ່ງເປັນທາງເລືອກທີ່ດີທີ່ສຸດຢ່າງເຫັນໄດ້ແຈ້ງ.

ມີການພິສູດແລ້ວວ່າໂຣກຫົວໃຈ,ໂຣກມະເລງເຕົ້ານົມ,ໂຣກມະເລງລຳໄສໃຫຍ່ແລະການໝົດສະຕິກະທັນຫັນຈາກໂຣກຫົວໃຈມີຄວາມສຳພັນກ່ຽວຂອ້ງກັບການບໍລິໂພກເນື້ອສັດແລະອາຫານຈາກສັດທີ່ມີໄຂມັນຫລາຍແລະຍັງມີໂຣກອື່ນໆອີກຊຶ່ງມັກຈະປອ້ງກັນແລະບາງຄັ້ງກໍ່ຮັກສາໄດ້ໂດຍການກິນອາຫານມັງສະວິລັດທີ່ມີໄຂມັນຕ່ຳໄດ້ແກ່ໂຣກໝື້ວໝາກໄຂ່ຫລັງ,ໂຣກມະເລງຕ່ອມລູກໝາກ,ໂຣກເບົາຫວານ,ໂຣກແຜໃນກະເພາະອາຫານ,ໂຣກໝື້ວຖົງນ້ຳບີ,ໂຣກລຳໄສ້,ໂຣກຂໍ້ອັກເສບ,ໂຣກເຫືອກເປື່ອຍ,ໂຣກມະເລງຕັບອອ່ນ,ສິວ,ໂຣກມະເລງກະເພາະອາຫານ,ໂຣກນ້ຳຕານໃນເລືອດຕ່ຳ,ໂຣກທອ້ງຜູກ,ໂຣກໄດເວີຕິຄູໂລສິສ,ໂຣກຄວາມດັນໂລຫິດສູງ,ໂຣກກະດູກພ່ອຍ,ໂຣກມະເລງຮັງໄຂ່ມົດລູກ,ໂຣກລິດສີດວງທະວານ,ໂຣກອວັນ,ແລະໂຣກຫືດເປັນຕົ້ນ.

**ນອກຈາກການສູບຢາແລ້ວ ບໍ່ມີຫຍັງທີ່ເປັນການສ່ຽງອັນຕະລາຍຕໍ່ສຸຂະພາບຂອງຄົນເຮົາຫລາຍກວ່າການກິນຊີ້ນ.**

# ນິເວດວິດທະຍາ ແລະສິ່ງແວດລອ້ມ

ການລ້ຽງສັດເພື່ອເອົາຊີ້ນທຳໃຫ້ເກີດຜົນຕາມມາໄດ້ແກ່ການທີ່ປ່າດົງດິບຖືກທຳລາຍ,ໂລກເຮົາເກີດຄວາມຮອ້ນສູງຂື້ນ,ນ້ຳເສັຍ,ຂາດແຄນນ້ຳ,ເກີດພາວະແຫ້ງແລ້ງເປັນທະເລຊາຍ,ມີການນຳໃຊ້ແຫລ່ງພະລັງງານໄປຢ່າງຜິດໆ,ແລະເກີດຄວາມອຶດຢາກຂາດແຄນໃຫ້ແກ່ໂລກ,ການນຳໃຊ້ທີ່ດິນ,ນ້ຳ,ພະລັງງານແລະແຮງງານຄົນເພື່ອຜະລິດຊີ້ນສັດອອກມາ ບໍ່ແມ່ນວິທີ ທີ່ມີປະສິດທິພາບໃນການນຳໃຊ້ຊັບພະຍາກອນຂອງໂລກເລີຍ.

ຕັ້ງແຕ່ປີ1960ເປັນຕົ້ນມາປ່າດົງດິບຂອງອາເມລິກາກາງຖືກເຜົາຜານ,ຖືກຕັດລ້າງຖາງຖິ້ມໄປກວ່າ 25%ເພື່ອທຳໃຫ້ເປັນທົ່ງຫຍ້າລ້ຽງງົວ,ປະມານກັນວ່າ ຊີ້ນບີຟເຕັກ ແຮມເບີເກີ ທຸກໆ4ອອນຊ໌ ແມ່ນໄດ້ມາຈາກການທຳລາຍປ່າດົງດິບໃນເຂດຮ້ອນໄປເປັນເນື້ອທີ່ເຖິງ55ຕະລາງຟຸດ.ນອກຈາກນີ້,ການລ້ຽງປະສຸສັດ. ຍັງທຳໃຫ້ເກີດແກັຊສາມຊະນິດຊຶ່ງເຮັດໃຫ້ໂລກຮ້ອນຂື້ນແລະເຮັດໃຫ້ເກີດພາວະນ້ຳເສັຍການຜະລິດຊີ້ນນຶ່ງປອນຕ້ອງໃຊ້ນ້ຳໃນປະລິມານຫລາຍຂື້ນຢ່າງໜ້າຕົກໃຈ,ຄືໃຊ້ນ້ຳເຖິງ2464ແກນລອນ.ໃນຂະນະທີ່ການປູກໝາກເລັ່ນນຶ່ງປອນຈະໃຊ້ນ້ຳພຽງ29ແກນລອນເທົ່ານັ້ນແລະຖ້າໃຊ້ຜະລິດເຂົ້າຈີ່ນຶ່ງປອນຈາກສາລີກໍ່ຈະໃຊ້ນ້ຳພຽງ139ແກນລອນ.ປະລິມານນ້ຳທີ່ໃຊ້ໃນສະຫະລັດອາເມລິກາເກືອບເຄິ່ງນຶ່ງແມ່ນນຳໄປໃຊ້ໃນການປູກພືດເພື່ອເປັນອາຫານສຳລັບລ້ຽງ ງົວ,ແກະ ແລະ ປະສຸສັດອື່ນໆ.

ຈະມີຄົນຢ່າງຫລວງຫລາຍທີ່ສາມາດມີອາຫານກິນຖ້າຊັບພະຍາກອນທີ່ໃຊ້ໃນການລ້ຽງສັດຈະຖືກໃຊ້ໃນການຜະລິດເຂົ້າເພື່ອລ້ຽງປະຊາກອນຂອງໂລກ.ທີ່ດິນນຶ່ງເຮັກຕາທີ່ໃຊ້ປູກເຂົ້າຈະທຳໃຫ້ໄດ້ໂປຣຕີນປະລິມານ8ເທົ່າແລະໄດ້ແຄລໍຣີປະລິມານ25ເທົ່າ.ຖ້າເຮົານຳເຂົ້ານັ້ນມາລ້ຽງຄົນແທນທີ່ຈະເອົາໄປລ້ຽງສັດ.ພື້ນທີ່ດິນນຶ່ງເຮັກຕາທີ່ໃຊ້ປູກໂບຣກໂກລີຈະໃຫ້ໂປຣຕີນ,ແຄລໍຣີ,ແລະໄນອາຊິນເປັນ10ເທົ່າຂອງການທີ່ຈະໃຊ້ພື້ນທີ່ນັ້ນມາຜະລິດຊີ້ນສັດ.ສະຖິຕິຕ່າງໆທຳນອງນີ້ມີຢູ່ຢ່າງຫລວງຫລາຍ.ຊັບພະຍາກອນຂອງໂລກຈະຖືກນຳໃຊ້ເປັນປະໂຫຍດຢ່າງມີປະສິດທິຜົນຫລາຍກວ່າ.ຖ້າພື້ນທີ່ດິນທີ່ໃຊ້ໃນການຜະລິດປະສຸສັດຈະຖືກປ່ຽນມາໃຊ້ປູກພືດຜົນເພື່ອລ້ຽງຄົນແທນ.

ການກິນມັງສະວິລັດຈະທຳໃຫ້ເຮົາ"ຢຽບຍ່ຳເທິງແຜ່ນດິນຂອງໂລກຢ່າງເບົາໆຫລາຍຂຶ້ນ"ນອກຈາກນັ້ນ,ການທີ່ເຮົາເອົາສິ່ງໃດສິ່ງນຶ່ງມາສະເພາະພຽງແຕ່ເຮົາຈຳເປັນເທົ່ານັ້ນແລະລຶດສ່ວນທີ່ເກີນຄວາມຕອ້ງການຂອງເຮົາລົງເຮົາກໍ່ຈະຮູ້ສຶກດີຂື້ນຍ້ອນວ່າເຮົາຮູ້ວ່າທຸກຄັ້ງທີ່ເຮົາກິນຄາບເຂົ້າສິ່ງທີ່ມີຊີວິດສິ່ງນຶ່ງບໍ່ຈຳເປັນຕ້ອງຕາຍໄປ

## ຄວາມຫິວໂຫຍໃນໂລກ

ຄົນເກືອບນຶ່ງພັນລ້ານຄົນ ຕອ້ງທຸກທໍລະມານຍ້ອນຄວາມຫິວໂຫຍ ແລະການຂາດອາຫານຢູ່ໃນໂລກນີ້. ທຸກໆປີຈະມີຜູ້ທີ່ຕາຍເພາະຄວາມອຶດຢາກເປັນຈຳນວນຫລວງຫລາຍ ຊຶ່ງມີຫລາຍກວ່າ40ລ້ານຄົນ.ສ່ວນຫລາຍແມ່ນເດັກນ້ອຍ. ທັ້ງໆທີ່ຮູ້ເປັນແບບນີ້,ແຕ່ຜົນການເກັບກ່ຽວເຂົ້າຂອງໂລກ ຫລາຍກ່ວານຶ່ງໃນສາມ ກັບນຳເອົາໄປ ລ້ຽງສັດ ແທນທີ່ຈະເອົາມາໃຊ້ລ້ຽງຄົນ. ໃນສະຫະລັດອາເມລິກາ ປະສຸສັດບໍລິໂພກເຂົ້າທີ່ຜະລິດໄດ້ເຖິງ 70% ຂອງຜົນຜະລິດທັງໝົດ ຖ້າເຮົາເອົາມາລ້ຽງຄົນແທນທີ່ຈະເອົາມາລ້ຽງສັດ ກໍ່ຈະບໍ່ມີໃຜຫິວໂຫຍເລີຍ.

## ຄວາມທຸກທໍລະມານຂອງສັດ

ທ່ານຮູ້ບໍ່ວ່າ ງົວຫລາຍກວ່າ 100.000ໂຕ ຖືກຂ້າທຸກໆມື້ໃນສະຫະລັດອາເມລິກາ? ສັດສ່ວນຫລາຍຢູ່ໃນປະເທດຕາເວັນຕົກ ຖືກລ້ຽງຢູ່ "ໃນຟາມແບບໂຮງງານ" ສິ່ງອຳນວຍຄວາມສະດວກເຫຼົ່ານີ້ ໄດ້ຮັບການອອກແບບເພື່ອຜະລິດສັດອອກມາ ເພື່ອຈະຂ້າ ໃຫ້ໄດ້ຈຳນວນຫລາຍທີ່ສຸດ ໂດຍເສັຍຄ່າໃຊ້ ຈ່າຍໜ້ອຍທີ່ສຸດ. ສັດທັງຫລາຍຖືກນຳມາລ້ຽງຢູ່ນຳກັນຢ່າງແອອັດ ທຳໃຫ້ຮູບຮ່າງພິການໄປ ແລະໄດ້ຮັບການປະຕິບັດ ເໝືອນກັບມັນເປັນເຄື່ອງຈັກ ສຳລັບປ່ຽນອາຫານທີ່ມັນກິນເຂົ້າໄປໃຫ້ເປັນເນື້ອ.ເລື້ອງນີ້ເປັນຄວາມຈິງ ທີ່ພວກເຮົາສ່ວນໃຫຍ່ຈະບໍ່ເຄີຍໄດ້ເຫັນດວ້ຍຕາຂອງເຮົາເອງ. ເຄີຍມີຄົນເວົ້າວ່າ" ພຽງແຕ່ເຂົ້າໄປເບິ່ງໂຮງຂ້າສັດ ຄັ້ງນຶ່ງກໍ່ອາດທຳໃຫ້ທ່ານ ເປັນມັງສະວິລັດໄປຕະຫລອດຊີວິດ ".ລີໂອ ໂຕນສະຕອຍ ໄດ້ເວົ້າວ່າ" ຕາບໃດທີ່ຍັງມີໂຮງຂ້າສັດ ຕາບນັ້ນກໍ່ຈະຍັງມີສົງຄາມ ອາຫານມັງສະວິລັດເປັນບົດທົດສອບ ອັນເຂັ້ມ ງວດສຳລັບຄວາມມີມະນຸດ ສະທຳຂອງມະນຸດ " ເຖິງແມ່ນວ່າພວກເຮົາສ່ວນຫລາຍຈະບໍ່ຍິນຍອມໃຫ້ມີການຂ້າ. ແຕ່ພວກເຮົາກໍ່ຄ່ອຍໆ ພັດທະນານິໄສໃນການກິນຊີ້ນຢ່າງເຄີຍຊິນ,ໂດຍການສະນັບສະໜູນຂອງສັງຄົມຮອບຂ້າງ ໂດຍບໍ່ໄດ້ຮູ້ ຫລືບໍ່ໄດ້ສົນໃຈ ຄວາມຈິງຫຍັງເລີຍວ່າ ສັດທີ່ເຮົາກິນເຂົ້າໄປນັ້ນໄດ້ຖືກເຂົາເຮັດຫຍັງ ໃຫ້ມັນແດ່ ມາແລ້ວ.

# ກຸ່ມເພື່ອນນັກບຸນ

ຕັ້ງແຕ່ມີການເລີ້ມຕົ້ນຂອງປະວັດສາດທີ່ຖືກບັນທຶກໄວ້ເຮົາຈະເຫັນໄດ້ວ່າພືດເປັນອາຫານທຳມະຊາດຂອງມະນຸດຕະຫລອດມາ.ໃນຕຳນານຂອງກຣີກແລະຮີບບຣູລ້ວນແຕ່ຊຽນບັນຍາຍວ່າມະນຸດເຮົາແຕ່ເດີມນັ້ນກິນຜົນລະໄມ້ພະສິງຂອງອີຢິບໃນສະໄໝບູຮານບໍ່ເຄີຍກິນຊີ້ນສັດນັກປຣັດສະຍາຜູ້ໂດ່ງດັງແລະມີຊື່ສຽງຂອງກຣີກຫລາຍຄົນ ເຊັ່ນ: ປລາໂຕ,ໄດໂອເຈນີສ,ແລະໂສກະຣາຕີສ ລ້ວນສິ່ງເສີມໃຫ້ກິນມັງສະວິລັດ.

ໃນປະເທດອິນເດັຍ **ພຣະສາກະຍະມຸນີ ພຸດທະເຈົ້າ** ໄດ້ເນັ້ນຄວາມສຳຄັນຂອງອະຫິງສາ(Ahinsa) ຄືກົດທີ່ບໍ່ທຳຮ້າຍຕໍ່ສິ່ງມີຊີວິດ ທ່ານເຕືອນບໍ່ໃຫ້ສິດທັງຫລາຍ ຂອງພຣະອົງກິນຊີ້ນສັດ ໂດຍຢ້ານວ່າສິ່ງ ທີ່ມີຊີວິດທັງຫລາຍຈະເກີດການຢ້ານກົວພວກເຂົາ**ທ່ານໄດ້ຕັດໄວ້ດັ່ງນີ້:"ການກິນຊີ້ນສັດນັ້ນເປັນພຽງນິໄສທີ່ສະສົມມາຢ່າງນີ້ງເທົ່ານັ້ນໃນຕອນທຳອິດນັ້ນພວກເຮົາບໍ່ໄດ້ເກີດມາເພື່ອຈະກິນຊີ້ນສັດຄົນທີ່ກິນຊີ້ນສັດຈະທຳລາຍເມັດພັນພືດແຫ່ງຄວາມເມດຕາທຳຂອງພວກເຂົາເອງຄົນທີ່ກິນຊີ້ນສັດຈະຂ້າກັນໄປຂ້າກັນມາແລະກິນກັນໄປກິນກັນມາ...ຊາດນີ້ຂອ້ຍກິນເຈົ້າຊາດໜ້າເຈົ້າກິນຂ້ອຍ...ເປັນແບບນີ້ຕະຫລອດໄປສະເໝີແລ້ວພວກເຂົາຈະອອກຈາກໄຕຣພູມ(ແຫ່ງມາຍາ)ນີ້ໄດ້ແນວໃດ?"**

ຜູ້ທີ່ນັບຖືເຕົາໃນຍຸກແລກໆ ແລະຜູ້ທີ່ນັບຖືສາດສະໜາຄຣິສແລະສາດສະໜາຍິວໃນຍຸກທຳອິດກໍ່ລ້ວນແຕ່ເປັນມັງສະວິລັດ ກ່ຽວກັບເລື້ອງນີ້ມີບັນທຶກໄວ້ໃນຄຳພີໄບໂບວ່າ " **ແລະພຣະຜູ້ເປັນເຈົ້າກ່າວວ່າຂ້າພຣະເຈົ້າໄດ້ໃຫ້ເມັດພັນພືດແລະຜົນລະໄມ້ນານາຊະນິດເພື່ອໃຫ້ພວກທ່ານກິນ.ແຕ່ສຳລັບສັດປ່າແລະນົກທັງຫຼາຍ.ຂ້າພຣະເຈົ້າໄດ້ໃຫ້ຫຍ້າແລະໃບຜັກທັງຫລາຍເປັນອາຫານ**"(ເຈເນຊີສ1:29)ຕົວຢ່າງອື່ນໆທີ່ຫ້າມການກິນຊີ້ນສັດໃນຄຳພີໄບໂບກໍ່ມີອີກເຊັ່ນ: " **ພວກເຈົ້າຕອ້ງບໍ່ກິນຊີ້ນສັດແລະເລືອດ ເພາະວ່າຊີວິດຢູ່ໃນເລືອດນັ້ນ** "(ເຈເນຊີສ 9:4)" **ພຣະຜູ້ເປັນເຈົ້າ ໄດ້ເວົ້າວ່າ: ໃຜບອກໃຫ້ເຈົ້າຂ້າງົວຜູ້ ແລະແກະຕົວແມ່ ມາບູຊາຂ້ອຍ? ຈົ່ງລ້າງເອົາເລືອດ ທີ່ບໍລິສຸດນັ້ນອອກຈາກຕົນໂຕເຈົ້າຊ່ຳ! ເພື່ອວ່າຂ້ອຍອາດຈະຟັງຄຳອະທິຖານຂອງເຈົ້າບໍ່ດັ່ງນັ້ນແລ້ວ. ຂອ້ຍຈະຫັນໜ້າໜີ.ເພາະວ່າມືຂອງເຈົ້າເປິະເປື້ອນໄປດວ້ຍເລືອດຈົ່ງສຳນຶກຜິດແລ້ວສາລະພາບບາບເສັຍເພື່ອວ່າຂອ້ຍຈະໄດ້ໃຫ້ອະໄພແກ່ເຈົ້າ**"ນັກບຸນແຊງໂປນ,ສິດຂອງພຣະເຍຊູຄົນນຶ່ງ,ກໍ່ໄດ້ກ່າວໄວ້ໃນຈົດໝາຍທີ່ຊຽນເຖິງຊາວໂຣມັນວ່າ " **ທາງທີ່ດີທີ່ສຸດກໍ່ຄື ບໍ່ກິນຊີ້ນສັດ ແລະບໍ່ດື່ມເຫຼົ້າແວ່ງເລີຍ** " (ໂຣມັນ14:21).

ຫວ່າງບໍ່ດົນມານີ້, ນັກປະວັດສາດໄດ້ຄົ້ນ ພົບໜັງສືບູຮານ ທີ່ໄດ້ຊຽນບັນຍາຍ ຊີວິດການເປັນຢູ່ແລະຄຳສອນຂອງພຣະເຍຊູ.ພຣະເຍຊູໄດ້ກ່າວໄວ້ວ່າ"**ຄົນທີ່ກິນຊີ້ນສັດຈະກາຍເປັນຂຸມຝັງສົບຂອງໂຕເອງ.ຂ້າພຣະເຈົ້າຂໍບອກພວກທ່ານດວ້ຍຄວາມຈິງໃຈວ່າ,ຄົນທີ່ຂ້າຜູ້ອື່ນກໍ່ຈະຕອ້ງຖືກຂ້າເຊັ່ນດຽວກັນ.ຄົນທີ່ຂ້າສິ່ງມີຊີວິດແລະກິນຊີ້ນຂອງມັນ.ຜູ້ນັ້ນກຳລັງກິນຊີ້ນຂອງຄົນຕາຍ** ".

ສາດສະໜາຕ່າງໆຂອງອິນເດັຍ ກໍ່ຫຼີກລ້ຽງການກິນຊີ້ນເຊັ່ນກັນຊຶ່ງມີກ່າວໄວ້ວ່າ"**ມະນຸດເຮົາບໍ່ມີທາງກິນຊີ້ນສັດໄດ້ຖ້າບໍ່ມີການຂ້າມັນຜູ້ທີ່ທຳຮ້າຍສັບພະສັດທັງຫຼາຍຈະບໍ່ມີວັນໄດ້ຮັບພອນຈາກພຣະເຈົ້າ.ເພາະສະນັ້ນ,ຈົ່ງຫຼີກລ້ຽງການກິນຊີ້ນສັດ** "(ກົດສາດສະໜາ ຮິນດູ).

ຄຳພີສັກສິດຂອງສາດສະໜາອິດສະລາມຄືຄຳພີກຸຣະອານ**ກໍ່ຫ້າມກິນສັດທີ່ຕາຍແລ້ວທັງເລືອດແລະເນື້ອ**"

ອາຈານ ຜູ້ຍິງໃຫຍ່ຂອງສາດສະໜາ ເຊັ້ນ ມີຊື່ວ່າ: ຮັນຊັນຈີ໊ໄດ້ຂຽນບົດກອນຕໍ່ຕ້ານການກິນຊີ້ນໄວ້ວ່າ " **ຈົ່ງຮີບໄປຕະຫຼາດ ຫາຊື້ຊີ້ນຊື້ປາ ມາໃຫ້ພັນລະຍາແລະລູກຂອງທ່ານກິນ ແຕ່ເປັນຫຍັງຊີວິດຂອງເຂົາຈື່ງຖືກຂ້າ ເພື່ອໄປບຳລຸງຊີວິດຂອງທ່ານໃຫ້ຍືນຍົງຄົງກະພັນ? ທ່ານຄິດວ່າມັນຢາກຕາຍຢູ່ເບາະ? ຫຼືມັນກໍ່ ຢາກມີຊີວິດຢູ່ ເໝືອນກັນ! ທ່ານຮູ້ບໍ່ວ່າກ່ອນມັນຈະຕາຍມັນຮູ້ສຶກແນວໃດ? ຖ້າບໍ່ຮູ້ລອງຄິດໃສ່ໂຕ ທ່ານເອງ ເບິ່ງ? ຂ້າພະເຈົ້າຄິດວ່າມັນບໍ່ມີເຫດຜົນເລີຍແລະກໍ່ບໍ່ມີຄຳພີຂອງພຣະເຈົ້າອົງໃດທີ່ຂຽນບັນຍັດໄວ້ວ່າ"ສັດເກີດມາເພື່ອເປັນອາຫານຂອງມະນຸດ"ຜູ້ທີ່ກິນຊີ້ນສັດມັນຈະທຳໃຫ້ເຂົາຜູ້ນັ້ນບໍ່ມີບຸນສຳພັນກັບສະຫວັນແຕ່ກັບຈະທຳໃຫ້ຜູ້ນັ້ນກາຍເປັນກາກຕະກອນໃນນາລົກ**".

ບຸກຄົນຜູ້ມີຊື່ສຽງໂດ່ງດັງຂອງໂລກຫລາຍຄົນເຊັ່ນ:ນັກຂຽນ,ນັກສິນລະປິນ,ນັກວິດທະຍາສາດ,ນັກປຣັດຊະຍາ,ແລະຜູ້ມີຊື່ສຽງອື່ນໆກໍ່ລ້ວນແຕ່ເປັນຜູ້ກິນມັງສະວິລັດ. ບຸກຄົນດັ່ງຕໍ່ໄປນີ້ລ້ວນແຕ່ຮັບເອົາການເປັນມັງສະວິລັດ ດ້ວຍຄວາມພູມໃຈທັງສິ້ນ ໄດ້ແກ່: ພຣະສາກະຍະມຸນີ ພຸດທະເຈົ້າ, ພຣະເຍຊູ, ເວີຈີນ, ໂອວິດ, ຮໍເຣດຊ໌,ປລາໂຕ, ເປຕຣາດ, ປີຕາກໍຣັສ, ໂສກະຣາຕີສ, ວິນລ່ຽມ ເຊັກແຄສເປັຍ, ໂວນແຕ, ເສີ ອີສັກນິວຕັນ, ລີໂອນາໂດ ດາວິນຊີ, ຊາກ ດາວິນ, ເບັນຈາມິນ ແຟຣງກຼິນ, ຣາຟ ວານໂດ ເອເມີສັນ, ເຮນຣີ ເດວິດ,ໂທໂຣ, ເອມິນ ໂຊລາ, ແບກຕຣັງ ຣຸດແຊນ, ຣິຊາກແວກເນີ, ເພີຊີ ບິດເຊ ເຊດລີ, ເອຊ ຈີ ແວວສ໌, ອານເບີດ ໄອສະໄຕນ໌, ຣາບິນດຣານາດ ຕາກໍເຣີ, ເລໂອ ໂຕນສະຕອຍ,ຈອດຈ໌ ເບີນາດ ຊໍ, ມະຮາຕະມະ ຄານທີ, ອານເບີດ ສະວິດເຊີ, ແລະໃນສະໄໝນີ້ກໍ່ມີ ໂປນ ນິວແມນ, ມາດອນນາ, ເຈົ້າຍິງໄດອານາ, ໂປນ ແມກຄານີ, ລິນເຊວາກເນີ, ແລະແຄນດິສ ເບີເກນ.

ອານເບີດ ໄອສະໄຕນ໌ໄດ້ກ່າວວ່າ"ຂ້າພະເຈົ້າຄິດວ່າການປ່ຽນແປງຈາກຜົນຂອງອາຫານມັງສະວິລັດຈະເຮັດໃຫ້ອາລົມຄວາມຮູ້ສຶກມີຄວາມບໍລິສຸດຂຶ້ນ ແລະຈະເປັນປະໂຫຍດຫລາຍທີ່ສຸດແກ່ເພື່ອນມະນຸດ. ດັ່ງນັ້ນມັນຈື່ງເປັນ ສິລິມົງຄຸນ ແລະມີສັນຕິສຸກສຳລັບມະນຸດຊາດທີ່ຈະເລືອກເອົາມັງສະວິລັດ ". ຄຳເວົ້າເລົ່ານີ້ເປັນຄຳແນະນຳ ຮ່ວມກັບຂອງນັກປຣາດ ແລະບຸກຄົນສຳຄັນຫລາຍໆທ່ານ ທັງໃນອະດີດ ແລະປັດຈຸບັນ!.

## ອາຈານຕອບຄຳຖາມ

**ຖ**: ການກິນຊີ້ນສັດມັນກໍ່ເປັນການຂ້າສັດຕັດຊີວິດຢູ່ແລ້ວ ແຕ່ວ່າການກິນພຶດຜັກກໍ່ບໍ່ແມ່ນການຂ້າແດ່ເບາະ?

**ອ**: ການກິນພຶດຜັກກໍ່ເປັນການຂ້າເຊັ່ນດຽວກັນ ແລະທຳໃຫ້ເກີດກຳກົດຂວາງເໝືອນກັນ ແຕ່ວ່າຜົນກຳນີ້ຈະ ໜ້ອຍທີ່ສຸດ ຖ້າເຮົາບຳເພັນທຳມະວິຖີ ກວນຢິນ ເປັນເວລາສອງຊົ່ວໂມງເຄິ່ງທຸກໆວັນ ກໍ່ສາມາດກຳຈັດຜົນກຳນີ້ໄດ້ ເພາະວ່າເຮົາຕ້ອງກິນເພື່ອຈະມີຊີວິດຢູ່ ດັ່ງນັ້ນ,ເຮົາຈື່ງເລືອກກິນແຕ່ສິ່ງທີ່ມີຈິດສຳນຶກໜ້ອຍທີ່ສຸດແລະເຈັບປວດທໍລະມານໜ້ອຍທີ່ສຸດ.ພືດແມ່ນປະກອບດ້ວຍທາດນ້ຳ 90% ດັ່ງນັ້ນ,ລະດັບຂອງຈິດສຳນຶກຂອງມັນຈື່ງຕ່ຳຫລາຍ ຈົນມັນເກືອບຈະບໍ່ມີຄວາມຮູ້ສຶກທໍລະມານໃດໆເລີຍ.ນອກຈາກນີ້, ເວລາທີ່ເຮົາ

ກິນຜັກຫຼາຍໆຢ່າງ ເຮົາກໍ່ບໍ່ໄດ້ລົກຮາກມັນອອກມາ ເຮົາເດັດເອົາແຕ່ໃບແລະກັບຊ່ວຍໃຫ້ມັນແຜ່ພັນແບບບໍ່ໃຊ້ເພດດວ້ຍການຕັດກິ່ງແລະໃບ.ຜົນສຸດທ້າຍ,ກໍ່ນຳຜົນປະໂຫຍດມາໃຫ້ພືດຜົນເຫຼົ່ານັ້ນ.ດັ່ງນັ້ນ,ນັກຕົກແຕ່ງສວນຈຶ່ງເວົ້າວ່າການຕັດເລັມຕົ້ນໄມ້ຈະຊ່ວຍມັນຈະເລີນເຕີບໂຕສວຍງາມຫລາຍຂື້ນ.

ສຳລັບໝາກໄມ້ກໍ່ຍິ່ງເຫັນໄດ້ແຈ້ງເວລາມັນສຸກມັນກໍ່ຈະດຶງດູດໃຫ້ຄົນມາກິນມັນໂດຍສິ່ງກິ່ນຫອມຍົວະຍວນທັງໃຊ້ສີສັນອັນສວຍງາມແລະລົດຊາດອັນຫວານແຊບຂອງມັນມາລໍ້ ແມ່ນຍອັນວິທີທາງນີ້ແຫຼະທີ່ທຳໃຫ້ມັນແຜ່ພັນຂອງມັນໄປທົ່ວຂົງເຂດອັນກວ້າງໄກ ຖ້າເຮົາບໍ່ເດັດມັນມາກິນມັນກໍ່ຈະສຸກເກີນໄປແລ້ວກໍ່ຈະລົ່ນລົງມາເນົ່າຢູ່ເທິງໜ້າດິນແກ່ນຂອງມັນກໍ່ຈະປົ່ງຂື້ນມາຫຼືຕາຍໄປໃນທີ່ສຸດ.ເພາະສະນັ້ນ,ການກິນພືດຜັກແລະໝາກໄມ້ຈຶ່ງເປັນໄປຕາມເສັ້ນສາຍຂອງທຳມະຊາດ ຊຶ່ງບໍ່ໄດ້ເຮັດໃຫ້ມັນເຈັບປວດທໍລະມານຫຍັງເລີຍ.

**ຖ**: ຄົນສວ່ນຫລາຍມີຄວາມຄິດວ່າຄົນກິນມັງສະວິລັດຈະມີຮ່າງກາຍຈ່ອຍແລະຜອມສວ່ນຄົນທີ່ກິນຊີ້ນນັ້ນຈະມີຮ່າງກາຍສູງໃຫຍ່ກວ່າ ເປັນຄວາມຈິງຫຼືບໍ່?

**ອ**: ຄົນກິນມັງສະວິລັດບໍ່ຈຳເປັນຈະມີຮ່າງຈອ່ຍແລະຜອມກວ່າສະເໝີໄປຖ້າອາຫານທີ່ກິນເຂົ້າໄປມີຄວາມສົມດຸນພວກເຂົາກໍ່ເຕີບໂຕສູງໃຫຍ່ໄດ້ເໝືອນກັນເຈົ້າເຫັນສັດຕົວໃຫຍ່ທັງຫລາຍບໍ່!ເຊັ່ນ:ງົວ,ຄວາຍ,ຊ້າງ,ມ້າ,ຍີຣາຟ,ຮິບໂປເຕມັສເປັນຕົ້ນ.ພວກມັນກິນແຕ່ພືດຜັກແລະໝາກໄມ້ແຕ່ພວກມັນກັບແຂງແຮງກວ່າສັດກິນຊີ້ນ.ແລະຍັງບໍ່ດຸຮ້າຍທັງມີປະໂຫຍດຕໍ່ມະນຸດອີກ.ສວ່ນສັດທີ່ກິນຊີ້ນທັງຫຼາຍຈະດຸຮ້າຍແລະບໍ່ມີປະໂຫຍດ.ຖ້າມະນຸດເຮົາກິນຊີ້ນສັດຫຼາຍໆກໍ່ຈະໄດ້ຮັບຜົນຈາກສັນຊາດຕະຍານເໝືອນສັດທີ່ກິນຊີ້ນນັ້ນ.ຄົນທີ່ກິນຊີ້ນນັ້ນບໍ່ຈຳເປັນຈະຕອ້ງຕົວສູງແລະແຂງແຮງສະເໝີໄປແຕ່ວ່າອາຍຸຂອງພວກເຂົາໂດຍສະເລັ່ຍແລ້ວສັ້ນເຊັ່ນ:ຊົນເຜົ່າແອສກີໂມເປັນຕົ້ນ.ພວກເຂົາອາດຈະເວົ້າວ່າເປັນເຜົ່າທີ່ກິນແຕ່ຊີ້ນສັດຢ່າງດຽວລ້ວນໆ.ແຕ່ພວກເຂົາສູງໃຫຍ່ ແລະແຂງແຮງບໍ່? ອາຍຸຍືນບໍ່? ເລື້ອງນີ້ ຂ້າພະເຈົ້າຄິດວ່າທ່ານຄົງຈະເຂົ້າໃຈແຈ້ງ.

**ຖ**: ຄົນກິນມັງສະວິລັດຈະກິນໄຂ່ໄດ້ບໍ່?

**ອ**: ບໍ່,ເວລາເຮົາກິນໄຂ່ເຮົາຈະຂ້າສັດຕັດຊີວິດດວ້ຍບາງຄົນເວົ້າວ່າໄຂ່ທີ່ຂາຍຢູ່ທ້ອງຕະຫລາດນັ້ນເປັນໄຂ່ທີ່ບໍ່ໄດ້ຮັບເຊື້ອເລີຍ.ສະນັ້ນການກິນໄຂ່ຈຶ່ງບໍ່ແມ່ນການຂ້າສັດ.ນີ້ເມື່ອຟັງເບິ່ງແລ້ວຄືວ່າມັນຖືກຕ້ອງໄຂ່ທີ່ບໍ່ໄດ້ຮັບເຊື້ອນັ້ນເປັນເພາະມັນບໍ່ມີໂອກາດບໍ່ມີສະພາບແວດລ້ອມທີ່ເໝາະສົມໃຫ້ມັນຖືກປະສົມພັນ.ດັ່ງນັ້ນ,ມັນຈຶ່ງບໍ່ສາມາດພັດທະນາໄປເປັນໄກ່ຕົວນຶ່ງໄດ້,ຕາມກົດທຳມະຊາດຂອງມັນ.ແຕ່ເຖີງແມ່ນວ່າມັນຍັງບໍ່ພັດທະນາແບບນີ້ແຕ່ມັນກໍ່ຍັງຄົງມີພະລັງຊີວິດທີ່ມີຢູ່ແຕ່ກຳເນີດສຳລັບການພັດທະນານີ້ຢູ່.ເຮົາຮູ້ວ່າໄຂ່ມີພະລັງຊີວິດແຕ່ກຳເນີດຖ້າບໍ່ແມ່ນແນວນັ້ນເປັນຫຍັງໄຂ່ຈຶ່ງເປັນເຊວ(cell)ຊະນິດດຽວທີ່ສາມາດແພ່ເຊື້ອສືບພັນ(ປະຕິສົນທິ)ໄດ້ລະ? ບາງຄົນບອກວ່າໄຂ່ມີສານອາຫານທີ່ຈຳເປັນມີໂປຣຕີນຟົດສະຟໍຣັສທີ່ຈຳເປັນຕໍ່ຮ່າງກາຍມະນຸດແຕ່ເຕົາຫູ້ກໍ່ມີເໝືອນກັນແລະຟົດສະຟໍຣັສ ກໍ່ມີຢູ່ໃນຜັກຫຼາຍຢ່າງເຊັ່ນ:ມັນຝຣັ່ງ.

ເຮົາຮູ້ກັນດີວ່າ,ຕັ້ງແຕ່ສະໄໝບູຮານມາຈົນກະທັ້ງຮອດປັດຈຸບັນນີ້ມີພຣະສົງສຳຄັນໆຫລາຍທ່ານທີ່ບໍ່ກິນຊີ້ນຫລືໄຂ່ຊຶ່ງມີອາຍຸຍືນທີ່ສຸດເຊັ່ນ:ພຣະອາຈານອີ້ງກວາງແຕ່ລະມື້ທ່ານຈະມີແຕ່ຜັກນຶ່ງຖ້ວຍກັບເຂົ້າເທົ່ານັ້ນ.ແຕ່ທ່ານກໍ່ມີອາຍຸຍືນເຖີງແປດສິບກວ່າປີ.ນອກຈາກນີ້,ໄຂ່ແດງຍັງມີຄໍແລດສະເຕີໂຣນສູງຫຼາຍຊຶ່ງເປັນສາເຫດສຳຄັນຂອງໂຣກຫຼອດເລືອດຫວົໃຈ.ຊຶ່ງເປັນໂຣກທີ່ຂ້າຊີວິດເປັນອັນດັບນຶ່ງຢູ່ຟຣັ່ງໂມຊາແລະສະຫະລັດອາເມລິ

ກາ ຈຶ່ງບໍ່ໜ້າແປກໃຈເລີຍທີ່ຜູ້ປ່ວຍຢູ່ໃນໂຮງພະຍາບານສ່ວນໃຫຍ່ ເປັນຜູ້ທີ່ກິນໄຂ່.

**ຖ**: ຄົນເຮົາລ້ຽງສັດຕ່າງໆເຊັ່ນ:ງົວ,ຄວາຍ,ໝູ,ເປັດ,ໄກ່, ເປັນຕົ້ນ ເປັນຫຍັງເຮົາຈຶ່ງກິນມັນບໍ່ໄດ້ລະ?

**ອ**: ເອີ!ພໍ່ແມ່ລ້ຽງລູກໃຫຍ່ຂຶ້ນມາ.ແລ້ວຄັນຊັ້ນ,ພໍ່ແມ່ມີສິດກິນລູກຂອງໂຕເອງບໍ່?ສິ່ງທີ່ມີຊີວິດທຸກຢ່າງມີສິດທີ່ຈະມີຊີວິດ.ແລະບໍ່ມີໃຜທີ່ຄວນຈະໄປຕັດຮອນຊີວິດຂອງພວກເຂົາຈາກສິ່ງນີ້.ຖ້າພວກເຮົາເບິ່ງກົດໝາຍຂອງຮົງກົງ ທີ່ມີ ບັນຍັດໄວ້ ແມ່ນແຕ່ຂ້າໂຕເອງຕາຍ ກໍ່ຍັງຜິດກົດໝາຍ.ດັ່ງນັ້ນ,ການຂ້າສິ່ງທີ່ມີຊີວິດ ແລ້ວມັນຈະຜິດກົດໝາຍຫລາຍຊໍ່າໃດ?

**ຖ**: ສັດເກີດມາເພື່ອໃຫ້ຄົນກິນ ຖ້າເຮົາບໍ່ກິນມັນ ມັນຈະບໍ່ມີລົ້ນໂລກ.ບໍ່ແມ່ນເບາະ?

**ອ**: ອັນນີ້ເປັນຄວາມຄິດທີ່ໜ້າຫົວຂວັນ ແລະບໍ່ມີສາລະ. ກ່ອນທີ່ເຈົ້າຈະຂ້າສັດ ເຈົ້າເຄີຍຖາມມັນວ່າມັນຢາກໃຫ້ເຈົ້າຂ້າແລະກິນມັນຫລືບໍ່?ສິ່ງທີ່ມີຊີວິດທຸກຊະນິດລ້ວນແຕ່ຢາກມີຊີວິດແລະຮັກຕົວເອງແລະກໍ່ຢ້ານຕາຍກັນທັງນັ້ນ.ເຮົາບໍ່ຢາກໃຫ້ເສືອກິນເຮົາ ແລ້ວເປັນຫຍັງສັດອື່ນໆຈຶ່ງສົມຄວນຈະໃຫ້ມະນຸດກິນມັນ? ໂລກນີ້,ຫາກໍ່ມີມະນຸດເກີດຂຶ້ນປະມານພຽງແຕ່ໝື່ນປີມານີ້.ກ່ອນໜ້າຈະມີມະນຸດເກີດຂຶ້ນກໍ່ມີສັດຫລາຍຊະນິດອາໄສຢູ່ກ່ອນແລ້ວ.ແລ້ວມັນລົ້ນໂລກຫລືບໍ່?ສິ່ງທີ່ມີຊີວິດຈະຮັກສາສົມມະດຸນທາງນິເວດວິທະຍາຕາມທຳມະຊາດຂອງມັນຢູ່ແລ້ວ.ເມື່ອໃດຫາກມີອາຫານໜ້ອຍ,ມີເນື້ອທີ່ຈຳກັດກໍ່ຈະເປັນສາເຫດໃຫ້ມີການລົດຈຳນວນຂອງປະຊາກອນລົງຢ່າງຫລວງຫລາຍ.ຈຶ່ງມີວິທີການຮັກສາປະລິມານປະຊາກອນໃຫ້ຢູ່ໃນຈຳນວນທີ່ເໝາະສົມ.

**ຖ**: ເປັນຫຍັງ ຂ້ອຍຈຶ່ງສົມຄວນເປັນມັງສະວິລັດ?

**ອ**: ຂ້າພະເຈົ້າເອງເປັນມັງສະວິລັດ ກໍ່ເພາະພຣະເຈົ້າຜູ້ສະຖິດຢູ່ພາຍໃນຕົວຂອງຂ້າພະເຈົ້າ ຕ້ອງການໃຫ້ຂ້າພະເຈົ້າເປັນເຊັ່ນນັ້ນ.ເຂົ້າໃຈບໍ່?ການກິນຊີ້ນເປັນການຂັດກັບກົດຈັກກະວານຂອງການບໍ່ຢາກໃຫ້ຖືກຂ້າ. ພວກເຮົາທຸກຄົນກໍ່ບໍ່ຢາກໃຫ້ຖືກຂ້າແລະພວກເຮົາເອງກໍ່ບໍ່ຢາກໃຫ້ຖືກໂຈນປູ້ນ.ບາດນີ້,ຖ້າວ່າເຮົາຫາກເຮັດສິ່ງນັ້ນຕໍ່ຜູ້ອື່ນ,ນັ້ນກໍ່ໝາຍຄວາມວ່າການເຄື່ອນໄຫວຂອງພວກເຮົາມັນຂັດແຍ້ງກັນກັບຕົວເຮົາເອງ,ແລະສິ່ງນັ້ນມັນກໍ່ຈະທຳໃຫ້ເຮົາເກີດຄວາມທຸກທໍລະມານທຸກສິ່ງທຸກຢ່າງທີ່ເຮົາກະທຳລົງໄປນັ້ນຫາກຝ່າຝືນກັບຄວາມຮູ້ສຶກຂອງຄົນອື່ນມັນຈະກັບມາສະໜອງຄືນໃຫ້ແກ່ໂຕເຮົາເອງ.ທ່ານ,ບໍ່ສາມາດກັດໂຕເອງແລະທ່ານກໍ່ບໍ່ຄວນແທງໂຕເອງ.ທຳນອງດຽວກັນ,ທ່ານກໍ່ບໍ່ຄວນຂ້າ,ເພາະການເຮັດແບບນັ້ນມັນເປັນການຝືນຕໍ່ກົດແຫ່ງຊີວິດ.ເຂົ້າໃຈບໍ່?ມັນຈະທຳໃຫ້ເຮົາທຸກທໍລະມານ.ດັ່ງນັ້ນ,ເຮົາບໍ່ຄວນຈະກະທຳເຊັ່ນນັ້ນ.ມັນບໍ່ໄດ້ໝາຍຄວາມວ່າເຮົາຈຳກັດເຮົາເອງບໍ່ໃຫ້ໄປພຸ້ນໄປພີ້.ມັນໝາຍຄວາມວ່າ ເຮົາເອື້ອເຟື້ອເພື່ອແຜ່ ຊີວິດຂອງເຮົາເອງຕໍ່ສັບພະສັດອື່ນໆທຸກຊະນິດ. ຊີວິດຂອງເຮົາຈະບໍ່ຖືກຈຳກັດຢູ່ແຕ່ໃນຮ່າງກາຍນີ້ເທົ່ານັ້ນ,ແຕ່ຈະຂະຫຍາຍອອກໄປສູ່ຊີວິດຂອງສັດຕ່າງໆແລະສັບພະສິ່ງທີ່ມີຊີວິດທັງປວງ.ນັ້ນແຫລະ,ມັນຈະເຮັດໃຫ້ໂຕຂອງເຮົາເອງຮູ້ສຶກວ່າມີຄວາມພາກພູມໃຈ,ມີຄວາມສຸກແລະເອກອ້າງຂຶ້ນ ແລະກໍ່ບໍ່ຈຳກັດໂຕເອງ. ໂອເຄ?

**ຖ**: ຂໍໃຫ້ທ່ານຊ່ວຍເວົ້າເຖິງການກິນມັງສະວິລັດແລະສິ່ງເຫຼົ່ານີ້ມີສ່ວນຊ່ວຍໃຫ້ເກີດສັນຕິພາບໂລກໄດ້ແນວໃດ?

**ອ**: ໄດ້!ທ່ານເຄີຍເຫັນມາແລ້ວວ່າ,ສົງຄາມສ່ວນໃຫ່ຍເກີດຂຶ້ນແມ່ນສືບເນື່ອງມາຈາກເຫດຜົນທາງດ້ານເສດຖະກິດ.ເຮົາຄວນກ້າປະເຊີນໜ້າກັບຄວາມຈິງນີ້.ຄວາມຫຍຸ້ງຍາກທາງດ້ານເສດຖະກິດຂອງປະເທດໃດປະເທດນຶ່ງຈະກາຍເປັນບັນຫາອັນຮີບຮ້ອນກະທັນຫັນທັນທີຖ້າເກີດມີການຫິວໂຫຍ,ເກີດການຂາດແຄນອາຫານ,ຫລືຂາດແຄນຍ້ອນການແຈກຢາຍອາຫານທີ່ບໍ່ເທົ່າທຽມກັນລະຫວ່າງປະເທດຕ່າງໆ.ຖ້າທ່ານຫາກມີເວລາອ່ານນິດຕະຍະສານແລະລອງສຶກສາເບິ່ງຄວາມເປັນຈິງຕ່າງໆກ່ຽວກັບອາຫານມັງສະວິລັດ ແລ້ວທ່ານກໍ່ຈະຮູ້ເລື້ອງນີ້ໄດ້ດີ.ການລ້ຽງສັດເພື່ອເອົາຊີ້ນມາເປັນອາຫານນັ້ນເປັນສາເຫດໃຫ້ເສດຖະກິດລົ້ມລະລາຍໃນທຸກດ້ານ.ທຳໃຫ້ເກີດຄວາມຫິວໂຫຍໄປທົ່ວໂລກ.ຢ່າງນ້ອຍຢູ່ໃນກຸ່ມປະເທດທີ່ສາມ.

ບໍ່ແມ່ນຂ້າພະເຈົ້າຄິດເວົ້າເລື້ອງນີ້ຂຶ້ນມາເປັນຄົນອາເມລິກາຄົນນຶ່ງຊຶ່ງເຮັດການຄົ້ນຄວ້າວິໄຈແລະຂຽນປື້ມກ່ຽວກັບເລື້ອງນີ້.ທ່ານສາມາດໄປເບິ່ງຕາມຮ້ານຂາຍປື້ມຕ່າງໆກໍ່ໄດ້ແລ້ວຊອກອ່ານເບິ່ງວຽກວິໄຈທີ່ກ່ຽວກັບອາຫານມັງສະວິລັດ ລວມທັງການຄົ້ນຄວ້າວິໄຈຂັ້ນຕອນການຜະລິດອາຫານກໍ່ໄດ້.ຫຼືຈະອ່ານໜັງສືເລື້ອງ "**ອາຫານສຳລັບອາເມລິກາຍຸກໃໝ່**" ທີ່ຂຽນໂດຍຈອ໋ນໂຣບິນ.ລາວເປັນມະຫາເສດຖີທີ່ມີຊື່ສຽງຜູ້ນຶ່ງຈາກກິດຈະການໄອສະຄຣີມ.ລາວເລີກທຸກສິ່ງທຸກຢ່າງເພື່ອຫັນມາກິນມັງສະວິລັດແລະຂຽນປື້ມກ່ຽວກັບມັງສະວິລັດ. ທັ້ງໆທີ່ມັນເປັນການຂັດແຍ້ງກັບປະເພນີຂອງຄອບຄົວແລະກິດຈະການຂອງລາວ.ລາວຕອ້ງສູນເສັຍເງິນໄປເປັນຈຳນວນຫຼວງຫລາຍແລະກິດຈະການຂອງລາວ.ແຕ່ລາວກໍ່ເຮັດໄປເພື່ອເຫັນແກ່ເຫດຜົນຂອງຄວາມເປັນຈິງ.ປື້ມຫົວນັ້ນດີຫລາຍ.ຍັງມີປື້ມແລະນິດຕະຍະສານອື່ນໆອີກຫລາຍເຫລັ້ມຊຶ່ງສາມາດໃຫ້ຂໍ້ມູນແລະຄວາມເປັນຈິງກ່ຽວກັບອາຫານມັງສະວິລັດ.ລວມທັງວິທີການທີ່ອາຫານມັງສະວິລັດສາມາດຊ່ວຍໃຫ້ເກີດສັນຕິພາບຂຶ້ນໃນໂລກ.

ທ່ານຄົງຈະຮູ້ແລ້ວວ່າ,ເຮົາເອົາອາຫານຂອງເຮົາເກືອບທັງໝົດໄປລ້ຽງສັດ.ທ່ານຮູ້ບໍ່ວ່າ,ເຮົາຕ້ອງສູນເສັຍໂປຣຕີນ,ຢາ,ນ້ຳທີ່ໃຊ້ກິນ,ກຳລັງຄົນ,ລົດເກງ,ລົດບັນທຸກໜັກ,ການສ້າງຖະໜົນແລະຕອ້ງໃຊ້ເນື້ອທີ່ດິນເປັນຫລາຍແສນເຮັກຕາໄປຢ່າງເປົ່າປະໂຫຍດ.ກອ່ນທີ່ງົວໂຕນຶ່ງຈະໃຫຍ່ຂຶ້ນມາເປັນອາຫານເພື່ອຄາບເຂົ້າຄາບນຶ່ງ. ເຂົ້າໃຈບໍ່?ສິ່ງຕ່າງໆເຫຼົ່ານີ້ສາມາດນຳໄປແຈກຢາຍໃຫ້ຜູ້ຄົນໃນປະເທດທີ່ສາມກໍ່ໄດ້.ແລ້ວເຮົາກໍ່ສາມາດແກ້ບັນຫາເລື້ອງຂາດແຄນອາຫານໄດ້.ສຳລັບຕອນນີ້,ຫາກປະເທດໃດປະເທດນຶ່ງຫາກຕ້ອງການອາຫານກໍ່ອາດຈະເຂົ້າໄປຮຸກຮານປະເທດອື່ນເພື່ອຊ່ວຍປະຊາຊົນຂອງໂຕເອງໃຫ້ລອດ.ການໃຊ້ວິທີນີ້,ມັນເປັນການສ້າງກຳແລະທຳໃຫ້ເກີດການຈອງເວນຈອງກຳແກ້ແຄ້ນຊຶ່ງກັນແລະກັນໃນເວລາຍາວນານ. ເຂົ້າໃຈບໍ່?

"**ຫວ່ານພືດແນວໃດກໍ່ຈະໄດ້ຮັບຜົນແນວນັ້ນ**"ຖ້າເຮົາຫາກຂ້າໃຜເພື່ອຍາດແຍ່ງເອົາອາຫານເຮົາກໍ່ຈະຖືກຂ້າດວ້ຍເຫດຜົນເລື້ອງອາຫານໃນເວລາຕໍ່ມາ.ອາດຈະອອກມາໃນຮູບແບບອື່ນໆໃນຊວ່ງຂອງຊີວິດຂ້າງໜ້າຫລືໃນບັ້ນທ້າຍຂອງຊີວິດຕໍ່ໄປ.ມັນເປັນເລື້ອງທີ່ໜ້າສະລົດໃຈ,ພວກເຮົາສະຫຼຽວສະຫຼາດທັງມີອາລິຍະທຳສູງສົ່ງ. ແຕ່ພວກເຮົາ ສວ່ນໃຫຍ່ກໍ່ຍັງບໍ່ຮູ້ວ່າເປັນຫຍັງປະເທດ ເພື່ອນບ້ານຂອງເຮົາ ຈຶ່ງໄດ້ຮັບຄວາມທຸກທໍລະມານ. ມັນກໍ່ເນື່ອງມາຈາກປາກຂອງເຮົາ,ລີ້ນຂອງເຮົາ,ແລະກະເພາະຂອງເຮົາ.ພຽງເພື່ອລ້ຽງຮ່າງກາຍຮ່າງດຽວຂອງເຮົາເຮົາກໍ່ຂ້າສິ່ງຕ່າງໆໄປຢ່າງຫລວງຫລາຍ.ເຮັດໃຫ້ເພື່ອນມະນຸດຈຳນວນຫລວງຫລາຍຕ້ອງອຶດຢາກ.ອັນນີ້, ເຮົາຍັງບໍ່ທັນໄດ້ເວົ້າເຖິງສັດເທື່ອຊ້ຳ.ເຂົ້າໃຈບໍ່?ແລ້ວຄວາມຜິດອັນນີ້ບໍ່ວ່າເຮົາຈະທຳໄປໂດຍຮູ້ຕົວຫຼືບໍ່ຮູ້ຕົວກໍ່

ຕາມ,ມັນກໍ່ຈະທັບຖົມລົງບົນຈິດສຳນຶກຂອງເຮົາແລ້ວຈະທຳໃຫ້ເຮົາຕ້ອງໄດ້ຮັບຄວາມທຸກທໍລະມານຈາກໂຣກມະເລງ,ຈາກວັນນະໂຣກປອດ,ແລະໂຣກທີ່ຮັກສາບໍ່ຫາຍອື່ນໆ,ລວມທັງໂຣກເອດສ໌ດ້ວຍ.ລອງຖາມເບິ່ງຕົວເຮົາເອງເບິ່ງດູ່ວ່າເປັນຫຍັງປະເທດອາເມລິກາຂອງພວກທ່ານຈຶ່ງໄດ້ຮັບຄວາມທໍລະມານຫລາຍກວ່າເພິ່ນ?ມີອັດຕາການເກີດໂຣກມະເລງສູງກວ່າໝູ່ຢູ່ໃນໂລກກໍ່ເພາະຄົນອາເມລິກັນກິນຊີ້ນຫລາຍທີ່ສຸດ.ພວກເຂົາກິນຊີ້ນຫຼາຍກວ່າປະເທດອື່ນໆອີກ.ລອງຖາມທ່ານເອງລອງເບິ່ງວ່າເປັນຫຍັງປະເທດຈີນຫຼືປະເທດຄອມມິວນິດອື່ນໆຈຶ່ງບໍ່ມີອັດຕາການເກີດຂອງໂຣກມະເລງສູງກໍ່ເພາະເຂົາເຈົ້າບໍ່ໄດ້ກິນຊີ້ນກັນຫລາຍ.ເຂົ້າໃຈບໍ່?ເລື້ອງນີ້ເປັນສິ່ງທີ່ໄດ້ມາຈາກການຄົ້ນຄວ້າວິໄຈ,ບໍ່ແມ່ນຂ້າພະເຈົ້າເປັນຄົນເວົ້າຂື້ນມາເອງ ໂອເຄ?ຢ່າມາຕຳນິຂ້າພະເຈົ້າເດີ!

**ຖ**: ຜົນປະໂຫຍດທາງຈິດ ອັນໃດແດ່ ທີ່ພວກເຮົາໄດ້ຮັບຈາກການເປັນມັງສະວິລັດ?

**ອ**: ຂ້າພະເຈົ້າຮູ້ສຶກຍິນດີທີ່ເຈົ້າຖາມຄຳຖາມແບບນີ້,ເພາະສະແດງວ່າເຈົ້າຕັ້ງໃຈຫຼືສົນໃຈກ່ຽວກັບຜົນປະໂຫຍດທາງຈິດ. ເມື່ອເວລາ ຄົນອື່ນຖາມກ່ຽວກັບອາຫານ ມັງສະວິລັດ ຄົນສ່ວນຫລາຍຈະສົນໃຈແຕ່ ເລື່ອງສຸຂະພາບ, ອາຫານ, ແລະຮູບຮ່າງໜ້າຕາ. ອາຫານມັງສະວິລັດຕໍ່ລັກສະນະດ້ານຈິດວິນຍານແລ້ວເປັນອາຫານທີ່ສະອາດທີ່ສຸດ ແລະບໍ່ແຝງດ້ວຍຄວາມຮູນແຮງ.

"**ເຈົ້າຕອ້ງບໍ່ຂ້າ**"ເມື່ອພຣະເຈົ້າເວົ້າກັບເຮົາເຊັ່ນນີ້.ທ່ານບໍ່ໄດ້ເວົ້າວ່າຢ່າຂ້າຄົນທ່ານເວົ້າວ່າຢ່າຂ້າສິ່ງທີ່ມີຊີວິດຕ່າງໆທ່ານໄດ້ບອກພວກເຮົາໄວ້ແລ້ວບໍ່ແມ່ນເບາະ!ວ່າ:ທ່ານສ້າງສັດໃຫຍ່ນ້ອຍທັງຫລາຍຂື້ນມາກໍ່ເພາະໃຫ້ມາເປັນເພື່ອນຂອງພວກເຮົາເພື່ອຊວ່ຍພວກເຮົາ?ທ່ານບໍ່ໄດ້ມອບສັດຕ່າງໆໃຫ້ເຮົາດູແລເບາະ?ທ່ານກ່າວໄວ້ວ່າ,ຈົ່ງດູແລມັນຈົ່ງປົກຄອງມັນ.ເມື່ອເວລາເຈົ້າປົກຄອງປະຊາຊົນຂອງເຈົ້າຈະຂ້າຄົນຂອງເຈົ້າແລະກິນຄົນຂອງເຈົ້າບໍ່?ຖ້າເຈົ້າເຮັດແບບນັ້ນເຈົ້າກໍ່ຈະກາຍເປັນກະສັດຊົ່ວບໍ່ມີໃຜຈະຢູ່ນຳໄດ້.ຕອນນີ້,ເຈົ້າຄືຈະເຂົ້າໃຈແລ້ວນໍ້!ວ່າພຣະເຈົ້າເພິ່ນໄດ້ກ່າວໄວ້ວ່າແນວໃດ.ພວກເຮົາຕອ້ງປະຕິບັດຕາມບໍ່ຈຳເປັນວ່າຈະຕ້ອງໄປຖາມຄຳຖາມແມ່ນຫຍັງອີກ.ທ່ານໄດ້ເວົ້າຢ່າງແຈ່ມແຈ້ງແລ້ວ.ແຕ່ຜູ້ໃດທີ່ຈະເຂົ້າໃຈພຣະເຈົ້າໄດ້ນອກຈາກພຣະເຈົ້າ?

ດັ່ງນັ້ນ,ເຈົ້າຕ້ອງເປັນພຣະເຈົ້າເພື່ອຈະໄດ້ເຂົ້າໃຈພຣະເຈົ້າໄດ້.ຂ້າພະເຈົ້າ,ຂໍເຊື້ອເຊີນທ່ານເພື່ອໃຫ້ກັບມາເປັນພຣະເຈົ້າອີກຄັ້ງນຶ່ງເປັນຕົວຕົນຂອງທ່ານເອງບໍ່ເປັນຜູ້ອື່ນອີກ.ການນັ່ງສະມາທິເຖິງພຣະເຈົ້າບໍ່ໄດ້ໝາຍຄວາມວ່າທ່ານກາບໄຫ້ວແລະບູຊາພຣະເຈົ້າແຕ່ໝາຍຄວາມວ່າທ່ານບຳເພັນເພື່ອກັບກາຍເປັນພຣະເຈົ້າອີກ.ທ່ານຈະໄດ້ຮັບຮູ້ວ່າຕົວຂອງທ່ານເອງແລະພຣະເຈົ້ານັ້ນແມ່ນນຶ່ງດຽວກັນ."**ເຮົາແລະພຣະບິດາເປັນນຶ່ງດຽວກັນ**" ພຣະເຍຊູໄດ້ກ່າວໄວ້ແບບນັ້ນແມ່ນຫຼືບໍ່?ຖ້າທ່ານກ່າວວ່າທ່ານແລະພຣະບິດາຂອງທ່ານເປັນນຶ່ງດຽວກັນ.ເຮົາແລະພຣະບິດາອົງນັ້ນກໍ່ສາມາດເປັນນຶ່ງດຽວກັນໄດ້ດ້ວຍເພາະເຮົາກໍ່ເປັນລູກໆຂອງພຣະເຈົ້າເໝືອນກັນ.ພຣະເຍຊູຍັງໄດ້ກ່າວໄວ້ວ່າບໍ່ວ່າທ່ານຈະເຮັດຫຍັງລົງໄປກໍ່ຕາມເຮົາກໍ່ສາມາດເຮັດໄດ້ດີກວ່າທ່ານອີກຊ້ຳ.ເພາະສະນັ້ນ,ເຮົາກໍ່ອາດດີກວ່າພຣະເຈົ້າກໍ່ຍັງໄດ້.ໃຜຈະໄປຮູ້?

ເປັນຫຍັງຈຶ່ງໄປກາບໄຫ້ວພຣະຜູ້ເປັນເຈົ້າໃນເມື່ອເຮົາບໍ່ໄດ້ຮູ້ຫຍັງເລີຍກ່ຽວກັບພຣະຜູ້ເປັນເຈົ້າ?ເປັນຫຍັງຈຶ່ງໃຊ້ຄວາມເຊື່ອຢ່າງມືດບອດລະ?ກອ່ນອື່ນເຮົາກໍ່ຕ້ອງຮູ້ວ່າເຮົາກຳລັງກາບໄຫ້ວບູຊາຫຍັງຢູ່,ກໍ່ເໝືອນກັນກັບທີ່ເຮົາຕ້ອງຮູ້ຈັກຍິງສາວທີ່ເຮົາກຳລັງຈະແຕ່ງງານດວ້ຍ,ກ່ອນທີ່ເຮົາຈະຕົກລົງໃຈແຕ່ງງານກັບນາງຈິງໆ.ໃນປັດຈຸບັນນີ້,ມັນເປັນທຳນຽມທີ່ປະຕິບັດກັນທົ່ວໄປແລ້ວວ່າ ກອ່ນຈະແຕ່ງງານກັນນັ້ນກໍ່ຕອ້ງໄດ້ອອກເດດທຳ

ຄວາມຮູ້ຈັກກັນກ່ອນ.ແລ້ວເປັນຫຍັງເຮົາຈຶ່ງໄປກາບໄຫ້ວບູຊາພຣະເຈົ້າດ້ວຍຄວາມເຊື່ອອັນມືດບອດລະ?ເຮົາມີສິດທີ່ຈະຮຽກຮອ້ງໃຫ້ພຣະເຈົ້າມາປາກົດໃຫ້ເຮົາເຫັນໃຫ້ເຮົາຮູ້ຈັກພຣະອົງກ່ອນແລະເຮົາເອງກໍ່ມີສິດທີ່ຈະເລືອກ ວ່າຈະເຊື່ອພຣະເຈົ້າອົງໃດ.

ບາດນີ້,ທ່ານຄົງຈະເຂົ້າໃຈແລ້ວວ່າຢູ່ໃນຄຳພີໄບໂບນັ້ນແມ່ນໄດ້ເວົ້າແຈ້ງທີ່ສຸດວ່າພວກເຮົາຄວນຕ້ອງເປັນມັງສະວິລັດ ຍ້ອນເຫດຜົນທາງສຸຂະພາບທັງໝົດ.ພວກເຮົາຄວນຕອ້ງເປັນມັງສະວິລັດ ຍ້ອນເຫດຜົນທາງວິທະຍາສາດ. ພວກເຮົາຄວນຕອ້ງເປັນມັງສະວິລັດ ຍອ້ນເຫດຜົນທາງເສດຖະກິດ. ພວກເຮົາຄວນເປັນມັງສະວິລັດຍ້ອນເຫດຜົນແຫ່ງຄວາມເມດຕາທຳທັງຫຼາຍ,ພວກເຮົາຄວນເປັນມັງສະວິລັດລວມທັງເປັນການຊ່ວຍເຫຼືອໂລກໃຫ້ລອດ.ດັ່ງນັ້ນ,ພວກເຮົາຄວນເປັນມັງສະວິລັດ.ໄດ້ມີກ່າວໄວ້ຢູ່ໃນງານວິໄຈວ່າ,ຖ້າຄົນທາງແຖບຕາເວັນຕົກແລະໃນອາເມລິກາ,ຫາກກິນມັງສະວິລັດພຽງອາທິດລະນຶ່ງຄັ້ງ.ພວກເຮົາກໍ່ສາມາດຊ່ວຍເຫຼືອຄົນທີ່ອົດຢາກໄດ້ເຖິງສິບຫົກລ້ານຄົນທຸກໆປີ.ດັ່ງນັ້ນ,ເປັນວິລະບູລຸດກໍ່ຄືເປັນມັງສະວິລັດ.ຕໍ່ເຫດຜົນທັງໝົດນີ້,ເຖິງແມ່ນວ່າທ່ານບໍ່ປະຕິບັດຕາມຂ້າພະເຈົ້າກໍ່ຕາມ,ຫລືບໍ່ໄດ້ປະຕິບັດທຳມະວິຖີດຽວກັນກັບຂ້າພະເຈົ້າກໍ່ຕາມກໍ່ຂໍໃຫ້ເປັນມັງສະວິລັດເພື່ອເຫັນແກ່ຕົວເອງ ແລະ ເພື່ອຜົນປະໂຫຍດຂອງໂລກ.

**ຖ:** ຖ້າທຸກຄົນພາກັນກິນພືດຜັກກັນໝົດ ຈະທຳໃຫ້ຂາດແຄນອາຫານ ຫລືບໍ່?

**ອ:** ບໍ່!ການນຳໃຊ້ທີ່ດິນຕອນນຶ່ງປູກພືດຜັກຈະໃຫ້ຜົນຜຼິດທີ່ເປັນອາຫານໄດ້ຫຼາຍເຖິງ14ເທົ່າ ເມື່ອທຽບກັບ ການນຳໃຊ້ທີ່ດິນຕອນນຶ່ງທີ່ເທົ່າກັນປູກຫຍ້າໃຫ້ສັດກິນ.ພືດຜັກໃນເຮັກຕານຶ່ງແມ່ນສາມາດໃຫ້ພະລັງງານໄດ້ເຖິງ800.000ແຄລໍຣີ.ແຕ່ຖ້າເຮົານຳພືດຜັກເຫຼົ່ານັ້ນມາລ້ຽງສັດແລະກິນຊີ້ນສັດນັ້ນເປັນອາຫານຊີ້ນຂອງສັດຈຳນວນນັ້ນຈະສາມາດໃຫ້ພະລັງງານໄດ້ພຽງແຕ່200.000ແຄລໍຣີເທົ່ານັ້ນ.ໝາຍຄວາມວ່າໃນລະຫວ່າງຂອງຂັ້ນຕອນດັ່ງກ່າວນັ້ນເຮົາຈະສູນເສັຍພະລັງງານໄປລ້າໆເຖິງ600.000ແຄລໍຣີ.ດັ່ງນັ້ນ,ມັນຈຶ່ງເປັນຫຼັກຖານທີ່ແນ່ນອນວ່າອາຫານມັງສະວິລັດໃຫ້ປະສິດທິພາບສູງກວ່າ ແລະ ປະຢັດກວ່າອາຫານ ທີ່ເປັນຊີ້ນສັດ.

**ຖ:** ຜູ້ທີ່ກິນມັງສະວິລັດຈະກິນປາໄດ້ຫຼືບໍ່?

**ອ:** ມັນກະບໍ່ເປັນຫຍັງ,ຖ້າເຈົ້າຫາກຢາກກິນປາ.ແຕ່ຖ້າເຈົ້າຢາກກິນມັງສະວິລັດແລ້ວປານັ້ນບໍ່ໄດ້ແມ່ນພືດຜັກ.

**ຖ:** ມີບາງຄົນເວົ້າວ່າສິ່ງສຳຄັນທີ່ສຸດຄືຕອ້ງເປັນຄົນທີ່ມີຈິດໃຈດີ.ແຕ່ການເປັນມັງສະວິລັດນັ້ນບໍ່ແມ່ນເລື້ອງທີ່ຈຳເປັນ ຄຳເວົ້າດັ່ງກ່າວນີ້ສົມເຫດສົມຜົນ ຫລືບໍ່?

**ອ:** ຖ້າຜູ້ນັ້ນມີຈິດໃຈດີຢ່າງແທ້ຈິງແລ້ວເປັນຫຍັງເຂົາຈຶ່ງຕ້ອງກິນຊີ້ນຂອງສັບພະສັດອື່ນໆດ້ວຍລະ? ເມື່ອໄດ້ເຫັນສັດທັງຫລາຍເຈັບປວດທັງທຸກທໍລະມານແລ້ວເຂົາບໍ່ຄວນຈະກິນຊີ້ນນັ້ນລົງໄດ້.ການກິນຊີ້ນແມ່ນການຂາດຄວາມເມດຕາກະລຸນາແລ້ວຜູ້ທີ່ມີຈິດໃຈດີເຮັດແນວນັ້ນລົງໄປໄດ້ແນວໃດ?

ອາຈານຫລຽນຈື່ເຄີຍກ່າວໄວ້ວ່າ“**ການຂ້າຕົວເຂົາແລ້ວປາດເອົາຊີ້ນອອກມາກິນນັ້ນໃນໂລກນີ້ບໍ່ມີໃຜຈະໂຫດຫ້ຽມໃຈດຳອຳມະຫິດທັງຮ້າຍກາດກວ່າບຸກຄົນໆນັ້ນອີກແລ້ວ.ແລ້ວເຂົາຍັງຈະບອກວ່າຕົນເອງເປັນຜູ້ມີຈິດໃຈດີໄດ້ແນວໃດ?**“

ເມ່ງຈືກໍ່ກ່າວໄວ້ວ່າ“**ເມື່ອທ່ານເຫັນມັນມີຊີວິດຢູ່,ທ່ານກໍ່ບໍ່ອາດຈະທົນເຫັນມັນຕາຍໄດ້,ແລະຖ້າທ່ານໄດ້ຍິນສຽງມັນຮອ້ງຄ່ຳຄວນທ່ານກໍ່ບໍ່ຄວນກິນຊີ້ນຂອງມັນໄດ້ລົງຄໍ.ດັ່ງນັ້ນ,ສຸພາບບຸລຸດຢ່າງແທ້ຈຶ່ງຄວນຫ່າງຈາກເຮືອນຄົວ** “

ສະຕິປັນຍາຂອງມະນຸດນັ້ນ ແມ່ນສູງກວ່າສັດ ເຮົາສາມາດໃຊ້ອາວຸດເຄື່ອງມືຕ່າງໆ ຊຶ່ງມັນບໍ່ອາດສາມາດຕ້ານທານກັບເຮົາໄດ້.ດັ່ງນັ້ນ,ພວກມັນຈຶ່ງຕ້ອງຕາຍໄປດ້ວຍຄວາມຄຽດແຄ້ນແລະກຽດຊັງຜູ້ທີ່ເຮັດໃຫ້ມັນຕາຍ.ຜູ້ທີ່ສາມາດເຮັດແບບນີ້ໄດ້ນັ້ນກໍ່ແມ່ນຜູ້ທີ່ຂົ່ມເຫງຜູ້ທີ່ນ້ອຍກວ່າແລະອ່ອນແອກວ່າ.ຍ່ອມບໍ່ມີສິດທີ່ຈະໄດ້ຊື່ວ່າເປັນສຸພາບບຸລຸດໄດ້.ເມື່ອສັດທີ່ກຳລັງຖືກຂ້ານັ້ນມັນຈະໄດ້ຮັບຄວາມເຈັບປວດ,ຄວາມທຸກທໍລະມານຫຼາຍ ມັນຈະມີຄວາມຢ້ານກົວແລະຄຽດແຄ້ນຢ່າງຮຸນແຮງ.ສິ່ງນີ້,ຈະທຳໃຫ້ເກີດການສ້າງສານພິດ ຊຶ່ງຕົກຄ້າງຢູ່ໃນຊີ້ນຂອງມັນ.ໃຜທາກບໍລິໂພກ ຫຼືກິນເຂົ້າໄປກໍ່ຈະໄດ້ຮັບອັນຕະລາຍ.ເນື່ອງ ຈາກວ່າຄວາມຖີ່ຂອງແຮງສັ່ນສະເທືອນຂອງສັດຕ່ຳກວ່າມະນຸດ. ມັນຈຶ່ງ ມີຜົນກະທົບຕໍ່ແຮງສັ່ນສະເທືອນຂອງມະນຸດເຮົາ ແລະມີຜົນຕໍ່ການພັດທະນາປັນຍາຂອງມະນຸດເຮົາດ້ວຍ.

**ຖ:** ການເປັນມັງສະວິລັດ ຕາມຄວາມສະດວກໃຊ້ໄດ້ ຫລືບໍ່?(ມັງສະວິລັດຕາມຄວາມສະດວກ ຄືຜູ້ທີ່ບໍ່ເຄັ່ງຄັດຫຼາຍເກີນໄປ ຄືບາງຄັ້ງກໍ່ກິນຜັກ ແລະບາງຄັ້ງກໍ່ມີຊີ້ນປົນຢູ່)

**ອ:** ບໍ່ໄດ້,ຍົກຕົວຢ່າງເຊັ່ນ:ຖ້າອາຫານຈຸ່ມຢູ່ໃນຢາພິດແລ້ວນຳເອົາອາຫານນັ້ນອອກມາຈາກຢາພິດແລ້ວເຈົ້າຄິດວ່າອາຫານນັ້ນ ຈະມີພິດຫລືບໍ່? ໃນມະຫາປະລິນິພານສູດ ພຣະມະຫາ ກັດສະປະໄດ້ຖາມພຣະພຸດທະເຈົ້າວ່າ:

" **ຖ້າອອກບິນທະບາດ ໄດ້ອາຫານຊຶ່ງປະປົນຢູ່ກັບເນື້ອສັດ ເຮົາຈະສັນອາຫານນັ້ນໄດ້ຫຼືບໍ່? ແລ້ວເຮົາຈະທຳ ໃຫ້ອາຫານນັ້ນສະອາດໄດ້ແນວໃດ?** " ພຣະພຸດທະເຈົ້າຕອບວ່າ " **ໃຫ້ໃຊ້ນ້ຳລ້າງແຍກຜັກອອກຈາກເນື້ອກ່ອນຈຶ່ງສາ ມາດສັນໄດ້**"

ຈາກບົດສິນທະນານີ້ເຮົາຈະເຂົ້າໃຈໄດ້ເລີຍວ່າບໍ່ຄວນກິນແມ່ນແຕ່ຜັກທີ່ປົນຢູ່ກັບເນື້ອສັດທີ່ຄົວແລ້ວ. ເວັ້ນເສັຍແຕ່ວ່າຈະນຳເອົາມາລ້າງນ້ຳໃຫ້ສະອາດເສັຍກ່ອນ.ຢ່າວ່າແຕ່ຈະກິນເນື້ອເລີຍ!ດັ່ງນັ້ນ,ຈຶ່ງເຫັນໄດ້ງ່າຍທີ່ສຸດ
ວ່າພຣະພຸດທະເຈົ້າແລະສາວົກຂອງພຣະອົງລ້ວນແຕ່ສັນອາຫານມັງສະວິລັດກັນທັງສິ້ນ.ເຖິງແນວໃດກໍ່ຕາມ,ກໍ່ຍັງມີບາງຄົນ ໄດ້ຄິດເອົາເອງວ່າ ພຣະພຸດທະອົງທ່ານ ເປັນມັງສະວິລັດຕາມແຕ່ຈະສະດວກ.
ຖ້າມີຄົນຖວາຍເນື້ອ ເພິ່ນກໍ່
ຈະສັນເນື້ອນີ້ເປັນຄຳເວົ້າທີ່ເຫຼວໄຫຼໄຮ້ສາລະທີ່ສຸດ.ຄົນທີ່ເວົ້າເຊັ່ນນັ້ນອ່ານຄຳພີພຣະສູດຍັງບໍ່ເຖິງຖອງ.ຫລືບໍ່ດັ່ງນັ້ນ,
ເຂົາອ່ານແລ້ວກໍ່ຍັງບໍ່ເຂົ້າໃຈຄຳພີພຣະສູດທີ່ເຂົາອ່ານນັ້ນເລີຍ.

ໃນປະເທດອິນເດັຍມີຄົນຫລາຍກວ່າ90%ເປັນມັງສະວິລັດ. ເມື່ອຜູ້ຄົນເຫັນ ພຣະພິຊຸທີ່ນຸ່ງຜ້າເຫລືອງ. ພວກ ເຂົາ ກໍ່ຈະຮູ້ກັນວ່າຕ້ອງຖວາຍແຕ່ອາຫານມັງສະວິລັດເທົ່ານັ້ນ. ຍັງບໍ່ທັນໄດ້ເວົ້າ ເຖິງເລີຍວ່າຄົນສ່ວນໃຫຍ່ແມ່ນແຕ່ ເນື້ອທີ່ຈະເອົາມາຖວາຍກໍ່ຍັງບໍ່ມີຊ້ຳ.

**ຖ:** ດົນນານມາແລ້ວ,ຂ້າພະເຈົ້າໄດ້ຍິນຈາກພຣະອາຈານທ່ານນຶ່ງຊຶ່ງໄດ້ເວົ້າວ່າ"ພຣະພຸດທະເຈົ້າສັນຂາໝູຈຶ່ງເກີດອາການຖອກທ້ອງ ແລ້ວກໍ່ຕາຍໄປ " ເລື້ອງນີ້ເປັນຄວາມຈິງ ຫລືບໍ່?

**ອ:** ບໍ່ມີເລື້ອງແບບນີ້ເດດຂາດ.ພຣະພຸດທະເຈົ້ານິລະນະພາບເນື່ອງມາຈາກເພິ່ນໄດ້ສັນເຫັດສະນິດນຶ່ງ.ຖ້າເຮົາແປຕາມພາສາພິມເຫັດສະນິດນີ້ມີຊື່ວ່າ"ຂາໝູ"ແຕ່ບໍ່ແມ່ນຂາໝູແທ້ໆມັນກໍ່ເຊັ່ນດຽວກັບເຂົາຮ້ອງໝາກ

"ລຳໄຍ"ເປັນພາສາຈີນວ່າ"ຫລົງອງນ"(ຕາມພາສາຈີນຫລົງອງນແປວ່າ"ຕາມັງກອນ")ຂອງຫຼາຍຢ່າງເຖິງແມ່ນວ່າຊື່ຮ້ອງຈະບໍ່ແມ່ນຜັກແຕ່ຕົວຈິງແລ້ວມັນເປັນອາຫານມັງສະວິລັດ.ເຊັ່ນ"ຕາມັງກອນ".ຕາມພາສາພົມເຫັດນັ້ນຮ້ອງວ່າ"ຂາໝູ"ກໍ່ເພາະໝູມັກເຫັດສະນິດນີ້ເປັນຂອງທີ່ຫາໄດ້ຍາກໃນອິນເດັຍບູຮານ.ເປັນອາຫານແຊບທີ່ຫາໄດ້ຍາກ.ຈຶ່ງມີຄົນນຳມາຖວາຍແດ່ພຣະພຸດທະເຈົ້າ.ເປັນເຫັດທີ່ບໍ່ສາມາດຫາໄດ້ຢູ່ຕາມໜ້າດິນ.ມັນຂຶ້ນແລະໃຫ່ຍໂຕຢູ່ໃນດິນຖ້າໃຜຕອ້ງການກໍ່ຕ້ອງຊອກຫາໂດຍໃຊ້ໝູອາຍຸແກ່ເປັນໂຕຊວ່ຍ.ເພາະໝູເປັນສັດທີ່ມັກກິນເຫັດສະນິດນີ້ຫຼາຍທີ່ສຸດ.ມັນຈະຫາພົບດວ້ຍການດົມກິ່ນເມື່ອພົບກໍ່ຈະເອົາຂາຂຸດລົງໄປໃນດິນເພື່ອເອົາຂຶ້ນມາກິນ.ຈຶ່ງເປັນເຫດທີ່ເອີ້ນເຫດຊະນິດນີ້ວ່າ"ຂາໝູ"ຫລື"ໝູດີໃຈ".ທັງສອງຊື່ນີ້ໝາຍເຖິງເຫັດຊະນິດດຽວກັນເນື່ອງຈາກມີການແປໂດຍບໍ່ລະມັດລະວັງ.ຄົນຮຸນຕໍ່ໆມາຈຶ່ງເຂົ້າ ໃຈຜິດແລະຄິດວ່າພຣະພຸດທະເຈົ້າເປັນພຸດທະ ເຖື່ອນບໍລິໂພກເນື້ອ ອັນນີ້ເປັນເລື້ອງທີ່ໜ້າເສັຍໃຈທີ່ສຸດ.

**ຖ:** ຄົນທີ່ມັກກິນຊີ້ນບາງຄົນເວົ້າວ່າພວກເຂົາຊື້ຊີ້ນມາຈາກຄົນຂາຍຊີ້ນພວກເຂົາບໍ່ໄດ້ເປັນຄົນຂ້າເອງ.ດັ່ງນັ້ນ,ການກິນຊີ້ນ ຈຶ່ງບໍ່ເປັນຫຍັງ ທ່ານຄິດວ່າສິ່ງນີ້ເປັນເລື້ອງທີ່ຖືກຕ້ອງບໍ່?

**ອ:** ອັນນີ້ເປັນຄວາມຜິດພາດທີ່ສຸດ,ທ່ານຕ້ອງຮູ້ວ່າຄົນຂາຍຊີ້ນເຂົາຂ້າສັດກໍ່ເພາະມີຄົນຕ້ອງການກິນ.ໃນລັງກາວັດຕະສູດພຣະພຸດທະເຈົ້າຊົງໄດ້ຕັດໄວ້ວ່າ"ຖ້າບໍ່ມີການກິນຊີ້ນກໍ່ຈະບໍ່ມີການຂ້າເກີດຂຶ້ນ.ດັ່ງນັ້ນ,ການກິນຊີ້ນແລະການຂ້າສັດຈຶ່ງເປັນບາບຢ່າງດຽວກັນ.ຍ້ອນມີການຂ້າສັດຕັດຊີວິດຈຳນວນຫລາຍນີ້ເອງ ເຮົາຈຶ່ງມີໄພທຳມະຊາດແລະຄວາມຫາຍະນະຕ່າງໆທີ່ເກີດຂຶ້ນຈາກນ້ຳມືມະນຸດ.ສົງຄາມກໍ່ມີສາເຫດມາຈາກການຂ້າທີ່ມີຫລາຍເກີນໄປນັ້ນແຫລະ.

**ຖ:** ມີບາງຄົນກ່າວວ່າເຖິງແມ່ນພືດບໍ່ຜູີດສານພິດເຊັ່ນ:ຢູເຣັຍຫຼືຢູໂຣໄຕເນສ.ແຕ່ຄົນທີ່ປູກຜັກແລະໝາກໄມ້ກໍ່ໃຊ້ຢາຂ້າແມງໄມ້ກັນ ເປັນຈຳນວນຫລວງຫລາຍ. ພືດເຫຼົ່ານັ້ນຈຶ່ງບໍ່ດີຕໍ່ສຸຂະພາບຂອງເຮົາເປັນເຊັ່ນນັ້ນຫລືບໍ່?

**ອ:** ຖ້າຄົນປູກຜັກໃຊ້ຢາຂ້າແມງໄມ້ແລະສານເຄມີທີ່ມີພິດສູງເຊັ່ນ:ດີ.ດີ.ທີ.ຊີດພົ່ນໃສ່ພືດຜັກກໍ່ຈະນຳໄປສູ່ໂຣກມະເລງ,ການເປັນໝັນ,ແລະໂຣກຕ່າງໆຂອງຕັບໄດ້.ສານພິດຕ່າງໆເຊັ່ນ:ດີ.ດີ.ທີ.ສາມາດຊຶມແຊກເຂົ້າໄປຢູ່ໃນໄຂມັນແລະປົກຕິຈະຖືກເກັບສະສົມຢູ່ໃນໄຂມັນຂອງສັດ.ເມື່ອພວກທ່ານກິນຊີ້ນນັ້ນເຂົ້າໄປກໍ່ໝາຍຄວາມວ່າພວກທ່ານກິນຢາຂ້າແມງໄມ້ແລະສານພິດອື່ນໆຊື່ງສະສົມຢູ່ໃນໄຂມັນຂອງສັດທີ່ມີປະລິມານຄວາມເຂັ້ມຂຸ້ນທີ່ສູງຫລາຍ.ສານເຫຼົ່ານີ້ຈະຄອ່ຍໆສະສົມຫລາຍຂຶ້ນເມື່ອສັດນັ້ນຈະເລີນເຕີບໂຕຂຶ້ນມາ.ປະລິມານທີ່ສະສົມນີ້ອາດຈະມີຫລາຍເຖິງ13ເທົ່າ.ຊຶ່ງຫຼາຍກວ່າທີ່ພົບຢູ່ໃນໝາກໄມ້,ຜັກ,ຫລືແກ່ນພືດພັນຕ່າງໆ.ເຮົາສາມາດທີ່ຈະລ້າງດວ້ຍນ້ຳເກືອຫລືວິທີອື່ນໆທີ່ສາມາດເອົາຢາຂ້າແມງໄມ້ທີ່ພົ່ນເຄືອບຢູ່ນຳຜັກແລະໝາກໄມ້ອອກໄປໄດ້.ແຕ່ເຮົາບໍ່ສາມາດຈະເອົາຢາຂ້າແມງໄມ້ທີ່ສະສົມຢູ່ໃນໄຂມັນຂອງສັດນັ້ນອອກໄດ້.ຂັ້ນຕອນການສະສົມນີ້ເກີດຂຶ້ນເນື່ອງຈາກວ່າຢາຂ້າແມງໄມ້ເຫຼົ່ານີ້ຈະຄອ່ຍ ສະສົມ ເພີ້ມຫລາຍຂຶ້ນ.ດັ່ງນັ້ນ,ຜູ້ບໍລິໂພກຊວ່ງຕໍ່ ຈະເປັນຜູ້ໄດ້ຮັບເຄາະ ຫລາຍທີ່ສຸດ.

ຕາມການທົດລອງຈາກມະຫາວິທະຍາໄລໄອໂອວາໄດ້ສະແດງໃຫ້ເຫັນວ່າຢາຂ້າແມງໄມ້ທີ່ພົບຢູ່ໃນຮ່າງກາຍມະນຸດນັ້ນສວ່ນໃຫຍ່ແມ່ນມາຈາກການກິນຊີ້ນສັດແລະຍັງພົບວ່າລະດັບຂອງຢາຂ້າແມງໄມ້ໃນຮ່າງ

ກາຍຂອງມະນຸດຜູ້ທີ່ກິນມັງສະວິລັດນັ້ນມີປະລິມານໜ້ອຍກວ່າເຄິ່ງນຶ່ງຂອງຢາຂ້າແມງໄມ້ທີ່ພົບກັບຜູ້ກິນເນື້ອສັດ.ຕາມຄວາມຈິງແລ້ວ,ຍັງມີສານພິດອື່ນໆທີ່ພົບໃນເນື້ອສັດ ນອກຈາກຢາຂ້າແມງໄມ້. ໃນຂັ້ນຕອນ,ຂອງການລ້ຽງສັດນັ້ນອາຫານສັດຫລາຍຢ່າງມີສານເຄມີ.ຊຶ່ງໃຊ້ກະຕຸ້ນໃຫ້ສັດຈະເລີນເຕີບໂຕໄວຂຶ້ນຫລືເພື່ອປຸ່ງນສີຂອງຊີ້ນສັດ,ລົດຊາດ,ແລະອົງປະກອບຂອງຊີ້ນ ເພື່ອຮັກສາຊີ້ນໄວ້ລວມທັງສານທີ່ໃຊ້ກັນບໍ່ໃຫ້ບູດເນົ່າໄວແລະອື່ນໆ.

ຕົວຢ່າງ:ສານກັນບູດທີ່ຜະລິດຈາກໄນເຕຼດເປັນວັດຖຸທີ່ມີສານພິດສູງທີ່ສຸດ.ໃນມື້ວັນທີ່18ກໍລະກົດ1971 .ໜັງສືພິມນິວຢອກໄທມ໌ໄດ້ລາຍງານວ່າ"ອັນຕະລາຍທີ່ລີ້ລັບທີ່ຍິ່ງໃຫຍ່ທີ່ສຸດຕໍ່ສຸຂະພາບຂອງຜູ້ບໍລິໂພກຊີ້ນສັດກໍ່ຄື ມັນພາວະເປັນພິດຊຶ່ງເບິ່ງບໍ່ເຫັນຢູ່ໃນຊີ້ນສັດເຊັ່ນ:ແບກທີເຣັຍທີ່ມີຢູ່ໃນຊີ້ນປາແຊລມອນ,ແລະຊີ້ນສັດທີ່ເອົາມາບໍລິໂພກອື່ນໆທີ່ມີຢາຂ້າແມງໄມ້ຕົກຄ້າງຢູ່,ລວມທັງສານກັນບູດ,ຮໍໂມນ,ຢາປະຕິຊີວະນະ,ແລະສານເຄມີອື່ນໆທີ່ໃສ່ເພີ້ມເຕີມເຂົ້າໄປ"ນອກຈາກນີ້,ສັດຍັງໄດ້ຮັບການສັກວັກຊີນຊຶ່ງອາດຕົກຄ້າງຢູ່ໃນຊີ້ນຂອງມັນອີກ. ຈາກຄວາມຮູ້ເຫລົ່ານີ້ຈະເຫັນວ່າໂປຣຕີນໃນໝາກໄມ້,ມັນ,ຖົ່ວ,ເຂົ້າສາລີ,ແລະນົມແມ່ນມີຄວາມບໍລິສຸດຫລາຍກວ່າໂປຣຕີນຈາກຊີ້ນສັດ.

